ADB

ເອກະສານນະໂຍບາຍ

ມິຖຸນາ 2009

# ນະໂຍບາຍ ພະລັງງານ

Asian Development Bank

## ຄຳສັບຫຍໍ້

| | | |
|---|---|---|
| ADB | – | ທະນາຄານພັດທະນາອາຊີ |
| $CO_2$ | – | ອາຍກາກບອນ |
| CDM | – | ກົນໄກ ຂອງການພັດທະນາ ທີ່ປອດມົນລະພິດ |
| DMC | – | ປະເທດສະມາຊິກທີ່ກຳລັງພັດທະນາ |
| EBRD | – | ທະນາຄານເພື່ອການຟື້ນຟູ ແລະ ພັດທະນາຢູໂຣບ |
| EITI | – | ການລິເລີ່ມ ທີ່ໂປ່ງໃສ ຂອງອຸດສາຫະກຳກັ່ນກອງ |
| EU | – | ສະຫະພາບຢູໂຣບ |
| GDP | – | ຜະລິດຕະພັນພາຍໃນທັງໝົດ |
| IEA | – | ອົງການພະລັງງານສາກົນ |
| IED | – | ກົມປະເມີນຜົນອິດສະຫລະ |
| LNG | – | ແກັດສ໌ທຳມະຊາດທີ່ເປັນຂອງແຫລວ |
| LPG | – | ແກັດສ໌ນ້ຳມັນເຊື້ອໄຟທີ່ເປັນຂອງແຫລວ |
| MDB | – | ທະນາຄານພັດທະນາຫລາຍຝ່າຍ |
| MDG | – | ສະຫັດສະວັດ |
| OECD | – | ອົງການຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ |
| PRC | – | ສາທາລະນະລັດປະຊາຊົນຈີນ |
| RSDD | – | ກົມ ການພັດທະນາພາກພື້ນ ແບບຍືນຍົງ |

## ນ້ຳໜັກ ແລະ ອັດຕາວັດແທກ

| | | |
|---|---|---|
| btoe | – | ຕື້ໂຕນ ທີ່ເທົ່າທຽມກັບນ້ຳມັນ |
| C | – | ອົງສາ |
| mb/d | – | ລ້ານ ບາເຣວ ຕໍ່ມື້ |
| mtoe | – | ລ້ານໂຕນ ທີ່ເທົ່າທຽມກັບນ້ຳມັນ |
| tcm | – | ໂກດແມັດກ້ອນ |

## ຂໍ້ສັງເກດ

ໃນບົດລາຍງານນີ້, "$" ໝາຍເຖິງເງິນໂດລາສາຫະລັດອາເມລິກາ

| | |
|---|---|
| **ຮອງປະທານ** | U. Schäfer-Preuss, ການຄຸ້ມຄອງຄວາມຮູ້ ແລະການພັດທະນາແບບຍືນຍົງ |
| **ຫົວໜ້າກົມ** | X. Yao, ກົມພັດທະນາລະດັບພາກພື້ນ ແລະແບບຍືນຍົງ (RSDD) |
| **ຫົວໜ້າພະແນກ** | W. Um, ພະແນກພື້ນຖານໂຄງລ່າງແບບຍືນຍົງ, RSDD |
| **ຄະນະກຳມະການພະລັງງານ** | S. Chander (ປະທານ), A. Terway (ປະທານຮ່ວມ), A. Jude, A. Guha, T. Jung, T. Kimura, R. Stroem, M. Tsuji, S. Tumiwa |
| **ຫົວໜ້າທີມ** | J.I. Kim, ຊ່ຽວຊານເອກ ດ້ານພະລັງງານ, RSDD |
| **ສະມາຊິກໃນທີມ** | P. Calcetas, ເຈົ້າໜ້າທີ່ອາວຸໂສຂອງຂະແໜງ, RSDD |

# ສາລະບານ


| | | ໜ້າ |
|---|---|---|
| I. | ພາກສະເໜີ | 1 |
| II. | ພາກສະຫລຸບຂອງການທົບທວນຄືນ | 2 |
| III. | ນະໂຍບາຍວ່າດ້ວຍພະລັງງານ | 5 |
| IV. | ການຈັດຕັ້ງປະຕິບັດນະໂຍບາຍ | 6 |
| | ກ. ການສົ່ງເສີມປະສິດທິຜົນຂອງການນຳໃຊ້ພະລັງງານແລະພະລັງງານທົດແທນ | 8 |
| | ຂ. ການເຂົ້າເຖິງພະລັງງານ ຂອງທຸກຄົນເທົ່າທີ່ຈະຫລາຍໄດ້ | 10 |
| | ຄ. ສົ່ງເສີມການປັບປຸງຂະແໜງພະລັງງານ, ການສ້າງຂີດຄວາມສາມາດ ແລະ ການຄຸ້ມຄອງ | 13 |
| | ງ. ການກະກຽມການຈັດຕັ້ງປະຕິບັດ | 15 |
| V. | ຄຳແນະນຳ | 16 |

ເອກະສານຊ້ອນທ້າຍ

| | | |
|---|---|---|
| 1. | ການວິເຄາະດ້ານນະໂຍບາຍ | 16 |
| 2. | ກອບຜົນໄດ້ຮັບວ່າດ້ວຍການຈັດຕັ້ງປະຕິບັດນະໂຍບາຍພະລັງງານ ຂອງເອດີບີ | 57 |

## I. ພາກສະເໜີ

1. ການຂະຫຍາຍຕົວ ທາງດ້ານເສດຖະກິດທີ່ໄວຂອງບັນດາປະເທດກຳລັງພັດທະນາທີ່ຢູ່ໃນຂົງເຂດອາຊີ ຊຶ່ງພາໃຫ້ເກີດມີຄວາມຕ້ອງການດ້ານພະລັງງານຢູ່ໃນລະດັບສູງ. ອີງຕາມການປະເມີນ ຂອງອົງການພະລັງງານສາກົນ ຊີ້ໃຫ້ເຫັນວ່າ ຄວາມຕ້ອງການດ້ານພະລັງງານພື້ນຖານ ໃນບັນດາປະເທດກຳລັງພັດທະນາໃນອາຊີອາດຈະເພີ້ມຂຶ້ນ ສອງທົບໃນຊ່ວງປີ 2006 ຫາ 2030. ເຖິງແມ່ນວ່າວິກິດການທາງການເງິນຂອງໂລກອາດຈະມີຜົນກະທົບຕໍ່ການຂະຫຍາຍຕົວທາງເສດຖະກິດ ໃນໄລຍະສັ້ນກໍ່ຕາມ. ການຂະຫຍາຍຕົວນີ້ ບໍ່ມີຄວາມຍືນຍົງ ຖ້າຫາກວ່າພະລັງງານພື້ນຖານເຫລົ່ານີ້ ຍັງໄດ້ມາຈາກການຂຸດຄົ້ນເອົາແຮ່ທາດ. ການຊົມໃຊ້ພະລັງງານເຊື້ອໄຟ ເຊິ່ງເປັນແຮ່ທາດທີ່ເພີ້ມຂຶ້ນນັ້ນ, ຈະເຮັດໃຫ້ການປ່ອຍທາດອາຍແກັດສ໌ເຮືອນແກ້ວເພີ້ມຂຶ້ນຫຼາຍກ່ວາເກົ່າ. ນັກວິທະຍາສາດໄດ້ບັນທຶກເຫດການດັ່ງກ່າວນີ້ໄວ້ວ່າ ການເພີ້ມຂຶ້ນຂອງອຸນຫະພູມໃນຊັ້ນບັນຍາກາດ ແລະການປ່ຽນແປງອື່ນໆຂອງສະພາບອາກາດ ເຊິ່ງເຫດການບາງຢ່າງເຫຼົ່ານີ້ ອາດພາໃຫ້ເກີດມີຜົນກະທົບທີ່ຮ້າຍແຮງຕາມມາຕໍ່ທະວີບອາຊີແລະປະຊີຟິກ. ສະນັ້ນການນຳໃຊ້ພະລັງງານຢ່າງມີປະສິດທິພາບ ແລະແກ້ໄຂການປ່ຽນແປງສະພາບດິນຟ້າອາກາດ ແມ່ນເປັນສິ່ງທີ່ທ້າທ້າຍທີ່ສຳຄັນໃນການບັນລຸເປົ້າໝາຍ ຂອງການພັດທະນາປະເທດໃຫ້ຍືນຍົງ.

2. ໃນຂະນະທີ່ລາຄານ້ຳມັນເຊື້ອໄຟໃນໄລຍະທີ່ຜ່ານມາມີການຜັນຜວນຫລາຍ ໄດ້ຊຸກຍູ້ໃຫ້ບັນດາປະເທດສະມາຊິກທີ່ກຳລັງພັດທະນາສຸມໃສ່ໃຫ້ກຸ້ມຕົນເອງທາງດ້ານພະລັງງານ, ເພື່ອໃຫ້ມີການຫລຸດຜ່ອນການນຳໃຊ້ນ້ຳມັນ ແລະ ພັດທະນາແຫລ່ງພະລັງງານພາຍໃນເຊິ່ງທັງໝົດເຫຼົ່ານີ້ເປັນສາເຫດພາໃຫ້ເກີດມີການນຳໃຊ້ຖ່ານຫີນ, ການປ່ອຍທາດອາຍແກັດສເຮືອນແກ້ວທີ່ມີການເພີ້ມຂຶ້ນຢ່າງຫຼວງຫຼາຍ. ບັນຫາທີ່ສຳຄັນອີກດ້ານໜຶ່ງ ເປັນຕົ້ນແມ່ນການຕອບສະໜອງຄວາມຕ້ອງການດ້ານພະລັງງານໃນຮູບແບບທີ່ທັນສະໄໝໃຫ້ແກ່ປະຊາຊົນເພີ້ມຫລາຍຂຶ້ນ. ປະຊາກອນໃນອາຊີເຊິ່ງມີປະມານ 1 ຕື້ຄົນ ທີ່ຍັງບໍ່ທັນສາມາດເຂົ້າເຖິງແຫລ່ງພະລັງງານ.

3. ເອດີບີ ໄດ້ໃຫ້ ຄວາມຊ່ວຍເຫລືອ ຕໍ່ຂະແໜງການພະລັງງານ ໃນບັນດາປະເທດສະມາຊິກ ເປັນເວລາ 40 ກວ່າປີມາແລ້ວ ເປັນຕົ້ນແມ່ນໄດ້ສຸມໃສ່ແຜນງານການຂະຫຍາຍຂະແໜງການໄຟຟ້າ; ຂະແໜງການນ້ຳມັນເຊື້ອໄຟ ແລະ ອາຍແກັດສ໌ທຳມະຊາດ; ສ້າງຂີດຄວາມອາດສາມາດໃຫ້ແກ່ອົງການ; ແລະການປັບປຸງຂະແໜງການພະລັງງານ; ແລະປະສິດທິພາບໃນການບໍລິຫານ. ເອດີບີ ໄດ້ຮັບຮອງເອົານະໂຍບາຍວ່າດ້ວຍພະລັງງານສະບັບທຳອິດໃນປີ 1981 ເພື່ອແກ້ໄຂຜົນກະທົບຈາກການຜັນຜວນຂອງລາຄານ້ຳມັນເຊື້ອໄຟ ທີ່ຮ້າຍແຮງໃນຊຸມປີ 1970.[1] ນະໂຍບາຍດັ່ງກ່າວໄດ້ເໜັ້ນໜັກໃສ່ຂະແໜງການດັ່ງລຸ່ມນີ້ (i)ພັດທະນາພື້ນຖານໂຄງລ່າງຂອງແໜງການພະລັງງານແລະແຫ່ລງພະລັງງານພື້ນຖານພາຍໃນ, (ii) ສົ່ງເສີມການນຳໃຊ້ພະລັງງານຢ່າງມີປະສິດທິພາບ, ແລະ (III) ສ້າງຕະຫລາດພະລັງງານທີ່ເອື້ອອຳນວຍໃຫ້ແກ່ການລົງທືນຢູ່ໃນບັນດາປະເທດສະມາຊິກ ທີ່ກຳລັງພັດທະນາ.

4. ເອກະສານວ່າດ້ວຍນະໂຍບາຍພະລັງງານທີ່ມີການຕີພິມໃນປີ 1995 ສະບັບທີ່ສອງໄດ້ລະບຸໄວ້ວ່າ ການລົງທຶນເຂົ້າໃນຂະແໜງການພະລັງງານຂອງບັນດາປະເທດສະມາຊິກທີ່ກຳລັງພັດທະນາໄດ້ເພີ້ມຂຶ້ນເຊິ່ງພາໃຫ້ບັນດາ

---

[1] ເອດີບີ. 1981. *ບົດບາດ ຂອງທະນາຄານພັດທະນາອາຊີ ໃນຂະແໜ່ງການພະລັງງານ ໃນພາກພື້ນເອກະສານຄົ້ນຄ້ວາ*, ເລກທີ່ 2. ມານີລາ

ປະເທດເຫລົ່ານີ້ ບໍ່ສາມາດບໍລິຫານແລະບໍ່ມີປະສິດທິພາບ ເນື່ອງຈາກວ່າລັດຖະບານເຂົ້າມາມີສອງບົດບາດຢູ່ໃນໂຕຄື ເປັນທັງຜູ້ອອກນະໂຍບາຍແລະເປັນຜູ້ມີກຳມະສິດແຕ່ຜູ້ດຽວ.[2] ນະໂຍບາຍວ່າດ້ວຍພະລັງງານສະບັບທີ່ສອງໄດ້ມີການຮັບຮອງເອົາການປັບປຸງແປງ ແລະຄວາມຕ້ອງການຂອງຂະແໜງການນີ້ແລະໃຫ້ຂໍ້ແນະນຳ ທີ່ມີຄວາມສົມດຸນລະຫວ່າງ ການລົງທຶນເຂົ້າໃນການສ້າງພື້ນຖານໂຄງລ່າງ, ການພັດທະນາທາງດ້ານການເງິນທີ່ເຂັ້ມແຂງແລະການດຳເນີນງານທີ່ມີປະສິດທິພາບ. ຂໍ້ແນະນຳອື່ນໆແມ່ນແນ່ໃສ່ການບໍລິຫານໃນດ້ານຄວາມຕ້ອງການພະລັງງານ, ການປ້ອງກັນສະພາບສິ່ງແວດລ້ອມ, ການຂະຫຍາຍຕາໜ່າງໄຟຟ້າສູ່ທ້ອງຖິ່ນ ແລະການພັດທະນາພະລັງງານທົດແທນໃຫ້ເພີ້ມຫລາຍຂຶ້ນ.

5. ການທົບທວນຄືນນະໂຍບາຍວ່າດ້ວຍພະລັງງານ ໃນປີ 2000 ໄດ້ຢັ້ງຢືນວ່າ ໂຄງຮ່າງພະລັງງານໃນປະຈຸບັນແມ່ນຍັງມີຄວາມເໝາະສົມ ແລະສົມເຫດສົມຜົນ.[3] ເຖິງຢ່າງໃດກໍ່ຕາມບັນຫາດັ່ງກ່າວໄດ້ນຳເຂົ້າໄປພິຈາລະນາໃນການທົບທວນບຸລິມະສິດຂອງການດຳເນີນງານຂອງ ເອດີບີ ແລະການປັບປຸງແປງຄວາມຕ້ອງການຂອງປະເທດສະມະຊິກທີ່ກຳລັງພັດທະນາ, ການທົບທວນຄືນ ໄດ້ໃຫ້ຂໍ້ສະເໜີແນະກ່ຽວກັບການພັດທະນາຕະຫລາດພະລັງງານ ທີ່ມີການຄຸ້ມຄອງແບບເອກະລາດ ແລະການຫັນເປັນເອກະຊົນ ເຊິ່ງຈະພາໃຫ້ມີການນຳໃຊ້ພະລັງງານຢ່າງມີປະສິດທິພາບ, ລາຄາຕໍ່າກວ່າ ແລະມີການລົງທຶນຈາກພາກເອກະຊົນຫລາຍຂຶ້ນ. ຍັງໄດ້ໃຫ້ຄຳແນະນຳວ່າການທົບທວນຄືນໃນຄັ້ງໜ້າເຊິ່ງຈະໄດ້ດຳເນີນຂຶ້ນ ໃນປີ 2005 ຕ້ອງຮັບປະກັນວ່າ ການດຳເນີນງານກ່ຽວກັບພະລັງງານ ຂອງເອດີບີ ຄວນຖືກຈັດເຂົ້າໃຫ້ແທດເໝາະກັບຄວາມຕ້ອງການ ຂອງປະເທດສະມາຊິກ ທີ່ກຳລັງພັດທະນາຂອງຕົນ.

6. ໃນປີ 2008, ເອດີບີ ໄດ້ສຳເລັດການທົບທວນຄືນ ນະໂຍບາຍ ວ່າດ້ວຍພັງລັງງານ ສະບັບ ປີ1995 ຂອງຕົນ. ເອກະສານສະບັບນີ້ ໄດ້ຖືກກະກຽມເພື່ອສະເໜີໃຫ້ສະພາບໍລິຫານຮັບຮອງ ຕໍ່ການປັບປຸງເຂົ້າໃນນະໂຍບາຍທີ່ໄດ້ມາຈາກໝາກຜົນຂອງການທົບທວນຄືນ, ການພັດທະນາເສດຖະກິດໃນພາກພື້ນແລະໃນໂລກ, ແລະການຮັບຮອງເອົາກອບແຜນຍຸດທະສາດໄລຍະຍາວ 2008-2020 ຂອງເອດີບີ (ຍຸດທະສາດ 2020).[4] ຍຸດທະສາດດັ່ງກ່າວກໍ່ໄດ້ອະທິບາຍຫຍໍ້ໃນການຈັດຕັ້ງປະຕິບັດນະໂຍບາຍພະລັງງານ ຂອງເອດີບີ.

## II. ຜົນຂອງການທົບທວນຄືນໂດຍຫຍໍ້

7. ກົມພັດທະນາພາກພື້ນແບບຍືນຍົງ (RSDD) ໄດ້ເລີ້ມການທົບທວນຄືນນະໂຍບາຍວ່າດ້ວຍພະລັງງານ ໃນປີ 2006 ໂດຍມີການປຶກສາຫາລື ກັບຊ່ຽວຊານດ້ານພະລັງງານ ທີ່ມາຈາກກົມດຳເນີນງານ. ຄະນະກຳມະທິການ ດ້ານພະລັງງານ ຂອງເອດີບີ ກໍ່ໄດ້ເຂົ້າຮ່ວມໃນການກະກຽມການທົບທວນຄືນກ່ຽວກັບເອກະສານດັ່ງກ່າວ. ນອກຈາກການປຶກສາຫາລືພາຍໃນແລ້ວ, ຄະຜູ້ບໍລິຫານ ໄດ້ອະນຸຍາດໃຫ້ມີຂະບວນການປຶກສາຫາລືກັບພາຍນອກ ເປັນເວລາ 60

---

[2] ເອດີບີ. 1995. *ນະໂຍບາຍ ຂອງທະນາຄານພັດທະນາອາຊີ ວ່າດ້ວຍຂະແໜ່ງການພະລັງງານ.* ມານີລາ

[3] ເອດີບີ. 2000. *ພະລັງງານ 2000: ການທົບທວນນະໂຍບາຍພະລັງງານ.* ມານີລາ

[4] ເອດີບີ. 2008. *ຍຸດທະສາດ 2020: ກອບຍຸດທະສາດໄລຍະຍາວ ຂອງທະນາຄານພັດທະນາອາຊີ 2008 -2020.* ມະນີລາ

ວັນ ເຊິ່ງໄດ້ຮັບຂໍ້ຄິດເຫັນທີ່ກ້ວາງຂື້ນຈາກພາກລັດ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ຂະແໜງອຸດສາຫະກຳ, ນັກວິຊາການແລະພາກສ່ວນທີ່ກ່ຽວຂ້ອງອື່ນໆ.

8. ປະຈຸບັນ ຂະໜາດຂອງການນຳໃຊ້ພະລັງງານ ຢູ່ໃນຂົງເຂດອາຊີ ແລະປາຊີຟິກ ແລະໃນອານາຄົດອັນໃກ້ນີ້ ຄາດວ່າຈະມີຜົນຕາມມາເກີນກວ່າການຄາດຄະເນໄວ້. ຄວາມຕ້ອງການພະລັງງານພື້ນຖານຂອງບັນດາປະເທດກຳລັງພັດທະນາຢູ່ໃນອາຊີຈະເພີ້ມຂື້ນຈາກ 3,227 ລ້ານໂຕນ ໃນປີ 2006 ຫາ 6,325 ລ້ານໂຕນຢູ່ໃນປີ 2030 ພຽງແຕ່ສາທາລະນາລັດປະຊາຊົນຈີນແລະປະເທດອິນເດຍ ກໍ່ຈະກວມເອົາເປັນສ່ວນໃຫຍ່ແລ້ວ. ຄາດຄະເນການຂະຫຍາຍຕົວທາງດ້ານເສດຖະກິດແລະການເພີ້ມຂື້ນຂອງຈຳນວນປະຊາກອນໃນພາກພື້ນນີ້ ຈະພາໃຫ້ມີຄວາມຕ້ອງການດ້ານພະລັງງານຫຼາຍເພີ້ມຂື້ນ.[5] ຍັງມີປັດໄຈອື່ນໆອີກທີ່ຈະເຮັດໃຫ້ຄວາມຕ້ອງການດ້ານພະລັງງານເພີ້ມຂື້ນເຊັ່ນ: ກິດຈະກຳທາງດ້ານເສດຖະກິດ, ມາດຕະຖານການດຳລົງຊີວິດທີ່ສູງຂື້ນ ແລະການບໍລິໂພກຂອງຄົວເຮືອນທີ່ເພີ້ມຂື້ນ. ຄວາມຕ້ອງການພະລັງງານທີ່ສູງຂື້ນຂອງປະເທດກຳລັງພັດທະນາໃນຂົງເຂດອາຊີ ໄດ້ພາໃຫ້ເກີດມີຄວາມເປັນຫ່ວງຕໍ່ກັບຄວາມໝັ້ນຄົງທາງດ້ານພະລັງງານ. ຈຳເປັນຕ້ອງມີການຊອກຫາທາງເລືອກໃໝ່ ໃນການຮ່ວມມືດ້ານພະລັງງານໃນໄລຍະຍາວ ເພື່ອຮັບປະກັນການຜະລິດ ແລະການນຳໃຊ້ພະລັງງານທີ່ມີລາຄາແບບສົມເຫດສົມຜົນແລະມີຄວາມຍືນຍົງ.

9. ຄວາມຕ້ອງການພະລັງງານທີ່ເພີ້ມຂື້ນ ຕ້ອງສາມາດຕອບສະໜອງເຖິງຄວາມຍືນຍົງ ທາງດ້ານສັງຄົມ, ເສດຖະກິດແລະສິ່ງແວດລ້ອມ. ເຖິງແມ່ນວ່າໃນປະຈຸບັນຈະມີການຍອມຮັບກັນທົ່ວໄປວ່າການນາບຂູ່ຈາກການປ່ຽນແປງສະພາບດິນຟ້າອາກາດໄດ້ກາຍມາເປັນຄວາມຈິງແລະໜັກໜ່ວງຂື້ນ. ການປ່ອຍອາຍແກັດສ໌ເຮືອນແກ້ວທີ່ເພີ້ມຂື້ນແລະມີການເຊື່ອມໂຍງກັບອຸນຫະພູມສະເລ່ຍຂອງໂລກ ອາດຈະພາໃຫ້ເກີດມີການປ່ຽນແປງທາງພູມອາກາດຢ່າງຫລວງຫລາຍແລະອາກາດໃນແຕ່ລະດູຈະມີການປ່ຽນແປງຢູ່ໃນໂລກແລະໃນຂົງເຂດອາຊີ. ອີງຕາມສູດການຄິດໄລ່ການປ່ຽນແປງສະພາບດິນຟ້າອາກາດ ທີ່ຄາດການໄວ້ວ່າ ອາກາດພາກພື້ນດິນຂອງທະວີບອາຊີ ຈະປະສົບກັບການເພີ້ມຂື້ນຂອງອຸນນະພູມ 3 ອົງສາ ໃນແຕ່ນີ້ຫາທົດສະວັດ 2050 ແລະເພີ້ມຂື້ນ 5 ອົງສາ ຮອດທົດສະວັດ 2080 ເນື່ອງມາຈາກຜົນຂອງການປ່ອຍອາຍແກັດສ໌ເຮືອນແກ້ວ ຖ້າຫາກວ່າບໍ່ມີການຈັດຕັ້ງມາດຕະການແກ້ໄຂໃນປະຈຸບັນນີ້.[6]

10. ຜົນກະທົບ ຈາກການປ່ຽນແປງໄວຂອງດິນຟ້າອາກາດຄາດວ່າຈະມີຜົນກະທົບຕໍ່ກັບປະເທດຢູ່ໃນຂົງເຂດອາຊີແລະປາຊີຟິກ. ຊຶ່ງເລີ້ມແຕ່ເຂດພູສູງ ຮີມະລາຢາ ຈົນເຖິງປ່າເຂດຮ້ອນ ທີ່ອຸດົມສົມບູນ ຂອງອາຊີຕາເວັນອອກສຽງໃຕ້ແລະບັນດາໝູ່ເກາະດອນຕ່າງໆໃນທະເລແລະປາຊີຟິກ, ລະບົບນິເວດວິທະຍາແມ່ນມີຄວາມສ່ຽງຕໍ່ການປ່ຽນແປງດິນຟ້າອາກາດ ແລະບາງລະບົບອາດຈະຖືກທຳລາຍທີ່ບໍ່ສາມາດປົວແປງຄືນໄດ້. ປະຊາຊົນຜູ້ທຸກຍາກຢູ່ໃນກຸ່ມຄົນຂະໜາດໃຫຍ່ຂອງເຂດທະເລຊາຍຊາຮາຣາແລະອາຊີໃຕ້ ແມ່ນກຸ່ມຄົນທີ່ມີຄວາມສ່ຽງຕໍ່ການປ່ຽນແປງຂອງສະພາບດິນ

---

[5] ການພັດທະນາ ອາຊີ, ດັ່ງທີ່ໄດ້ມີການໃຫ້ຄຳນິຍາມ ອົງການພະລັງງານສາກົນ IEA, ລວມເອົາ ປະເທດ ອາຟການິນສະຖານ, ບັງກາລາເດດສ໌,

[6] ຄະນະກຳມະການລະຫວ່າງປະເທດ ວ່າດ້ວຍການປ່ຽນສະພາບພູມມີອາກາດ (IPCC). 2007. *IPCC ບົດລາຍງານການປະເມີນຜົນຄັ້ງທີ່ສີ່: ບົດສະຫລຸບ ສຳລັບຜູ້ອອກນະໂຍບາຍຂອງບົດລາຍງານກຸ່ມເຮັດວຽກທີ່ I—ໂດຍອີງໃສ່ວິທະຍາສາດທາງດ້ານວັດຖຸ.* ລາດສ໌ອາຈັກອັງກິດ: ສີພິມຂອງມະຫາໄລແຄມບຼິດຈ໌.

ຟ້າອາກາດຫລາຍ.[7] ນັກວິທະຍາສາດໄດ້ສັງເກດເຫັນຮູບແບບສະພາບອາກາດທີ່ຜິດປົກກະຕິ ແລະຜົນກະທົບຂອງມັນ ໃນຊ່ວງທີ່ຜ່ານມາ ເຊິ່ງລວມມີພະຍຸເຂດ(i) ຮ້ອນຫລາຍຂຶ້ນ, (ii) ຄວາມແຫ້ງແລ້ງ ແລະໄພນ້ຳຖ້ວມຮ້າຍແຮງຫລາຍຂຶ້ນ (iii) ແຜ່ນນ້ຳກ້ອນເປື່ອຍໄວຂຶ້ນ ແລະລະດັບນ້ຳທະເລ ກໍ່ເພີ້ມຂຶ້ນ (iv) ມີໄຟໄມ້ປ່າເກີດຂຶ້ນເປັນປະຈຳຫຼາຍຂຶ້ນ, (v) ການຂາດແຄນນ້ຳຈືດກໍ່ເພີ້ມຂຶ້ນ (vi) ມີການນາບຂູ່ຕໍ່ການຜະລິດກະສິກຳແລະການປະມົງທາງທະເລ (vii) ມີການເກີດພະຍາດຕິດຕໍ່ແລະພະຍາດທີ່ພົວພັນກັບອາກາດຮ້ອນ ມີຫລາຍຂຶ້ນ (viii) ຄວາມສ່ຽງທີ່ຈະສູນເສຍ ທາງດ້ານຊີວິດ ແລະຊັບສິນ ກໍ່ມີຫລາຍຂຶ້ນກ່ວາເກົ່າ.

11. ການເຂົ້າເຖິງການບໍລິການດ້ານພະລັງງານທີ່ທັນສະໄໝແລະເຊື່ອຖືໄດ້ ແມ່ນຍັງຄົງມີຄວາມຈຳເປັນຕໍ່ການພັດທະນາຂອງມະນຸດ, ແລະການຂະຫຍາຍຕົວທາງເສດຖະກິດແບບຍືນຍົງ, ຄຸນນະພາບຊີວິດທີ່ສູງກ່ວາ, ແລະ ການໃຫ້ການບໍລິການທາງດ້ານສາທາລະນະສຸກ ແລະການສຶກສາທີ່ດີກວ່າ. ເຖິງແມ່ນວ່າ ການເຂົ້າເຖິງພະລັງງານ ທີ່ບໍ່ໄດ້ມີການລະບຸໃນເປົ້າໝາຍສະຫະສະວັດຂອງສະຫະປະຊາຊາດກໍ່ຕາມ ແຕ່ການສຶກສາເຫັນວ່າເປົ້າໝາຍຂອງສະຫະສະວັດຈະບໍ່ສາມາດປະສົບຜົນສຳເລັດໄດ້ ຖ້າປາສະຈາກການບໍລິການທາງດ້ານພະລັງງານທີ່ທັນສະໄໝ. ການເຂົ້າເຖິງພະລັງງານ ແມ່ນມີຄວາມຈຳເປັນຕໍ່ການຫລຸດຜ່ອນຄວາມທຸກຍາກ [8] ປະຊາຊົນຜູ້ທຸກຍາກ ຕ້ອງໄດ້ນຳໃຊ້ແຫລ່ງພະຫລັງງານຕາມປະເພນີຂອງທ້ອງຖິ່ນ ເປັນຕົ້ນແມ່ນ: ໄມ້, ຖ່ານ, ມູນຂອງສັດ ແລະ ວັດຖຸເສດເຫລືອຕ່າງໆ ເພື່ອໃຊ້ເຂົ້າໃນການແຕ່ງກິນແລະຮັກສາຄວາມອົບອຸ່ນ. ອົງການພະລັງງານສາກົນ ໄດ້ຕີລາຄາວ່າ ປະມານ 2.5 ຕື້ຄົນ ໃນປະເທດກຳລັງພັດທະນາ ຈະສືບຕໍ່ເອື່ອຍອີງໃສ່ພະລັງງານຈາກຊີວະມວນ ເພື່ອຕອບສະໜອງຄວາມຕ້ອງການອັນຈຳເປັນດ້ານພະລັງງານໃນປີ 2004; ຫລາຍກ່ວາເຄິ່ງໜຶ່ງ ຂອງປະຊາກອນເຫລົ່ານີ້ ແມ່ນອາໃສຢູ່ໃນສາທາລະນາລັດປະຊາຊົນຈີນ (700 ລ້ານຄົນ) ແລະປະເທດອິນເດຍ (565 ລ້ານຄົນ).[9] ການນຳໃຊ້ພະລັງງານເຊື້ອໄຟ ແລະໄຟຟ້າທີ່ທັນສະໄໝ ຈະຊ່ວຍແກ້ໄຂຄວາມດຸ່ນດ່ຽງລະຫວ່າງເພດໄວ ໂດຍການເພີ້ມຜະລິດຕະຜົນ ແລະຫລຸດຜ່ອນມົນລະພິດຢູ່ພາຍໃນຄົວເຮືອນ.

12. ການທົບທວນຂໍ້ຫຍຸ້ງຍາກໃນປະຈຸບັນ, ແລະການຄາດຄະເນໃນອານາຄົດ ເຊິ່ງເປັນບັນຫາທີ່ເກີດຂຶ້ນກ່ຽວກັບພະລັງງານໃນຂົງເຂດອາຊີ ແລະປາຊີຟິກ ພົບວ່ານະໂຍບາຍວ່າດ້ວຍພະລັງງານ ສະບັບປີ 1995 ຍັງມີພື້ນຖານໂຄງລ່າງທີ່ເໝາະສົມໃນແກ້ໄຂ ຄວາມຕ້ອງການດ້ານພະລັງງານ ຂອງບັນດາປະເທດສະມາຊິກ ທີ່ກຳລັງພັດທະນາ. ອົງປະກອບຂອງນະໂຍບາຍວ່າດ້ວຍປະສິດທິພາບດ້ານພະລັງງານ, ແລະສິ່ງແວດລ້ອມ, ການພັດທະນາພະລັງງານຢູ່ທ້ອງຖິ່ນ, ການປັບປຸງທາງໂຄງສ້າງດ້ານພະລັງງານ ແລະການຮ່ວມມືໃນພາກພື້ນ ຍັງຄົງມີຄວາມເໝາະສົມຢູ່. ໄດ້ມີການດຳເນີນການປະເມີນບັນຫາດ້ານນະໂຍບາຍພະລັງງານຢ່າງລະອຽດ ໂດຍອີງໃສ່ນະໂຍບາຍພະລັງງານສະບັບ

---

[7] ສະເຕີນ ນິໂຄຮັດສ໌. 2006. *ການທົບທວນຂອງສ໌ເຕີນ, ເສດຖະສາດຂອງການປ່ຽນແປງສະພາບອາກາດ*, ລອນດອນ: ຫ້ອງການຄັງເງິນຂອງລັດຖະບານລາດສະອານາຈັກອັງກິດ ແລະອານແລນເໜືອ.

[8] ໂມດີ, ວີ., ເອດສ໌. ແມດດາດ, ດີ. ລາເລມັງ ແລະ ເຈ. ຊາເກຍ. 2006. ການບໍລິການດ້ານພະລັງງານສຳລັບເປົ້າໝາຍສະຫະສະວັດ. ນິວຢອກ: ແຜນການຊ່ວຍເຫລືອຂະແໜງພະລັງງານສຸກເສີນ, ອົງການສະຫະປະຊາຊາດເພື່ອການພັດທະນາ, ໂຄງການສະຫະສະວັດຂອງ ສະຫະປະຊາຊາດ ແລະທະນາຄານໂລກ.

[9] ອົງການພະລັງງານສາກົນ.2006. ການຄາດຄະເນຄວາມຕ້ອງການພະລັງງານຂອງໂລກ. ປາຣີ.

1995, ສະບັບທົບທວນຄືນ ປີ 2000, ຜົນຂອງການທົບທວນຄືນ ແລະເຂດບູລິມະສິດທີ່ລະບຸໃນເອກະສານ ຍຸດທະສາດ ຮອດປີ 2020 (ເອກະສານຊ້ອນທ້າຍ1).

## III. ນະໂຍບາຍວ່າດ້ວຍພະລັງງານ

13. ເພື່ອຕອບສະໜອງກັບສິ່ງທີ່ທ້າທາຍ ດັ່ງທີ່ໄດ້ອະທິບາຍໃນວັກທີ່ 8-11 ແລະສະທ້ອນໃນການຄົ້ນພົບ ຂອງເອກະສານທົບທວນຄືນ, ການໃຫ້ຄໍາຄິດເຫັນຈາກຄູ່ຮ່ວມພັດທະນາ, ປະສົບການທີ່ຜ່ານມາ ແລະການວິເຄາະດ້ານນະໂຍບາຍ, ນະໂບາຍດ້ານພະລັງງານ ປີ 1995 ສະບັບປັບປຸງ. ນະໂຍບາຍດ້ານພະລັງງານ 2009 ແມ່ນສອດຄ່ອງກັບຍຸດທະສາດ ປີ 2020 ເຮັດໃຫ້ການດໍາເນີນງານດ້ານພະລັງງານໄປໃນແລວດຽວກັນກັບຍຸດທະສາດໂດຍລວມ ຂອງເອດີບີ ທີ່ເນັ້ນໜັກໃສ່ຄວາມໝັ້ນຄົງດ້ານພະລັງງານ, ທີ່ເອື້ອອໍານວຍຄວາມສະດວກໃນການກ້າວສູ່ເສດຖະກິດທີ່ຜະລິດອາຍກາກບອນຕໍ່າ, ການເຂົ້າເຖິງພະລັງງານໂດຍທົ່ວໄປ ແລະບັນລຸເປົ້າໝາຍຂອງເອເດີບີ ໃນການລົບລ້າງຄວາມທຸກຍາກທີ່ຢູ່ໃນພາກພື້ນ.

14. ຈຸດປະສົງຂອງນະໂຍບາຍພະລັງງານສະບັບ ປີ 2009 ແມ່ນເພື່ອຊ່ວຍບັນດາປະເທດສະມາຊິກທີ່ກໍາລັງພັດທະ ນາ ໃນການສະໜອງພະລັງງານທີ່ເຊື່ອຖືໄດ້, ພຽງພໍແລະສາມາດຊື້ໄດ້ ເພື່ອການຂະຫຍາຍຕົວທາງເສດຖະກິດ, ສັງຄົມ, ແລະສິ່ງແວດລ້ອມໃນທິດທາງແບບຍືນຍົງ. ນະໂຍບາຍສະບັບນີ້ໄດ້ເນັ້ນໜັກໃສ່ພະລັງງານທີ່ມີປະສິທິພາບລະສາມາດທົດແທນຄືນໄດ້, ການເຂົ້າເຖິງພະລັງງານຂອງທຸກຊັ້ນຄົນແລະການປະຕິຮູບພາກສ່ວນພະລັງງານ, ການສ້າງຂີດຄວາມອາດສາມາດແລະການບໍລິຫານ ການຄຸ້ມຄອງດ້ານພະລັງງານ.

15. ເພື່ອຈະສາມາດບັນລຸບັນດາຈຸດປະສົງເຫລົ່ານີ້ ການຈັດຕັ້ງປະຕິບັດນະໂຍບາຍພະລັງງານຈະອີງໃສ່ບົນຫລັກການດັ່ງຕໍ່ໄປນີ້:

(i) ການສະໜັບສະໜູນການປັບປຸງປະສິດທິພາບຂອງພະລັງງານ ແລະໂຄງການພະລັງງານທົດແທນຈະເປັນບຸລິມະສິດ ແລະຂະຫຍາຍໃຫ້ກວ້າງອອກສູ່ຂະແໜງການອື່ນໃຫ້ໄດ້ຫລາຍເທົ່າທີ່ຈະຫລາຍໄດ້. ອັນນີ້ຈະຊ່ວຍໃຫ້ (ກ) ຫລຸດຜ່ອນການເພີ້ມຂຶ້ນ ຂອງຄວາມຕ້ອງການດ້ານພະລັງງານເຊື້ອໄຟທີ່ເປັນແຮ່ທາດແລະຄວາມກົດດັນດ້ານລາຄາພະລັງງານ, (ຂ) ປັບປຸງຄວາມໝັ້ນຄົງທາງດ້ານພະລັງງານ ແລະ (ຄ) ຫລຸດຜ່ອນການປ່ອຍອາຍແກັດສ໌ເຮືອນແກ້ວ.

(ii) ຄວາມພະຍາຍາມໃນການໃຫ້ການບໍລິການດ້ານພະລັງງານ ເພື່ອຕອບສະໜອງການຂະຫຍາຍຕົວທາງເສດຖະກິດໃນທຸກໆດ້ານ ຈະກ້ວາງອອກ ແລະແຜນງານທີ່ຈະຂະຫຍາຍການໃຫ້ບໍລິການດ້ານພະລັງງານແກ່ຊຸມຊົນແລະກຸ່ມຄົນຈະມີການເລັ່ງໃຫ້ໄວຂຶ້ນ. ຍ້ອນວ່າເປົ້າໝາຍສະຫັດສະວັດບໍ່ສາມາດບັນລຸໄດ້ ຖ້າປາສະຈາກການເຂົ້າເຖິງການບໍລິການພະລັງງານທີ່ທັນສະໄໝ, ການເຂົ້າເຖິງພະລັງງານແມ່ນມີຄວາມສໍາຄັນຫລາຍຕໍ່ການຫລຸດຜ່ອນຄວາມທຸກຍາກ.

(iii) ການຮ່ວມມືໃນຂະແໜງພະລັງງານຂອງພາກພື້ນທີ່ມີປະສິດທິພາບ ຈະໄດ້ຮັບການສົ່ງເສີມເພື່ອເສີມສ້າງຄວາມໝັ້ນຄົງດ້ານພະລັງງານ.

(iv) ການປະຕິຮູບຂະແໜງພະລັງງານ, ການສ້າງຂີດຄວາມອາດສາມາດ, ແລະການບໍລິຫານຄຸ້ມຄອງ ຈະໄດ້ມີການເໜັ້ນໜັກເພື່ອເພີ້ມການລົງທຶນ ແລະການນຳໃຊ້ຊັບພະຍາກອນພະລັງງານ ທີ່ມີປະສິດທິພາບ. ການເຂົ້າມາມີສ່ວນຮ່ວມຂອງພາກເອກະຊົນ (ແລະການຮ່ວມມືລະຫ່ວາງພາກລັດ ແລະເອກະຊົນ) ຈະຊ່ວຍຊຸກຍູ້ໃຫ້ຂະແໜງພະລັງງານມີປະສິດທິພາບຫລາຍຂຶ້ນ ໂດຍຜ່ານການແຂ່ງຂັນ ແລະ ການເພີ້ມຊັບພະຍາກອນດ້ານພະລັງງານທີ່ສາມາດລົງທຶນໄດ້ ແຕ່ບໍ່ໄດ້ໝາຍຄວາມວ່າແມ່ນການສິ້ນສຸດຈຸດປະສົງການປະຕິຮູບແລ້ວ.

(v) ທຸກໆການລົງທຶນເຂົ້າໃນຂະແໜງການພະລັງງານ ຈະຕ້ອງປະຕິບັດຕາມນະໂຍບາຍ ປ້ອງກັນ ຂອງ ເອດີບີ ວ່າດ້ວຍສິ່ງແວດລ້ອມ, ການຕັ້ງຖິ່ນຖານຄືນໃໝ່ ແບບບໍ່ສະໝັກໃຈແລະຄົນທ້ອງຖິ່ນ ເພື່ອຮັບປະກັນວ່າບຸກຄົນທີ່ໄດ້ຮັບຜົນກະທົບຈະຕ້ອງໄດ້ຮັບການປົກປ້ອງ ຈາກຄວາມສ່ຽງທີ່ຈະພາໃຫ້ເກີດ ມີຄວາມທຸກຍາກ ແລະແຜນພັດທະນາສຳລັບກຸ່ມຄົນທີ່ມີຄວາມສ່ຽງ ໄດ້ຖືກລວບລວມເຂົ້າ ແລະ ຖືກ ຈັດຕັ້ງປະຕິບັດ

(vi) ເອດີບີ ຈະບໍ່ເຂົ້າຮ່ວມໃນການສະໜອງທຶນໃຫ້ໂຄງການພະລັງງານນິວເຄຼຍ

(vii) ໃນເມື່ອຖ່ານຫີນແລະນ້ຳມັນເຊື້ອໄຟ ແມ່ນສິນຄ້າທີ່ມີການຊື້ຂາຍໃນຕະຫລາດສາກົນ ຜົນປະໂຫຍດທາງດ້ານການຄ້າ, ເອດີບີ ຈະບໍ່ສະໜອງທຶນໃຫ້ແກ່ການພັດທະນາບໍ່ຖ່ານຫີນ ຍົກເວັ້ນແຕ່ມີການນຳໃຊ້ເຂົ້າໃນພະລັງງານຄວາມຮ້ອນແລະການພັດທະນາບໍ່ນ້ຳມັນ ຍົກເວັ້ນແຕ່ບາງສ່ວນ ແລະບໍ່ນ້ຳມັນທີ່ໄດ້ຮັບການພິສູດແລ້ວ.

(viii) ດັ່ງທີ່ເປັນທະນາຄານແຫ່ງສູນກາງຄວາມຮູ້ຂອງພາກພື້ນ ເອດີບີ ຈະສົ່ງເສີມຄວາມຮູ້ ແລະປະສົບການແລະເຜີຍແຜ່ປະສົບການແລະບົດຮຽນທີ່ດີ. ເອດີບີ ຍັງຈະໃຫ້ການສະໜັບສະນູນແລະຊ່ວຍເຫລືອປະເທດສະມາຊິກທີ່ກຳລັງພັດທະນາໃນການນຳໃຊ້ ແລະຖ່າຍໂອນເຕັກໂນໂລຊີ.

(ix) ເອດີບີ ຈະຮ່ວມມືກັບບັນດາຄູ່ຮ່ວມພັດທະນາໃນຫລາຍໆລະດັບລວມທັງອົງການຈັດຕັ້ງສາກົນ, ສະຖາບັນຫລາຍຝ່າຍຫລືສອງຝ່າຍ, ພາກສ່ວນເອກະຊົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອົງການຊຸມຊົນ ແລະມູນນິທິ ທີ່ໃຫ້ການຊ່ວຍເຫລືອດ້ານມະນຸດສະທຳ.

(x) ຈະມີການໄຈ້ແຍກສະພາບການສະເພາະໃນແຕ່ລະປະເທດສະມາຊິກທີ່ກຳລັງພັດທະນາ ໃນການວາງແຜນແລະການອອກແບບການແຊກແຊງເຂົ້າ ໂດຍສະເພາະແມ່ນປະເທດສະມາຊິກທີ່ກຳລັງພັດທະນາຢູ່ໃນຂົງເຂດປາຊີຟິກ ຍ້ອນຄວາມຈຳກັດດ້ານແຫລ່ງພະລັງງານແລະມີຄວາມສ່ຽງທີ່ມີລັກສະນະສະເພາະ.

(xi) ການຈັດຕັ້ງປະຕິບັດນະໂຍບາຍ ຈະມີການຕິດຕາມກວດກາໝາກຜົນທີ່ໄດ້ຮັບ ທາງດ້ານໂຄງສ້າງ (ວັກ. 49).

## IV. ການຈັດຕັ້ງປະຕິບັດນະໂຍບາຍ

16. ອົງຕາມຈຸດປະສົງ ຂອງນະໂຍບາຍດ້ານພະລັງງານສະບັບ 2009 ການຈັດຕັ້ງປະຕິບັດນະໂຍບາຍພະລັງງານຕ້ອງໄດ້ລວມເອົາບັນຫາທີ່ເກີດຂຶ້ນໃໝ່ ແລະທາງເລືອກ, ບົດຮຽນຈາກການດຳເນີນງານໃນອະດີດ ແລະປະສົບການຂອງບັນດາຄູ່ຮ່ວມພັດທະນາອື່ນໆ ລວມທັງທະນາຄານໂລກ. ນະໂຍບາຍນີ້ ກໍ່ໄດ້ຮັບການສະໜັບສະໜູນຈາກການວິ

ເຄາະບັນຫາ ທີ່ພົວພັນເຖິງ ເຊື້ອໄຟທີ່ເປັນແຮ່ທາດ, ການສ້າງພະລັງງານ ແລະການສ້າງຄວາມອົບອຸ່ນພາຍໃນທ້ອງຖິ່ນ, ການປະຕິຮູບແລະການປັບປຸງຂະແໜງພະລັງງານ, ການຮ່ວມມືໃນພາກພື້ນ ແລະຄວາມຕ້ອງການສະເພາະຂອງປະເທດສະມາຊິກທີ່ກຳລັງພັດທະນາ. ການຈັດຕັ້ງປະຕິບັດນະໂຍບາຍນີ້ ຍັງມີການອະທິບາຍຢ່າງແຈ່ມແຈ້ງເຖິງສ່ວນປະກອບທີ່ຄວາມສຳຄັນຂອງຍຸດທະສາດ 2020 ເຊິ່ງໄດ້ຈັດໃຫ້ຂະແໜງພະລັງງານ ເປັນຂະແໜງບຸລິມະສິດທີ່ພົວພັນເຖິງຈຸດປະສົງ ແລະໄຈ້ແຍກຄວາມຕ້ອງການດ້ານຄວາມອາດສາມາດຂອງອົງການໃນອານາຄົດພາຍໃຕ້ການປ່ຽນແປງ ສະພາບການດ້ານເຕັກໂນໂລຢີ ຢູ່ພາກພື້ນ ແລະຂອງໂລກ.

17. ສຳລັບການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ, ເອດີບີ ຈະຊອກການຮ່ວມມືກັບຄູ່ຮ່ວມພັດທະນາທີ່ກ້ວາງຂຶ້ນ. ເພື່ອການລະດົມທຶນທີ່ຈຳເປັນແລະຮູບແບບການລົງທຶນເຂົ້າໃນການລິເລີ້ມໃໝ່ຂອງຂະແໜງການພະລັງງານເຊັ່ນການລິເລີ້ມພະລັງງານທີ່ມີປະສິດທິພາບແລະຕະຫລາດອາຍກາກບອນ, ກົນໄກການສະໜອງທຶນຮ່ວມກັນແລະກອງທຶນຕົວ ແທນໄດ້ຮັບການສ້າງຕັ້ງຂຶ້ນ. ນອກຈາກນັ້ນ ທຶນທີ່ໝູນໃຊ້ເຂົ້າໃນການສະໜອງເງິນທຶນຮ່ວມກັນເຂົ້າໃນບາງໂຄງ ການແລະການລິເລີ້ມສະເພາະ. ເອດີບີ ຍັງຈະຮ່ວມມືກັນຢ່າງໃກ້ສິດກັບໂຄງການວ່າດ້ວຍການລິເລີ້ມຂອງການປ່ຽນແປງສະພາບອາກາດ ເຊັ່ນກອງທຶນການລົງທຶນວ່າດ້ວຍສະພາບອາກາດ ເພື່ອຊ່ວຍໃຫ້ບັນດາປະເທດສະມາຊິກທີ່ກຳລັງພັດ ທະນາ ກ້າວໄປສູ່ລະບົບເສດຖະກິດທີ່ປ່ອຍອາຍກາກບອນຕ່ຳ.[10] ເອດີບີ ຈະ (i) ສືບຕໍ່ຊອກຫາຄຳໝັ້ນສັນຍາວ່າດ້ວຍຮູບແບບການປະກອບທຶນຮ່ວມກັນ, (ii) ການແລກປ່ຽນຄວາມຮູ້ແລະປະສົບການ,(iii) ການປະສານຄວາມພະຍາຍາມກັບບັນດາຄູ່ຮ່ວມພັດທະນາ. ເນື່ອງຈາກຄວາມຕ້ອງການການລົງທຶນໃນຂະແໜງການພະລັງງານແມ່ນມີຫລາຍໃນຂົງເຂດອາຊີແລະປາຊີຟິກ ໄປພ້ອມກັນກັບຄວາມຕ້ອງການ ທີ່ຈະຂະຫຍາຍປະສິດທິພາບທາງເສດຖະກິດໃຫ້ໄດ້ຫລາຍຂຶ້ນ, ເອດີບີ ຍັງຈະໄດ້ເພີ້ມທະວີບົດບາດຂອງພາກສ່ວນເອກະຊົນ ແລະຍົກລະດັບຜົນທີ່ຈະເກີດຈາກການຮ່ວມມື ກັນຂອງການດຳເນີນງານຂອງພາກສ່ວນເອກະຊົນແລະພາກລັດຂອງເອດີບີ.

18. ເພື່ອຊ່ວຍບັນດາປະເທດສະມາຊິກທີ່ກຳລັງພັດທະນາ ກ້າວໄປສູ່ລະບົບເສດຖະກິດທີ່ມີການປ່ອຍອາຍກາກບອນຕ່ຳ, ເອດີບີ ຈະໃຫ້ການຊ່ວຍເຫລືອສຳລັບກິດຈະກຳທີ່ຊ່ວຍຫລຸດຜ່ອນການປ່ຽນແປງສະພາບດິນຟ້າອາກາດເປັນຫລັກໃນປະເທດສະມາຊິກທີ່ກຳລັງພັດທະນາເຊັ່ນ (i) ການສະໜອງທຶນໃຫ້ແກ່ໂຄງການຫລຸດຜ່ອນການສົ່ງທາດອາຍແກັດສ໌ເຮືອນແກ້ວ, (ii) ດຳເນີນການວິເຄາະບັນດາທາງເລືອກຕ່າງໆ ເພື່ອຕອບສະໜອງກັບການຂະຫຍາຍຕົວຂອງຂະແໜງການພະລັງງານ,(iii) ລວບລວມເອົາປະລິມານອາຍແກັດສ໌ເຮືອນແກ້ວຂອງບັນດາໂຄງການ ແລະ (iv) ໃຫ້ການສະໜັບສະໜູນໃນການສ້າງຂີດຄວາມອາດສາມາດເພື່ອໄຈ້ແຍກ ແລະປະເມີນຍຸດທະສາດການພັດທະນາການປ່ອຍອາຍກາກບອນຕ່ຳ.

---

[10] ກອງທຶນລົງທຶນໃນພູມມີອາກາດ ທີ່ໄດ້ຮັບການລິເລີ້ມໂດຍ ລັດຖະບານຍີ່ປຸ່ນ, ສະຫະຣາດອານາຈັກອັງກິດ ແລະ ສະຫະລັດອາເມລິກາເພື່ອຊ່ວຍບັນດາປະເທດສະມາຊິກ ທີ່ກຳລັງພັດທະນາ ປ່ຽນແປງເສດຖະກິດຂອງຕົນ ໃຫ້ເປັນເສດຖະກິດທີ່ປ່ອຍອານກາກບອນຕ່ຳ ແລະມີຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍ.

19. ການຈັດຕັ້ງປະຕິບັດນະໂຍບາຍພະລັງງານຈະໄດ້ຮັບການຊີ້ນຳໂດຍສາມນະໂຍບາຍຫລັກ: (i) ສົ່ງເສີມປະສິດ ທິພາບຂອງພະລັງງານແລະພະລັງງານທົດແທນຄືນໄດ້; (ii) ເພີ້ມພູນໃນການເຂົ້າເຖິງພະລັງງານຂອງທຸກຊັ້ນຄົນ; (iii) ສົ່ງເສີມການປະຕິຮູບຂະແໜງການພະລັງງານ, ສ້າງຂີດຄວາມອາດສາມາດ ແລະການຄຸ້ມຄອງທີ່ດີ.

## ກ. ສົ່ງເສີມປະສິດທິຜົນຂອງພະລັງງານແລະພະລັງງານທົນແທນ

20. ການນຳໃຊ້ພະລັງງານທີ່ມີປະສິດທິພາບແມ່ນທາງເລືອກໜຶ່ງທີ່ມີປະສິດທິຜົນ ໃນການຕອບສະໜອງຄວາມຕ້ອງການດ້ານພະລັງງານພ້ອມດຽວກັນນັ້ນກໍ່ຊ່ວຍແກ້ໄຂຄວາມຮ້ອນຂອງໂລກ. ເພີ້ມປະສິດທິພາບຂອງການນຳໃຊ້ ແລະການສະໜອງພະລັງງານ ຈະຊ່ວຍເພີ້ມມູນຄ່າໃນການບໍລິການ ຂອງການຊົມໃຊ້ພະລັງງານໃນແຕ່ລະຫົວໜ່ວຍຄຽງຄູ່ກັນກັບການສ້າງຜົນປະໂຫຍດອັນໃຫຍ່ຫລວງໃຫ້ແກ່ເສດຖະກິດແລະສິ່ງແວດລ້ອມ. ປະສິດທິພາບທາງດ້ານພະລັງງານແມ່ນມີຄວາມສຳຄັນ (i) ຫລຸດຜ່ອນການເພີ້ມຂຶ້ນ ຂອງຄວາມຕ້ອງການພະລັງງານເຊື້ອໄຟທີ່ເປັນແຮ່ທາດ, (ii) ປັບປຸງຄວາມໝັ້ນຄົງດ້ານພະລັງງານ,(iii) ຫລຸດຜ່ອນການປ່ອຍທາດອາຍແກັດສ໌ເຮືອນແກ້ວ.

21. ປັບປຸງປະສິດທິພາບດ້ານພະລັງງານ ໂດຍການວິເຄາະທັງທາງອອກດ້ານຄວາມຕ້ອງການ ແລະດ້ານການສະໜອງ ແມ່ນບຸລິມະສິດຂອງ ເອດີບີ ຄວາມພະຍາຍາມເພີ້ມເຕີມ ຈະຕ້ອງໄດ້ປະຕິບັດພາຍໃຕ້ນະໂຍບາຍພະລັງງານເພື່ອຫລຸດຜ່ອນຄວາມຕ້ອງການພະລັງງານຜ່ານການລິເລີ້ມປະສິດທິພາບດ້ານພະລັງງານ ລວມທັງ 3R - ຫລຸດຜ່ອນ, ການນຳກັບມາໃຊ້ຄືນໃໝ່ແລະການເພີ້ມປະສິດທິພາບໃນລະບົບ. ໃນຂະນະທີ່ມີໂອກາດຫລາຍ ໃນການປັບປຸງປະສິດທິພາບຂອງພະລັງງານການເພີ້ມຂຶ້ນຂອງຄວາມຕ້ອງການດ້ານພະລັງງານໃນພາກພື້ນ ແມ່ນຮຽກຮ້ອງໃຫ້ມີການລົງທຶນຫລາຍຂຶ້ນ ໃນຂີດຄວາມອາດສາມາດໃໝ່ໃນການສ້າງພະລັງງານ. ສະນັ້ນໃນຂະນະທີ່ການລິເລີ້ມດ້ານພະລັງງານ ແລະພະລັງງານທົດແທນຄືນໄດ້ ຄວນໄດ້ຮັບບຸລິມະສິດນີ້ບໍ່ຄວນແມ່ນຄ່າໃຊ້ຈ່າຍຂອງ "ການດັບໄຟແຕ່ຕົ້ນ"

22. ເອດີບີ ຈະຂະຫຍາຍການດຳເນີນງານຂອງຕົນໃນຂະແໜງອຸດສາຫະກຳ ໂດຍການຮ່ວມມືກັບສະມາຄົມອຸດສາຫະກຳ, ທະນາຄານພາຍໃນປະເທດແລະອົງການທີ່ສຶກສາເປັນພິເສດກ່ຽວກັບປະສິດທິພາບດ້ານພະລັງງານ ແລະ ບໍລິສັດທີ່ໃຫ້ບໍລິການດ້ານພະລັງງານ. ເອດີບີ ຈະຊ່ວຍໃນການຈຳແນກທາງເລືອກ ຂອງປະສິດທິພາບດ້ານພະລັງງານແລະກະກຽມການຊ່ວຍເຫລືອທາງດ້ານການເງິນແລະການຄ້ຳປະກັນ. ເພື່ອແກ້ໄຂຄວາມຕ້ອງການດ້ານພະລັງງານ ຂອງພາກທຸລະກິດແລະຜູ້ຢູ່ອາໄສເຊິ່ງກວມເອົາ 30% ຂອງຄວາມຕ້ອງການພະລັງງານທັງໝົດ ເອດີບີ ຈະຊ່ວຍປະເທດສະມາຊິກ ທີ່ກຳລັງພັດທະນາໃນການສ້າງກອບກົດໝາຍ ແລະມາດຕະຖານທາງດ້ານປະສິດທິພາບ ທີ່ຕ້ອງການຜະລິດແລະນຳໃຊ້ຜະລິດຕະພັນແລະອຸປະກອນທີ່ມີປະສິດທິພາບດ້ານພະລັງງານໂດຍສະເພາະ ຜະລິດຕະພັນເພື່ອການບໍລິໂພກ. ນີ້ຍັງ ອາດຈະລວມທັງການສ້າງຕັ້ງ ອົງການ ໃນການອອກເຄື່ອງໝາຍສິນຄ້າ.

23. ການເພີ້ມຂຶ້ນຂອງແຫລ່ງພະລັງງານໃໝ່ ແລະພະລັງງານທົດແທນເນື່ອງມາຈາກ ຄວາມກ້າວໜ້າທາງເຕັກໂນໂລຢີແລະທາງເລືອກສຳລັບການເຊື່ອມຕໍ່ເຂົ້າກັບລະບົບຕາໜ່າງໄຟຟ້າ,ການສະໜອງພະລັງງານໄຟຟ້າຈາກຊຸມຊົນ. ເອ ດີບີ ຈະຊອກຫາໂຄງການພະລັງງານທົດແທນເພື່ອຈະສະໜອງທຶນໃຫ້. ເພື່ອການນຳໃຊ້ພະລັງງານທີ່ສະອາດຕໍ່ສິ່ງແວດລ້ອມໃນບັນດາປະເທດສະມາຊິກທີ່ກຳລັງພັດທະນາ ເອດີບີ ຈະອຳນວຍຄວາມສະດວກໃນການນຳໃຊ້ເຕັກໂນ

ໂລຍີດ້ານພະລັງງານເພື່ອສິ່ງແວດລ້ອມທີ່ກ້ວາງຂວາງກ່ວາເກົ່າ ໂດຍຜ່ານການເພີ້ມຄວາມເຂົ້າໃຈ, ນະໂຍບາຍເພື່ອການສົ່ງເສີມ ແລະລະບຽບການທີ່ເປັນສິ່ງຈູງໃຈເພື່ອຊຸກຍູ້ ໃນການນຳໃຊ້ພະລັງງານສະອາດແລະສົ່ງເສີມການຊ່ວຍເຫລືອທາງການເງິນຄົບຊຸດທີ່ຊ່ວຍກັນແບ່ງເບົາຄວາມສ່ຽງແລະຕົ້ນທຶນທີ່ຕ່ຳກວ່າ. ພິຈາລະນາຄວາມສົນໃຈລະດັບສາກົນຕໍ່ກັບພະ ລັງງານຊີວະມວນ ເອດີບີ ຈະໃຫ້ການສະໜັບສະໜູນການສຶກສາຄົ້ນຄ້ວາ ເພື່ອການປະເມີນຕົ້ນທຶນແລະຜົນປະໂຫຍດ ສຳລັບການພັດທະນາພະລັງງານຊີວະມວນແບບຍືນຍົງ ໂດຍສະເພາະດ້ານຄວາມໝັ້ນຄົງທາງດ້ານສະບຽງອາຫານ, ຄວາມສົມດຸນທາງດ້ານພະລັງງານສຸດທິຂອງພືດແລະຜົນກະທົບຕໍ່ສະພາບສິ່ງແວດລ້ອມ. ເອດີບີຈະໃຫ້ການສະໜັບໜູນເຂົ້າໃນການພັດທະນາ ໃນເມື່ອຜົນປະໂຫຍດບົ່ງບອກເຖິງຄວາມເໝາະສົມກ່ຽວກັບໂຄງການພະລັງງານດັ່ງກ່າວ.

24. ຄວາມຍືນຍົງທາງການເງິນຂອງໂຄງການພະລັງງານທີ່ມີປະສິດທິພາບແລະພະລັງງານທົນແທນ ຈະດີຂື້ນໄປພ້ອມກັນກັບລາຍຮັບເພີ້ມເຕີມຈາກກົນໄກການພັດທະນາພະລັງງານສະອາດ (CDM) ເຊັ່ນ: ການຂາຍການຫລຸດຜ່ອນການປ່ອຍຄວັນອາຍເສຍຕໍ່ອາກາດທີ່ໄດ້ມີການຮັບຮອງ. ການລິເລີ້ມຕະຫລາດອາຍກາກບອນຂອງເອດີບີຈະຊ່ວຍໃຫ້ການສະໜັບສະໜູນດ້ານການເງິນກ່ອນແລະສືບຕໍ່ໃຫ້ການຊ່ວຍເຫລືອທາງດ້ານວິຊາການແກ່ຜູ້ພັດທະນາແລະໃຫ້ການສະໜັບສະໜູນທາງການເງິນແກ່ໂຄງການທີ່ໃຫ້ຜົນປະໂຫຍດໃນການຫລຸດຜ່ອນອາຍແກັດສ໌ເຮືອນແກ້ວແລະສາ ມາດໄດ້ຮັບສິດຈາກໂຄງການກົນໄກການພັດທະນາພະລັງງານພາຍໃຕ້ສົນທິສັນຍາກຽວໂຕ. ເອດີບີ ຈະສືບຕໍ່ໃຫ້ການຊ່ວຍເຫລືອແກ່ປະເທດສະມາຊິກທີ່ກຳລັງພັດທະນາໃນການອອກແບບໂຄງການທີ່ຈະໄດ້ຮັບສິດໃນການຮັບຮອງການຫລຸດຜ່ອນການປ່ອຍຄວັນອາຍເສຍຕໍ່ອາກາດ.

25. ເອດີບີ ຈະສົ່ງເສີມການຂະຫຍາຍນະໂຍບາຍທີ່ຊຸກຍູ້ການພັດທະນາພະລັງງານທົດແທນ. ຈຸດປະສົງແມ່ນເພື່ອສ້າງໂຄງຮ່າງໃຫ້ແກ່ການລົງທຶນໃນພະລັງງານທົດແທນໃນທາງການຄ້າໄດ້. ພ້ອມກັນນັ້ນ ເອດີບີ ຈະຮັບເອົາຄວາມສ່ຽງຫລາຍຂຶ້ນແລະຈະເປັນເຄື່ອງຊ່ວຍສຳລັບການລົງທຶນທີ່ພາກເອກະຊົນອາດຈະບໍ່ເຕັມໃຈທີ່ຈະລົງທຶນ. ເອດີບີຈະອຳນວຍຄວາມສະດວກໃນການລົງທຶນໂດຍກົງຂອງພາກເອກະຊົນທີ່ສົ່ງເສີມການຂະຫຍາຍໂຕທາງດ້ານເສດຖະກິດແລະປັບປຸງສະພາບສິ່ງແວດລ້ອມ.

26. ເນື່ອງຈາກມີສິ່ງທີ່ທ້າທ້າຍອັນໃຫຍ່ຫລວງຕໍ່ຄວາມໝັ້ນຄົງດ້ານພະລັງງານ ແລະການປ່ຽນແປງດ້ານສະພາບດິນ ຟ້າອາກາດ ເອດີບີ ໄດ້ເພີ້ມຄວາມເຂັ້ມແຂງຂອງສາຖາບັນຕົນເອງ ແລະລິເລີ້ມຍຸດທະສາດການປະຕິບັດກ່ຽວກັບພະ ລັງງານສະອາດ ແລະແຜນງານດ້ານສິ່ງແວດລ້ອມ. ແຜນງານນີ້ ລວມເອົາຫລາຍໆການລິເລີ້ມ ເພື່ອຊ່ວຍເຫລືອປະເທດສະມາຊິກທີ່ກຳລັງພັດທະນາມານຳໃຊ້ພະລັງງານງານທົດແທນແລະເຕັກໂນໂລຍີພະລັງງານທີ່ມີປະສິດທິພາບຫລາຍຂຶ້ນ. ເອດີບີ ສາມາດມີບົດບາດ ໃນການເລື່ອນວາລະພະລັງງານສະອາດໃນຂົງເຂດອາຊີ ແລະປາຊີຟິກໃຫ້ໄວຂຶ້ນ. ເປົ້າໝາຍຂອງເອດີບີ ໃນການເພີ້ມການລົງທຶນເຂົ້າໃນພະລັງງານສະອາດໃຫ້ເຖິງ 1 ຕື້ໂດລາ ຕໍ່ປີເລີ່ມຈາກປີ 2008 ໄດ້ປະສົມຜົນສຳເລັດຄາດໝາຍໃນປີ 2008, ໄດ້ຕັ້ງພື້ນຖານທີ່ຈະໃຫ້ມີການລົງທຶນ 2 ຕື້ໂດລາຕໍ່ປີ ເລີ່ມຈາກປີ

2013. [11] ເຖິງແມ່ນວ່າອັນນີ້ເປັນພຽງແຕ່ສ່ວນນ້ອຍໆຂອງຄວາມຕ້ອງການຂອງພາກພື້ນ ສ່ວນປະກອບນີ້ຈະເປັນສິ່ງສຳຄັນໃນການຊ່ວຍເພີ້ມເຕີມບັນດາແຫຼ່ງຊັບພະຍາກອນທີ່ມາຈາກແຫຼ່ງອື່ນໆ.

## ຂ. ການເຂົ້າເຖິງພະລັງງານສຳລັບທຸກຊັ້ນຄົນໃຫ້ໄດ້ຫລາຍເທົ່າທີ່ຈະຫລາຍໄດ້

27. ບໍ່ສາມາດບັນລຸເປົ້າໝາຍສະຫະສະວັດໄດ້ ຖ້າປາສະຈາກການບໍລິການດ້ານພະລັງງານທີ່ທັນສະໄໝ. ການເຂົ້າເຖິງພະລັງງານແມ່ນມີຄວາມສຳຄັນຫລາຍຕໍ່ການຫລຸດຜ່ອນຄວາມທຸກຍາກ. ອີງຕາມນະໂຍບາຍວ່າດ້ວຍພະລັງງານ 2009 ແລະວາລະການຂະຫຍາຍຕົວທຸກຂະແໜງໃນການພັດທະນາຂອງຍຸດທະສາດ 2020, ການຈັດຕັ້ງປະຕິບັດນະໂຍບາຍຈະຊ່ວຍດຶງດູດບັນດາປະເທດສະມາຊິກທີ່ກຳລັງພັດທະນາ ແລະຄູ່ຮ່ວມພັດທະນາສອງຝ່າຍແລະຫລາຍຝ່າຍມີສ່ວນຮ່ວມຢ່າງຕັ້ງໜ້າ ໃນການແກ້ໄຂຄວາມຂາດແຄນໃນການເຂົ້າເຖິງພະລັງງານ. ເອດີບີ ຈະໃຫ້ການສະໜັບສະໜູນແກ່ປະເທດສະມາຊິກທີ່ກຳລັງພັດທະນາໃນຄວາມພະຍາຍາມໃນການສະໜອງໄຟຟ້າໃຫ້ແກ່ຊົນນະບົດແບບຍືນຍົງ ທີ່ອອກແບບເພື່ອສະໜອງໄຟຟ້າໃຫ້ແກ່ທຸກຊັ້ນຄົນ ໂດຍສະເພາະແມ່ນປະຊາຊົນທີ່ຢູ່ໃນຊົນນະບົດ.

28. ເອດີບີ ຈະສຸມໃສ່ໂດຍສະເພາະແມ່ນຊຸມຊົນທີ່ຢູ່ຫ່າງໄກສອກຫລີກເຊິ່ງຊຸມຊົນເຫລົ່ານີ້ອາດຈະບໍ່ໄດ້ເຊື່ອມຕໍ່ກັບຕາໜ່າງໄຟຟ້າໃນໄລຍະອັນໃກ້ນີ້. ເອດີບີ ຈະພັດທະນາໂຄງການແມ່ແບບຂະໜາດນ້ອຍ ທີ່ສາມາດເຮັດຊ້ຳໄດ້ໃນສະຖານທີ່ອື່ນເຊັ່ນ: ໝູ່ບ້ານຫາກໄກສອກຫລີກເຂດພູດອຍ ຫລື ຊຸມຊົນຢູ່ຕາມເກາະດອນຕ່າງໆ. ບັນດາໂຄງເຫລົ່ານີ້ຈະຖືກລວບລວມເຂົ້າໃນໂຄງການຂະໜາດໃຫຍ່ທີ່ສາມາດສະໜອງເງິນໃຫ້ ແລະຖ້າເປັນໄປໄດ້ຈະເພີ້ມໃຫ້ໂຄງການໃນຂະແໜງພະລັງງງານສຳຄັນໆຄືກັບວ່າເປັນອົງປະກອບໃນການເຂົ້າເຖິງພະລັງງານເປັນພິເສດ.

29. ການຮ່ວມມືລະດັບພາກພື້ນ ສາມາດມີບົດບາດສຳຄັນໃນການຮັບປະກັນຄວາມໝັ້ນຄົງດ້ານພະລັງງານໃນຮູບແບບທີ່ມີຄວາມຍືນຍົງ. ການຄ້າພະລັງງານລະດັບອະນຸພາກພື້ນສາມາດຕອບສະໜອງຄວາມຕ້ອງການດ້ານພະລັງງານ ໃນຂະນະທີ່ມີການຂະຫຍາຍການນຳໃຊ້ຊັບພະຍາກອນທຳມະຊາດໃຫ້ໄດ້ຫລາຍທີ່ສຸດ. ໂດຍມີການນຳໃຊ້ພະລັງງານ ໃນເວລາທີ່ມີຄວາມຕ້ອງການສູງສຸດຂອງປະເທດເພື່ອນບ້ານ, ການຄ້າດ້ານພະລັງງານໄຟຟ້າສາມາດຫລຸດຄວາມຕ້ອງ ການໃນການສ້າງໂຮງພະລັງງານໃໝ່ໃນແຕ່ລະປະເທດ ໂດຍການນຳໃຊ້ພະລັງງານຈາກປະເທດເພື່ອນບ້ານໃນເວລາຕ້ອງການສູງສຸດຕ່າງກັນ. ດັ່ງທີ່ມີການນຳສະເໜີຢູ່ໃນພາກພື້ນແມ່ນ້ຳຂອງ ເອດີບີ ສາມາດມີບົດບາດອັນສຳຄັນໃນການສົ່ງເສີມການຮ່ວມມືດ້ານພະລັງງານທີ່ມີປະສິດທິພາບ.

30. ເອດີບີ ຈະສືບຕໍ່ໄຈ້ແຍກແລະຈັດຕັ້ງປະຕິບັດໂຄງການແລະແຜນງານ ທີ່ສົ່ງເສີມດ້ານການຄ້າພະລັງງານໃນພາກພື້ນທີ່ໃຫ້ຜົນປະໂຫຍດທາງເສດຖະກິດ ແລະສິ່ງແວດລ້ອມຂອງພາກພື້ນທັງໝົດ. ເອດີບີ ຈະສົ່ງເສີມໂຄງຮ່າງນະໂຍບາຍທີ່ສາມາດເຮັດໃຫ້ການຄ້າດ້ານພະລັງງານໄຟຟ້າ ແລະອາຍແກດສ໌ໃນພາກພື້ນພ້ອມກັບພື້ນຖານໂຄງລ່າງເພື່ອຊຸກຍູ້ການຮ່ວມມືລະດັບພາກພື້ນແລະການຄ້າໃນຂະແໜງການພະລັງງານ. ເອດີບີ ຍັງຈະສຸມໃສ່ການຍົກ

---

[11] ນີ້ແມ່ນລວມເອົາການລົງທຶນທັງໝົດຂອງເອດີບີທີ່ຈະມີຜົນໃຫ້ແກ່ການປ່ອຍອາຍແກັດສ໌ຜົດເຮືອນແກ້ວທີ່ຕໍ່າເຊັ່ນວ່າ ພະລັງງານທົດແທນ, ພະລັງງານທີ່ມີປະສິດທິພາບ ແລະໂຄງການພະລັງງານເຊື້ອໄຟທີ່ສະອາດ

ເລີກບັນດາອຸປະສັກເພື່ອໃຫ້ມີການຮ່ວມມືແລະການຄ້າດ້ານພະລັງງານຫລາຍຂື້ນ, ຊອກຫາທາງອອກເພື່ອແກ້ໄຂຄວາມສ່ຽງດ້ານລະ ບຽບການ, ສະກຸນເງິນ, ການຄ້າ ແລະຄວາມບໍ່ແນ່ນອນທາງການເມືອງ.

31. ເອດີບີ ຈະເຮັດວຽກກັບບັນດາປະເທດສະມາຊິກທີ່ກຳລັງພັດທະນາ ເພື່ອແກ້ໄຂຄວາມຕ້ອງການໄຟຟ້າໃນຮູບ ແບບທີ່ມີຄວາມຍືນຍົງແລະມີການວາງແຜນ. ເອດີບີ ຈະຊຸກຍູ້ໃຫ້ລວມເອົາການບໍລິການໃຫ້ແກ່ສັງຄົມເຂົ້າໃນການວາງແຜນດ້ານພະລັງງານ ເປັນອົງປະກອບທີ່ສຳຄັນ ໃນການເຊື່ອມໂຍ່ງ ການວາງແຜນດ້ານຊັບພະຍາກອນ ແລະຊຸກຍູ້ໃຫ້ຄວາມຕ້ອງການໃນການລົງທຶນທີ່ຜະລິດອາຍກາກບອນຕ່ຳ. [12] ເມື່ອມີການວາງການເຂົ້າໃນບັນດາຂະແໜງການສຳລັບປະເທດສະມາຊິກທີ່ກຳລັງພັດທະນາ ເອດີບີ ຈະຊ່ວຍພັດທະນາເປົ້າໝາຍຂອງແຜນການໃນຂະແໜງການພະລັງງານທີ່ມີການລົງທຶນເຂົ້າໃນຂະແໜງໄຟຟ້າພໍສົມຄວນ ແລະລະບຸບັນດາໂຄງການຢູ່ໃນແຜນທີ່ດັດປັບໃຫ້ໄດ້ພຽງພໍ.

32. ເອດີບີ ຍັງຈະໃຫ້ການສະໜັບສະໜູນແບບຂັດເລືອກບັນດາໂຄງການພະລັງງງານໄຟຟ້າພະລັງນ້ຳໃຫຍ່ ທີ່ຕ້ອງ ການອ່າງເກັບນ້ຳຕາມລະດູການທີ່ໃຫ້ຜົນປະໂຫຍດຫລາຍດ້ານ. ແຕ່ຢ່າງໃດກໍ່ຕາມການໃຫ້ການສະໜູນທາງການເງິນແບບນີ້ຈະອີງໃສ່ຜົນປະໂຫຍດທາງເສດຖະກິດແລະໂຄງການດັ່ງກ່າວ ຕ້ອງປະຕິບັດຕາມເງື່ອນໄຂຂອງນະໂຍບາຍວ່າດ້ວຍການປ້ອງກັນສັງຄົມແລະສິ່ງແວດລ້ອມຂອງເອດີບີ.

33. ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການດ້ານໄຟຟ້າຢູ່ໃນພາກພື້ນ ມີຄວາມຮຽກຮ້ອງຕ້ອງການໃຫ້ເພີ້ມຂີດຄວາມອາດສາມາດຫລາຍຂຶ້ນເມື່ອການຜະລິດໄຟຟ້າທີ່ອີງໃສ່ຖ່ານຫີນເປັນຫລັກ ຈະມີການຂະຫຍາຍຕົວ. ເອດີບີ ຊຸກຍູ້ໃຫ້ປະເທດສະມາຊິກທີ່ກຳລັງພັດທະນາຮັບເອົາເຕັກໂນໂລຊີທີ່ມີຢູ່ໃນປະຈຸບັນແລະໃຫ້ຄວາມສະອາດກ່ວາເຊັ່ນ: ລະບົບການເຜົາໄໝ້ແບບໃຊ້ແຮງດັນ, ລະບົບການໃຊ້ອານນ້ຳຄວາມດັນສູງແລະລະບົບທີ່ໃຊ້ແຮງດັນອາຍນ້ຳທີ່ສູງກວ່າ, ແລະລະບົບດັກຈັບຂຸມເຟີໄດອອກຊາຍ. ຍ້ອນວ່າເປັນເຕັກໂນໂລຢີໃໝ່ — ເຊັ່ນ: ເຕັກໂນໂລຢີປະສົມປະສານທີ່ປ່ຽນຖ່ານຫີນໃຫ້ເປັນແກັດສ໌ ແລະການດູດເອົາແລະເກັບມ້ຽນອາຍກາບອນ (ຫລື ການເກັບມ້ຽນ)— ທີ່ສະແດງໃຫ້ເຫັນວ່າມີຄວາມເປັນໄປໄດ້ທາງດ້ານວິຊາການແລະເສດຖະກິດ, ເອດີບີ ຈະໃຫ້ການສະໜັບສະໜູນການນຳໃຊ້ບັນດາເຕັກໂນໂລຢີເຫລົ່ານີ້ໃນປະເທດສະມາຊິກທີ່ກຳລັງພັດທະນາເພື່ອເພີ້ມຄວາມເປັນໄປໄດ້ທາງດ້ານການເງິນ. ເອດີບີ ຍັງຈະຊ່ວຍປະເທດສະມາຊິກທີ່ກຳລັງພັດທະນາ ໃນການຮ່ວມມືກັບບັນປະທດທີ່ພັດທະນາແລ້ວ ວ່າດ້ວຍຂໍ້ຕົກລົງການຖ່າຍໂອນເຕັກໂນໂລຢີໃໝ່ແລະດີກວ່າໃນໄລຍະຍາວພາຍໃຕ້ໂຄງການການພັດທະນາ. ເອດີບີ ຈະໃຫ້ການສະໜັບສະໜູນແບບລັດເລືອກແກ່ໂຄງການພະລັງງານຖ່ານຫີນ ຖ້າຫາກວ່າມີການຮັບຮອງເອົາເຕັກໂນໂລຢີສະອາດກວ່າແລະມີອຸປະກອນບັນເທົ່າຜົນກະທົບທີ່ພຽງພໍ ແລະມາດຕະການໄດ້ຖືກລວມເຂົ້າໃນການອອກແບບໂຄງການ. ບາງປະເທດສະມາຊິກທີ່ກຳ ລັງພັດທະນາທີ່ມີຂະໜາດຕາໜ່າງໄຟຟ້ານ້ອຍກວ່າແລະເອື່ອຍອີງການສະໜອງຫລືນຳເຂົ້າພະລັງງານທີ່ຜະລິດຈາກນ້ຳ ມັນເຊື້ອໄຟຈາກປະເທດເພື່ອນບ້ານອາດຈະຕ້ອງການຕິດຕັ້ງໂຮງງານພະລັງ

[12] ການເຊື່ອມໂຍງ ດ້ານການວາງແຜນຊັບພະຍາກອນ ແມ່ນຕົ້ນທຶນຂອງຂະບວນການວາງແຜນທີ່ຕ່ຳສຸດ (i) ປະຕິບັດກັບທາງເລືອກຂອງຝ່າຍສະໜອງເພີ້ມ ແລະ ທາງເລືອກຂອງການບໍລິຫານ ດ້ານຄວາມຕ້ອງການຄ້າຍຄືກັນ ແລະ ຄ່າເສຍຫາຍທາງດ້ານສິ່ງແວດລ້ອມ ແລະຜົນປະໂຫຍດຢ່າງລະອຽດຫລາຍກວ່າ ການວິເຄາະທີ່ມີຕົ້ນທຶນຕ່ຳສຸດທົ່ວໄປ.

ງານໄຟຟ້າທີ່ນຳໃຊ້ຖ່ານຫີນທີ່ນຳໃຊ້ເຕັກໂນໂລຢີສ້າງຄວາມຮ້ອນທີ່ໄຫລຊ້າ. ການກະຈາຍນີ້ ຈະຊ່ວຍປັບປຸງລະບົບພະລັງງານໃຫ້ມີຄວາມເຊື່ອຖື ແລະໝັ້ນຄົງແລະກໍ່ຈະເປັນທາງເລືອກ ທີ່ມີຕົ້ນທຶນຕໍ່າ. ເພື່ອເຫດຜົນດ້ານຄວາມຕ້ອງການທາງດ້ານເສດຖະກິດແລະການພັດທະນາ ເອດີບີ ຈະໃຫ້ການສະໜັບສະໜູນໂຮງງານພະລັງງານກະແສໄຟຟ້າດັ່ງກ່າວຖ້າຫາກວ່າມັນມີເຫດຜົນພຽງພໍພາຍຫລັງມີ ການສຶກສາຢ່າງອຸດ. ການຊ່ວຍເຫລືອຈະລວມເອົາການຍົກໂຮງຈັກໂຮງງານພະລັງງານໄຟຟ້າທີ່ມີຢູ່ ທີ່ມີຄວາມຮຽກ ຮ້ອງຕ້ອງການອັນຈຳເປັນເພື່ອຍົກລະດັບປະສິດທິພາບ.

34. ເອດີບີ ຈະສືບຕໍ່ໃຫ້ການສະໜັບສະໜູນທາງການເງິນ ໃຫ້ແກ່ໂຮງງານພະລັງງານທີ່ນຳໃຊ້ອາຍແກັດສ໌ທຳມະຊາດເປັນຫລັກ ທີ່ມີຜົນປະໂຫຍດທີ່ດີ ຕໍ່ສິ່ງແວດລ້ອມ.

35. ເຖິງແມ່ນວ່າ ເອດີບີ ຈະຊຸກຍູ້ໃຫ້ມີການນຳໃຊ້ແຫລ່ງພະລັງງານທົດແທນ ເຂົ້າໃນການສ້າງພະລັງງານໄຟຟ້າ ໂຮງງານພະລັງງານໄຟຟ້າທີ່ນຳໃຊ້ນ້ຳມັນເຊື້ອໄຟເປັນຫລັກ ຈະສືບຕໍ່ປະກອບສ່ວນອັນສຳຄັນໃນການຜະລິດກະແສໄຟຟ້າໃຫ້ແກ່ບາງເສດຖະກິດທີ່ຢູ່ໃນໝູ່ເກາະດອນຕ່າງໆ. ສະນັ້ນ ເອດີບີ ຈະສືບຕໍ່ໃຫ້ການສະໜັບສະໜູນທາງການເງິນແກ່ໂຮງງານພະລັງງານໄຟຟ້າທີ່ທັນສະໄໝ, ນ້ອຍແລະໃຊ້ນ້ຳມັນເຊື້ອໄຟເປັນຫລັກທີ່ກະຈາຍໄຟຟ້າໃຫ້ແກ່ຊຸມຊົນໃນໝູ່ ເກາະ, ດອນ, ເຂດຫ່າງໄກສອກຫລີກ ແລະມີປະຊາກອນແບບເບົາບາງ ເຊິ່ງບໍ່ມີທາງເລືອກອື່ນໃຫ້ເຂົາເຈົ້າ.

36. ມີຄວາມອາດສາມາດເພີ້ມເຕີມທີ່ຫລວງຫລາຍໃນການສ້າງພະລັງງານຈະເປັນສິ່ງທີ່ຕ້ອງການ ສຳລັບການລົງທຶນຫຼາຍພໍສົມຄວນໃນອຸປະກອນທາງສາຍສົ່ງ ແລະການຂະຫຍາຍຕາໜ່າງໄຟຟ້າ. ເອດີບີ ຈະສືບຕໍ່ໃຫ້ການສະໜັບສະໜູນໃນການຕິດຕັ້ງລະບົບສາຍສົ່ງແລະການແຈກຢາຍທີ່ທັນສະໄໝ ເພື່ອນຳສົ່ງໄຟຟ້າຈາກຜູ້ຜະລິດຫາຜູ້ຊົມໃຊ້ຢ່າງມີປະສິດທິພາບ ລວມທັງການປັບປຸງລະບົບທີ່ມີຢູ່ໃນປະຈຸບັນເພື່ອຫລຸດຜ່ອນການສູນເສຍທາງດ້ານເຕັກນິກ ແລະເຮັດໃຫ້ສາມາດແຂ່ງຂັນກັນໄດ້ ໃນເວລາທີ່ກົດໝາຍອະນຸຍາດໃນການເປີດກ້ວາງໃນຂະແໜງການນີ້.

37. ຫຼາຍປະເທດສະມາຊິກ ທີ່ກຳລັງພັດທະນາ ຕ້ອງການຂະຫຍາຍລະບົບອັນຮີບດ່ວນຂອງຕົນ ອອກໄປພ້ອມກັນກັບການເພີ້ມເຕີມໃນການຕົກແຕ່ງສ່ວນປະກອບອັນໃໝ່ທີ່ຢູ່ໃນລະບົບອັນລ້າສະໄໝ, ເອດີບີ ຈະໃຫ້ການສະໜັບສະໜູນແກ່ປະເທດສະມາຊິກທີ່ກຳລັງພັດທະນາໃນການຈຳແນກ ແລະຕິດຕັ້ງເຕັກໂນໂລຢີທີ່ທັນສະໄໝແລະມີປະສິດທິພາບດ້ານພະລັງງານເຊັ່ນ: ການລວມເຂົ້າກັນຂອງລະບົບເຮັດຄວາມຮ້ອນ ແລະພະລັງງານ. ໃນບ່ອນທີ່ສາມາດເປັນໄປໄດ້ຈະມີການຊຸກຍູ້ນຳໃຊ້ພະລັງງານທົດແທນ ເພື່ອເສີມໃສ່ກັບລະບົບການເຮັດຄວາມອົບອຸ່ນຂອງທ້ອງຖິ່ນທີ່ມີຢູ່ແລ້ວ. (ເຊັ່ນ: ພະລັງງານແສງອາທິດ ແລະປັ໋ມທີ່ໃຊ້ຄວາມຮ້ອນຈາກພື້ນດິນ)

38. ເອດີບີ ຈະສືບຕໍ່ນະໂຍບາຍຂອງຕົນໃນການບໍ່ໃຫ້ມີການສະໜັບສະໜູນ ດ້ານການເງິນແກ່ໂຄງການສຳຫລວດອາຍແກັດສ໌ ແລະ ນ້ຳມັນສາເຫດກໍ່ຍ້ອນມີຄວາມສ່ຽງ. ນ້ຳມັນເຊື້ອໄຟ ແມ່ນສິນຄ້າທີ່ມີການຄ້າຂາຍໃນຕະຫລາດສາກົນ ທີ່ມີການເຂົ້າຮ່ວມຂອງພາກເອກະຊົນໂດຍທົ່ວໄປແລ້ວ ເອດີບີ ຈະບໍ່ໃຫ້ການສະໜັບສະໜູນ ທາງການເງິນໃຫ້ແກ່ການພັດທະນາໂຄງການຂຸດຄົ້ນນ້ຳມັນ. ຖ້າຫາກວ່າມີຄວາມຈຳເປັນ ເອດີບີ ຈະພິຈາລະນາໃຫ້ການຊ່ວຍເຫລືອໃນການພັດ ທະນາສ່ວນໃດສ່ວນໜຶ່ງແລະເປັນບໍ່ນ້ຳມັນທີ່ມີການຢັ້ງຢືນແລ້ວເທົ່ານັ້ນ ກໍ່ຕໍ່ເມື່ອມີການພັດທະນາດັ່ງກ່າວ ເຊິ່ງມີຜົນຕອບແທນທາງເສດຖະກິດທີດີເທົ່ານັ້ນ. ເອດີບີ ຈະໃຫ້ການສະໜັບສະໜູນສຳລັບການກັ່ນກອງ,

ການຂົນສົ່ງແລະການແຈກຢາຍຜະລິດຕະພັນນ້ຳມັນເຊື້ອໄຟ. ເອດີບີ ຍັງຈະສືບຕໍ່ໃຫ້ການຊ່ວຍເຫລືອແກ່ການພັດທະນາບໍ່ອາຍແກັດສ໌ ແລະການຂົນສົ່ງ ແລະການແຈກຢາຍອາຍແກັດສ໌. ເອດີບີ ຍັງຈະໃຫ້ການຊ່ວຍເຫລືອທາງດ້ານນະໂຍບາຍ ເຊັ່ນ (i) ນະໂຍບາຍສົ່ງເສີມສະພາບສິ່ງແວດລ້ອມ ທີ່ຊຸກຍູ້ໃຫ້ພາກສ່ວນເອກະຊົນເຂົ້າມາມີສ່ວນຮ່ວມ, ມີການແຂ່ງຂັນຫລາຍຂຶ້ນກວ່າເກົ່າ, ມີລະບຽບການທີ່ເປັນເອກະລາດ ຄວາມໂປ່ງໃສ ໃນຂະແໜງການນ້ຳມັນເຊື້ອໄຟແລະອາຍແກັດສ໌, ແລະ (ii) ຊ່ວຍປະເທດສະມາຊິກທີ່ກຳລັງພັດທະນາໃນການກະກຽມ ແລະບໍລິຫານຖານຂໍ້ມູນຂ່າວສານ ວ່າດ້ວຍແຫລ່ງໄຮໂດ ກາກບອນ ເພື່ອເພີ້ມຄວາມຊຳນິຊຳນານ ແລະການບໍລິຫານຄຸ້ມຄອງການເງິນ.

39. ຕັ້ງແຕ່ຖ່ານຫີນເປັນແຫລ່ງໃນການສ້າງກະແສໄຟຟ້າແລະຄວາມຮ້ອນ ຫລາຍໆປະເທດສະມາຊິກທີ່ກຳລັງພັດທະນາຈະສືບຕໍ່ໃນການພັດທະນາບໍ່ຖານຫີນຢ່າງແຂງຂັນ. ຍ້ອນວ່າຖ່ານຫີນແມ່ນສິນຄ້າທີ່ມີການຊື້ຂາຍຢູ່ໃນຕະຫລາດສາກົນ ເອດີບີ ຈະຮັກສານະໂຍບາຍໃນປະຈຸບັນຂອງຕົນ ທີ່ບໍ່ໃຫ້ການສະໜັບສະໜູນການພັດທະນາບໍ່ຖ່ານຫີນໂດຍກົງຍົກເວັ້ນສຳລັບການນຳໃຊ້ ໂດຍໂຮງງານພະລັງງານໄຟຟ້າເທົ່ານັ້ນ. ນີ້ແມ່ນກໍລະນີໜຶ່ງສຳລັບໂຮງງານພະລັງງານໄຟຟ້າ ໃນເມື່ອສ່ວນໃຫຍ່ຂອງຜົນຜະລິດຂອງພະລັງງານທີ່ໄດ້ຈາກຖ່ານຫີນມີຂໍ້ຜູກມັດທາງດ້ານສັນຍາການສະໜອງຖ່ານຫີນໃຫ້ໄດ້ໃນໄລຍະຍາວຫລືຈັດການທາງດ້ານການບໍລິຫານ. ເອດີບີ ຈະບໍ່ໃຫ້ການສະໜັບສະໜູນດ້ານການເງິນ ໃນເມື່ອບໍ່ຖ່ານຫີນແມ່ນຖືກພັດທະນາເພື່ອຂາຍໃນການນຳໃຊ້ຖ່ານຫີນ ເພື່ອເຮັດຄວາມຮ້ອນໃຫ້ແກ່ຕະຫລາດເປີດ ຫລື ມີຄວາມເຊື່ອມໂຍງກັບຊ່ອງທາງການຄ້າຂາຍໃນຕະຫລາດສາກົນ ເພື່ອການສ້າງພະລັງງານໃນປະເທດໜຶ່ງຍ້ອນວ່າ ການໂອນຈະຖືວ່າອີງໃສ່ລາຄາທ້ອງຕະຫລາດ.

40. ເອດີບີ ຈະສະໜັບສະໜູນ (i) ຄວາມປອດໄພໃນບໍ່ຖ່ານຫີນ (ii) ມີວິທີການດຳເນີນການຂຸດຄົ້ນແຮ່ທາດທີ່ຮັກສາສະພາບສິ່ງແວດລ້ອມແລະສັງຄົມ ແລະ ການນຳໃຊ້ຖ່ານຫີນເຂົ້າໃນການສ້າງພະລັງງານແບບມີປະສິດທິພາບ, (iii) ການເກັບອາຍກາກບອນແລະຮັກສາໄວ້ (ຫລື ຮັກສາໄວ້ຊົ່ວຄາວ) ຈົນກ່ວາມີເຕັກໂນໂລຊີ, (iv) ການສະກັດທາດເມຕານອອກຈາກແຮ່ຖ່ານຫີນ ແລະນຳໃຊ້(v) ການປ່ຽນຖ່ານຫີນໃຫ້ເປັນແກັດສ໌, (vi) ການກຳຈັດຂອງເສຍຈາກການໃຊ້ຖ່ານຫີນ, (vii) ການນຳໃຊ້ສິ່ງເສດເຫລືອຈາກຖ່ານຫີນ ແລະ (viii) ການຂົນສົ່ງຖ່ານຫີນທາງບົກ ແລະທາງນ້ຳທີ່ມີປະສິດທິພາບ. ເອດີບີ ຈະໃຫ້ການສະໜັບສະໜູນການປັບປຸງດ້ານຄວາມປອດໄພແລະປະສິທິພາບໃນການຂົນສົ່ງນ້ຳມັນເຊື້ອໄຟແລະອາຍແກັດທຳມະຊາດເຫລວ (LNG) ລວມທັງ ສິ່ງອຳນວຍຄວາມສະດວກ, ທ່າສົ່ງ ນ້ຳມັນເຊື້ໄຟ ແລະ ອາຍແກັດທຳມະຊາດເຫລວ (LNG), ແລະ ການຂົນສົ່ງທາງນ້ຳແລະທະເລ.

## ຄ. ສົ່ງເສີມໃນການປັບປຸງຂະແໜງການພະລັງງານ, ການສ້າງຄວາມອາດສາມາດ ແລະການຄຸ້ມຄອງ

41. ເອດີບີ ຈະຈັດລຽນການດຳເນີນງານດ້ານພະລັງງານ ຂອງຕົນກ່ຽວກັບການປັບປຸງ, ການສ້າງຄວາມອາດສາມາດ ແລະການຄຸ້ມຄອງໂດຍການສືບຕໍ່ໃຫ້ການຊ່ວຍເຫລືອປະເທດສະມາຊິກທີ່ກຳລັງພັດທະນາ ປັບປຸງຂະແໜງການພະລັງງານຂອງພວກເຂົາເຈົ້າ ຜ່ານການໃຫ້ການຊ່ວຍເຫລືອດ້ານວິຊາການ ແລະໂຄງການທີ່ໃຫ້ການສະໜັບສະໜູນ ໃນການຄຸ້ມຄອງການຜູກຂາດທຸລະກິດໂດຍທຳມະຊາດແລະນຳສະເໜີການແຂ່ງຂັນໃນບ່ອນທີ່ເປັນໄປໄດ້. ເອດີບີ ຈະສ້າງຈາກບົດຮຽນໃນການປະຕິຮູບຂະແໜງການພະລັງງານທີ່ຜ່ານມາ. ການປັບປຸງອາດຈະໃຊ້ເວລາດົນການສືບຕໍ່ມີສ່ວນຮ່ວມຂອງເອດີບີ ແມ່ນມີຄວາມຈຳເປັນເພື່ອຮັບປະກັນວ່າທຸກໆພາກສ່ວນຂອງສັງຄົມໄດ້ຮັບຜົນປະ

ໂຫຍດໂດຍສະເພາະແມ່ນຜູ້ຊົມໃຊ້. ຈະມີການຊຸກຍູ້ໃຫ້ພາກເອກະຊົນເຂົ້າມາມີສ່ວນຮ່ວມ ໂດຍສະເພາະຂອງການຮ່ວມທຶນກັບພາກເອກະຊົນ. ແຕ່ຢ່າງໃດກໍ່ຕາມການຫັນໄປສູ່ກຳມະສິດຂອງເອກະຊົນຈະບໍ່ແມ່ນເປົ້າໝາຍຫລື ຈຸດປະສົງສຸດທ້າຍຂອງ ວຽກງານການປັບປຸງຂະແໜງການພະລັງງານຂອງເອດີບີ; ແທນທີ່ຈະເປັນທາງເລືອກໜຶ່ງທີ່ເພີ້ມທະວີປະສິດທິພາບຂອງຂະແໜງພະລັງງານແລະເພີ້ມແຫລ່ງພະລັງງານທີ່ສາມາດລົງທຶນໄດ້. ການປັບປຸງ ລວມ ທັງການຫັນປ່ຽນເປັນຂອງເອກະຊົນ ຫລື ບໍລິສັດຈະມີການອອກແບບ ແລະຈັດລຳດັບຢ່າງລະມັດລະວັງ ເປັນແຕ່ລະປະເທດໄປໃນຮູບແບບທີ່ໂປ່ງໃສ.

42. ພ້ອມກັນນັ້ນ ການສະໜັບສະໜູນການປະຕິຮູບແລະການຈັດໂຄງສ້າງໃໝ່ ເອດີບີ ຈະໃຫ້ຊ່ວຍປະເທດສະມາຊິກທີ່ກຳລັງພັດທະນາ ໃນການສ້າງຕັ້ງຕະຫລາດໄຟຟ້າທີ່ມີການແຂ່ງຂັນກັນ ແລະຮັບເອົາກົນໄກການຕັ້ງລາຄາຕາມຕະຫລາດ ເພື່ອຜົນປະໂຫຍດຂອງຜູ້ຊົມໃຊ້. ຕະຫລາດເຫລົ່ານີ້ ຕ້ອງການຂະແໜງການມີຄວາມເຂັ້ມແຂງໃນລະດັບໃດໜຶ່ງ ກ່ອນຈະສາມາດອອກປະສິດທິຜົນສຳເລັດໃນການເປີດໂຕ. ເອດີບີ ຈະໃຫ້ການສະໜັບສະໜູນໃນດ້ານການຄົ້ນ ຄວ້າ, ລະບຽບກົດໝາຍ, ການພັດທະນາເຕັກໂນໂລຍີ ແລະໂຄງຮ່າງດ້ານລະບຽບການ.

43. ເອດີບີ ຈະຊຸກຍູ້ປະເທດສະມາຊິກທີ່ກຳລັງພັດທະນາໃຫ້ຮັບເອົາໂຄງສ້າງພາສີ ທີ່ສົ່ງເສີມການຮັກສາພະລັງງານ ແລະປັບໄໝການຊົມໃຊ້ໃນຊ່ວງຊົ່ວໂມງ ແລະລະດູການທີ່ມີການຊົມໃຊ້ຫລາຍແລະການຊົມໃຊ້ທີ່ມີປັດໃຈດ້ານພະລັງງານແລະການນຳສົ່ງກະແສໄຟຟ້າທີ່ຕ່ຳ. ການອຸນໜູນຈາກກຸ່ມຄົນໜຶ່ງໃຫ້ອີກກຸ່ມຄົນໜຶ່ງຂອງຜູ້ຊົມໃຊ້ຄວນໃຫ້ມີໜ້ອຍທີ່ສຸດ; ອັດຕາຄ່າບໍລິການຄ່າໄຟຟ້າໃຫ້ແກ່ຜູ້ຊົມໃຊ້ທີ່ມີອັດຕາການຊົມໃຊ້ປະຈຳເດືອນຕ່ຳ ແມ່ນການປະນີປະນອມທີ່ຍອມຮັບໄດ້. ຖ້າມີການອຸນໜູນຄວນເຮັດໃຫ້ມີຄວາມໂປ່ງໃສ, ສາມາດບອກຈຳນວນໄດ້, ມີເປົ້າໝາຍແລະສາມາດຫລຸດລົງ ໄດ້ໃນໄລຍະກາງໂດຍອອກແບບໃຫ້ເໝາະສົມກັບຕ່ານ່າງຄວາມປອດໄພທາງສະຄົມ. ຄ້າຍໆຄືກັນ ເອດີບີ ໃຫ້ ການຊ່ວຍເຫລືອໃນການສ້າງຕັ້ງກົນໄກຄຸ້ມຄອງທີ່ເປັນເອກະລາດ ເພື່ອແກ້ໄຂຄວາມໂປ່ງໃສໃນການບໍລິຫານໃນຂະແໜງທຳຄວາມຮ້ອນ ລວມທັງການຕັ້ງອັດຕາຄ່າບໍລິການ ແລະໃຫ້ການອຸນໜູນທີ່ມີເປົ້າໝາຍຫລືໂດຍກົງ.

44. ການສ້າງຂີດຄວາມອາດສາມາດ ແມ່ນອົງປະກອບທີ່ສຳຄັນ ຂອງການສົ່ງເສີມການປະຕິຮູບ ແລະການຄຸ້ມຄອງຂະແໜງການພະລັງງານທີ່ມີປະສິດທິຜົນ. ການພັດທະນາຊັບພະຍາກອນມະນຸດ ແມ່ນການລົງທຶນໃນໄລຍະຍາວ ທີ່ເຮັດໃຫ້ຂະແໜງການພະລັງງານມີປະສິດທິຜົນ. ເອດີບີ ຈະໃຫ້ການຊ່ວຍເຫລືອດ້ານວິຊາການແກ່ຜູ້ຄຸ້ມຄອງ ແລະອຸປະ ກອນເຂົ້າໃນການດຳເນີນງານຂອງອຳນາດການປົກຄອງ, ການວິເຄາະອັດຕາຄ່າບໍລິການແລະການອຸດໜູນ, ຂັ້ນຕອນການອອກໃບອານຸຍາດ, ວິເຄາະປະລິມານຄວາມຕ້ອງການ ແລະກິດຈະກຳອື່ນໆ ທີ່ຈະຊ່ວຍໃຫ້ເຈົ້າໜ້າທີ່ລັດເຮັດວຽກໄດ້ຢ່າງມີປະສິດທິຜົນ. ນອກຈາກນັ້ນ ເອດີບີ ຈະໃຫ້ການຊ່ວຍເຫລືອດ້ານວິຊາການ ໃນການສ້າງຂີດຄວາມອາດສາມາດ ທີ່ກົງກັບທຸກໆຂົງເຂດຂອງການດຳເນີນງານໃນຂະແໜງການພະລັງງານເຊັ່ນ: ການວາງແຜນດ້ານພະລັງງານ, ການຄາດຄະເນຄວາມຕ້ອງການ, ການບໍລິຫານທາງດ້ານການເງິນ, ການດຳເນີນງານແລະການບຳລຸງຮັກສາຊັບສົມບັດ ແລະ ການປະເມີນຜົນທາງດ້ານເສດຖະກິດ.

45. ເອດີບີ ກຳລັງສົ່ງເສີມຜະລິດຕະພັນທາງດ້ານຄວາມຮູ້ໃຫ້ກ້ວາງອອກ ແລະແລກປ່ຽນກັບສູນລວມດ້ານຄວາມຮູ້ຂອງພາກພື້ນ. ບັນດາສູນລວມດ້ານຄວາມຮູ້ນີ້ ຖືກວາງຕົວໃຫ້ກາຍມາເປັນການໃຫ້ການສະໜັບສະໜູນທີ່ແຂງແຮງ ເພື່ອເສີມສ້າງຂີດຄວາມອາດສາມາດຂອງອາຊີແລະປາຊີຟິກ ເພື່ອສ້າງແນວຄວາມຄິດໃໝ່ໆ ແລະ ສົ່ງເສີມວິທະຍາສາດ, ເຕັກໂນໂລຢີ ແລະການບໍລິຫານການພັດທະນາທີ່ກ່ຽວກັບພະລັງງານສະອາດ. ເອດີບີ ຈະເປັນຜູ້ສົ່ງເສີມ ແລະໃຫ້ການຊ່ວຍເຫລືອປະເທດສະມາຊິກ ທີ່ກຳລັງພັດທະນາໃນການຖ່າຍໂອນເຕັກໂນໂລຢີ ທີ່ມີປະສິດທິພາບທາງດ້ານພະລັງງານ, ພະລັງງານທົດແທນແລະເຕັກໂນໂລຢີ ທີ່ສະອາດກ່ວາ ໂດຍຜ່ານໂຄງການນຳສະເໜີເພື່ອການນຳໃຊ້.

46. ເອດີບີ ຈະຊ່ວຍປະເທດສະມາຊິກທີ່ກຳລັງພັດທະນາໃນການກະກຽມ ແລະຈັດຕັ້ງປະຕິບັດໂຄງການດ້ານພະລັງ ງານ, ເນັ້ນໜັກຄວາມຮັບຜິດຊອບ, ການເຂົ້າຮ່ວມ, ຄວາມສາມາດໃນການຄາດຄະເນໄດ້ ແລະຄວາມໂປ່ງໃສ ຊຶ່ງອີງປະກອບພື້ນຖານຂອງການຄຸ້ມຄອງທີ່ດີ. ເອດີບີ ເຫັນດີໃນການລິເລີ່ມຄວາມໂປ່ງໃສຂອງອຸດສາຫະກຳກັ່ນຕອງໃນປີ 2008 ແລະໄດ້ກາຍມາເປັນອົງກອນທີ່ສະໜັບສະໜູນ ເພື່ອເພີ້ມຄວາມໂປ່ງໃສດ້ານລາຍຮັບ ໃນໂຄງການຂຸດຄົ້ນພະລັງງານທີ່ເອດີບີໃຫ້ການສະໜັບສະໜູນ. ເອດີບີ ຈະສົ່ງເສີມຄວາມໂປ່ງໃສ່ໃຫ້ຫລາຍຂຶ້ນໃນການຈັດຊື້ແລະການປັບປຸງການບໍລິຫານການເງິນແລະບໍລິສັດ. ເອດີບີ ຈະໃຫ້ການສະໜັບສະໜູນພະແນກການທີ່ຮັບຜິດຊອບກ່ຽວກັບນະໂຍບາຍ, ລະບຽບການ, ແລະພາລະບົດບາດໃນການດຳເນີນງານ ພາຍໃຕ້ສະພາບການຂອງປະເທດນັ້ນໆສະເພາະແລະທົ່ວທຸກລະດັບທີ່ແຕກຕ່າງກັນຂອງອົງການຂອງລັດ. ຢູ່ຈຸດໃດທີ່ເປັນໄປໄດ້ ເອດີບີ ຈະສົ່ງເສີມການຮ່ວມມືດ້ານລະບຽບຫຼັກການແລະການພັດທະນາຄວາມຊຳນິຊຳນານ. ເອດີບີ ຈະຈັດລະດັບຄວາມສຳຄັນຂອງລະບຽບການກ່ຽວກັບ ການຜູກຂາດທາງການຄ້າໂດຍທຳມະຊາດແລະເພີ້ມການແຂ່ງຂັນໃນພາກອື່ນໆຂອງຂະແໜງພະລັງງານ. ເອດີບີ ຈະສະໜັບສະໜູນການປັບປຸງການຄຸ້ມຄອງແລະປະສິດທິພາບຂອງການດຳເນີນງານຂອງລັດວິສາຫະກິດຢູ່ໃນຂະແໜງພະລັງງານ, ເພີ້ມການແຂ່ງຂັນແລະປະສິດທິພາບໃນຈຸດທີ່ເໝາະສົມ. ຖ້າມີການຮຽກຮ້ອງຕ້ອງການຈາກປະເທດສະມາຊິກທີ່ກຳລັງພັດທະນາ ເອດີບີ ຈະສະໜັບສະໜູນໃນການຫັນລັດວິສາຫະກິດໄປສູ່ກຳມະສິດຂອງເອກະຊົນແລະຊ່ວຍດ້ານຄວາມໂປ່ງໃສ ການປ່ຽນແປງສະພາບຂອງລັດວິສາຫະກິດຈາກການຫັນຈາກຂອງລັດສູ່ກຳມະສິດຂອງເອກະຊົນ.

## ງ. ການກະກຽມການຈັດຕັ້ງປະຕິບັດ

47. RSDD ຈະໃຫ້ການສະໜັບສະໜູນກິມດຳເນີນງານຂອງເອດີບີໃນການຈັດຕັ້ງປະຕິບັດນະໂຍບາຍ ແລະຄະນະກຳມະການພະລັງງານ ຈະໃຫ້ການຊ່ວຍເຫລືອດ້ານວິຊາການໃນການຄຸ້ມຄອງກັບການສະໜັບໜູນດ້ານກອງເລຂາຂອງ RSDD.

48. ເອດີບີ ຈະໃຫ້ການຊ່ວຍເຫລືອລັດຖະບານຂອງປະເທດສະມາຊິກທີ່ກຳລັງພັດທະນາໃນການພັດທະນາແຜນການຈັດຕັ້ງປະຕິບັດກ່ຽວກັບຂະແໜງການພະລັງງານຂອງຕົນແລະຍຸດທະສາດການຮ່ວມມືໃນພາກພື້ນ ໂດຍອີງໃສ່ການປຶກສາຫາຫລືດ້ານນະໂຍບາຍ. ອັນນີ້ ອາດຈະເປັນການຮ່ວມກັບຍຸດທະສາດການຮ່ວມມືກັບປະເທດ ແລະຍຸດທະສາດການຮ່ວມມືຢູ່ໃນພາກພື້ນແລະແຜນໃນການພັດທະນາຫລືຂະບວນການວາງແຜນທີ່ແຍກອອກຈາກກັນ ແນວໃດກໍ່ໄດ້ເພື່ອຄວາມເໝາະສົມສຳລັບແຕ່ລະປະເທດຫລື ອານຸພາກພື້ນ.

49. ໂຄງຮ່າງທີ່ລວມເອົາຊຸດຕົວຊີ້ບອກໂດຍກົງທີ່ງ່າຍດາຍ ແລະສາມາດຈັດຕັ້ງປະຕິບັດໄດ້ ສໍາລັບເອດີບີເພື່ອການຕິດຕາມກວດກາຄວາມກ້າວໜ້າ ໃນການຈັດຕັ້ງປະຕິບັດນະໂຍບາຍທີ່ລະບຸຢູ່ໃນເອກະສານຊ້ອນທ້າຍ 2. ໂຄງຮ່າງໄດ້ລະບຸຜົນໄດ້ຮັບທີ່ກ້ວາງເພື່ອສາມາດບັນລຸໄດ້ ແລະການນໍາສະເໜີ ການປະກອບສ່ວນຂອງເອດີບີ ທີ່ຄໍານຶງເຖິງຜົນໄດ້ຮັບເຫລົ່ານັ້ນ. ແຕ່ເຖິງຢ່າງໃດກໍ່ດີ ໃນເມື່ອແຕ່ລະປະເທດ ຈະຕັດສິນຍຸດທະສາດ ແລະທາງເລືອກດ້ານນະໂບາຍຂອງຕົນ ມັນມີຄວາມຫຍຸ້ງຫຍາກທີ່ຈະບົ່ງບອກເຖິງເປົ້າໝາຍສໍາລັບການຈັດຕັ້ງປະຕິບັດນະໂຍບາຍໃນຂະແໜງພະລັງງານໂດຍລວມ. ຕົວຊີ້ບອກຂອງແຕ່ລະເສົ້າຄ້ໍາໃນໂຄງຮ່າງທີ່ຈະໄດ້ຮັບການຕິດຕາມກວດກາ ໃນໄລຍະການກະກຽມບົດລາຍງານ ຂອງຂະແໜງພະລັງງານໃນທຸກໆສອງປີ ແລະດັດປັບການສົນທະນາກັບກົມທີ່ກ່ຽວຂ້ອງຢ່າງຕໍ່ເນື່ອງ.

50. ການຈັດຕັ້ງປະຕິບັດນະໂຍບາຍຕາມຄວາມຮຽກຮ້ອງຕ້ອງການຊັບພະຍາກອນມະນຸດ ແລະການເງິນທີ່ພຽງພໍ. ຄວາມຊໍານານທີ່ຫລາກຫລາຍ ແລະຄວາມອາດສາມາດທາງດ້ານວິຊາການ ຕ້ອງໄດ້ເພີ້ມໃນການພັດທະນາປະສິດທິພາບຂອງພະລັງງານແລະພະລັງງານທົດແທນ ໂດຍການປຶກສາຫາຫລືຢ່າງໃກ້ສິດກັບຄະນະກໍາມະການພະລັງງານ, ກົມງົບປະມານ, ຈັດຕັ້ງແລະກົມຄຸ້ມຄອງລະບົບ. ນອກຈາກນັ້ນ ເມື່ອຈໍານວນໂຄງການພະລັງງານເພີ້ມຂຶ້ນ ຄວາມຕ້ອງການຕໍາແໜ່ງຂອງວຽກງານດ້ານພະລັງງານຕ້ອງເພີ້ມຂຶ້ນ. ມີຄວາມຕ້ອງການດ້ານຊັບພະຍາກອນ ດ້ານການເງິນ ເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍ ລວມທັງການກະກຽມເປົ້າໝາຍແຜນການຂອງຂະແໜງພະລັງງານຂອງປະເທດ. ຈະສາມາດສະໜອງຕາມຄວາມຮຽກຮ້ອງຕ້ອງການເຫລົ່ານີ້ ຄວນມີການຈັດບູລິມະສິດຄືນໃໝ່ ງົບປະມານທີ່ມີຢູ່, ເງິນກອງທຶນພາຍໃຕ້ການລິເລີ້ມປະສິດທິພາບດ້ານພະລັງງານ, ເຄື່ອງມືດ້ານການເງິນຮ່ວມສໍາລັບພະລັງງານສະອາດ ແລະ ແຫລ່ງການຊ່ວຍເຫລືອດ້ານວິຊາການອື່ນໆ.

## V. ຄໍາແນະນໍາ

51. ປະທານເອດີບີໃຫ້ຄໍາແນະນໍາວ່າສະພາບໍລິຫານ ຮັບຮອງເອົານະໂຍບາຍພະລັງງານ 2009 ດັ່ງທີ່ມີການອະທິບາຍໃນວັກ 13-15 ແລະ ເຫັນດີກັບການຈັດຕັ້ງປະຕິບັດນະໂຍບາຍພະລັງງານດັ່ງທີ່ໄດ້ລະບຸໃນວັກ 16-46, ທີ່ລວບລວມເຂົ້າກັນເພື່ອປ່ຽນແທນນະໂຍບາຍພະລັງງານສະບັບ ປີ 1995 ແລະ ການທົບທວນຄືນນະໂຍບາຍພະລັງງານສະບັບປີ 1995 ໃນປີ 2000.

52. ຈຸດປະສົງແລະຫລັກການຂອງນະໂຍບາຍ ຄາດວ່າຍັງມີຄວາມສໍາຄັນພຽງພໍສໍາລັບໃນຊ່ວງໄລຍະເວລາດົນພໍສົມຄວນ. ສະນັ້ນ ຈະມີການດໍາເນີນການທົບທວນຄືນນະໂຍບາຍ ກໍ່ຕໍ່ເມື່ອ ແລະມີສະພາບການອັນເໝາະສົມຮັບຮອງ.

## ການວິເຄາະນະໂຍບາຍ

1. ສະເໜີໃຫ້ມີການປັບປຸງນະໂຍບາຍວ່າດ້ວຍພະລັງງານສະບັບປີ 1995 [1] ຂອງເອດີບີ ແລະຂໍ້ຕົກລົງໃຫ້ມີການຈັດລຽງການຈັດຕັ້ງນະໂຍບາຍຄືນໃໝ່ແມ່ນອີງໃສ່ຂໍ້ສະຫລຸບຂອງການປ່ຽນແປງທີ່ກະທົບຕໍ່ຂົງເຂດອາຊີ ແລະປາຊີຟິກ ທີ່ມີການແນ່ໃສ່ການພັດທະນາ ແລະຍຸດທະສາດດ້ານພະລັງງານທີ່ກ່ຽວຂ້ອງ. ຂໍ້ສະເໜີໃຫ້ມີການປ່ຽນແປງນີ້ແມ່ນໄດ້ມາຈາກການທົບທວນປະສົບການຂອງເອດີບີ ໃນຂະແໜງພະລັງງານແລະປະສົບການທີ່ພົວພັນເຖິງພະລັງງານຂອງບັນດາທະນາຄານພັດທະນາຫລາຍຝ່າຍ. ໄດ້ມີການດໍາເນີນການປະເມີນລະອຽດບັນຫາດ້ານນະໂຍບາຍຫລັກໆເຂົ້າໃນການພິຈາລະນາໃນນະໂຍບາຍສະບັບປີ 1995, ສະບັບທົບທວນຄືນ 2000,[2] ຜົນຂອງການທົບທວນນີ້, ແລະບູລິມະສິດ ທີ່ຖືກຕັ້ງຂຶ້ນໃນກອບຂອງຍຸດທະສາດໄລຍະຍາວ 2008–2020 (ຍຸດທະສາດ 2020).[3]

## ກ. ຂະແໜງການພະລັງງານ: ບົດສະຫລຸບ

2. ຄວາມຕ້ອງການພະລັງງານໃນຂົງເຂດອາຊີແລະປາຊີຟິກແມ່ນເພີ້ມຂຶ້ນຢ່າງໄວວາເນື່ອງຈາກການຂະຫຍາຍຕົວສູງທາງດ້ານເສດຖະກິດທີ່ບໍ່ເຄີຍມີມາກ່ອນ. ອີງຕາມອົງການພະລັງງານສາກົນ (IEA), ຄວາມຕ້ອງການພະລັງງານພື້ນຖານໃນປະເທດກໍາລັງພັດທະນາອາຊີ ຄາດວ່າຈະເພີ້ມຂຶ້ນຈາກ 3.2 ຕື້ໂຕນໃນ 2006 ຫາ 6.3 ຕື້ໂຕນ ໃນ 2030.[4] ການເພີ້ມຂຶ້ນນີ້ຈະບໍ່ຍືນຍົງຖ້າຫາກວ່າຄວາມຕ້ອງການພະລັງງານນີ້ ແມ່ນມາຈາກພະລັງງານແຮ່ທາດ. ການຊົມໃຊ້ພະລັງງານຈາກແຮ່ທາດທີ່ສູງຂຶ້ນຈະເຮັດໃຫ້ການປ່ອຍອາຍແກັດສ໌ເຮືອນແກ້ວທີ່ສູງຂຶ້ນຕາມ.

3. ມີການຮັບຮູ້ກັນຢ່າງກ້ວາງຂວາງວ່າ ຄວາມຮ້ອນຂອງໂລກເພີ້ມຂຶ້ນແມ່ນເກີດມາຈາກການປ່ອຍອາຍແກັດສ໌ເຮືອນແກ້ວ, ສ່ວນຫລາຍແມ່ນມາຈາກການນໍາໃຊ້ພະລັງງານຈາກແຮ່ທາດ. ການປ່ຽນແປງອັນສໍາຄັນໃນສະພາບພູມມິອາກາດແມ່ນໄດ້ມີການຕິດຕາມແລະບາງການປ່ຽນແປງ ອາດຈານໍາຜົນອັນຕະຫລາຍທີ່ຕາມມາໃນທົ່ວໂລກ. ເສດຖະກິດຂອງຫລາຍໆປະເທດ ໄດ້ມີການຮັບຮອງເອົານະໂຍບາຍທີ່ຈະຫລຸດການຄາດຄະເນຄວາມຕ້ອງການດ້ານພະລັງງານຂອງພວກເຂົາ. ແຕ່ວ່າ ຄວາມຮຽກຮ້ອງຕ້ອງການໄດ້ພະຍາຍາມຫລາຍຂຶ້ນກວ່າເກົ່າ ເພື່ອຫັນແນວໂນ້ມໃນປະຈຸບັນຂອງການເພີ້ມຂຶ້ນຂອງການປ່ອຍທາດອາຍແກັດສ໌ເຮືອນແກ້ວ.

4. ຄວາມບໍ່ແນ່ນອນຂອງລາຄານໍ້າມັນໂລກໄດ້ສ້າງຄວາມກົດດັນເພີ້ມຂຶ້ນ ແລະຄວາມບໍ່ເທົ່າທຽມກັນຂອງປະເທດກໍາລັງພັດທະນາ. ຄວາມບໍ່ມີສະເຖັຍລະພາບຂອງການສະໜອງແລະລາຄານໍ້າມັນ ໄດ້ນໍາໄປສູ່ໃຫ້ມີການສຸມໃສ່ຄວາມໝັ້ນຄົງດ້ານພະລັງງານຫລາຍຂຶ້ນ, ຫລຸດຜ່ອນການຊົມໃຊ້ນໍ້າມັນ ແລະການອຸດໜູນທີ່ມີການນໍາໃຊ້ແຫລ່ງພະລັງງານພາຍໃນປະເທດເພີ້ມຂຶ້ນ. ມາດຕະການນີ້ຈະປະສົບຜົນສໍາເລັດໄດ້ກໍ່ຕໍ່ເມື່ອມີຄວາມຈໍາເປັນທີ່ຕ້ອງມີວິທີການທີ່

---

1 ເອດີບີ. 1995. *ນະໂຍບາຍທະນາຄານ ສໍາລັບຂະແໜງພະລັງງານ*, ມະນີລາ.

2 ເອດີບີ. 2000. *ນະໂຍບາຍພະລັງງານ 2000: ການທົບທວນນະໂຍບາຍພະລັງງານ.ມະນີລາ.*

3 ເອດີບີ. 2008. *ຍຸດທະສາດ 2020: ໂຄງຮ່າງຍຸດທະສາດໄລຍະຍາວຂອງທະນາຄານພັດທະນາອາຊີ 2008–2020.* ມານີລາ.

4 ອົງການພະລັງງານສາກົນ. 2008. *ການຄາດຄະເນພະລັງງານໂລກ 2008.* ປາຣີ.

ກ້ວາງຂວາງແລະປະສານກັນ. ອັນນີ້ ລວມດ້ວຍຂໍ້ຕົກລົງດ້ານນະໂຍບາຍ, ໂຄງຮ່າງດ້ານກົດໝາຍ ແລະລະບຽບການ, ການອະນຸລັກແລະປະສິດທິພາບດ້ານພະລັງງານ, ການນໍາໃຊ້ແຮ່ທາດເຊື້ອໄຟໃຫ້ໄດ້ສູງສຸດ, ມີການນໍາໃຊ້ພະລັງງານທົດແທນທີ່ເພີ່ມຂຶ້ນ, ແລະການພັດທະນາເສດຖະກິດຕະຫລາດໄປສູ່ແບບຍືນຍົງ.

5. ໃນຂົງເຂດອາຊີແລະປາຊີຟິກຍັງມີຫລາຍບັນຫາທີ່ຮຽກຮ້ອງຄວາມສົນໃຈ: ການເພີ່ມຂຶ້ນ ທາງດ້ານຄວາມຕ້ອງການດ້ານພະລັງງານ ແລະສິ່ງທີ່ທ້າທາຍ ໃນການສະໜອງ ການເຂົ້າເຖິງຮູບແບບພະລັງງານທີ່ທັນສະໄໝ ໃຫ້ແກ່ໝົດທຸກຄົນ. ມີປະຊາຊົນປະມານ 1 ຕື້ຄົນໃນພາກພື້ນນີ້ ທີ່ບໍ່ທັນໄດ້ເຂົ້າເຖິງພະລັງງານທີ່ທັນສະໄໝ.

6. ເອດີບີ ໄດ້ມີສ່ວນຮ່ວມໃນຂະແໜງການພະລັງງານ ກັບປະເທດສະມາຊິກທີ່ກໍາລັງພັດທະນາຂອງຕົນຕັ້ງແຕ່ປີ 1969. ນະໂຍບາຍວ່າດ້ວຍພະລັງງານ ຂອງເອດີບີ ສະບັບທໍາອິດແມ່ນຖືກຮັບຮອງໃນປີ 1981, ເລັ່ງໃສ່ເອົາຊະນະວິກິດການ ທີ່ເກີດຂຶ້ນຈາກການຜັນຜວນລາຄານໍ້າມັນທີ່ຮ້າຍແຮງ.[5] ນະໂຍບາຍໄດ້ເໜັ້ນໃສ່ (i) ການພັດທະນາພື້ນຖານໂຄງລ່າງດ້ານພະລັງງານແລະແຫລ່ງພະລັງງານຕາມທ້ອງຖິ່ນ (ii) ສົ່ງເສີມປະສິດທິພາບດ້ານພະລັງງານແລະ (iii) ສ້າງຕັ້ງຕະຫລາດພະລັງງານທີ່ດຶງດູດການລົງທຶນໃນປະເທດສະມາຊິກທີ່ກໍາລັງພັດທະນາ.

7. ເອກະສານດ້ານນະໂຍບາຍພະລັງງານສະບັບທີ່ສອງ (ໝາຍເຫດ 1), ອອກໃນປີ 1995, ໄດ້ໃຫ້ຂໍ້ສັງເກດວ່າໃນເມື່ອການລົງທຶນເຂົ້າໃນຂະແໜງພະລັງງານຂອງປະເທດສະມາຊິກທີ່ກໍາລັງພັດທະນາ ມີການເພີ້ມຂຶ້ນຂະແໜງການເຫລົ່ານີ້ ກໍາລັງຈະພາໃຫ້ບໍ່ສາມາດບໍລິຫານໄດ້ແລະບໍ່ມີປະສິດທິພາບເປັນສ່ວນໃຫຍ່ ຍ້ອນວ່າລັດຖະບານມີສອງບົດບາດໃນໂຕເປັນທັງຜູ້ອອກນະໂຍບາຍແລະເປັນເຈົ້າກໍາມະສິດພຽງຜູ້ດຽວ. ເອກະສານດ້ານນະໂຍບາຍສະບັບທີ່ສອງຍັງຮັບຮູ້ເຖິງການປ່ຽນແປງຄວາມຕ້ອງການຂອງຂະແໜງການພະລັງງານ ແລະ ໃຫ້ຄໍາແນະນໍາທີ່ມີຄວາມດຸ່ນດ່ຽງກັນໃນການລົງທຶນເຂົ້າພື້ນຖານໂຄງລ່າງ ແລະການພັດທະນາທີ່ມີທ່າແຮງທາງການເງິນແລະການດໍາເນີນງານທີ່ມີປະສິດທິພາບ. ເອກະສານໄດ້ໃຫ້ຄໍາເຫັນຕໍ່ຕົ້ນທຶນຂອງການລົງທຶນຄືນທັງໝົດ, ຫລຸດຜ່ອນການອຸດໜູນ, ສ້າງຕັ້ງກົນໄກການຄຸ້ມຄອງທີ່ເປັນເອກະລາດແລະອັດຕາຄ່າພະລັງງານທີ່ອີງໃສ່ຫລັກການຄວາມໂປ່ງໃສ. ເອກະສານຍັງໄດ້ແນະນໍາເພີ້ມເຕີມໃນການຫັນຊັບສິນຂອງລັດໃຫ້ເປັນບໍລິສັດແລະການຄ້າ, ການເຂົ້າຮ່ວມຂອງພາກເອກະຊົນ ແລະການພັດທະນາດ້ານການຊື້ຂາຍພະລັງງານຢູ່ໃນຂົງເຂດພາກພື້ນ. ຄໍາແນະນໍາອື່ນໆຍັງກວມລວມເອົາການເພີ້ມຄວາມເອົາໃຈໃສ່ໃນການບໍລິຫານດ້ານຄວາມຕ້ອງການ, ການປົກປັກຮັກສາສິ່ງແວດລ້ອມ, ການຂະຫຍາຍຕາໜ່າງໄຟຟ້າໄປສູ່ຊົນນະບົດແລະການພັດທະນາ ດ້ານພະລັງງານທົດແທນ.

8. ນະໂຍບາຍວ່າດ້ວຍພະລັງງານສະບັບປີ 1995 ໄດ້ຮັບການທົບທວນ ໃນປີ 2000 (ໝາຍເຫດ 2). ການທົບທວນນີ້ ໄດ້ຢັ້ງຢືນວ່າໂຄງຮ່າງປະຈຸບັນແມ່ນເໝາະສົມແລະມີເຫດຜົນ. ແຕ່ຢ່າງໃດກໍ່ດີ ເມື່ອມີການນໍາເອົາມາພິຈາລະນາໃນການທົບທວນບູລິມະສິດການດໍາເນີນງານຂອງເອດີບີ ແລະການປ່ຽນແປງຄວາມຕ້ອງການຂອງປະເທດສະມາຊິກທີ່ກໍາລັງພັດທະນາການທົບທວນຄືນໄດ້ໃຫ້ຄໍາແນະນໍາດ້ານການພັດທະນາ, ການຄຸ້ມຄອງຕະຫລາດພະລັງງານຢ່າງເປັນເອກະລາດ ທີ່ຈະນໍາໄປສູ່ການນໍາໃຊ້ພະລັງງານຢ່າງມີປະສິດທິພາບທີ່ດີກວ່າ, ລາຄາຕໍ່າແລະການລົງທຶນ

---

[5] ເອດີບີ. 1981. *ບົບາດຂອງທະນາຄານໃນຂະແໜງພະລັງງານໃນພາກພື້ນ*. ເອກະສານເຮັດວຽກທີ່ 2. ມານີລາ.

ຂອງພາກເອກະຊົນເພີ້ມຫລາຍຂື້ນ. ຊຶ່ງໄດ້ມີການເໜັ້ນໜັກໃສ່ ຢູ່ໃນຂົງເຂດດັ່ງຕໍ່ໄປນີ້ (i) ການຫລຸດ ຜ່ອນຄວາມທຸກຍາກ ໂດຍການສ້າງພື້ນຖານໂຄງລ່າງດ້ານພະລັງງານ ເພື່ອການຂະຫຍາຍຕົວທາງເສດຖະກິດ ທີ່ຍືນຍົງແລະເພີ້ມການເຂົ້າເຖິງພະລັງງານຂອງກຸ່ມຄົນທຸກຍາກໂດຍສະເພາະແມ່ນເຂດຊົນນະບົດ; (ii) ເພີ້ມການມີສ່ວນຮ່ວມຂອງພາກເອກະຊົນ ໂດຍການປັບປຸງໂຄງສ້າງຂອງຂະແໜງການພະລັງງານຄືນໃໝ່ ແລະສ້າງສະພາບແວດລ້ອມໃຫ້ແກ່ນັກລົງທຶນພາກເອກະຊົນ; (iii) ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມໃນລະດັບພາກພື້ນແລະໂລກ ໂດຍສະເພາະແມ່ນການຫລຸດຜ່ອນບັນຫາດ້ານຝົນອາຊິດ, ສົ່ງເສີມພະລັງງານສະອາດແລະກົນໄກຂໍ້ຕົກລົງກຽວໂຕ [6] ສໍາລັບການຫລຸດຜ່ອນປ່ອຍອາຍແກັດສ໌ເຮືອນແກ້ວແລະສະໜອງດ້ານການເງິນໃຫ້ແກ່ໂຄງການພະລັງງານທົດແທນ; ແລະ (iv) ສົ່ງເສີມການຮ່ວມມືຢູ່ໃນພາກພື້ນ. ພາຍໃຕ້ໂຄງຮ່າງຫລັກການພື້ນຖານເຫລົ່ານີ້ການທົບທວນ ໄດ້ສະໜັບສະໜູນທີ່ຫລາກຫລາຍແກ່ການລິເລີ້ມເຊັ່ນ: ການປັບປຸງໂຄງສ້າງຂອງຂະແໜງພະລັງງານ, ການເຂົ້າຮ່ວມຂອງພາກເອກະຊົນ, ການພັດທະນາສັງຄົມ, ການອຸດໜູນທີ່ສົມເຫດສົມຜົນ, ການຄຸ້ມຄອງຂະແໜງການ, ຂໍ້ມູນຂ່າວສານດ້ານເຕັກນິກ, ການປົກປັກຮັກສາສິ່ງແວດລ້ອມ, ປະສິດທິພາບດ້ານພະລັງງານ, ແລະການສ້າງຂີດຄວາມອາດສາມາດ. ການທົບທວນໃນປີ 2000 ຊຶ່ງຮຽກຮ້ອງໃຫ້ມີການປະເມີນຄືນໃນທຸກໆຫ້າປີ.

9. ການດໍາເນີນງານໃນຂະແໜງພະລັງງານຂອງເອດີບີ ກໍ່ໄດ້ຮັບການປະເມີນຜົນໂດຍກົມປະເມີນຜົນ ເອກະລາດ (IED), ເຊິ່ງພົບວ່າການດໍາເນີນງານແມ່ນເໝາະສົມ, ຕາມເວລາແລະໂດຍທົ່ວໄປແລ້ວແມ່ນປະສົບຜົນສໍາເລັດ (ວັກ. 29–30). ຜົນຂອງການປະເມີນຜົນສະແດງໃຫ້ເຫັນວ່າການສະໜັບສະໜູນຂອງເອດີບີ ໃນຂະແໜງພະລັງງານ ຄວນຄໍານຶງເຖິງສອງນະໂຍບາຍຫລັກຄື ປະສິດທິພາບດ້ານພະລັງງານແລະການຄຸ້ມຄອງທີ່ດີ.

## ຂ. ການຄາດຄະເນຄວາມຕ້ອງການດ້ານພະລັງງານ

10. ຄວາມຕ້ອງການດ້ານພະລັງງານພື້ນຖານຂອງໂລກໄດ້ຖືກຄາດຄະເນວ່າຈະເພີ່ມຂື້ນ 45% ແຕ່ປີ 2006 ຫາ 2030, ເຊິ່ງວ່າອັດຕາການຂະຫຍາຍຕົວປະຈໍາປີສະເລ່ຍປະມານ 1.6%. (ໝາຍເຫດ 4). ໃນປີ 2030, ຄວາມຕ້ອງການດ້ານພະລັງງານຈະແມ່ນ 17.0 ຕື້ໂຕນ, ອີງຕາມສະພາບການທີ່ມີການຄາດຄະເນວ່ານະໂຍບາຍລັດຖະບານບໍ່ຖືກນໍາມາສະເໜີນອກເໜືອຈາກສິ່ງທີ່ໄດ້ຖືກຮັບຮອງເອົາໃນກາງປີ 2008. ສະພາບການນີ້ທີ່ໄດ້ມີການກະກຽມໂດຍອົງການພະລັງງານສາກົນ ແລະເປັນເຫດການທີ່ຖືກອ້າງອີງ, ແນະນໍາວ່າ 87% ຂອງການເພີ່ມຂື້ນໃນການນໍາໃຊ້ພະລັງງານໃນໂລກ ຈະມາຈາກປະເທດທີ່ບໍ່ແມ່ນກຸ່ມປະເທດຂອງອົງການເພື່ອການຮ່ວມມືດ້ານເສດຖະກິດແລະການພັດທະນາ (OECD). ໃນບັນດາປະເທດທີ່ບໍ່ແມ່ນສະມາຊິກ ຂອງອົງການຮ່ວມມືທາງເສດຖະກິດແລະການພັດທະ

---

[6] ກົດບັດສະຫະປະຊາຊາດວ່າດ້ວຍການປ່ຽນແປງພູມມີອາກາດ ໄດ້ສ້າງຕັ້ງກອງປະຊຸມຂອງຜູ້ເຂົ້າຮ່ວມ (COP) ຍ້ອນວ່າອົງການສູງສຸດຂອງກອງປະຊຸມນີ້ ທີ່ຄວາມຮັບຜິດຊອບໃນການຕິດຄວາມຄືບໜ້າໄປສູ່ເປົ້າໝາຍຂອງກົດບັດ. ກອງປະຊຸມຄັ້ງທໍາອິດຂອງ COP ຢູ່ທີ່ນະຄອນຫລວງເບີລິນ ປະເທດເຢຍລະມັນ, ໄດ້ມີການຕົກລົງວ່າ ຄໍາໝັ້ນສັນຍາຫລັງປີ 2000 ຈະສາມາດຕັ້ງໄດ້ພຽງແຕ່ຕັ້ງຂຶ້ນ ເປັນເອກະສານຊ້ອນທ້າຍ I ຂອງບັນດາປະເທດສະມາຊິກທີ່ເຂົ້າຮ່ວມ. ໃນລະຫວ່າງກອງປະຊຸມ COP ຄັ້ງທີ່ສາມຢູ່ນະຄອນກຽວໂຕ ປະເທດຍີ່ປຸ່ນ, ຊຸດຂອງພັດທະທີ່ຜູກພັນຕາມກົດໝາຍສໍາລັບ 38 ປະເທດອຸດສາຫະກໍາໃນຢູໂຣບກາງແລະຢູໂຣບຕາວັນອອກໄດ້ຖືກສ້າງຕັ້ງຂຶ້ນເພື່ອຫລຸດຜ່ອນການປ່ອຍອາຍແກັດສ໌ຜິດເຮືອນແກ້ວໃຫ້ກັບມາຢູ່ໃລະດັບສະເລ່ຍ 5.2% ຕໍ່າກວ່າລະດັບຂອງປີ 1990 ຂອງພວກເຂົາຂອງຊ່ວງໄລຍະເວລາຂອງຄໍາໝັ້ນສັນຍາລະຫວ່າງປີ 2008 - 2012. ນີ້ແມ່ນເອີ້ນວ່າສົນທິສັນຍາກຽວໂຕ ຕໍ່ກົດບັດ.

ນາ, ອັດຕາການຂະຫຍາຍຕົວທາງເສດຖະກິດແລະປະຊາກອນຈະສືບຕໍ່ເປັນບັນຫາທີ່ສໍາຄັນ. ເຊື້ອໄຟທີ່ເປັນແຮ່ທາດຈະກວມເອົາຫລາຍກ່ວາ 70% ຂອງການຄາດຄະເນການເພີ້ມຂຶ້ນຂອງຄວາມຕ້ອງດ້ານພະລັງງານພື້ນຖານ ເຊິ່ງໃນນັ້ນນໍ້າມັນເຊື້ອໄຟ ຍັງເປັນພາກສ່ວນໃຫຍ່ຂອງພະລັງງານພື້ນຖານ. ໃນຂະນະທີ່ຄວາມຕ້ອງການດ້ານອາຍແກັດສ໌ທໍາມະຊາດ ຈະມີການຂະຫຍາຍຕົວ (ສ່ວນຫລາຍ ແມ່ນຍ້ອນຄວາມນິຍົມໃນການ ນໍາໃຊ້ອາຍແກັດສ໌ເພື່ອສ້າງກະແສໄຟຟ້າ), ຖ່ານຫີນຈະສືບຕໍ່ເປັນແຫລ່ງເຊື້ອໄຟສ່ວນໃຫຍ່ ໃນການສ້າງກະແສໄຟຟ້າ. ສ່ວນແບ່ງຂອງພະລັງງານນິວເຄຼຍ (5.3%) ແລະພະລັງງານນໍ້າ (2.4%) ຈະຍັງຄົງຢູ່ໃນບະດັບເດີມ. ສ່ວນແບ່ງຂອງປະລິມານຂອງການຊົມໃຊ້ພະລັງງານຈາກຊີວະມວນຄາດວ່າຈະຫລຸດລົງ ເນື່ອງຈາກວ່າການເພີ່ມຂຶ້ນຂອງການນໍາໃຊ້ພະລັງງານທີ່ທັນສະໄໝໃນເຂດຊົນະບົດຂອງປະເທດກໍາລັງພັດທະນາ. ສ່ວນແບ່ງຈາກແຫລ່ງພະລັງງານທົດແທນອື່ນໆທີ່ບໍ່ລວມພະລັງງານນໍ້າ ແລະປະລິມານຂອງຊີວະມວນ, ຈະຢູ່ປະມານ 2.1% ຂອງຄວາມຕ້ອງການພະລັງງານພື້ນຖານຂອງໂລກ. (ຕາຕະລາງ ກ1.1).

**ຕາຕະລາງ ກ1.1: ຄວາມຕ້ອງການພະລັງງານພື້ນຖານຂອງໂລກໂດຍອີງໃສ່ເຫດການ**

(ລ້ານໂຕນທຽບເທົ່າກັບນໍ້າມັນ)

| ລາຍການ | 1980 | 2000 | 2006 | 2015 | 2030 | 2030 share (%) | 2006–2030 (%)[a] |
|---|---|---|---|---|---|---|---|
| ຖ່ານຫີນ | 1,788 | 2,295 | 3,053 | 4,023 | 4,908 | 28.8 | 2.0 |
| ນໍ້າມັນ | 3,107 | 3,649 | 4,029 | 4,525 | 5,109 | 30.0 | 1.0 |
| ອາຍແກັດສ໌ | 1,235 | 2,088 | 2,407 | 2,903 | 3,670 | 21.6 | 1.8 |
| ນິວເຄຼຍ | 186 | 675 | 728 | 817 | 901 | 5.3 | 0.9 |
| ພະລັງງານນໍ້າ | 148 | 226 | 261 | 321 | 414 | 2.4 | 1.9 |
| ຊີວະມວນ ແລະຂີ້ເຫຍື້ອ | 748 | 1,045 | 1,186 | 1,375 | 1,662 | 9.8 | 1.4 |
| ພະລັງງານທົບແທນອື່ນໆ | 12 | 55 | 66 | 158 | 350 | 2.1 | 7.2 |
| **ລວມ** | **7,223** | **10,034** | **11,730** | **14,121** | **17,014** | **100** | **1.6** |

[a] ອັດຕາການເຕີບປະຈໍາປີສະເລ່ຍ.

ແຫລ່ງຂໍ້ມູນ: ອົງການພະລັງງານສາກົນ. 2008. *ການຄາດຄະເນພະລັງງານຂອງໂລກ 2008*. ປາຣີ

11. ຊັບພະຍາກອນພະລັງງານຂອງໂລກແມ່ນພຽງພໍທີ່ຈະຕອບສະໜອງ ຕາມການຄາດຄະເນຂອງການເພີ່ມຂຶ້ນຂອງຄວາມຕ້ອງການພະລັງງານດັ່ງທີ່ໄດ້ບົ່ງບອກຢູ່ໃນເຫດການອ້າງອີງ ແຕ່ວ່າແຫລ່ງພະລັງງານເຫລົ່ານີ້ ບໍ່ໄດ້ຮັບການແຈກຢາຍຢ່າງສະໝໍ່າສະເໝີຕາມພູມມີສາດ. ເພື່ອຕອບສະໜອງຕາມການເພີ້ມຂຶ້ນຂອງຄວາມຕ້ອງການດ້ານພະລັງງານມີຄວາມຮຽກຮ້ອງຕ້ອງການໃຫ້ມີການລົງທຶນຫລາຍກວ່າ $26.3 ໂກດ (ອັດຕາ $US ໃນປີ 2007) ໃນທົ່ວ

ໂລກ "ແລະການຄາດຄະເນການປ່ອຍອາຍແກັດເຮືອນແກ້ວຈະເພີ່ມຂຶ້ນ. [7] ການຄາດຄະເນຄວາມຕ້ອງການເຫລົ່ານີ້ແມ່ນຈະມີຜົນສະທ້ອນຕໍ່ສະພາບສິ່ງແວດລ້ອມແບບບໍ່ຍືນຍົງ. ເພື່ອປະເມີນຜົນສະທ້ອນຕໍ່ຂະແໜງພະລັງງານ ຈາກຄວາມພະຍາຍາມທີ່ເຮັດໃຫ້ໂລກ ຫັນໄປໃນທິດທາງທີ່ແຕກຕ່າງສຳລັບການປ່ອຍອາຍແກັດສ໌ເຮືອນແກ້ວ, ອີງການພະລັງງານສາກົນ ພັດທະນາສອງເຫດການຈຳລອງທີ່ມີສະເຖຍລະພາບສຳລັບການປ່ອຍອາຍແກັດສ໌ເຮືອນແກ້ວ 550 ແລະ 450 ສ່ວນຕໍ່ໜຶ່ງລ້ານ ທຽບເທົ່າອາຍກາກບອນປີ 2030.

12. ໃນກໍລະນີ, ການປະຕິບັດນະໂຍບາຍສຳລັບ 550, ການນຳໃຊ້ພະລັງງານທົ່ວໂລກ ທີ່ກ່ຽວຂ້ອງກັບການປ່ອຍອາຍກາກບອນຈະຂຶ້ນສູງສຸດໃນປີ 2025 ແລະຫລັງຈາກນັ້ນ ຈະຫລຸດລົງມາ 33 ກິກກາໂຕນ ໃນປີ 2030 ຕໍ່າກວ່າ 19% ໃນປີ 2030 ທຽບໃສ່ເຫດການອ້າງອີງ. ຄວາມຕ້ອງການດ້ານພະລັງງານທັງໝົດໃນປີ 2030 ແມ່ນ 9% ຕໍ່າກວ່າເຫດການອ້າງອີງ. ບົດບາດຂອງພະລັງງານທົດແທນມີການຂະຫຍາຍຕົວໂດຍສະເພາະແມ່ນພະລັງງານລົມ ໃນຂະນະທີ່ຄວາມຕ້ອງການຖ່ານຫີນແມ່ນຫລຸດລົງ 27% ແລະຄວາມຕ້ອງການອາຍແກັດທຳມະຊາດ ແລະນ້ຳມັນເຊື້ອໄຟຫລຸດລົງ 8%. ໃນສະພາບເຫດການຂອງນະໂຍບາຍ 450 ການປ່ອຍອາຍເສຍຈະຫລຸດລົງຢ່າງໄວວາຫລັງຈາກປີ 2020 ເນື່ອງຈາກມີການດຳເນີນງານດ້ານນະໂຍບາຍທີ່ເຂັ້ມງວດແລະກ້ວາງຂວາງ. ຄວາມຕ້ອງການພະລັງງານທັງໝົດໃນປີ 2030 ແມ່ນ 16% ຕໍ່າກວ່າເຫດການອ້າງອີງ. ພະລັງງານຈາກພະລັງນ້ຳ, ຊີວະມວນແລະພະລັງງານທົດແທນອື່ນໆຖືກນຳໃຊ້ໄວກວ່າເຂົ້າໃນການສ້າງກະແສໄຟຟ້າ ເຊິ່ງກວມເອົາປະມານ 40% ຂອງການສ້າງກະແສໄຟຟ້າໃນທົ່ວໂລກທັງໝົດໃນປີ 2030. ພະລັງງານໃນໂລກທີ່ກ່ຽວກັບການປ່ອຍອາຍກາກບອນຈະເພີ່ມຂຶ້ນຢູ່ຈຸດສູງສຸດໃນປີ 2020 ຢູ່ທີ່ 32.5 ກິກກາໂຕນແລະຫລັງຈາກນັ້ນຈະຫລຸດລົງຢູ່ທີ່ 25.7 ກິກກາໂຕນ ໃນປີ 2030 (ຕາຕະລາງ ກ1.2). ໃນຂະນະທີ່ ເຫດການຂອງນະໂຍບາຍ 450 ສາມາດບັນລຸໄດ້ໂດຍການນຳໃຊ້ເຕັກໂນໂລຢີ ທີ່ມີປະສິດທິພາບໃນປະຈຸບັນ ຄວາມກ້າວໜ້າທາງດານເຕັກໂນໂລຢີຫລາຍຂຶ້ນຈະຊ່ວຍອຳນວຍຄວາມສະດວກຫລາຍຂຶ້ນ ແລະຫລຸດຕົ້ນທຶນທີ່ຈະປະຕິບັດຕາມເງື່ອນໄຂຂອງນະໂຍບາຍ. ເຫດການຂອງນະໂຍບາຍ 450 ສາມາດບັນລຸໄດ້ກໍ່ຕໍ່ເມື່ອມີການຂະຫຍາຍການຄົ້ນຄ້ວາ, ການພັດທະນາແລະການນຳສະເໜີແລະນຳໃຊ້ເຕັກໂນໂລຢີ. ເຫດການຂອງນະໂຍບາຍ 550 ຮຽກຮ້ອງການລົງທຶນເພີ່ມ $1.2 ໂກດເຂົ້າໃນໂຮງງານພະລັງງານ ແລະ $3 ໂກດເຂົ້າໃນພະລັງງານທີ່ມີປະສິດທິພາບທີ່ໃກ້ຄຽງກັບເຫດການອ້າງອີງ. ເຫດການຂອງນະໂຍບາຍ 450 ຮຽກຮ້ອງການລົງທຶນເຂົ້າໃນໂຮງງານພະລັງງານ $2.4 ໂກດ ເພີ້ມເຕີມອີກ ຂອງເຫດການນະໂຍບາຍ 550.

[7] ພະລັງງານທີ່ກ່ຽວກັບການປ່ອຍອາຍກາກບອນ ຄາດວ່າຈະເພີ່ມຂຶ້ນ 45% ໃນປີ 2030 ຫລາຍກວ່າປີ 2006.

**ຕາຕະລາງ ກ 1.2: ຄວາມຕ້ອງການພະລັງງານພື້ນຖານຂອງໂລກ ໃນປີ 2030 ພາຍໃຕ້ເຫດການຂອງນະໂຍບາຍພູມມີອາກາດທີ່ແຕກຕ່າງກັນ**

(ລ້ານໂຕນ ທຽມເທົ່າກັບນ້ຳມັນ)

| **ລາຍການ** | **ອ້າງອີງ ເຫດການ** | **ນະໂຍບາຍ ( 550) ເຫດການ** | **ນະໂຍບາຍ (450) ເຫດການ** |
|---|---|---|---|
| ຖ່ານຫີນ | 4,908 | 3,575 | 2,381 |
| ນ້ຳມັນ | 5,109 | 4,689 | 4,308 |
| ອາຍແກັດສ໌ | 3,670 | 3,383 | 2,950 |
| ນິວເຄຼຍ | 901 | 1,086 | 1,364 |
| ພະລັງງານນ້ຳ | 414 | 456 | 555 |
| ປະລິມານທາງຊີວະ ແລະ ຂີ້ເຫຍື້ອ | 1,662 | 1,826 | 2,119 |
| ພະລັງງານທົດແທນອື່ນໆ | 350 | 468 | 683 |
| **ລວມ** | **17,014** | **15,483** | **14,361** |

ແຫລ່ງຂໍ້ມູນ: ອົງການພະລັງງານສາກົນ. 2008. *ການຄາດຄະເນພະລັງງານຂອງໂລງ 2008*. ປາລີ.

13. ໃນປະເທດກຳລັງພັດທະນາອາຊີ, [8] ການຄາດຄະເນຄວາມຕ້ອງການພະລັງງານພື້ນຖານ ຄາດວ່າຈະມີການຂະຫຍາຍຕົວ ຈາກ 3,227 ລ້ານໂຕນ ທີ່ເທົ່າທຽມກັບນ້ຳມັນໃນປີ 2006 ຫາ 6,325 ລ້ານໂຕນ ທີ່ເທົ່າທຽມກັບນ້ຳມັນໃນປີ 2030 ໂດຍສາທາລະນະລັດປະຊາຊົນຈີນ ແລະປະເທດອິນເດຍກວມເອົາເປັນສ່ວນໃຫຍ່. ສ່ວນໃຫຍ່ຂອງການເພີ່ມຂຶ້ນຂອງຄວາມຕ້ອງການດ້ານພະລັງງານ ຈະແມ່ນເນື່ອງມາຈາກການຄາດຄະເນການຂະຫຍາຍຕົວທາງເສດຖະກິດແລະປະຊາກອນຢ່າງໄວວາ. ການຫັນເປັນອຸດສາຫະກຳ, ການຂະຫຍາຍຕົວຂອງຕົວເມືອງ ແລະການປ່ຽນແທນພະລັງງານຊີວະມວນ ທີ່ບໍ່ແມ່ນເພື່ອການຄ້າໂດຍພະລັງງານເພື່ອການຄ້າ ຍັງຈະຊ່ວຍປະກອບສ່ວນໃຫ້ແກ່ການເພີ້ມຂຶ້ນຂອງຄວາມຕ້ອງການດ້ານພະລັງງານ. ບັນດາປັດໃຈອື່ນໆຈະແມ່ນການເພີ້ມຂຶ້ນຂອງກິດຈະກຳທາງເສດຖະກິດ, ມາດຕະຖານການດຳລົງຊີວິດທີ່ສູງຂຶ້ນ ແລະການຊົມໃຊ້ຂອງຄົວເຮືອນທີ່ເພີ້ມຂຶ້ນ. ການທົບທວນເບິ່ງທ່າອ່ຽງຂອງຄວາມຕ້ອງການໃນປະເທດກຳລັງພັດທະນາໃນອາຊີ ທີ່ອີງໃສ່ປະເພດຂອງເຊື້ອໄຟ ສະແດງໃຫ້ເຫັນວ່າຖ່ານຫີນຍັງຈະມີບົດບາດສຳຄັນເຊິ່ງມີສ່ວນແບ່ງປະມານ 50% ຂອງພະລັງງານເຊື້ອໄຟທັງໝົດໃນປີ 2030 (ສົມທຽບກັບ 46% ໃນປີ 2006), ຕາມມາແມ່ນນ້ຳມັນເຊື້ອໄຟ 24% (23% ໃນປີ 2006), ຊີວະມວນ ແລະສິ່ງເສດເຫລືອ 10% (17% ໃນປີ 2006) ແລະອາຍແກັດທຳມະຊາດ 9%( 7% ໃນປີ 2006). ຄວາມຕ້ອງການນ້ຳມັນເຊື້ອໄຟຍັງຈະແມ່ນສາທາລະນາ

---

[8] ປະເທດອາຊີ ທີ່ກຳລັງພັດທະນາ ຕາມການໃຫ້ຄຳນິຍາມໂດຍອົງການພະລັງງານສາກົນ ລວມມີ ປະເທດ ອາບການິສ໌ຖານ, ບັງກຼາເດດສ໌, ບູຖານ, ບູໄນ ດາຣູສ໌ລຳ, ກຳປູເຈຍ, ສາທາລະນາລັດປະຊາຊົນຈີນ, ເກາະຟີຈີ, ເກາະໂປລີເນເຊຍຂອງຝຼັ່ງ, ຈີນຮອງກົງ, ອິນໂດເນເຊຍ, ກີຣິບາຕີ, ສາທາລະນາລັດປະຊາທິປະໄຕປະຊາຊົນເກົາຫລີ, ສາທາລະນາລັດປະຊາທິປະໄຕປະຊາຊົນລາວ, ມາເລເຊຍ, ມາວດິບສ໌, ມົງໂກເລຍ, ພະມ້າ, ເນປານ, ຄາລາໂດເນຍໃໝ່, ປະກິດສ໌ຖານ, ປາປົວນິວກີນີ, ຟີລິບປິນ, ສາມົວ, ສິງກະໂປ, ເກາະສ໌ໂລມອນ, ສີຣັງກາ, ໄທ, ທົງກາ, ໄຕ້ຫວັນ,ຈີນ, ຫວຽດນາມ, ແລະວານາຕູ.

ລັດປະຊາຊົນຈີນ ທີ່ຈະມີບົດບາດສໍາຄັນ ເຊິ່ງຄວາມຕ້ອງການນໍ້າມັນຈະເພີ່ມຂຶ້ນເຖິງ 16.6 ລ້ານບາເຣວຕໍ່ມື້ ໃນປີ 2030 ເຊິ່ງຫລາຍກວ່າເຄິ່ງໜຶ່ງຂອງຄວາມຕ້ອງການທັງໝົດຂອງອາຊີທີ່ມີຄວາມຕ້ອງການປະມານ 30.8 ລ້ານບາເຣວຕໍ່ມື້. ຄວາມຕ້ອງການກະແສໄຟຟ້າ ຄາດວ່າມີການຂະຫຍາຍຕົວສູງສຸດແມ່ນຢູ່ປະເທດອິນເດຍ(5.7% ຕໍ່ປີ)ໃນລະຫວ່າງປີ 2006 ແລະ 2030, ຕາມມາແມ່ນສາທາລະນາລັດປະຊາຊົນຈີນ (4.6% ຕໍ່ປີ). ຜົນຜະລິດດ້ານພະລັງງານນໍ້າ ແມ່ນຄາດວ່າຈະເພີ່ມຂຶ້ນໃນປະເທດກໍາລັງພັດທະນາໃນອາຊີ ເຊິ່ງສ່ວນໃຫຍ່ແມ່ນຍັງບໍ່ໄດ້ຮັບການໝູນໃຊ້ເທື່ອ. ໂດຍມີຄວາມຕ້ອງການລົງທຶນເຂົ້າໃນຂະແໜງການພະລັງງານໃນທົ່ວໂລກທັງໝົດແມ່ນ $26.3 ໂກດ ປະເທດກໍາລັງພັດທະນາອາຊີ ກວມເອົາຫລາຍກວ່າ $7.4 ໂກດ; ປະເທດຈີນພຽງປະເທດດຽວ ຈະຕ້ອງການການລົງທຶນປະມານ $4.2 ໂກດ.

## ຄ. ຄວາມໝັ້ນຄົງດ້ານພະລັງງານ

14. ການປ່ຽນແປງໄວໃນຕະຫລາດພະລັງງານທີ່ບໍ່ດົນຜ່ານມານີ້ ໂດຍສະເພາະແມ່ນນໍ້າມັນເຊື້ອໄຟ ໄດ້ຊຸກຍູ້ໃຫ້ປະເທດຜູ້ນໍາເຂົ້ານໍ້າມັນເຊື້ອໄຟ ທີ່ຈະຕ້ອງມີມາດຕະການອັນຈໍາເປັນສໍາລັບຄວາມໝັ້ນຄົງດ້ານພະລັງງານເຊິ່ງລວມທັງ ຄວາມສ່ຽງໄລຍະສັ້ນຕໍ່ການຂະຫຍາຍຕົວທາງເສດຖະກິດ. ຫລາຍໆເສດຖະກິດໃນອາຊີແລະປາຊີຟິກ ແມ່ນມີການຂະຫຍາຍຕົວໄວ ເຊິ່ງພາໃຫ້ມີຄວາມຕ້ອງການພະລັງງານທີ່ສູງຂຶ້ນກວ່າເກົ່າ. ການສະໜອງນໍ້າມັນເຊື້ອໄຟ ແມ່ນເອື່ອຍອີງໃສ່ປະເທດຕະເວັນອອກກາງທີ່ມີສະພາບການເມືອງທີ່ອ່ອນໄຫວ. ໃນເມື່ອຄວາມເປັນເອກະລາດ ດ້ານພະລັງງານອາດຈະເປັນໄປບໍ່ໄດ້ ແຕ່ມີຄວາມຈໍາເປັນທີ່ຈະຕ້ອງໄດ້ມີການຊອກຫາທາງເລືອກໄລຍະຍາວໃນການຮ່ວມມືໃນລະດັບສາກົນເພື່ອຮັບປະກັນຜະລິດຕະພັນ ແລະການນໍາໃຊ້ພະລັງງານທີ່ມີຕົ້ນທຶນທີ່ມີຄວາມສາມາດຊື້ໄດ້, ສົມເຫດສົມຜົນແລະມີລັກສະນະໝັ້ນຄົງຖາວອນ. ມີການນໍາໃຊ້ພະລັງງານຫຼາຍຈາກແຮ່ທາດ ຈະສ້າງປະລິມານອາຍແກັດສ໌ເຮືອນແກ້ວຫລາຍຂຶ້ນ. ການສຶກສາຫວ່າງບໍ່ດົນມານີ້ ໄດ້ແນະນໍາໃຫ້ແກ່ການແກ້ໄຂຄວາມໝັ້ນຄົງດ້ານພະລັງງານ, ການຊົມໃຊ້ພະລັງງານຕ້ອງຫລຸດລົງໂດຍດໍາເນີນການຢ່າງຕັ້ງໜ້າໃນການນໍາໃຊ້ພະລັງງານ ທີ່ມີປະສິດທິພາບ.[9] ອັນນີ້ສາມາດບັນລຸໄດ້ໃນແຕ່ລະລະດັບທີ່ແຕກຕ່າງກັນໄປໂດຍ (i) ປັບປຸງຍານພະຫະນາໃຫ້ມີປະສິດທິພາບດ້ານພະລັງງານ, (ii) ມີການວາງແຜນການຂະຫຍາຍຕົວຂອງຕົວເມືອງທີ່ດີກວ່າເກົ່າ, (iii) ມີການນໍາໃຊ້ແຫລ່ງພະລັງງານໃໝ່ແລະພະລັງງານທົດແທນ, (iv) ມີການນໍາໃຊ້ພະລັງງານທີ່ສະຫລັບກັນ ແລະ (v) ໃຫ້ມີການເນັ້ນໜັກດ້ານການບໍລິຫານຄຸ້ມຄອງຄວາມຕ້ອງການດ້ານພະລັງງານ. ວິທີການໜຶ່ງອີກແມ່ນມີການຂະຫຍາຍກຸ່ມພະລັງງານ ແລະເພີ້ມການຮ່ວມມືໃນພາກພື້ນ ລວມທັງການອໍານວຍຄວາມສະດວກໃຫ້ແກ່ການຄ້າສາກົນ ແລະ ການລົງທຶນລະຫວ່າງປະເທດ. ການບໍລິຫານຄຸ້ມຄອງການປ່ຽນແປງໄວຂອງຕະຫລາດແມ່ນເປັນສິ່ງທ້າທາຍຫລາຍ; ການຮັກສາລະດັບຂອງຄັງສໍາຮອງດ້ານພະລັງງານແມ່ນທາງເລືອກໜຶ່ງ ແຕ່ມັນມີປະໂຫຍດພຽງແຕ່ຊ່ວງໄລຍະອັນຈໍາກັດເທົ່ານັ້ນ. ຍ້ອນວ່າບັນຫາໃນການແກ້ໄຂຄວາມໝັ້ນຄົງດ້ານພະລັງງານ ແມ່ນມີຫລາຍທາງເລືອກ ຕ້ອງການໃຫ້ມີກອບນະໂຍບາຍເສດຖະກິດມະຫາພາກທີ່ເໝາະສົມທີ່ແນ່ໃສ່ແຜນລະອຽດເພື່ອບັນເທົາຄວາມສ່ຽງໃນການສະໜອງດ້ານພະລັງງານ. ພະລັງງານນິວເຄຼຍເລີ່ມກັບຄືນມາມີບົດບາດ ໂດຍສະເພາະແມ່ນໃນກຸ່ມປະເທດຂອງອົງການຮ່ວມມືທາງເສດຖະກິດແລະການພັດທະນາແລະປະເທດສະມາຊິກທີ່ກໍາລັງພັດທະນາໃຫຍ່ຂອງເອດີບີ.

---

[9] ທະນາຄານໂລກ. 2005. *ບັນຫາຄວາມໝັ້ນຄົງດ້ານພະລັງງານ.* ວໍ່ຊິງຕັນ ດີຊີ.

## ໑. ການປ່ຽນແປງສະພາບດິນຟ້າອາກາດ

15. ດັ່ງທີ່ມີການຮັບຮູ້ກັນໂດຍທົ່ວໄປ ສິ່ງທີ່ນາບຂູ່ຈາກການປ່ຽນແປງສະພາບພູມມິອາກາດ ແມ່ນເປັນຄວາມຈິງ ແລະມີທ່າອ່ຽງທີ່ຈະເພີ້ມຂຶ້ນ. ການເລັ່ງການປ່ອຍອາຍແກັດສ໌ເຮືອນແກ້ວແລະການມີສ່ວນສຳຄັນຂອງມັນໃນການປ່ຽນແປງລະດັບຂອງອຸນະພູມຂອງໂລກແມ່ນອາດຈະສົ່ງຜົນສະທ້ອນໃຫ້ການປ່ຽນແປງອັນສຳຄັນຕໍ່ສະພາບອາກາດ ແລະການປ່ຽນແປງຂອງລະດູການໃນໂລກແລະໃນຂົງເຂດອາຊີ. ການປ່ອຍອາຍແກັດສ໌ເຮືອນແກ້ວສ່ວນໃຫຍ່ແມ່ນຜະລິດຕະພັນຈາກກິດຈະກຳຂອງມະນຸດໂດຍພື້ນຖານແລ້ວແມ່ນການຈູດພະລັງງານແຮ່ທາດ ນອກຈາກນັ້ນກໍ່ແມ່ນການປ່ຽນແປງການນຳໃຊ້ທີ່ດິນ(ໂດຍສະເພາະການທຳລາຍປ່າໄມ້). ຄວາມສົມດຸນ ທີ່ມີຢູ່ເປັນເວລາຫລາຍສັດຕະວັດລະຫວ່າງແຫລ່ງຕ່າງໆຂອງການປ່ອຍອາຍແກັດສ໌ເຮືອນແກ້ວ ແລະອາຍກາກໂບນິກ ເຊິ່ງມີຜົນກະທົບແລະເປັນການລົບກວນຊັ້ນບັນຍາກາດພໍສົມຄວນ ເນື່ອງຈາກການຫັນໄປສູ່ອຸດສາຫະກຳ, ການຂະຫຍາຍຕົວເມືອງແລະການເພີ່ມຂຶ້ນ ຂອງປະຊາກອນຂອງໂລກໃນສັດຕະວັດທີ່ 20 ສີ່ທົບ.[10] ສູດຄິດໄລ່ການປ່ຽນແປງສະພາບອາກາດ ໄດ້ຄາດຄະເນວ່າເຂດໜ້າດິນຂອງຂົງເຂດອາຊີຈະປະສົບກັບອຸນນະພູມເພີ່ມຂຶ້ນປະມານ 3 ອົງສາ ໃນທົດສະວັດຂອງປີ 2050 ແລະ ຈະເພີ່ມຂຶ້ນຮອດ 5% ໃນທົດສະວັດ 2080 ຍ້ອນຜົນຂອງການຄາດຄະເນການປ່ອຍອາຍແກັດສ໌ຜິດເຮືອນແກ້ວ.[11]

16. ຜົນກະທົບຈາກການປ່ຽນແປງໄວຂອງສະພາບພູມມິອາກາດຄາດວ່າໜັກໜ່ວງຢູ່ໃນຂົງເຂດອາຊີ ແລະ ປາຊີຟິກ. ຈາກເຂດເນີນພູເຂົາຫິມມະລາຍາຈົນເຖິງປ່າເຂດຮ້ອນຂອງອາຊີຕາເວັນອອກສຽງໃຕ້ ຫລາຍລະບົບນິເວດວິທະຍາແມ່ນມີຄວາມສ່ຽງຕໍ່ການປ່ຽນແປງສະພາບພູມມິອາກາດ ແລະບາງອັນອາດຈະບໍ່ສາມາດເຮັດໃຫ້ກັບຄືນມາຢູ່ໃນສະພາບເດີມໄດ້. ປະຊາຊົນຜູ້ທຸກຍາກທີ່ຢູ່ກຸ່ມປະຊາກອນທີ່ໃຫຍ່ ຂອງເຂດທະເລຊາຍຊາຮາຣາຂອງອາຟຼິກກາ ແລະອາຊີໃຕ້ ແມ່ນມີຄວາມສ່ຽງທີ່ສຸດຕໍ່ຜົນສະທ້ອນຂອງການປ່ຽນແປງສະພາບດິນຟ້າອາກາດ.[12] ນັກວິທະຍາສາດໄດ້ສັງເກດເຫັນວ່າຮູບແບບຂອງສະພາບອາກາດແມ່ນບໍ່ປົກກະຕິແລະມີຜົນກະທົບໃນບໍ່ດົນມານີ້, ລວມທັງ (i) ມີພະຍຸຝົນເຂດຮ້ອນຫລາຍຂຶ້ນ, (ii) ມີໄພນ້ຳທ້ວມແລະແຫ້ງແລ້ງຖີ່ຂຶ້ນແລະຮ້າຍແຮງຂຶ້ນ, (iii) ການເປື່ອຍຂອງແຜ່ນນ້ຳກ້ອນໄວຂຶ້ນແລະເຮັດໃຫ້ລະດັບນ້ຳທະເລເພີ້ມຂຶ້ນ, (iv) ໄຟໄໝ້ປ່າເພີ້ມຂຶ້ນຫລາຍກວ່າເກົ່າ (v) ມີການຂາດແຄນນ້ຳຈືດ, (vi) ມີຜົນກະທົບຕໍ່ຜົນຜະລິດກະສິກຳແລະສັດນ້ຳ, (vii) ມີເຫດການຂອງພະຍາດຕິດຕໍ່ແລະພະຍາດທີ່ກ່ຽວກັບຄວາມຮ້ອນ ແລະ (viii) ມີຄວາມສ່ຽງຫລາຍຂຶ້ນໃນການສູນເສຍຊີວິດແລະຊັບສິນ. ອຸດສາຫະກຳປະກັນໄພຄາດຄະເນວ່າຈະເຮັດໃຫ້ເສດຖະກິດໂລກສູນເສຍຫລາຍຕື້ໂດລາ ຈາກການປ່ຽນແປງສະພາບພູມມິອາກາດ. ຄະນະກຳມະການລະຫວ່າງລັດຖະບານວ່າດ້ວຍການປ່ຽນແປງສະພາບດິນຟ້າອາກາດ ຕີລາຄາວ່າຖ້າຫາກອາຍກາກໂບນິກ ເພີ້ມຂຶ້ນສອງທົບຈາກລະດັບກ່ອນອຸດສາຫະກຳ, ອຸນະພູມສະເລ່ຍຂອງໂລກ ຄາດວ່າຈະເພີ້ມຂຶ້ນປະມານ 2-4.5 ອົງສາ: ໃນ

---

[10] ໃນປີ 2006, *ການປ່ອຍອາຍກາກບອນຕໍ່ຫົວຄົນ ໃນປະເທດກຳລັງພັດທະນາອາຊີ ແມ່ນ 2.4 ໂຕນ ສົມທຽບໃສ່ອັດຕາສະເລ່ຍຂອງໂລກແມ່ນ 4.3 ໂຕນ.*

[11] ຄະນະກຳມະການລະຫວ່າງປະເທດ ວ່າດ້ວຍການປ່ຽນສະພາບພູມອາກາດ (IPCC). 2007. *IPCC ບົດລາຍງານການປະເມີນຜົນຄັ້ງທີ່ສີ່: ບົດສະຫລຸບ ສຳລັບຜູ້ອອກນະໂຍບາຍຂອງບົດລາຍກຸ່ມເຮັດວຽກທີ່ I—ໂດຍອີງໃສ່ວິທະຍາສາດທາງດ້ານວັດຖຸ.* ລາດສ໌ອາຈັກອັງກິດ: ສີພິມຂອງມະຫາໄລແຄມບຼິດຈ໌.

[12] ສະເຕີນ ນິໂຄຣັດສ໌. 2006. *ການທົບທວນຂອງສ໌ເຕີນ, ເສດຖະສາດຂອງການປ່ຽນແປງສະພາບອາກາດ*, ລອນດອນ: ຫ້ອງການຄັງເງິນຂອງລັດຖະບານລາດສະອານາຈັກອັງກິດ ແລະອານແລນເໜືອ.

ຂະນະທີ່ປະເທດກຳລັງພັດທະນາຄາດວ່າຈະພົບກັບການສູນເສຍເປັນເປີເຊັນທີ່ຫລາຍກວ່າ, ການສູນເສຍໃນໂລກຈະຫລຸດລົງປະມານ 1-5% ຂອງຜະລິດຕະພັນພາຍ (GDP) ສຳລັບອຸນະພູມເພີ່ມຂຶ້ນ 4 ອົງສາ(ໝາຍເຫດ 11). ການປ່ຽນແປງນີ້ ອາດຈະມີການຂັດຂວາງຢ່າງໃຫຍ່ຫຼວງຕໍ່ກັບຄວາມພະຍາຍາມຂອງໂລກແລະພາກພື້ນໃນໄລຍະຍາວທີ່ຈະສ້າງໃຫ້ໂລກມີຄວາມເຂັ້ມແຂງ, ຄວາມຈະເລີນຮຸ່ງເຮືອງແລະຍືນຍົງກວ່າເກົ່າ.

17. ສັງຄົມໂລກໄດ້ຮຽກຮ້ອງໃຫ້ມີມາດຕະການອັນເດັດຂາດ ເພື່ອຫລຸດຜ່ອນ ແລະສ້າງສະເຖຍລະພາບຂອງລະດັບຄວາມຊຸ້ມຂອງອາຍແກັດສ໌ເຮືອນແກ້ວຢູ່ໃນຊັ້ນບັນຍາກາດ. ບາງທາງເລືອກ ທີ່ໄດ້ມີການກຳນົດຄື (i) ໃຊ້ມາດຕະການລະດັບໂລກເພື່ອປ່ຽນແປງວິທີການນຳໃຊ້ພະລັງງານ, (ii) ສົ່ງເສີມການຄົ້ນຄວ້າ ແລະການພັດທະນາ, (iii) ໃຫ້ການສະໜັບສະໜູນທາງການເງິນໃນໄລຍະຂ້າມຜ່ານ ໄປສູ່ພະລັງງານສະອາດ, (iv) ບໍລິຫານຜົນກະທົບຂອງການປ່ຽນແປງສະພາບອາກາດ ແລະ (v) ແກ້ໄຂບັນຫາການຕັດໄມ້ທີ່ຜິດກົດໝາຍ. ສະພາບຂໍ້ຫຍຸ້ງຍາກໃນ ປະຈຸບັນແມ່ນບໍ່ໄດ້ເກີດມາຈາກການພັດທະນາທີ່ບໍ່ດົນມານີ້ ແຕ່ສືບຕໍ່ການນຳໃຊ້ພະລັງງານທີ່ບໍ່ຍືນຍົງໃນ ຫລາຍທົດສະວັດທີ່ຜ່ານມາ. ການຂະຫຍາຍຕົວທາງເສດຖະກິດຢ່າງໄວ ຂອງປະເທດກຳລັງພັດທະນາ ການນຳໃຊ້ພະລັງງານຈະສືບຕໍ່ເພີ້ມຂຶ້ນຢ່າງໄວວາ ຖ້າຫາກວ່າມາດຕະການບັນເທົາບໍ່ໄດ້ຮັບການປະຕິບັດ. ການດຳເນີນການຮ່ວມກັນໃນລະດັບໂລກແມ່ນມີຄວາມຈຳເປັນ.

18. ບາດກ້າວທຳອິດໃນການສ້າງສະເຖຍລະພາບຂອງຄວາມເຂັ້ມຂຸ້ນຂອງທາດອາຍແກັດສ໌ເຮືອນແກ້ວ ໃນຊັ້ນບັນຍາກາດແມ່ນຕ້ອງມີການສົ່ງເສີມໃນການຮັກສາພະລັງງານແລະໃຫ້ມີປະສິດທິພາບ. ແມ່ນມີທາງເລືອກຫລາຍທາງ. ໃນປີ 2006, ນ້ຳມັນເຊື້ອໄຟກວມເອົາປະມານ 39% ຂອງການປ່ອຍທາດອາຍ, ຖ່ານຫີນ ກວມເອົາ 41% ແລະສ່ວນທີ່ເຫລືອ ແມ່ນມາຈາກອາຍແກັດສ໌ທຳມະຊາດ 20% ຂອງການປ່ອຍອາຍກາກບອນໃນໂລກ (ໝາຍເຫດ 4). ໃນເມື່ອການຊົມໃຊ້ນ້ຳມັນເຊື້ອໄຟ ແມ່ນເພື່ອການຂົນສົ່ງ ປະສິດທິພາບໃນການຂົນສົ່ງ ຈຶ່ງເປັນຂົງເຂດບູລິມະສິດຢ່າງຈະແຈ້ງ. ການຜະລິດ ແລະການນຳໃຊ້ຍານພະຫະນະທີ່ມີປະສິດທິພາບ, ການພັດທະນານ້ຳມັນຊີວະພາບທີ່ມີຄວາມຍືນຍົງແລະມີການວາງແຜນຜັງເມືອງທີ່ດີກວ່າ ສາມາດຊ່ວຍຫລຸດຜ່ອນຜົນຜະລິດອາຍແກັດສ໌ເຮືອນແກ້ວຂະຫຍາຍວົງກວ້າງອອກ. ປະສິດທິພາບທີ່ດີຂຶ້ນໃນການສ້າງກະແສໄຟຟ້າຈາກເຕົາຖ່ານຫີນແລະເລືອກໃຊ້ ແຫລ່ງເຊື້ອໄຟທີ່ສະອາດກວ່າ ຈະຊ່ວຍຫລຸດການປ່ອຍອາຍກາກບອນໄດ້ຢ່າງຫລວງຫລາຍ. ທີ່ພັກອາໃສແລະອາຄານພານິດ ກວມເອົາສ່ວນຫລາຍຂອງຄວາມຕ້ອງການໄຟຟ້າໃນປະຈຸບັນ. ດອກໄຟທີ່ມີປະສິດທິພາບ, ອຸປະກອນທຳຄວາມຮ້ອນ ແລະຄວາມເຢັນ ແລະອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ ຈະຍັງຊ່ວຍແກ້ໄຂດ້ານປະສິດທິພາບແລະການຮັກສາພະລັງງານ. ການນຳໃຊ້ພະລັງງານໃນອຸດສາຫະກຳຕ້ອງໄດ້ເຮັດໃຫ້ມີປະສິດທິພາບຫລາຍຂຶ້ນ. ທາງເລືອກອື່ນໆ ໃນການເຮັດໃຫ້ລະດັບອາຍກາກບອນໃຫ້ຢູ່ຄົງທີ່ ລວມເອົາການປັບປຸງລະບົບພະລັງງານໃຫ້ມີປະສິດທິພາບ (ທັງເບື້ອງຝ່າຍສະໜອງແລະຝ່າຍຕ້ອງການ), ນຳໃຊ້ແຫລ່ງພະລັງງານສະອາດ, ພັດທະນາພະລັງງານນິວເຄຼຍແລະຊອກຫາທາງເລືອກໃໝ່ໃນໄລຍະຍາວເຊັ່ນການດູດເອົາແລະເກັບຮັກສາອາຍກາກບອນ.

19. ຫລາຍໆປະເທດ ໄດ້ມີການປະກາດນະໂຍບາຍເພື່ອແກ້ໄຂບັນຫາການປ່ຽນແປງສະພາບດິນຟ້າອາກາດ. ການຈັດຕັ້ງປະຕິບັດບັນດານະໂຍບາຍເຫລົ່ານີ້ ຍັງຈະມີຄວາມທ້າທາຍຫລາຍ ແລະຈະຕ້ອງການຄວາມພະຍາຍາມພ້ອມຄວນຈາກປະເທດພັດທະນາແລ້ວແລະກຳລັງພັດທະນາ. ທຸກໆປະເທດ ຢ່າງທຳອິດຕ້ອງສຸມໃສ່ການຮັກສາພະລັງ

ງານ ແລະປັບປຸງປະສິດທິພາບດ້ານພະລັງງານ. ມີເຕັກໂນໂລຢີຫລາຍຢ່າງສຳລັບການຫລຸດຜ່ອນການປ່ອຍອາຍກາກບອນແລະມີການສືບຕໍ່ຄົ້ນຄ້ວາ. ເຕັກໂນໂລຢີເຫລົ່ານີ້ ຈະຕ້ອງມີການຖ່າຍໂອນໃຫ້ແກ່ປະເທດກຳລັງພັດທະນາ ແລະເຊື່ອມໂຍງເຂົ້າກັບຕະຫລາດສຳລັບສິນເຊື່ອໃນການຫລຸດຜ່ອນການປ່ອຍອາຍກາກບອນ ໂດຍໂຄງການພະລັງງານທີ່ມີປະສິດທິພາບແລະພະລັງງານທົດແທນ. ເສດຖະກິດທີ່ກຳລັງພັດທະນາ, ໃນຄວາມພະຍາຍາມຂອງພວກເຂົາ ທີ່ຈະບັນລຸການເພີ່ມຂຶ້ນຄວາມຕ້ອງການດ້ານພະລັງງານ, ຕ້ອງຫລີກລ່ຽງໃນການຊົມໃຊ້ພະລັງງານທີ່ເກີນຄວນ, ໃຊ້ເປືອງ, ແລະ ການນຳໃຊ້ພະລັງງານທີ່ບໍ່ຍືນຍົງ. ໃນຂະນະທີ່ຄວາມອາດສາມາດເພີ້ມເຕີມໃນການວາງແຜນ ທາງເລືອກຂອງພະລັງງານທີ່ມີປະສິດທິພາບ ຄວນໄດ້ຮັບການພິຈາລະນາຢ່າງຈິ່ງຈັງ. ບັນດາກິດຈະກຳເຫລົ່ານີ້ ແມ່ນຕ້ອງການສະໜັບສະໜູນຂໍ້ຕົກລົງດ້ານນະໂຍບາຍ, ຈັດຕັ້ງປະຕິບັດລະບຽບກົດໝາຍ ແລະສະໜອງທຶນ. ຄວາມຕ້ອງການດ້ານການເງິນທີ່ມີຄວາມສຳຄັນຫລາຍ, ຈະຕ້ອງມາຈາກແຫລ່ງທຶນພາຍໃນ, ການຖ່າຍໂອນຜ່ານການຄ້າສິດໃນການປ່ອຍອາຍເສຍ, ແຫລ່ງທຶນຈາກສະຖາບັນຫລາຍຝ່າຍ, ແລະ ພາກເອກະຊົນ. ໂຄງຮ່າງລະບຽບການທີ່ໂປ່ງໃສ ແລະເໝາະສົມຈະດຶງດູດການລົງທຶນເຂົ້າໃນຂະແໜງພະລັງງານຈາກພາກເອກະຊົນ ທີ່ຈະຊ່ວຍເພີ້ມໃຫ້ແກ່ຄວາມພະຍາຍາມຂອງລັດຖະບານ.

20. ແຕ່ຢ່າງໃດກໍ່ດີ ມາດຕະການບັນເທົາ ບໍ່ສາມາດປ້ອງກັນການປ່ຽນແປງສະພາບດິນຟ້າອາກາດ ທີ່ຈະເກີດຂຶ້ນໃນສັດຕະວັດນີ້ ຍ້ອນວ່າ ຄວາມໜາແໜ້ນຂອງອາຍແກັດສ໌ເຮືອນແກ້ວ ໃນຊັ້ນບັນຍາກາດທຸກມື້ນີ້. ຕ້ອງການໃຫ້ມີການປັບຕົວເພື່ອຫລຸດຜ່ອນຄວາມສ່ຽງຂອງການປ່ຽນແປງສະພາບດິນຟ້າອາກາດ. ຄວາມໜາແໜ້ນຂອງປະຊາກອນສູງແລະລະດັບລາຍໄດ້ຕ່ຳຈະພາໃຫ້ຄວາມສາມາດໃນການປັບຕົວຕ່ຳ ແລະມີຄວາມສ່ຽງສູງ. ປະເທດທີ່ດ້ອຍພັດທະນາແລະກຸ່ມຄົນທີ່ທຸກຍາກຂອງສັງຄົມ ຄ່ອນຂ້າງຈະໄດ້ຮັບຜົນກະທົບຫລາຍທີ່ສຸດຈາກການປ່ຽນແປງສະພາບດິນຟ້າອາກາດ. ມີການດຳເນີນການຕັ້ງແຕ່ຕົ້ນເພື່ອພັດທະນາຂີດຄວາມອາດສາມາດໃນການປັບຕົວ, ເລີ້ມຈາກການໂຄສະນາຂໍ້ມູນຂ່າວສານ, ປະເມີນຄວາມຕ້ອງການໃນການປັບຕົວ, ຈຳແນກຂົງເຂດບູລິມະສິດຂອງການລົງທຶນ, ການປັບໂຕເຂົ້າກັບຂະແໜງການສ່ວນໃຫຍ່, ການຈັດສັນຊັບພະຍາກອນ ແລະສົ່ງເສີມຄວາມສຳພັນໃນພາກພື້ນ.

## ຈ. ການເຂົ້າເຖິງພະລັງງານ

21. ເຂົ້າເຖິງການບໍລິການດ້ານພະລັງງານທີ່ທັນສະໄໝແລະເຊື່ອຖືໄດ້ ແມ່ນມີຄວາມຈຳເປັນຕໍ່ການພັດທະນາຊັບພະຍາກອນມະນຸດທີ່ຍືນຍົງ, ການຂະຫຍາຍຕົວທາງເສດຖະກິດ, ການປັບປຸງຄຸນນະພາບຂອງຊີວິດແລະການບໍລິການທາງດ້ານການສຶກສາແລະສາທາລະນາສຸກທີ່ດີກວ່າເກົ່າ. ເຖິງແມ່ນວ່າ ການເຂົ້າເຖິງພະລັງງານ ບໍ່ໄດ້ຮັບການລະບຸຢູ່ໃນໜຶ່ງຂອງເປົ້າໝາຍສະຫະສະວັດ (MDG) ກໍ່ຕາມ, ການສຶກສາໄດ້ສະແດງໃຫ້ເຫັນວ່າ ເປົ້າໝາຍສະຫະສະວັດ ບໍ່ສາມາດປະສົບຜົນສຳເລັດໄດ້ຖ້າປັດສະຈາກການບໍລິການດ້ານພະລັງງານທີ່ທັນສະໄໝ. [13] ການເຂົ້າເຖິງພະລັງງານແມ່ນມີຄວາມຈຳເປັນໃຫ້ແກ່ການຫລຸດຜ່ອນຄວາມທຸກຍາກ. ຖ້າຂາດການບໍລິການພະລັງງານ, ກຸ່ມຄົນທີ່ທຸກຍາກຢູ່

[13] ໂມດີ, ວີ., ເອດສ໌. ແມດດາດ, ດີ. ລາເລມັງ ແລະ ເຈ. ຊາເກຍ. 2006. *ການບໍລິການດ້ານພະລັງງານສຳລັບເປົ້າໝາຍສະຫະສະວັດ.* ນີວຢອກ: ແຜນການຊ່ວຍເຫລືອຂະແໜງພະລັງງານສຸກເສີນ, ອົງການສະຫະປະຊາຊາດເພື່ອການພັດທະນາ, ໂຄງການສະຫະສະວັດຂອງສະຫະປະຊາຊາດ ແລະທະນາຄານໂລກ.

ໃນເຂດຊົນນະບົດຕ້ອງຫັນໄປເພິ່ງການນຳໃຊ້ແຫລ່ງຊີວະມວນແບບພື້ນຖານເຊັ່ນ: ໄມ້, ຖ່ານໄຟ, ຂີ້ສັດ ແລະວັດສະດຸເສດເຫລືອສຳລັບການປຸງແຕ່ງອາຫານແລະຄວາມອົບອຸ່ນ. ອົງການພະລັງງານສາກົນ ໄດ້ປະເມີນໃນປີ 2004, ປະຊາກອນ 2.5 ຕື້ຄົນ ໃນປະເທດກຳລັງພັດທະນາສືບຕໍ່ເພິ່ງພາ ຊີວະມວນຕາມປະເພນີແລະທຳມະຊາດ ເພື່ອສະໜອງຄວາມຕ້ອງການດ້ານພະລັງງານຂອງເຂົາເຈົ້າຫລາຍກວ່າເຄິ່ງໜຶ່ງຂອງປະຊາກອນ ແມ່ນອາໃສຢູ່ສາທາລະນາລັດປະຊາຊົນຈີນ (700 ລ້ານຄົນ) ແລະປະເທດອິນເດຍ (565 ລ້ານຄົນ). [14] ໄດ້ມີຄວາມພະຍາຍາມທີ່ຈະປັບປຸງ ໃນການເຂົ້າເຖິງພະລັງງານ. ແຕ່ຍ້ອນບັນຫາການເພີ້ມຂຶ້ນຂອງປະຊາກອນ ຈະລົບລ້າງຄວາມພະຍາຍາມເຫລົ່ານີ້, ຈຳນວນປະຊາຊົນ ທີ່ບໍ່ສາມາດເຂົ້າເຖິງພະລັງງານທີ່ມີຮູບແບບທີ່ທັນສະໄໝຈະເພີ້ມຂຶ້ນເຖິງ ປະມານ 2.7 ຕື້ຄົນ, ໃນປີ 2030.

22. ການເຂົ້າເຖິງພະລັງງານທີ່ທັນສະໄໝແລະໄຟຟ້າ ແມ່ນມີຄວາມຈຳເປັນສຳລັບຜົນຜະລິດທາງເສດຖະກິດ ແລະການພັດທະນາສັງຄົມ. ໃນລະດັບຄົວເຮືອນມັນຍັງຊ່ວຍແກ້ໄຂຄວາມບໍ່ເທົ່າທຽມກັນລະຫວ່າງເພດແລະການຫລຸດຜ່ອນມົນລະພິດໃນຄົວເຮືອນ. ມີການນຳໃຊ້ຊີວະມວນຕາມປະເພນີແລະທຳມະຊາດ, ໂດຍສະເພາະໃນຫ້ອງທີ່ບໍ່ມີອາກາດຖ່າຍເທ, ສາມາດພາໃຫ້ເກີດບັນຫາທາງສຸຂະພາບສູງ ເຊັ່ນວ່າ ພະຍາດຫລອດລົມອັກເສບ, ແລະມີຜະລິດຕະພາບຕ່ຳ. ບົດສຶກສາຂອງອົງການອານາໄມໂລກພົບວ່າໃນແຕ່ລະປີມີປະມານ 1.6 ລ້ານຄົນ ເສຍຊີວິດຈາກຜົນກະທົບຂອງມົນລະພິດທາງອາກາດແລະສ່ວນຫລາຍແມ່ນເພດຍິງແລະເດັກນ້ອຍ. [15] ນອກຈາກນີ້ ເວລາແລະພະລັງງານທີ່ໃຊ້ເຂົ້າໃນການສະສົມ, ເກັບມ້ຽນ ແລະນຳໃຊ້ເຊື້ອໄຟຕາມປະເພນີ ເຮັດໃຫ້ສູນເສຍຜະລິດຕະພາບຂອງມະນຸດແທນທີ່ຈະໄປໝູນໃຊ້ເຂົ້າໃນກິດຈະກຳທີ່ມີຜົນຕອບແທນທາງເສດຖະກິດຫລືໝູນໃຊ້ສະຕິປັນຍາ ເຂົ້າໃນວຽກງານທີ່ສຳຄັນກວ່າ. ປະຊາຊົນຜູ້ທຸກຍາກຢູ່ຊົນນະບົດໂດຍທົ່ວໄປແລ້ວເລີກຈາກການນຳໃຊ້ຊີວະມວນຕາມປະເພນີແບບທຳມະຊາດແລ້ວແລະກໍ່ຫັນມາໃຊ້ຖ່ານຫີນ ແລະນ້ຳມັນກາດແທນ ແຕ່ວ່າການໃຊ້ເຊື້ອໄຟນີ້ ມັນບໍ່ມີທັງຄວາມຍືນຍົງ ຫລືປອດໄພ. ແຫລ່ງເຊື້ອໄຟທີ່ທັນສະໄໝແມ່ນແກັດສ໌ນ້ຳມັນເຫລວ (LPG), ອາຍແກັດສ໌ທຳມະຊາດແລະໄຟຟ້າ ແມ່ນທາງເລືອກທີ່ດີກວ່າ. ແກັດສ໌ນ້ຳມັນເຫລວ (LPG) ແມ່ນທາງເລືອກທີ່ນິຍົມກັນ ແຕ່ເນື່ອງຈາກວ່າລະບົບແຈກຈ່າຍບໍ່ພຽງພໍ ແລະມີຕົ້ນທຶນສູງກີດກັ້ນໃຫ້ມີການນຳໃຊ້ຢ່າງກວ້າງຂວາງ ໂດຍສະເພາະແມ່ນຢູ່ເຂດຫ່າງໄກສອກຫລີກ. ເຕົາໄຟແຕ່ງກິນທີ່ທັນສະໄໝ ສາມາດນຳມາໃຊ້ຢ່າງມີປະສິດທິພາບກັບແຫ່ລງພະລັງງານຊີວະມວນຕ່າງໆ, ເຮັດໃຫ້ເຕົາໄຟນີ້ ເປັນທາງອອກສຳລັບຄົນຢູ່ຊົນນະບົດ, ທາງເລືອກອື່ນໆທີ່ນິຍົມກັນ ແມ່ນໄຟຟ້າ ເຊິ່ງແມ່ນພະລັງງານທີ່ຂາດບໍ່ໄດ້ສຳລັບດອອກໄຟ, ຕູ້ເຢັນແລະເຄື່ອງໃຊ້ໄຟຟ້າໃນຄົວເຮືອນ. ຕາຕະລາງ ກ 1.3 ໄດ້ສະແດງໃຫ້ເຫັນການເຂົ້າເຖິງໄຟຟ້າຂອງບັນດາເສດຖະກິດຢູ່ໃນຂົງເຂດອາຊີ.[16]

---

[14] ອົງການພະລັງງານສາກົນ. 2006. *ການຄາດຄະເນຄວາມຕ້ອງການດ້ານພະລັງງານ 2006*. ປາຣີ.

[15] ອົງການອານາໄມໂລກ. 2006. ນ້ຳມັນເຊື້ອໄຟສຳລັບຊີວິດ*: ພະລັງງານຄົວເຮືອນ ແລະສຸຂະພາບ.* ເຈັນນີວາ.

[16] ສຳລັບປະເທດສະມາຊິກທີ່ກຳລັງພັດທະນາຢູ່ໃນປາຊີຟິກ, ອັດຕາການໃຊ້ໄຟຟ້າ ຄາດວ່າຈະມີຢູ່ປະມານ 50%–60% ແລະແຕກຕ່າງກັນໄປໃນແຕ່ລະປະເທດ (ເຊັ່ນ: ປະເທດຊາມົວ ແມ່ນ 95%, ປະເທດຟີຈີ 60%, ແລະປະເທດປາປົວນິວກີນີ ແມ່ນ 10%). ໃນເສດຖະກິດອາຊີກາງ, ອັດຕາການໃຊ້ໄຟຟ້າ ຄາດວ່າຈະຫລາຍກວ່າ 95%.

**ຕາຕະລາງ ກ1.3: ການເຂົ້າເຖິງໄຟຟ້າໃນຂົງເຂດອາຊີ ໃນປີ 2005**

| ປະເທດສະມາຊິກ | ການເຂົ້າເຖິງໄຟຟ້າ (%) | ປະຊາກອນທີ່ບໍ່ສາມາດເຂົ້າເຖິງໄຟຟ້າ (ລ້ານ) | ປະຊາຊົນທີ່ມີໄຟຟ້າໃຊ້ (ລ້ານ) |
|---|---|---|---|
| ອັບການິສຖານ | 7.0 | 27.0 | 2.0 |
| ບັງກລາເດດສ໌ | 32.0 | 96.2 | 45.3 |
| ບູຖານ | 36.0 | 0.5 | 0.3 |
| ບຣູນາຍ ດາລູຊາແລມ | 99.2 | 0.0 | 0.4 |
| ກຳປູເຈຍ | 20.1 | 10.9 | 2.7 |
| ສາທາລະນາລັດປະຊາຊົນຈີນ | 99.4 | 8.5 | 1,302.1 |
| ອິນເດຍ | 55.5 | 487.2 | 607.6 |
| ອິນໂດເນເຊຍ | 54.0 | 101.2 | 111.8 |
| ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ | 45.0 | 3.1 | 2.6 |
| ມາເລເຊຍ | 97.8 | 0.6 | 24.7 |
| ມາວດີບວ໌ | 100.0 | 0.0 | 0.3 |
| ມົງໂກນ | 64.1 | 1.0 | 1.8 |
| ມຽນມ້າ | 11.3 | 45.1 | 5.7 |
| ເນປານ | 33.0 | 18.1 | 8.9 |
| ປະກິດສ໌ຖານ | 54.0 | 71.1 | 83.5 |
| ຟີລິບປິນ | 80.5 | 16.2 | 66.8 |
| ສິງກະໂປ | 100.0 | 0.0 | 4.3 |
| ສີລັງກາ | 75.0 | 5.0 | 14.7 |
| ໄຕ້ຫວັນ, ຈີນ | 99.2 | 0.2 | 22.9 |
| ໄທ | 99.0 | 0.6 | 64.1 |
| ຫວຽດນາມ | 84.2 | 13.2 | 70.3 |
| **ລວມ** | **73.0** | **905.7** | **2,442.8** |

ຂໍ້ສັງເກດ: ສະຖິຕິສຳລັບ ບູຖານ, ລາວ ແລະ ມາວດີບວ໌ ແມ່ນອີງໃສ່ການປະເມີນຂອງພະນັກງານເອດີບີ.
ແຫລ່ງຂໍ້ມູນ: ອົງການພະລັງງານສາກົນ. *ການຄາດຄະເນພະລັງງານຂອງໂລງ 2006*. ປາລີ.

23. ຫລາຍໆປະເທດສະມາຊິກທີ່ກຳລັງພັດທະນາໄດ້ມີການເປີດກວ້າງ ແຜນການໃຫ້ການບໍລິການດ້ານພະລັງງານທີທັນສະໄໝ ແລະຍືນຍົງໃຫ້ແກ່ໝົດທຸກຄົນ ລວມທັງໄຟຟ້າ. ປະເທດບັງກຼາເດດສ໌, ສາທາລະນາລັດປະຊາຊົນຈີນ, ອິນເດຍ, ຟີລິບປິນ ແລະປະເທດສີລັງກາແມ່ນບັນດາປະເທດສະມາຊິກທີ່ກຳລັງພັດທະນາ ທີ່ໄດ້ເລັ່ງອັດຕາ ຂອງ

ການເຊື່ອມຕໍ່ໃໝ່.[17] ມີທາງເລືອກດ້ານວິສະວະກຳຫລາຍຢ່າງເຊັ່ນ ການຂະຫຍາຍຕາໜ່າງໄຟຟ້າແລະຕາໜ່າງຂະໜາດນ້ອຍແລະລະບົບເຄືອຄ່າຍທີ່ອີງໃສ່ແຫລ່ງພະລັງງານທົດແທນ. ການເຊື່ອມໄຟຟ້າທີ່ບໍ່ຄຳນຶງເຖິງຄຸນນະພາບຂອງການສະໜອງໂດຍສະເພາະໃນຊ່ວງເວລາມີການຊົມໃຊ້ສູງສຸດ ຈະບໍ່ສາມາດຕອບສະໜອງຜົນປະໂຫຍດຕາມຄວາມຕັ້ງໃຈ. ສະນັ້ນ ການລິເລີ່ມນີ້ ຄວນໄດ້ຮັບການຈັດຕັ້ງປະຕິບັດຢ່າງກ້ວາງຂວາງ ເພື່ອຮັບປະກັນວ່າປະຊາຊົນໃນເປົ້າໝາຍໄດ້ຮັບຜົນປະໂຫຍດຈາກແຜນການດັ່ງກ່າວ. ກອງປະຊຸມໂລກວ່າດ້ວຍການພັດທະນາແບບຍືນຍົງໃນແຜນຈັດຕັ້ງປະຕິບັດຂໍ້ຕົກລົງ ໂຈຮານເນດສ໌ເບີກ ໄດ້ຮຽກຮ້ອງສະມາຄົມໂລກ "ໃຫ້ມີການຈັດຕັ້ງປະຕິບັດຮ່ວມກັນ ແລະ ປັບປຸງຄວາມພະຍາຍາມໃນການເຮັດວຽກຮ່ວມກັນໃນທຸກລະດັບເພື່ອຍົກລະດັບການເຂົ້າເຖິງການບໍລິການພະລັງງານທີ່ເຊື່ອຖືໄດ້ແລະຊື້ໄດ້" ສຳລັບການພັດທະນາແບບຍືນຍົງທີ່ພຽງພໍເພື່ອເອື້ອອຳນວຍຄວາມສະດວກໃຫ້ແກ່ເປົ້າໝາຍຂອງສະຫັດສະວັດ."[18] ສະຖາບັນຫລາຍຝ່າຍ, ອົງການຈັດຕັ້ງລະຫວ່າງປະເທດ, ສະຖາບັນການເງິນ (ໂດຍສະເພາະແມ່ນເຮັດວຽກກ່ຽວກັບການເງິນຈຸລະພາກ), ແລະພາກເອກະຊົນຈະໃຫ້ການສະໜັບສະໜູນຕໍ່ຄວາມພະຍາຍາມຂອງລັດຖະບານໃນຂົງເຂດນີ້.

## ຈ. ການຄາດຄະເນການລົງທຶນ

24. ອົງການພະລັງງານສາກົນ (ໝາຍເຫດ 4) ປະເມີນວ່າ ຕະຫລາດພະລັງງານໂລກ ຈະເພີ້ມຂື້ນປະມານ 45% ໃນປີ 2030 (ເພີ້ມຂື້ນ 1.6% ຕໍ່ປີ). ນີ້ໝາຍວ່າ ຕ້ອງການການລົງທຶນທັງໝົດຫລາຍກວ່າ $26.3 ໂກດ (ອັດຕາເງິນໂດລາປີ 2007) ສຳລັບການສ້າງພື້ນຖານໂຄງລ່າງດ້ານການສະໜອງພະລັງງານແຕ່ປີ 2007-2030. ໃນຈຳນວນເງິນດັ່ງກ່າວ, ຂະແໜງພະລັງງານໄຟຟ້າຈະກວມເອົາປະມານ $13.6 ໂກດ (52%), ຂະແໜງນ້ຳມັນເຊື້ອໄຟ $6.3 ໂກດ, ຂະແໜງອາຍແກັດສ໌ $5.5 ໂກດ, ແລະຂະແໜງຖ່ານຫີນກວມເອົາ $728 ຕື້. ເນື່ອງຈາກການເພີ້ມຂື້ນໄວຂອງຄວາມຕ້ອງການດ້ານພະລັງງານ, ປະເທດທີ່ບໍ່ແມ່ນສະມາຊິກຂອງອົງການຮ່ວມມືທາງເສດຖະກິດແລະການພັດທະນາຈະຮັບເອົາຫລາຍກວ່າ 65% ຂອງການລົງທຶນທົ່ວໂລກຕາມຄວາມຄາດໝາຍ. ສາທາລະນະລັດປະຊາຊົນຈີນປະເທດດຽວຈະຕ້ອງການລົງທຶນ $4.2 ໂກດ ເພື່ອຕອບສະໜອງຕາມຄວາມຕ້ອງການດ້ານພະລັງງານຂອງປະເທດ. ອົງການພະລັງງານສາກົນໄດ້ປະເມີນວ່າ, ໃນຂະນະທີ່ແຫລ່ງພະລັງງານຂອງໂລກ ແມ່ນພຽງພໍຕາມການຄາດຄະເນຄວາມຕ້ອງການ, ການລະດົມແຫລ່ງທຶນຈະເປັນສິ່ງທ້າທາຍຫລາຍ.

25. ຢູ່ໃນລະດັບໂລກ, ສຳລັບແຫລ່ງທຶນ ແມ່ນພຽງພໍໃນການສະໜອງທຶນໃຫ້ແກ່ການລົງທຶນເຂົ້າໃນຂະແໜງພະລັງງານຕາມທີ່ໄດ້ຄາດຄະເນໄວ້. ຄວາມຕ້ອງການໃນການລົງທຶນເຂົ້າໃນຂະແໜງພະລັງງານ ແມ່ນປະເມີນຢູ່ທີ່ 1% ຂອງຜະລິດຕະພັນພາຍໃນຂອງໂລກ, ໃນຂະນະທີ່ເງິນສະສົມພາຍໃນແມ່ນມີປະມານ 23% ຂອງຜະລິດຕະພັນພາຍໃນຂອງໂລກ.[19] ແຕ່ຢ່າງໃດກໍ່ດີ ອັດຕາສ່ວນແມ່ນແຕກຕ່າງກັນໄປໃນແຕ່ລະພາກພື້ນ. ສາທາລະນາລັດ ປະຊາຊົນຈີນທີ່ມີເງິນສະສົມພາຍໃນປະມານ 40% ຂອງຜະລິດຕະພັນພາຍໃນ ຈະຕ້ອງການລົງທຶນສະເລ່ຍຕໍ່ປີ ປະມານ 2.4%

---

[17] ທະນາຄານໂລກ. 2006. *ກອບການລົງທຶນເຂົ້າໃນພະລັງງານສະອາດ ແລະ ການພັດທະນາ*: ບົດລາຍງານຄວາມຄືບໜ້າ, ວໍຊິງຕັນ ດີຊີ.

[18] ສະຫະປະຊາຊາດ. 2002. *ແຜນການຈັດຕັ້ງປະຕິບັດກອງປະຊຸມໂລກວ່າດ້ວຍການພັດທະນາແບບຍືນຍົງ*, ໂຈຮານເນດສເບີກ. (4 ກັນຍາ).

[19] ອົງການພະລັງງານສາກົນ. 2003. *ການຄາດຄະເນການລົງທຶນເຂົ້າໃນພະລັງງານຂອງໂລກ*. ປາຣີ.

ຂອງຜະລິດຕະພັນພາຍໃນ; ປະເທດອິນເດຍທີ່ມີເງິນສະສົມພາຍໃນ 20%, ຈະຕ້ອງການການລົງທຶນສະເລ່ຍຕໍ່ປີ ປະມານ 2.2% ຂອງຜະລິດຕະພັນພາຍໃນ. ເຖິງແມ່ນວ່າເງິນສະສົມພາຍໃນຈະຫລາຍກວ່າການຄາດຄະເນການລົງທຶນເຂົ້າໃນຂະແໜງພະລັງງານກໍ່ຕາມ ຂະແໜງພະລັງງານກໍ່ຕ້ອງແຂ່ງກັບຂະແໜງບູລິມະສິດອື່ນໆສຳລັບແຫລ່ງເງິນທຶນ ໂດຍສະເພາະໃນຫລາຍໆປະເທດທີ່ກຳລັງພັດທະນາ ທີ່ມີການລົງທຶນພາຍໃນເກີນກວ່າເງິນສະສົມພາຍໃນຖ້າທຽບໃສ່ເປັນເປີເຊັນຂອງຜະລິດຕະພັນພາຍໃນ.

26. ການລົງທຶນຈາກຕ່າງປະເທດ ຈະຕ້ອງຕອບສະໜອງການຂາດດຸນລະຫວ່າງ ຄວາມຕ້ອງການໃນການລົງທຶນ ແລະການສະສົມເງິນພາຍໃນທີ່ຈັດສັນໃຫ້ແກ່ຂະແໜງພະລັງງານ. ໜີ້ສິນຕ່າງປະເທດ ອາດຈະເປັນເງື່ອນໄຂທີ່ດີກວ່າ ແຕ່ວ່າມີການເອື່ອຍອີງໃສ່ເງິນທຶນຈາກຕ່າງປະເທດຫລາຍເກີນໄປ ສາມາດເຮັດໃຫ້ມີຜົນກະທົບອື່ນໆຕໍ່ເສດຖະກິດມະຫາພາກຂອງປະເທດ. ປະເທດທີ່ມີໜີ້ສູງ ຈະມີຄວາມຫຍຸ້ງຍາກໃນການຫາແຫລ່ງທຶນເພີ້ມເຕີມເພື່ອການລົງທຶນ. ນອກຈາກນັ້ນຂະແໜງທະນາຄານ ແລະ ຕະຫລາດການເງິນຂອງປະເທດເຈົ້າພາບ ມີອິດທິພົນຕໍ່ການລົງທຶນຈາກຕ່າງປະເທດ; ມີການພັດທະນາທີ່ດີກວ່າ, ໂປ່ງໃສ, ແລະໂດຍທົ່ວໄປແລ້ວຕະຫລາດການເງິນທີ່ມີການຄຸ້ມຄອງ ດຶງດູດການລົງທຶນຫລາຍກວ່າ. ອີງການສະໜອງທຶນຫລາຍຝ່າຍ ແລະ ສອງຝ່າຍ ຈະຕ້ອງມີການພັດທະນາກົງຈັກການສະໜອງເງິນວິທີການໃໝ່ ເພື່ອຊ່ວຍຕອບສະໜອງຊ່ອງວ່າງດ້ານການເງິນ. ກອງທຶນກາກບອນ ແລະ ພະລັງງານສະອາດ ມີບາງທາງເລືອກທີ່ຄວນໄດ້ມີການດຳເນີນງານ ໂດຍສະເພາະແມ່ນການໃຫ້ການສະໜັບສະໜູນການພັດທະນາພະລັງງານສະອາດ. ກອງທຶນເພື່ອສິ່ງແວດລ້ອມຂອງໂລກ ແລະບັນດາກອງທຶນໃໝ່ໆໃຫ້ການສະໜັບສະໜູນການລິເລີ້ມດ້ານສິ່ງແວດລ້ອມແລະພະລັງງານສະອາດ; ການລິເລີ້ມເຫລົ່ານີ້ ຕ້ອງການໃຫ້ມີການເພີ້ມການຊ່ວຍເຫລືອຫລ້າຈາກປະເທດທີ່ພັດທະນາແລ້ວ. ຂັ້ນຕອນຕ່າງໆຄວນໄດ້ຮັບການປັບປຸງໃຫ້ສັ້ນເຂົ້າເພື່ອເຮັດໃຫ້ການເຂົ້າເຖິງແຫລ່ງທຶນໄວຂຶ້ນ.

## ສ. ປະສົບການຂອງເອດີບີ

### 1. ການດຳເນີນງານຂອງເອດີບີໃນຂະແໜງພະລັງງານ

27. ການດຳາເນີນງານຂອງເອດີບີໃນຂະແໜງພະລັງງານແມ່ນເລີ້ມຂຶ້ນໃນປີ 1969 ແລະໂດຍທົ່ວໄປແລ້ວສະທ້ອນໃຫ້ເຫັນເຖິງການພັດທະນາ ແລະ ຄວາມຕ້ອງການດ້ານຂະແໜງພະລັງງານ ຂອງບັນດາປະເທດສະມາຊິກທີ່ກຳລັງພັດດທະນາ. ການໃຫ້ທຶນແມ່ນຂຶ້ນເຖິງຈຸດສູງສຸດໃນຕົ້ນທົດສະວັດທີ່ເກົ້າສິບ ແລະຫລັງຈາກນັ້ນກໍ່ຫລຸດລົງໃນຫລາຍປີຕໍ່ມາ (ຕາຕະລາງ ກ 1.4).[20] ການໃຫ້ການຊ່ວຍເຫລືອທາງວິຊາການແມ່ນສືບຕໍ່ເພີ້ມຂຶ້ນຢ່າງ ຕໍ່ເນື່ອງໃນຊ່ວງ 15 ປີ ທີ່ຜ່ານມາ. ເລີ້ມແຕ່ປີ 1998, ຈຸດສຸມແມ່ນໄດ້ຮັບການຈັດລຽງຄືນໃໝ່ ເພື່ອແກ້ໄຂການ ປັບປຸງຂະແໜງພະລັງງານແລະປັບປຸງໂຄງສ້າງ ແລະເພື່ອໃຫ້ການສະໜັບສະໜູນເພີ້ມເຕີມເພື່ອເພີ້ມພູນໃຫ້ແກ່ລະບົບສາຍສົ່ງ. ປັດໃຈໜຶ່ງທີ່ປະກອບສ່ວນໃຫ້ແກ່ການປ່ຽນແປງນີ້ ແມ່ນສະພາບການເງິນທີ່ເຊື່ອມໂຊມຂອງໂຮງງານພະລັງງານ, ເຊິ່ງສ່ວນໃຫຍ່ແມ່ນການຮ່ວມເຂົ້າກັນຕາມສາຍຕັ້ງທີ່ລັດຖະບານມີສອງບົດບາດຄືເປັນທັງຜູ້ອອກນະໂຍບາຍ ແລະ ເປັນຜູ້ຈັດ

[20] ລວມທັງໝົດ $1,658 ລ້ານ ໄດ້ຖືກຮັບຮອງໃນປີ 1993, ເປັນຈຳນວນການກູ້ຢືມຂອງພາກລັດທີ່ສູງທີ່ສຸດ ສຳລັບຂະແໜງພະລັງງານ.

ຕັ້ງປະຕິບັດຜູກຂາດແຕ່ພຽງຜູ້ດຽວ. ນອກຈາກນັ້ນ, ຍ້ອນການຖົດຖອຍຂອງເສດຖະກິດ, ຄວາມຕ້ອງການຂອງກຳລັງການຜະລິດໄດ້ຫລຸດລົງ. ໃນຂະນະທີ່ບັນດາປະເທດທີ່ກຳລັງພັດທະນາ ສາມາດເພີ້ມກຳລັງການຜະລິດໃໝ່ຫລາຍຂື້ນຈາກພາກລັດແລະເອກະຊົນ ແລະໃນນີ້ກໍ່ໄດ້ໃຫ້ໂອກາດແກ່ ເອດີບີ ທີ່ຈະເພີ້ມການຊ່ວຍເຫລືອຂອງຕົນໃນ (i) ການປະຕິຮູບຂະແໜງການ, (ii) ການປັບປຸງໂຄງສ້າງ, (iii) ກົນໄກການກຳນົດລະບຽບທີ່ເປັນເອກະລາດ ທີ່ມີອຳນາດໃນການອອກໃບອະນຸຍາດ ແລະ ການຮັກສາອັດຕາຄາບໍລິການຄົງທີ່, (iv) ການເຮັດໃຫ້ເປັນການຄ້າ, (v) ການສ້າງຕະຫລາດພະລັງງານສຳລັບພາກເອກະຊົນແລະປັບປຸງລະບົບ, ແລະ (vi) ການຫລຸດຄວາມສູນເສຍ, ການປະຕິຮູບທີ່ກ່ຽວກັບການດຳເນີນງານ ຕ້ອງການໃຫ້ມີການວິເຄາະສະພາບການປະຈຸບັນຢ່າງລະອຽດ ແລະໃຫ້ມີການປຶກສາຫາລືກັບພາກສ່ວນກ່ຽວຂ້ອງຢ່າງກວ້າງຂວາງ ໄປພ້ອມກັນກັບການສຶກສາເພື່ອໃຫ້ຄຳແນະນຳແກ່ ເອດີບີ ແລະປະເທດສະມາຊິກທີ່ກຳລັດທະນາ ກ່ຽວກັບທາງເລືອກທີ່ດີກວ່າສຳລັບການພັດທະນາຂະແໜງພະລັງງານ. ການປະຕິຮູບຂະແໜງພະລັງງານ ເຮັດໃຫ້ຄວາມສົນໃຈຂອງພາກເອກະຊົນເພີ່ມຂຶ້ນ ແລະກົມບໍລິການພາກເອກະຊົນຂອງ ເອດີບີ ປະສົບຜົນສຳເລັດໃນການໃຫ້ການສະໜັບສະໜູນຫລາຍໂຄງການພະລັງງານໄຟຟ້າ.

**ຕາຕະລາງ ກ1.4: ເອດີບີ ປ່ອຍເງິນກູ້ໃຫ້ຂະແໜງການພະລັງງານ, 1990–2006**

(ລ້ານ $)

| ພາກສ່ວນ | 1990–1995 | 1996–2000 | 2001–2006 |
|---|---|---|---|
| **ພາກລັດ** | **8,484** | **4,084** | **4,249** |
| ການຜະລິດ | 2,279 | 152 | 73 |
| ການພັດທະນາຂະແໜງການ | 2,450 | 1,496 | 2,134 |
| ພະລັງງານນ້ຳ | 896 | 512 | 48 |
| ພະລັງງານທົດແທນ | 100 | 158 | 161 |
| ສາຍສົ່ງແລະແຈກຢາຍ | 2,758 | 1,766 | 1,833 |
| **ພາກເອກະຊົນ** | **179** | **123** | **809** |

ແຫລ່ງຂໍ້ມູນ: ຖານຂໍ້ມູນຂອງທະນາຄານພັດທະນາອາຊີ.

28. ການເຂົ້າມາມີສ່ວນຮ່ວມໃນຂະແໜງນ້ຳມັນເຊື້ອໄຟແລະອາຍແກັດສ໌ຂອງເອດີບີ ແມ່ນເລີ້ມແຕ່ຕົ້ນທົດສະວັດ 1990 ເຊິ່ງໄດ້ໃຫ້ການສະໜັບສະໜູນສ່ວນຫລາຍໃຫ້ແກ່ການດຳເນີນງານຂອງພາກລັດ. ສະນັ້ນ ການດຳເນີນງານແມ່ນເປັນບາງຊ່ວງທີ່ມີຂໍ້ຈຳກັດເຂົ້າໃນການແຊກແຊງເນື່ອງຈາກວ່າການສຸມໃສ່ຂະແໜງພະລັງງານ ແລະການຫັນໄປສູ່ການດຳເນີນງານແບບເສດຖະກິດຕະຫລາດ. ແຕ່ຢ່າງໃດກໍ່ຕາມຕັ້ງແຕ່ປີ 2002 ເອດີບີ ໄດ້ເພີ້ມການດຳເນີນງານຂອງຕົນເຂົ້າໃນພາກເອກະຊົນໂດຍສະເພາະແມ່ນໃນຂະແໜງການອາຍແກັດສ໌ທຳມະຊາດ ໂດຍການໃຫ້ເງິນສະໜັບສະໜູນໃນການສ້າງທໍ່ສົ່ງ, ສາງເກັບມ້ຽນແລະລະບົບການແຈກຢາຍ. ແຕ່ວ່າສ່ວນແບ່ງຂອງຂະແໜງນ້ຳມັນເຊື້ອໄຟແລະອາຍແກັດສ໌ ຢູ່ໃນການດຳເນີນງານຂອງເອດີບີ ແມ່ນຍັງຢູ່ໃນລະດັບຕ່ຳ (ຕາຕະລາງ ກ1.5). ໃນໄລຍະບໍ່ດົນມານີ້ ຄວາມສົນໃຈຂອງຂະແໜງການນີ້ ແມ່ນເພີ້ມຂຶ້ນຢູ່ໃນບາງປະເທດສະມາຊິກທີ່ກຳລັງພັດທະນາ ຍ້ອນວ່າການເພີ້ມຂຶ້ນ

ຂອງລາຄາພະລັງງານໃນຕະຫລາດສາກົນແລະການຊອກຫາແຫລ່ງພະລັງງານທ້ອງຖິ່ນ. ການແຊກແຊງຂອງເອດີບີເຂົ້າໃນຂະແໜງພະລັງງານ ແມ່ນຄາດວ່າຈະເພີ້ມຂຶ້ນໂດຍສະເພາະແມ່ນຂະແໜງອາຍແກັດສ໌ທຳມະຊາດ.

**ຕາຕະລາງ 1.5: ການປ່ອຍເງິນກູ້ໃຫ້ຂະແໜງການນ້ຳມັນເຊື້ອໄຟ ແລະອາຍແກັດສ໌, 1990–2006**

(ລ້ານ $)

| ຂະແໜງ | 1990–1995 | 1996–2000 | 2001–2006 |
|---|---|---|---|
| **ພາກລັດ** | **1,617** | **150** | **78** |
| ທໍ່ສົ່ງອາຍແກັດສ໌ | 1,617 | 50 | 5 |
| ຂົນສົ່ງ | — | — | 73 |
| | | | |
| **ພາກເອກະຊົນ** | **862** | | |
| ທໍ່ສົ່ງອາຍແກັດສ໌ | — | — | 352 |
| ອາຍແກັດສ໌ທຳມະຊາດທີ່ເປັນຂອງເຫລວ | — | — | 510 |

— = ບໍ່ມີ.

ແຫລ່ງຂໍ້ມູນ: ຖານຂໍ້ມູນຂອງທະນາຄານພັດທະນາອາຊີ..

## 2. ການປະເມີນການດຳເນີນງານຂອງເອດີບີໃນຂະແໜງພະລັງງານ

29. ໃນການປະເມີນນະໂຍບາຍພະລັງງານຂອງຕົນ ກົມປະເມີນຜົນເອກະລາດຂອງເອດີບີ ໄດ້ສັງເກດເຫັນວ່າເອດີບີໄດ້ໄປຕາມເສັ້ນທາງທີ່ປ່ຽນແປງໄວໃນການພັດທະນານະໂຍບາຍພະລັງງານ ແລະການດຳເນີນງານຂອງຕົນຮັກສາບາດກ້າວໄປຄຽງຄູ່ກັບການພັດທະນາ ແລະຄວາມຕ້ອງການຂອງຂະແໜງພະລັງງານໃນສະພາບການປ່ຽນແປງສະພາບສິ່ງແວດລ້ອມທາງດ້ານເສດຖະກິດ ແລະການເມືອງ.[21] ນອກຈາກນັ້ນ, ໂຄງການພະລັງງານ ຂອງເອດີບີ ໄດ້ຊ່ວຍແກ້ໄຂຄວາມທຸກຍາກໄປໃນທາງອ້ອມ ໂດຍການເພີ້ມໂອກາດທາງເສດຖະກິດ ແລະສິ່ງອຳນວຍຄວາມສະດວກທີ່ດີກວ່າເກົ່າ. ຈຸດສຸມຂອງເອດີບີ ແມ່ນການຄຸ້ມຄອງ, ການປະຕິຮູບຂະແໜງການ, ການຮ່ວມມືລະດັບພາກພື້ນ, ການມີສ່ວນຮ່ວມຂອງພາກເອກະຊົນ, ການຫັນໄປສູ່ລັດວິສາຫະກິດ ແລະ ການປັບປຸງລະບົບ ໄດ້ຮັບການຕີລາຄາປະເມີນຜົນວ່າຍັງມີຄວາມສຳຄັນຢູ່. ການອອກແບບໂຄງການ ແລະການຊ່ວຍເຫລືອດ້ານວິຊາການ ຂອງເອດີບີ ແມ່ນເໝາະສົມ. ການອອກແບບໂຄງການ ແລະການຊ່ວຍເຫລືອທາງວິຊາການຂອງເອດີບີ ແມ່ນເໝາະສົມ. ໂຄງການທີ່ໄດ້ຮັບການປະເມີນຜົນ ໂດຍກົມປະເມີນຜົນເອກະລາດ ເຫັນວ່າ 98% ແມ່ນຖືກຈັດລະດັບ ມີຄວາມພໍໃຈບາງສ່ວນ ຫລືພໍໃຈໝົດ. ໃນການອອກແບບໂຄງການ ກໍ່ໄດ້ນຳເອົາການບໍລິຫານໂຄງການແລະຄວາມຊຳນິຊຳນານຂອງໜ່ວຍງານຈັດຕັ້ງປະຕິບັດເຂົ້າໃນການພິຈາລະນາ. ວິທີການປຶກສາຫາລື, ການວິເຄາະເສັ້ນຖານຂອງການສຶກສາ, ການສົນທະນາ

[21] ເອດີບີ. 2007. ການທົບທວນນະໂຍບາຍພະລັງງານ 2000*: ປະສິດທິພາບດ້ານພະລັງງານ ເພື່ອອານາຄົດທີ່ດີກວ່າ, ມານີລາ.*

ລະດັບນະໂຍບາຍລະອຽດ, ການສ້າງຕັ້ງແຜນທີ່ຈະແຈ້ງ ແລະການໃຫ້ການຊ່ວຍເຫລືອທີ່ອີງຕາມງວດແມ່ນໝາກຜົນຈາກການຈັດຕັ້ງປະຕິບັດທີ່ມີປະສິດທິຜົນ ແລະການປັບປຸງຂະແໜງການໂດຍລວມ.

30. ກ່າວໂດຍລວມ ການທົບທວນຄືນນະໂຍບາຍພະລັງງານຂອງປີ 2000 ແມ່ນຈັດໃຫ້ວ່າເປັນຜົນສຳເລັດ ໂດຍອີງໃສ່ການປະເມີນຜົນຂອງກົມປະເມີນຜົນເອກະລາດທີ່ຖືວ່ານະໂຍບາຍດັ່ງກ່າວຍັງມີຄວາມເໝາະສົມ (ກວມເອົາຊີງເຂດທີ່ຍັງມີຄວາມເໝາະສົມ), ມີປະສິດທິຜົນ, ແລະຄອນຂ້າງຈະມີຄວມຍືນຍົງສູງ. ການສຶກສາ ໄດ້ສະຫລຸບວ່າ ນະໂຍບາຍພະລັງງານ ແມ່ນມີຄວາມເໝາະສົມ ແລະຕອບສະໜອງຕໍ່ການປ່ຽນແປງຄວາມຕ້ອງການຂະແໜງການພະລັງງານຂອງບັນດາປະເທດສະມາຊິກທີ່ກຳລັງພັດທະນາເກືອບທັງໝົດ. ແຕ່ຢ່າງໃດກໍ່ຕາມ ກົມປະເມີນຜົນເອກະລາດກໍ່ຍັງພົບວ່າການວິເຄາະທາງເລືອກໃນການໄຈ້ແຍກແລະການຄັດເລືອກໂຄງການໄດ້ຮັບການປັບປຸງຫລາຍຂຶ້ນ.

31. ນະໂຍບາຍພະລັງງານຂອງ ເອດີບີ ໄດ້ປະກອບສ່ວນອັນສຳຄັນ ເຂົ້າໃນການປັບປຸງຫລາຍໆຂະແໜງການສຳຄັນຂອງປະເທດ ລວມທັງຢູ່ໃນປະເທດ ບັງກາເດດສ໌, ອິນໂດເນເຊຍ, ປະກິດສ໌ຖານ, ປະເທດຟີລິບປິນ, ປະເທດສີລັງກາ ແລະປະເທດຫວຽດນາມ. ມັນມີສອງເສັ້ນທາງຂອງການໄຫລຂອງຄວາມຮູ້. ການປະກອບສ່ວນຂອງເອດີບີເຂົ້າໃນການປັບປຸງນະໂຍບາຍ ແມ່ນຖືກກຳນົດໂດຍແຜນງານ ແລະການສົນທະນາກັບປະເທດສະມາຊິກ ແລະ ຄູ່ຮ່ວມພັດທະນາທີ່ເກີດຂຶ້ນຕາມມາພາຍຫລັງໂດຍສະເພາະແມ່ນກັບທະນາຄານໂລກ ທີ່ນຳໄປສູ່ການພັດທະນາຄວາມເຫັນແບບມີສ່ວນຮ່ວມກ່ຽວກັບການປັບປຸງໂຄງສ້າງຂອງຂະແໜງພະລັງງານ. ໃນທາງກົງກັນຂ້າມ ສິ່ງນີ້ໄດ້ປະກອບສ່ວນໃຫ້ເອດີບີ ໃນການນຳສະເໜີນະໂຍບາຍຂອງຕົນໃຫ້ມີການເຊື່ອມໂຍງກັນເຂົ້າ. ການປັບປຸງຂະແໜງພະລັງງານແມ່ນໄດ້ຮັບຜົນສຳເລັດໃນລະດັບທີ່ແຕກຕ່າງກັນ; ຕົວປ່ຽນທີ່ສຳຄັນ ໃນແຕ່ລະປະເທດ ແມ່ນລະດັບຂອງການສະນັບສະໜູນພາຍໃນສຳລັບແຜນງານປະຕິຮູບ. ບົດຮຽນທຳມະດາໜຶ່ງທີ່ປະກົດຂຶ້ນຈາກການປະຕິຮູບຂະແໜງພະລັງງານແມ່ນໃຊ້ເວລາຫລາຍປີ ໃນຫລາຍໆກໍລະນີ, ອາດຈະໃຊ້ເວລາດົນກວ່າທີ່ຄາດຄະເນໄວ້. ບາງຄັ້ງຄວາມຄືບໜ້າອາດຈະຊ້າແລະເກີດຫຍຸ້ງຫຍາກຈາກການຖົດຖອຍ.

32. ເຖິງແມ່ນວ່າບາງປະເທດສະມາຊິກທີ່ກຳລັງພັດທະນາ ໄດ້ຮັບຜົນສຳເລັດ ແລະບໍ່ຕ້ອງການ ການສະໜັບສະໜູນຈາກພາກລັດແລະເອດີບີ ສຳລັບໂຄງການພະລັງງານ, ເກືອບວ່າທຸກໆປະເທດ ຈະຮຽກຮ້ອງໃຫ້ສືບຕໍ່ການຊ່ວຍເຫລືອຈາກເອດີບີ. ໃນບົດລາຍງານຂອງ ກົມປະເມີນຜົນເອກະລາດ ໄດ້ຍົກໃຫ້ວ່າຄວາມຍືນຍົງຂອງການໃຫ້ເງິນກູ້ຢືມຈະຂຶ້ນກັບການນຳສະເໜີຜົນກະທົບໃນທາງບວກ, ຄວາມອາດສາມາດທີ່ຕອບສະໜອງຕາມຄວາມຕ້ອງການຂອງລູກຄ້າ ແລະການພັດທະນາຄວາມຊຳນິຊຳນານທີ່ເໝາະສົມໃຫ້ແກ່ພະນັກງານຂອງເອດີບີ. ການແຂ່ງຂັນ ແລະພື້ນຖານໃນການປ່ອຍເງິນກູ້ຂະໜາດນ້ອຍ ແມ່ນໝາຍຄວາມວ່າ ເອດີບີ ຕ້ອງ (i) ພັດທະນາຜະລິດຕະພັນການເງິນທີ່ລູກຄ້າຕ້ອງການ, (ii) ໃຫ້ມີການດັດປັບວິທີຕໍ່ກັບເງື່ອນໄຂຂໍ້ຕົກລົງໃນສັນຍາ ແລະນະໂຍບາຍປ້ອງກັນ, (iii) ຮັບຮອງເອົາວິທີການໄລຍະຍາວ ເພື່ອພັດທະນາການຕອບສະໜອງຄວາມຕ້ອງການຂອງລູກຄ້າ ແລະ (iv) ຮັບປະກັນຄວາມຊຳນິຊຳນານຂອງພະນັກງານແມ່ນເໝາະກັບຄວາມຕ້ອງການເຫລົ່ານີ້.

33. ໃນພາກສະຫລຸບ, ກົມປະເມີນຜົນເອກະລາດ ໄດ້ໃຫ້ຄຳແນະນຳຕໍ່ຍຸດທະສາດພະລັງງານສະບັບປັບປຸງ ຄວນຖືກອອກແບບເພື່ອສາມາດບັນລຸຜົນດັ່ງຕໍ່ໄປນີ້:

(i) ໄດ້ມີການເພີ້ມພູນປະສິດທິພາບທົ່ວວົງຈອນຂອງພະລັງງານ ເພື່ອຫລຸດຜ່ອນການລົງທຶນເຂົ້າໃນຂີດຄວາມອາດສາມາດຂອງການຜະລິດພະລັງງານໃໝ່ ເພື່ອຕອບສະໜອງຕາມການຂະຫຍາຍຕົວຂອງຄວາມຕ້ອງການດ້ານພະລັງງານ.

(ii) ສະພາບສິ່ງແວດລ້ອມພາຍນອກ ຕ້ອງໄດ້ສະທ້ອນໃນການຕັດສິນໃຈຢູ່ໃນຂະແໜງພະລັງງານ.

(iii) ການຕັດສິນໃນການຕັ້ງລາຄາ ແລະ ການຈັດສັນຊັບພະຍາກອນ ຄວນເກີດຂຶ້ນພາຍໃຕ້ປັດໃຈຂອງຕະຫລາດ ທີ່ມີລະບຽບການຄຸ້ມຄອງທີ່ເຊື່ອຖື ແລະມີປະສິທິພາບ.

(iv) ການອຸດໜູນພະລັງງານຄວນມີຄວາມໂປ່ງໃສ ແລະມີເປົ້າໝາຍທີ່ຊັດເຈນ.

(v) ນະໂຍບາຍ ຄວນອີງໃສ່ສິ່ງຈູງໃຈບົນພື້ນຖານກົນໄກຕະຫລາດ ເພື່ອສົ່ງເສີມປະສິດທິພາບ ແລະຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ.

(vi) ການຄຸ້ມຄອງຂະແໜງການຄວນໄດ້ຮັບການປັບປຸງເພື່ອເພີ້ມປະສິດທິພາບ, ສ້າງໂອກາດໃຫ້ແກ່ການເຂົ້າມາມີສ່ວນຮ່ວມຂອງພາກເອກະຊົນ ແລະຫລຸດຜ່ອນໂອກາດຂອງການສໍ້ຫລາດບັງຫລວງ.

34. ກົມປະເມີນຜົນເອກະລາດຍັງໄດ້ແນະນໍາໃຫ້ມີການພັດທະນາແຜນການຈັດຕັ້ງປະຕິບັດ ຄື (i) ການຈັດລຽງນະໂຍບາຍແລະ ຍຸດທະສາດການພັກດັນກັບຜົນໄດ້ຮັບຈາກອົງການຈັດຕັ້ງ, ງົບປະມານ ແລະຊັບພະຍາກອນມະນຸດ ແລະ (ii) ລວມເອົາໝາກຜົນທີ່ໄດ້ຮັບທາງດ້ານໂຄງສ້າງໄປພ້ອມກັນກັບຕົວຊີ້ບອກສໍາຄັນໆທີ່ສາມາດຕິດຕາມໄດ້ (ສິ່ງທີ່ປະກອບໃຫ້, ຜົນໄດ້ຮັບ ແລະຜົນທີ່ໄດ້ຮັບໃນໄລຍະສັ້ນແລະໄລຍະຍາວ) ເພື່ອຮັບປະກັນຄວາມຄືບໜ້າໃນການຈັດຕັ້ງປະຕິບັດໄດ້ຮັບການຕິດກວດກາ ແລະ ຖ້າມີຄວາມຈໍາເປັນການດັດແກ້ກາງເທີ່ມ ກໍ່ສາມາດເຮັດໄດ້.

## ຂ. ປະສົບການຂອງບັນດາທະນາຄານພັດທະນາຫລາຍຝ່າຍ

35. ໂດຍທົ່ວໄປການດໍາເນີນງານໃນຂະແໜງພະລັງງານ ໄດ້ມີການປະສານງານກັບບັນດາທະນາຄານພັດທະນາຫລາຍຝ່າຍແລະຜູ້ຮ່ວມພັດທະນາສອງຝ່າຍ, ດັ່ງທີ່ໄດ້ລະບຸຢູ່ໃນຂໍ້ຕົກລົງປາຣີວ່າດ້ວຍປະສິດທິຜົນຂອງການຊ່ວຍເຫລືອ. ອັນນີ້ ແມ່ນມີຄວາມແຕກຕ່າງໜ້ອຍຂອງພາບລວມເຊັ່ນ ການປັບປຸງດ້ານນະໂຍບາຍ, ການປັບປຸງໂຄງສ້າງ, ການພັດທະນາພາກເອກະຊົນ, ການຈັດຊື້ຈັດຈ້າງ(ນອກເໜືອຈາກການມີສິດ) ແລະຄວາມຍືນດ້ານສິ່ງແວດລ້ອມ ແລະເສດຖະກິດ. ເກືອບທຸກໆສະຖາບັນ ໄດ້ສ້າງຄວາມເຂັ້ມແຂງໃນຂະແໜງພະລັງງານ. ການພິຈາລະນາຄວາມຕ້ອງການສໍາລັບການຊ່ວຍເຫລືອແກ່ບັນດາປະເທດສະມາຊິກທີ່ກໍາລັງພັດທະນາ, ມັນມີຊ່ອງວ່າງພຽງພໍໃນການປະສານກິດຈະກໍາຕ່າງໆ ແລະມີນະໂຍບາຍທີ່ຄ້າຍຄືກັນ.

### 1. ທະນາຄານໂລກ

36. ເລີ້ມຈາກການປ່ອຍກູ້ຄັ້ງທໍາອິດໃນປີ 1949, ການດໍາເນີນງານໃນຂະແໜງພະລັງງານ ຂອງທະນາຄານໂລກແມ່ນກວມເອົາຫລາຍກວ່າ 20% ຂອງການຈັດສັນທຶນໃຫ້ຂອງກຸ່ມທະນາຄານໂລກ.[22] ການຊ່ວຍເຫລືອຂອງກຸ່ມທະ

[22] ກຸ່ມທະນາຄານໂລກ ລວມມີ ທະນາຄານສາກົນເພື່ອການຟື້ນຟູ ແລະພັດທະນາ ແລະສະມາຄົມເພື່ອການພັດທະນາສາກົນ ແລະ ຕິດພັນກັບບໍລິສັດການເງິນສາກົນ, ອົງການຮັບປະກັນການລົງທຶນຫລາຍຝ່າຍ ແລະ ສູນກາງສໍາລັບການແກ້ໄຂຂໍ້ຂັດແຍ່ງການລົງທຶນສາກົນ.

ນາຄານໂລກລວມເອົາເຄື່ອງມືທາງການເງິນເຊັ່ນ: ການປ່ອຍເງິນກູ້, ໃຫ້ສິນເຊື່ອ, ການຄ້ຳປະກັນ, ການຊ່ວຍເຫລືອທາງວິຊາການ, ໃຫ້ຄຳແນະນຳ, ການຮ່ວມທຶນ, ການຮ່ວມກຸ່ມປ່ອຍກູ້ ຂອງບັນດາທະນາຄານເພື່ອການຄ້າ, ກອງທຶນເພື່ອການລົງທຶນ, ແລະຮັບປະກັນຄວາມສ່ຽງທາງການເມືອງ. ນອກຈາກນັ້ນ, ແຜນງານ ກໍ່ໄດ້ປັບເພື່ອຂະແໜງພະລັງງານ ທີ່ໃຫ້ການຊ່ວຍເຫລືອທາງວິຊາການເພີ້ມເຕີ່ມ ຈາກເຄື່ອງມືທາງການເງິນແບບເດີມ. ບັນດາເຄື່ອງ ມືເຫລົ່ານີ້ລວມມີແຜນງານໃຫ້ການຊ່ວຍເຫລືອດ້ານການບໍລິຫານຂະແໜງພະລັງງານ, ກອງທຶນສິ່ງແວດລ້ອມໂລກ, ກຸ່ມພະລັງງານທາງຂອງອາຊີ, ໂຄງການລິເລີ້ມຖ່ານຫີນໃຫ້ເປັນພະລັງງານສະອາດ, ແຜນງານຂອງພາກພື້ນກ່ຽວກັບຂະແໜງພະລັງງານດັ່ງເດີມ, ບໍລິສັດພັດທະນາພະລັງງານແສງຕາເວັນ. ເກືອບວ່າແຜນງານໄດ້ຮັບການສະໜັບສະໜູນ ແລະປະກອບສ່ວນຈາກຫລາຍຝ່າຍ. ຕົ້ນທົດສະວັດ 90, ທະນາຄານໂລກ ໄດ້ທົບທວນການດຳເນີນງານຂອງຕົນຢູ່ໃນຂະແໜງພະລັງງານແລະພັດທະນານະໂຍບາຍວ່າດ້ວຍພະລັງງານຂອງຕົນ. [23] ນະໂຍບາຍພະລັງງານໄດ້ວາງຫລັກການສຳລັບຂະແໜງພະລັງງານ ເຊິ່ງນຳໃຊ້ກັບການດຳເນີນງານໃນນ້ຳມັນເຊື້ອໄຟ, ອາຍແກັດສ໌ ແລະ ຖ່ານຫີນ: (i) ປະເທດທີ່ເປັນລູກຄ້າຕ້ອງດຳເນີນບາດກ້າວໃນການປະຕິຮູບແລະປັບປຸງໂຄງສ້າງຢ່າງຈະແຈ້ງ, (ii) ຂະບວນການທາງດ້ານລະບຽບການຄວນໄດ້ຮັບການສ້າງຕັ້ງຂຶ້ນ, (iii) ປະສິດທິພາບດ້ານພະລັງງານ ແລະ ການມີສ່ວນຮ່ວມຂອງພາກເອກະຊົນ ຕ້ອງໄດ້ຮັບການສະໜັບສະໜູນ, (iv) ຄວນຫລີກລ່ຽງລູກຄ້າທີ່ສ້າງມົນລະພິດສູງ ແລະ ດຳເນີນງານທີ່ບໍ່ເອົາໃຈໃສ່, ແລະ (v) ຄວນສະໜັບສະໜູນໃຫ້ມີການຖ່າຍໂອນເຕັກໂນໂລຢີພະລັງງານສະອາດ. ນອກຈາກ ນັ້ນ, ທະນາຄານໂລກຍັງເລັ່ງໃສ່ພະລັງງານຊົນນະບົດ, ການຂົນສົ່ງແບບຍືນຍົງ, ພະລັງງານສະອາດແລະສິ່ງແວດລ້ອມ.

37. ການວິເຄາະຂອງທະນາຄານໂລກ ໄດ້ພົບວ່າຜົນອອກມາຍັງບໍ່ທັນຊັດເຈນ. [24] ວາລະການຈັດຕັ້ງ ປະຕິບັດລະບຽບການ ແມ່ນຍັງຊັກຊ້າຢູ່ ລວມທັງກັບການຫັນເອົາອັດຕາຄ່າຊົມໃຊ້ໄປສູ່ກົນໄກຕະຫລາດແລະຄ່ອຍຍົກເລີກການໃຫ້ການອຸດໜູນ. ການຫັນອຸດສາຫະກຳໄປເປັນຂອງເອກະຊົນທີ່ຊ້າ ຍັງພາໃຫ້ປະສົບຜົນສຳເລັດໄດ້ບໍ່ຕາມທີ່ຄວນ. ແຕ່ຢ່າງໃດກໍ່ຕາມ, ໂຄງການທີ່ສຸມໃສ່ຍັບຍັ້ງມົນລະພິດ ສະແດງໃຫ້ເຫັນຜົນດີກວ່າ. ໃນລະຫວ່າງທ້າຍຂອງທົດສະວັດ 90, ຈຸດສຸມຂອງທະນາຄານໂລກວ່າດ້ວຍພະລັງງານທົດແທນແມ່ນເພີ້ມຂຶ້ນ. ຄວາມພະຍາຍາມຂອງທະນາຄານໂລກ ທີ່ຈະກະຕຸ້ນການເຂົ້າມາມີສ່ວນຮ່ວມ ຂອງພາກເອກະຊົນ ໄດ້ຜົນຕອບແທນຕາມຄາດຄະເນໄວ້ ໂດຍຜ່ານການປະຕິຮູບແລະການພັດທະນາເຕັກໂນໂລຢີພະລັງງານສະອາດ ໄດ້ປະກອບສ່ວນເຂົ້າໃນການຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ທີ່ດີກວ່າ.

38. ໃນປີ 2006 ທະນາຄານໂລກ ໄດ້ຮັບຮອງເອົາ ພະລັງງານສະອາດ ແລະຍຸດທະສາດການພັດທະນາ ເຊິ່ງໄດ້ວາງອອກສອງວິທີທາງໃຫຍ່: ພັດທະນາກອບຂອງການລົງທຶນ ທີ່ເສີມໃຫ້ກັບກິດຈະການທີ່ກຳລັງດຳເນີນຢູ່ ແລະພັດທະນາແລະນຳໃຊ້ເຕັກໂນໂລຢີເພື່ອແກ້ໄຂການປ່ຽນແປງສະພາບດິນຟ້າອາກາດ. [25] ທະນາຄານໂລກ ສຸມໃສ່ (i) ພະລັງງານສຳລັບການພັດທະນາແລະເຂົ້າເຖິງຂອງກຸ່ມຄົນທຸກຍາກໂດຍໃຫ້ຄວາມສຳຄັນ ເປັນພິເສດແກ່ເຂດທະເລ

---

[23] ທະນາຄານໂລກ. 1993. *ບົດບາດຂອງທະນາຄານໂລກໃນຂະແໜງພະລັງງານໄຟຟ້າ.* ວໍຊິງຕັນ ດີຊີ.

[24] ທະນາຄານໂລກ. 2000. *ຂໍ້ຄິດກ່ຽວກັບເຊື້ອໄຟ.ຍຸດທະສາດດ້ານສິ່ງແວດລ້ອມສຳລັບຂະແໜງພະລັງງານ.* ວໍຊິງຕັນ ດີຊີ.

[25] ທະນາຄານໂລກ. 2006. *ພະລັງງານສະອາດ ແລະການພັດທະນ: ໄປສູ່ກອບຂອງການລົງທຶນ.* ວໍຊິງຕັນ ດີຊີ

ຊາຍຊາຣາຣາອາຟຼິກກາ, (ii) ການຫັນໄປສູ່ເສດຖະກິດທີ່ຜະຫລິດອາຍກາກບອນຕ່ຳ, ແລະ (iii) ການປັບຕົວໃຫ້ເຂົ້າກັບສະພາບການ. ໃນໄລຍະຍາວ, ທະນາຄານໂລກ ສະເໜີວິທີການບໍລິຫານຄວາມສ່ຽງ ດ້ານສະພາບອາກາດ.

## 2. ທະນາຄານຢູໂຣບເພື່ອການຟື້ນຟູ ແລະການພັດທະນາ

39. ໃນລະຫວ່າງປີ 2000–2005, ທະນາຄານຢູໂຣບເພື່ອການຟື້ນຟູ ແລະການພັດທະນາ (EBRD) ຈັດສັນທຶນຫລາຍກວ່າ €4 ຕື້ໃຫ້ແກ່ຂະແໜງພະລັງງານ.[26] ການສ້າງກະແສໄຟຟ້າ (21%), ການຂຸດຂຸ້ນນ້ຳມັນແລະອາຍແກັດສ໌ (20%), ແລະສາຍສົ່ງກະແສໄຟຟ້າ (17%) ແມ່ນພາກສ່ວນໃຫຍ່ທີ່ໄດ້ຮັບເງິນກູ້ຈາກທະນາຄານຢູໂຣບເພື່ອການຟື້ນຟູແລະພັດທະນາ. ທະນາຄານຢູໂຣບເພື່ອການຟື້ນຟູແລະການພັດທະນາຍັງໄດ້ເພີ້ມທຶນໃຫ້ແກ່ໂຄງການພະລັງງານທີ່ມີປະສິດທິພາບໃນຂະນະທີ່ມີການສືບຕໍ່ເຂົ້າຮ່ວມໃນການປຶກສາຫາຫລືດ້ານນະໂຍບາຍ ເພື່ອສົ່ງເສີມຈຸດປະສົງຂອງຍຸດທະສາດຂອງຕົນເສດຖະກິດທີ່ມີການປ່ຽນແປງໃໝ່ແລະການພັດທະນາ ທີ່ເປັນມິດແກ່ສິ່ງແວດລ້ອມແລະຍືນຍົງ. ໂດຍທົ່ວໄປ, ການປະຕິຮູບໄດ້ເຄື່ອນໄປຂ້າງໜ້າຢ່າງສະດວກຍ້ອນການສ້າງຕັ້ງ ພະລັງງານສະອາດແລະກອບຂອງລະບຽບການຂົນສົ່ງ. ຄ້າຍຄືກັນ, ການມີສ່ວນຮ່ວມຂອງພາກເອກະຊົນໄດ້ເພີ້ມຂຶ້ນ. ການເຂົ້າເປັນສະຫະພັນຢູໂຣບ ແລະຄວາມຈຳເປັນທີ່ຕ້ອງປະຕິບັດຕາມເງື່ອນໄຂຂອງການເປັນສະມາຊິກ ໄດ້ຊ່ວຍໃຫ້ການປະຕິຮູບ. ຜົນສຳເລັດຂອງທະນາຄານຢູໂຣບເພື່ອການຟື້ນຟູແລະການພັດທະນາກໍ່ຍັງບໍ່ທັນຈະແຈ້ງເທື່ອ ແຕ່ວ່າກໍ່ມີຄວາມຄືບໜ້າ. ຜົນໄດ້ຮັບທີ່ເປັນຮູບປະທຳ ກໍ່ແມ່ນເຫັນຢູ່ໃນການໃຊ້ພະລັງງານ ຢ່າງມີປະສິດທິພາບ (ແມ່ນຈຸດສຸມສຳຄັນຂອງທະນາຄານຢູໂຣບ ເພື່ອການຟື້ນຟູແລະການພັດທະນາ) ແຕ່ວ່າຕ້ອງການຄວາມພະຍາຍາມຫລາຍກວ່ານີ້ເພື່ອໃຫ້ໄດ້ຕາມມາດຕະຖານປະສິດທິພາບດ້ານພະລັງງານຂອງຢູໂຣບ.

40. ບັນດາປະເທດທີ່ບໍ່ແມ່ນສະມາຊິກຂອງສະຫະພາບຢູໂຣບແມ່ນກ້າວໜ້າໄປແບບຊ້າໆ. ຂະບວນການຈັດຕັ້ງປະຕິບັດການປະຕິຮູບຂອງທະນາຄານຢູໂຣບເພື່ອການຟື້ນຟູແລະການພັດທະນາໃນເຄືອປະເທດເອກະລາດ ສືບຕໍ່ເປັນສິ່ງທ້າທາຍ; ຄວາມເປັນເອກະລາດທາງລະບຽບການ ແມ່ນຊ້າ ແລະອັດຕາຄ່າພະລັງງານ ແມ່ນບໍ່ອີງໃສ່ຕົ້ນທຶນ. ການຫັນເປັນເອກະຊົນພາຍໃນເຄືອປະເທດເອກະລາດ ແມ່ນຫລາຍ. ເມື່ອນຳມາພິຈາລະນາການພັດທະນາໃນ ຂະແໜງພະລັງງານຂອງຢູໂຣບ, ສະຫະພາບຢູໂຣບພັດທະນາຍຸດທະສາດທີ່ໄດ້ຮັບການທົບທວນນະໂຍບາຍດຳເນີນງານວ່າດ້ວຍພະລັງງານສະບັບ 2006 ຕ້ອງກ່າວເຖິງ (i) ການແຂ່ງຂັນ ແລະຄວາມມີປະສິດທິພາບ, (ii) ເພີ້ມການລົງທຶນ, (iii) ຄວາມໝັ້ນຄົງດ້ານພະລັງງານ, (iv) ການປ່ຽນແປງສະພາບອາກາດ, ແລະ (v) ການພັດທະນາຊັບພະຍາກອນທຳມະຊາດ. ໃຫ້ໄປໃນແນວທາງດຽວ ກັນກັບຍຸດທະສາດດ້ານພະລັງງານຂອງສະຫະພາບຢູໂຣບ, ທະນາຄານຢູໂຣບເພື່ອການຟື້ນຟູແລະການພັດທະນາ ໄດ້ຕັ້ງຫລາຍໆບູລິມະສິດເພື່ອ: ສົ່ງເສີມປະສິດທິພາບດ້ານພະລັງງານ, ເລື່ອນວາລະການປັບປຸງໄປຂ້າງໜ້າ, ສົ່ງເສີມພະລັງງານທົດແທນ ແລະການຄ້າຂາຍອາຍກາກບອນ, ການຂຸດຄົ້ນພະລັງງານສຳຮອງໃນຮູບແບບທີ່ມີຄວາມຍືນຍົງ, ສົ່ງເສີມການຄ້າດ້ານພະລັງງານແລະເພີ້ມພູນຄວາມປອດໄພດ້ານພະລັງງານນິວເຄຼຍ.

---

[26] ທະນາຄານຢູໂຣບເພື່ອການຟື້ນຟູ ແລະການພັດທະນາ. 2006. *ນະໂຍບາຍດຳເນີນງານດ້ານພະລັງງານ*. ລອນດອນ.

## I. ບັນຫາແລະທາງເລືອກ

41. ຄໍາແນະນໍາໃນນະໂຍບາຍວ່າດ້ວຍພະລັງງານສະບັບປີ 1995 ທີ່ໄດ້ຮັບການປັບປຸງ ບໍ່ພຽງແຕ່ຕອບສະໜອງຕາມການປ່ຽນແປງເງື່ອນໄຂທີ່ກະທົບຕໍ່ຂະແໜງການ ແຕ່ມັນຍັງສະທ້ອນທິດທາງຂອງນະໂຍບາຍໃໝ່ຂອງ ເອດີບີ ດັ່ງທີ່ໄດ້ລະບຸໄວ້ໃນຍຸດທະສາດ 2020 (ໝາຍເຫດ 3). ຍຸດທະສາດ 2020 ໄດ້ຈໍາແນກຂະແໜງພະລັງງານເປັນສ່ວນປະກອບທີ່ສໍາຄັນຂອງການດໍາເນີນງານໃນຂົງເຂດຫລັກຂອງພື້ນຖານໂຄງລ່າງ ແລະນີ້ຈະພັກດັນສາມວາລະຍຸດທະສາດເສີມຂອງການຂະຫຍາຍຕົວທາງເສດຖະກິດສັງຄົມແບບຮອບດ້ານ, ການຂະຫຍາຍຕົວແບບຍືນຍົງທາງ ດ້ານສິ່ງແວດລ້ອມ, ແລະ ການເຊື່ອມໂຍງເຂົ້າກັບພາກພື້ນ. ເອດີບີ ຈໍາເປັນຕ້ອງອະທິບາຍນະໂຍບາຍໃຫ້ຊັດເຈນເພື່ອຊ່ວຍໃຫ້ປະເທດສະມາຊິກທີ່ກໍາລັງພັດທະນາສຸມໃສ່ການສົ່ງເສີມພະລັງງານສະອາດແລະການພັດທະນາແບບຍືນຍົງ. ປະເທດໃນອາຊີແລະປາຊີຟິກກໍ່ຄືກັນກັບປະເທດອື່ນໆໃນໂລກ ພົບກັບຄວາມກົດດັນດ້ານສິ່ງແວດ ລ້ອມຫລາຍພໍສົມຄວນແລະຈໍາເປັນຕ້ອງເໜັ້ນໜັກການຂະຫຍາຍຕົວທີ່ຍືນຍົງຕໍ່ສິ່ງແວດລ້ອມ. ຍຸດທະສາດ 2020 ໄດ້ກໍານົດສິ່ງແວດລ້ອມ ລວມທັງການປ່ຽນແປງສະພາບອາກາດທີ່ເປັນໜຶ່ງໃນຫ້າຂົງເຂດ ສໍາຄັນທີ່ສະໜັບສະໜູນໃນວາລະການພັດທະນາຂອງເອດີບີ. ນະໂຍບາຍພະລັງງານສະບັບປັບປຸງໄດ້ເວົ້າເຖິງ ຄວາມຍືນຍົງດ້ານສິ່ງແວດລ້ອມ ແລະການຂາດຄວາມຍືນຍົງຂອງວິທີການໃນປະຈຸບັນຂອງອາຊີ ກ່ຽວກັບການເພີ້ມຂຶ້ນດ້ານການສະໜອງພະລັງງານທີ່ອີງໃສ່ເຊື້ອໄຟທີ່ເປັນແຮ່ທາດ. ຍຸດທະສາດ 2020 ເໜັ້ນໜັກໃຫ້ເອດີບີ ສຸມໃສ່ການສົ່ງເສີມພະລງງານທີ່ມີປະສິດທິພາບແລະພັດທະນາພະລັງງານສະອາດ. ການເຂົ້າເຖິງພະລັງງານແມ່ນສ່ວນປະກອບໜຶ່ງທີ່ສໍາຄັນເພື່ອບັນລຸເປົ້າໝາຍຂອງສະຫັດສະວັດແລະຈໍາເປັນຕ້ອງມີຄວາມພະຍາຍາມສູງທີ່ຈະຕ້ອງໄດ້ກ່າວເຖິງບັນຫາດັ່ງກ່າວ. ຍຸດທະສາດ 2020 ຍັງແນ່ໃສ່ເພື່ອແກ້ໄຂບັນຫາດ້ານການຄຸ້ມຄອງທີ່ເປັນສ່ວນ ປະກອບສໍາຄັນຂອງການພັດທະນາຂະແໜງພະລັງງານ.

### 1. ປະສິດທິພາບດ້ານພະລັງງານ

42. ຂໍ້ຕົກລົງທີ່ຈະຈັດເປັນບູລິມະສິດແລະຂະຫຍາຍຄວາມພະຍາຍາມໃນການສະໜັບສະໜູນ ການລິເລີ້ມປະສິດທິພາບດ້ານພະລັງງານຢູ່ບົນພື້ນຖານຄວາມງ່າຍດາຍແຕ່ເປັນຄວາມຈິງທີ່ສໍາຄັນ: ການເນັ້ນໜັກປະສິດທິພາບດ້ານພະລັງງານ ເປັນວິທີການທີ່ມີປະສິດທິຜົນໃນການຫລຸດຜ່ອນການເພີ້ມຂຶ້ນຂອງຄວາມຕ້ອງການດ້ານພະລັງງານ, ປັບປຸງປະສິດທິພາບຂອງຝ່າຍສະໜອງ ແລະຫລຸດຜ່ອນການປ່ອຍອາຍກາກບອນ ແລະເອືອຍອີງໃສການນໍາເຂົ້າທາດຮາຍໂດຼກາກບອນທີ່ແພງ. ການສຶກສາຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າການຮັບຮອງເອົາມາດຕະການທີ່ເໝາະສົມ ແລະປະສິດທິພາບດ້ານພະລັງງານທີ່ມີປະສິດທິຜົນສາມາດຊ່ວຍຫລຸດຄວາມຕ້ອງການດ້ານພະລັງງານໄດ້ 20%.[27] ປະສິດທິພາບດ້ານພະລັງງານສາມາດປະສົມຜົນສໍາເລັດໄດ້ຫລາຍໆທາງເຊັ່ນ: (i) ມີວິໄນດ້ານພະລັງງານ(ມອດເຄື່ອງໃຊ້ໄຟຟ້າເມື່ອບໍ່ໃຊ້ມັນ); (ii) ມີການກວດສອບພະລັງງານ; (iii) ການສ້າງ ແລະນໍາໃຊ້ອຸປະກອນທີ່ມີປະສິດທິພາບດ້ານພະລັງງານ; (iv) ຫລຸດຜ່ອນການສູນເສຍພະລັງງານໃນລະບົບ; (v) ມີການວາງແຜນ ແລະບໍລິຫານພະລັງງານຢ່າງຈິງຈັງ; (vi) ການວາງແຜນການຂົນສົ່ງໃຫ້ມີປະສິດທິພາບ; (vii) ການນໍາໃຊ້ເຊື້ອໄຟທາງເລືອກແລະທົດແທນ; (viii) ການຕັ້ງລາຄາພະລັງງານໂດຍອີງຕາມກົນໄກຕະຫລາດລວມທັງນະໂຍບາຍອາກອນ; ແລະ (ix) ລະບົບພະລັງງານຮ່ວມ.

---

[27] ເອດີບີ. 2006. *ບົດລາຍງານຂໍ້ລິເລີ້ມດ້ານປະສິດທິພາບດ້ານພະລັງງານ*. ມານິລາ.

ຂອບເຂດແມ່ນໃຫຍ່ຫລາຍ ແລະຮຽກຮ້ອງຕ້ອງການໃຫ້ມີສະໜັບສະໜູນຈາກພາກລັດແລະເອກະຊົນ. ຍ້ອນມີການເພີ້ມຂື້ນຂອງການປ່ອຍອາຍກາກບອນ ແລະການນາບຂູ່ຈາກການປ່ຽນແປງສະພາບດິນຟ້າອາກາດ ແລະຄວາມໝັ້ນຄົງດ້ານພະລັງງານ, ປະສິດທິພາບດ້ານພະລັງງານຄາດວ່າຈະມີບົດບາດຫລາຍຂື້ນ ແລະຄວນມີບູລິມະສິດທີ່ສູງກວ່າບັນດາກິດຈະກຳອື່ນໆ. ຜົນປະໂຫຍດຈາກປະສິດທິພາບດ້ານພະລັງງານແມ່ນສຳລັບໄລຍະຍາວແລະສາມາດນຳໃຊ້ໄວຂື້ນແລະຕົ້ນທຶນທີ່ຕ່ຳກວ່າ. ປະສິດທິພາບດ້ານພະລັງງານ ຊ່ວຍເຮັດໃຫ້ການຊົມໃຊ້ນ້ຳມັນເຊື້ອໄຟທີ່ເປັນແຮ່ທາດຫລຸດລົງກວ່າເກົ່າ, ຊ່ວຍໃຫ້ສຸຂະພາບຂອງປະຊາຊົນດີຂື້ນ ແລະຈູງໃຈໃຫ້ມີການປະຫຍັດທາງການຄ້າ.

43. ຄວນມີການພິຈາລະນາຂໍ້ຫຍຸ້ງຫຍາກແລະອຸປະສັກທີ່ອາດເກີດຂຶ້ນ. ເພື່ອຈະບັນລຸຜົນປະໂຫຍດເຫລົ່ານີ້, ການແຊກແຊງເຂົ້າໃນປະສິດທິພາບດ້ານພະລັງງານ ຄວນໄດ້ຮັບການພັດທະນາຢ່າງຮອບດ້ານ. ປະສິດທິພາບດ້ານພະລັງງານສາມາດເປັນສິ່ງທ້າທາຍຍ້ອນວ່າມັນຈະພົວພັນເຖິງການປ່ຽນແປງທັດສະນະຄະຕິ ແລະພຶດຕິກຳຂອງຜູ້ຊົມໃຊ້, ຄວາມຮຽກຮ້ອງຕ້ອງການສ້າງຄວາມຕື່ນຕົວ, ມີນະໂຍບາຍທີ່ສະໜັບສະໜູນແລະການລວມເຂົ້າກັນບັນດາມາດຕະການບັງຂັບແລະກະຕຸ້ນ. ເຕັກໂນໂລຢີທີ່ມີປະສິດທິພາບດ້ານພະລັງງານ ຍັງອາດມີລາຄາແພງຢູ່, ຍົກບັນຫາຂອງຄວາມອາດສາມາດຊື້ໄດ້ສຳລັບປະເທດສະມາຊິກ ທີ່ກຳລັງພັດທະນາ. ໂຄງການໃດທີ່ມີຄວາມເຂັ້ມແຂງທາງດ້ານເຕັກນິກ ແລະສາມາດນຳໃຊ້ເຕັກໂນໂລຢີກັບບາງປະເທດ ແລະທີ່ຕັ້ງສະເພາະ ເຊິ່ງການນຳໃຊ້ເຕັກໂນໂລຢີ ຮຽກຮອ້ງໃຫ້ມີການປະເມີນຢ່າງລະອຽດເພື່ອຮັບປະກັນເຖິງປະສິດທິຜົນຂອງຕົ້ນທຶນແລະໄດ້ຮັບຜົນປະໂຫຍດສູງສຸດ. [28] ອຸປະສັກຂອງໂຄງການພະລັງງານທີ່ມີປະສິດທິພາບລວມມີ (i) ຕົ້ນທຶນເບື້ອງຕົ້ນສູງ, (ii) ຕົ້ນທຶນການດຳເນີນງານແລະການກະກຽມໂຄງການສູງຍ້ອນວ່າຂະໜາດຂອງໂຄງການນ້ອຍ, (iii) ຂາດເຄື່ອງມືທາງການເງິນທີ່ເໝາະສົມ, (iv) ສືບຕໍ່ລະບອບອັດຕາຄ່າບໍລິການຕ່ຳແລະມີການໃຫ້ການອຸນໜູນ, ແລະ (v) ຄວາມອາດສາມາດຂອງອົງການບໍ່ພຽງພໍ. ອຸປະສັກດ້ານສະຖາບັນ ທີ່ປະສົບພົບພໍ້ໂດຍສະຖາບັນການເງິນຫລາຍຝ່າຍ ເຊັ່ນ ເອດີບີ ລວມເອົາຜະລິດຕະພັນຂອງການປ່ອຍເງິນກູ້ທີ່ບໍ່ມີຄວາມຈູງໃຈຕໍ່ໂຄງການພະລັງງານສະອາດຂະໜາດນ້ອຍ, ໃຊ້ເວລາການພິຈາລະນາເງິນກູ້ດົນ ແລະຕົ້ນທຶນການດຳເນີນງານສູງ.

44. ຜົນສຳເລັດເບື້ອງຕົ້ນຂອງເອດີບີໃນຂົງເຂດພະລັງງານທີ່ມີປະສິດທິພາບແລະສະອາດ ຍັງໃຫ້ການສະໜັບສະ ໜູນຕໍ່ຂໍ້ສະເໜີຂອງນະໂຍບາຍ. ເອດີບີ ໄດ້ສ້າງຄວາມກ້າວໜ້າຫລາຍໃນການຈັດຕັ້ງປະຕິບັດແຜນງານດ້ານພະລັງງານສະອາດແລະສິ່ງແວດລ້ອມ ເພື່ອຊ່ວຍເຫລືອບັນດາປະເທດສະມາຊິກທີ່ກຳລັງພັດທະນາ ໃນການສ້າງປະສິດທິພາບດ້ານພະລັງງານແລະພື້ນຖານເສດຖະກິດທີ່ມີການປ່ອຍອາຍກາກບອນຕ່ຳ. ສ່ວນປະກອບຫລັກຂອງແຜນງານແມ່ນການລິເລີ້ມປະສິດທິພາບດ້ານພະລັງງານ ເຊິ່ງມີການເປີດໂຕໃນປີ 2005 ເພື່ອຂະຫຍາຍການດຳເນີນງານຂອງເອດີບີ ໃນຂະແໜງພະລັງງານສະອາດໃຫ້ໄດ້ 1 ຕື້ໂດລາ ຕໍ່ປີ ໃນປີ 2008. ການສ້າງຕັ້ງກົນໄກການຮ່ວມມືໃນການສະໜອງທຶນໃຫ້ແກ່ໂຄງການພະລັງງານສະອາດໄດ້ຖືກຮັບຮອງເອົາໃນເດືອນເມສາ 2007 ເພື່ອ (i) ຊ່ວຍໃນການປະຕິບັດນຳໃຊ້ເຕັກໂນໂລຢີໃໝ່ທີ່ສະອາດກວ່າໃນບັນດາປະເທດສະມາຊິກ ທີ່ກຳລັງພັດທະນາ, (ii) ສະໜອງກົນໄກທາງດ້ານສິນເຊື່ອເພື່ອສະໜອງທຶນໃຫ້ແກ່ໂຄງການພະລັງງານສະອາດທີ່ໃຫຍ່ ແລະມີປະສິດທິພາບດ້ານພະລັງງານ, ແລະ (iii) ໃຫ້ການຊ່ວຍເຫລືອດ້ານວິຊາການແກ່ປະທດສະມາຊິກ ທີ່ກຳລັງພັດທະນາໃນຂົງເຂດພະລັງງານສະອາດ

---

[28] ເອດີບີ. 2006. *ການນຳໃຊ້ພະລັງງານສະອາດໃນອາຊີ ແລະປາຊີຟິກ*. ມານີລາ.

ແລະປະສິດທິພາບດ້ານພະລັງງານ. ຜ່ານການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນກ່ຽວກັບແຜນງານພະລັງງານສະອາດ ແລະປະສິດທິພາບດ້ານພະລັງງານ, ເອດີບີ ສະໜອງເງິນໃຫ້ 1.7 ຕື້ໂດລາ ໃນ ປີ 2008 ເຂົ້າໃນການລົງທຶນໃນພະລັງງານສະອາດ ເຊິ່ງເກີນຂາດໝາຍທີ່ວາງໄວ້ 1 ຕື້ໂດລາ. ເພື່ອຮັກສາຄຳໝັ້ນສັນຍາ ຂອງເອດີບີໃນການສົ່ງເສີມການລົງທຶນເຂົ້າໃນພະລັງງານສະອາດໄດ້ມີການນຳສະເໜີເປົ້າໝາຍໃໝ່ໃນການສະໜອງເງິນໃຫ້ແກ່ການລົງທຶນເຂົ້າໃນຂະແໜງການດັ່ງກ່າວ ແມ່ນຫລາຍກວ່າ 2 ຕື້ໂດລາຕໍ່ປີ ຈົນຮອດປີ 2003. ກອງທຶນກາກບອນຂອງອາຊີປາຊີຟິກ ທີ່ເປີດຕົວໃນປີ 2006 ແມ່ນກົນໄກການສະໜອງທຶນໃຫ້ແບບໃໝ່ອີກອັນໜຶ່ງພາຍໃຕ້ ຂໍ້ລິເລີ້ມຕະຫລາດອາຍກາກບອນ. ມັນເປັນການສະໜອງທຶນຮ່ວມກັນ, ໃຫ້ການຊ່ວຍເຫລືອດ້ານວິຊາການແລະການສະໜັບສະໜູນການຕະຫລາດດ້ານສິນເຊື່ອກາກບອນສຳລັບໂຄງການທີ່ມີທ່າແຮງໃນການຫລຸດຜ່ອນການປ່ອຍອາຍກາກບອນ.

45. ເພື່ອແກ້ໄຂບັນຫາປະສິດທິພາບດ້ານພະລັງງານໃນຂະແໜງການຂົນສົ່ງ ເອດີບີ ໄດ້ເປີດຂໍ້ລິເລີ້ມການຂົນສົ່ງແບບຍືນຍົງໃນປີ 2006. ຂໍ້ລິເລີ້ມນີ້ ໄດ້ໃຫ້ຄຳແນະນຳ ແລະການສະໜອງທຶນໃຫ້ແກ່ການຂົນສົ່ງທີ່ມີການປັບປຸງແປງ ແລະເຕັກໂນໂລຢີທີ່ສະອາດກວ່າ ເພື່ອຫລຸດຜ່ອນການປ່ອຍທາດອາຍແກັດສ໌ເຮືອນແກ້ວ ແລະຍານພະຫະນະອື່ນໆທີ່ທຳລາຍສະພາບອາກາດ. ໃນປະເພດຂອງພະລັງງານ, ຄວາມຮ້ອນແລະອາຍແກັດສ໌ມີຄວາມຕ້ອງການໃຫ້ມີຄວາມເອົາໃຈໃສ່ກ່ຽວກັບປະສິດທິພາບດ້ານພະລັງງານໃຫ້ຫລາຍຂຶ້ນກວ່ານີ້. ນອກຈາກການໃຫ້ການສະໜັບສະໜູນແກ່ໂຄງການປະສິດທິພາບດ້ານພະລັງງານແລ້ວ ຕ້ອງການໃຫ້ມີຂະບວນການໃນການໃຫ້ເຄື່ອງໝາຍແກ່ອຸປະກອນເຄື່ອງໄຟຟ້າແລະເຄື່ອງມືຕ່າງໆ ໄປພ້ອມໆກັບການພັດທະນາມາດຕະຖານການໃຊ້ພະລັງງານຕ່ຳສຸດ, ໃຫ້ຄວາມສະດວກໃນການສະໜອງທຶນແກ່ໂຄງການປະສິດທິພາບດ້ານພະລັງງານ ໂດຍຜ່ານກອງທຶນການປັບປຸງແປງໃໝ່ ແລະສະເພາະແລະການເພີ້ມຄວາມຮັບຮູ້. ການສະໜັບສະໜູນ ຕ້ອງມີເປົ້າໝາຍ ແລະສາມາດວັດແທກໄດ້ຕໍ່ການປະເມີນຜົນປະໂຫຍດທີ່ໄດ້ຮັບຢ່າງຈະແຈ້ງ.

### 2. ພະລັງງານທົດແທນ

46. ໃນປີ 2004, ແຫລ່ງພະລັງງານທົດແທນກວມເອົາ 13% ຂອງຄວາມຕ້ອງການພະລັງງານພື້ນຖານຂອງໂລກ, [29] ແຫຼ່ງພະລັງງານທົດແທນທີ່ໄວໄຟ [30] ມີສ່ວນແບ່ງສຳຄັນ (10%). ແຫລ່ງພະລັງງານທົດແທນລວມທັງຊີວະມວນທຳມະຊາດ (ພະລັງງານທົດແທນ ແລະສິ່ງເສດເຫລືອທີ່ໄວໄຟ, ພະລັງງານນ້ຳ, ແສງຕະເວັນ, ພະລັງງານລົມ, ທະເລແລະພະລັງງານຄວາມຮ້ອນ (ລວມທັງລະບົບປັ່ນທີ່ໃຊ້ອາຍຄວາມຮ້ອນເປັນແຮງດັດ). ໃນປະຈຸບັນຊີວະມວນທຳມະຊາດແມ່ນພະລັງງານທົດແທນ ທີ່ໃຫຍ່ກວ່າໝູ່ຍ້ອນວ່າບໍ່ມີການນຳໃຊ້ໃນທາງການຢ່າງກ້ວາງຂວາງໃນປະທດກຳລັງພັດທະນາ (ສ່ວນໃຫຍ່ ແມ່ນເພື່ອການປຸງແຕ່ງອາຫານ ແລະສ້າງຄວາມຮ້ອນເທົ່ານັ້ນ). ຊີວະມວນ ທຳມະຊາດແມ່ນກວມເອົາປະມານ 80% ຂອງແຫລ່ງພະລັງງານທົດແທນທັງໝົດ, ຮອງລົງມາແມ່ນພະລັງງານອາຍນ້ຳໃຫຍ່ຢູ່ທີ 17%. ສ່ວນແບ່ງຂອງແຫລ່ງພະລັງງານທົດແທນໃນຮູບແບບອື່ນໆແມ່ນນ້ອຍຫລາຍ. ໃນເອກະສານນີ້

---

[29] ອົງການພະລັງງານສາກົນ. 2006. *ຂໍ້ມູນດ້ານພະລັງງານທົດແທນ*. ປາຣີ.

[30] ພະລັງງານທົດແທນ ແລະຂີ້ເຫຍື້ອທີ່ໄວໄຟ ລວມມີຊີວະມວນທີ່ເປັນຂອງແຂງ ແລະຜະລິດຕະພັນຈາກສັດ, ອາຍແກັດສ໌ແລະທາດເຮວຈາກຊີວະມວນແລະອຸດສາຫະກຳ ແລະຂີ້ເຫຍື້ອຈາກຕົວເມືອງ.

ແຫລ່ງພະລັງງານທົດແທນຈະລວມເອົາພະລັງງານແສງຕາເວັນ, ພະລັງງານລົມ, ພະລັງງານຄວາມຮ້ອນໃຕ້ດິນ, ພະລັງງານນ້ຳ, ແຫລ່ງພະລັງງານຈາກທະເລ, ພະລັງງານຈາກຂີ້ເຫຍື້ອແລະພະລັງງານຈາກຊີວະມວນທຳມະຊາດ (ນອກເໜືອຈາກການນຳໃຊ້ພະລັງງານໃນປະຈຸບັນທີ່ບໍ່ແມ່ນເພື່ອການຄ້າ).

47. ເກືອບທຸກໆປະເທດສະມາຊິກທີ່ກຳລັງພັດທະນາ ໄດ້ນຳເຂົ້ານ້ຳມັນເຊື້ອໄຟເພື່ອຕອບສະໜອງຄວາມຕ້ອງການຂອງຕົນ. ເນື່ອງຈາກວ່າລາຄານ້ຳມັນເຊື້ອໄຟ ໄດ້ເພີ່ມຂຶ້ນຈາກການໃຊ້ຈ່າຍເງິນຕາຕ່າງປະເທດເພື່ອການນຳເຂົ້ານ້ຳມັນເຊື້ອໄຟ ໄດ້ເຮັດໃຫ້ການສູນເສຍໂອກາດທີ່ຈະນຳເຂົ້າສິນຄ້າສຳຄັນໆປະເພດອື່ນ. ໃນເມື່ອຜົນຜະລິດນ້ຳມັນເຊື້ອໄຟສ່ວນຫລາຍ ແມ່ນໄດ້ມາຈາກປະເທດຕາເວັນອອກກາງທີ່ມີແຕ່ເກີດການປະທະກັນ, ຫລາຍໆປະເທດຕ້ອງເພີ້ມພູນຄວາມປອດໄພດ້ານພະລັງງານຂອງຕົນ. ນີ້ຮຽກຮ້ອງໃຫ້ມີຫລາຍມາດຕະການລວມທັງການນຳໃຊ້ພະລັງງານທີ່ມີປະສິດທິພາບແລະຂະຫຍາຍແຫລ່ງພະລັງງານໃຫ້ຫລາຍຂຶ້ນ. ພະລັງງານທົດແທນສາມາດຊ່ວຍເພີ້ມແຫລ່ງສະໜອງພະລັງງານຫລາກຫລາຍຂື້ນໃນຂະນະທີ່ຍັງສາມາດສະໜອງພະລັງງານທີ່ສະອາດ, ມີຄວາມຍືນຍົງ, ແລະສ້າງອາຍແກັດສ໌ເຮືອນແກ້ວໜ້ອຍ. ນອກຈາກນັ້ນ, ພະລັງງານທົດແທນຍັງເປັນທາງເລືອກທີ່ເໝາະສົມສຳລັບການກະຈາຍລະບົບພະລັງງານ.

48. ການພັດທະນາແຫລ່ງພະລັງງານທົດແທນໃນເຂດຊົນນະບົດ ສາມາດປະກອບສ່ວນໃຫ້ແກ່ຜະລິດຕະຜົນທາງກະສິກຳ, ສຸຂະພາບ, ການສຶກສາ, ການສື່ສານ, ວິສາຫະກິດຂະໜາດນ້ອຍແລະຄຸນນະພາບຂອງການດຳລົງຊີວິດທີ່ດີກ່ວາເກົ່າ. ຂາດການເຂົ້າເຖິງພະລັງງານທີ່ມີຮູບແບບທີ່ທັນສະໄໝຢູ່ໃນຂົງເຂດອາຊີ ແລະປາຊີຟິກປະມານ 1 ຕື້ຄົນ ອາດສາມາດແກ້ໄຂໄດ້ເປັນ ສ່ວນໃຫຍ່ໂດຍ ແຫລ່ງພະ ລັງງານ ທີມີປະສິທິຜົນຕໍ່ຄ່າໃຊ້ຈ່າຍ ເຊັ່ນ: ລະບົບແຕ່ງກິນທີທັນສະໄໝທີ່ນຳໃຊ້ຊີວະມວນທຳມະຊາດແລະຕ່ານາງໄຟຟ້າທີ່ນ້ອຍ. ຕົນທຶນຂອງການດຳເນີນງານຂອງພະລັງງານທົດແທນແມ່ນຕ່ຳ, ບໍ່ຄືກັບເຊື້ອໄຟແຮ່ທາດ, ບໍ່ຂື້ນກັບການຂຶ້ນລົງຂອງລາຄາ. ຍິ່ງໄປກວ່ານັ້ນກໍ່ບໍ່ມີການ ຮຽກຮ້ອງໃຫ້ມີການຂະຫຍາຍຕ່າໜ່າງ ເຊິ່ງຊ່ວຍໃຫ້ປະຫຍັດຄ່າໃຊ້ຈ່າຍໃນການສ້າງສາຍສົ່ງ. ລະບົບການແຈກຈາຍພະລັງງານຍັງສາມາດເປັນທາງອອກສຳລັບເຂດຊົນນະບົດຂອງບາງປະເທດ. ສະນັ້ນ, ນະໂຍບາຍທີ່ ເໝາະສົມຈຳເປັນຕ້ອງວາງຂອບທີ່ສົ່ງເສີມການພັດທະນາພະລັງງານທົດແທນ ເຊິ່ງຮຽກຮ້ອງການສະໜັບສະໜູນໃນໄລຍະຍາວ. ບາງປະເທດສະມາຊິກທີ່ກຳລັງພັດທະນາ ແມ່ນມີນະໂຍບາຍທີ່ເຂັ້ມງວດໄວ້ຮອງຮັບແລ້ວ ຕ້ອງການສ່ວນແບ່ງຕ່ຳສຸດຂອງພະລັງງານທົດແທນໃນຕ່າໜາງໄຟຟ້າພາຍໃຕ້ເວລາທີ່ຖືກກຳນົດ. ການຈັດຕັ້ງປະຕິບັດນະໂຍບາຍເຫລົ່ານີ້ຈຳເປັນຕ້ອງໄດ້ຮັບການສະໜັບສະໜູນ.

49. ນ້ຳມັນເຊື້ອໄຟຊີວະພາບ ກຳລັງດຶງດູດຄວາມສົນໃຈໃນທົ່ວໂລກສຳລັບຄວາມເປັນໄປໄດ້ຂອງພວກເຂົາເຂົ້າໃນການແກ້ໄຂຄວາມໝັ້ນຄົງດ້ານພະລັງງານ ແລະການປ່ຽນແປງສະພາບອາກາດໂດຍປ່ຽນແທນນ້ຳມັນແອັດຊັງແລະກາຊວນໃນຂະແໜງການຂົນສົ່ງ. ປະເທດສະມາຊິກ ທີ່ກຳລັງພັດທະນາ ກໍ່ຍັງເຫັນນ້ຳມັນເຊື້ອໄຟຊີວະພາບເປັນທາງອອກໃນການກະຕຸ້ນການພັດທະນາຊົນນະບົດ, ສ້າງວຽກເຮັດງານທຳ ແລະຮັກສາເງິນຕາຕ່າງປະເທດໄວ້. ແຕ່ວ່າການພັດທະນານ້ຳມັນເຊື້ອໄຟຊີວະພາບ ເລີ້ມມີບາງບັນຫາ. ຍ້ອນວ່າການເພີ້ມຂຶ້ນຂອງຄວາມຕ້ອງການ ນ້ຳມັນເຊື້ອໄຟຊີວະພາບ ຊາວກະສິກຳມີສິ່ງຈູງໃຈດ້ານເສດຖະກິດຫລາຍຂຶ້ນ ທີ່ຈະປູກພືດສຳລັບໄປນຳໃຊ້ເປັນນ້ຳມັນເຊື້ອໄຟຊີວະພາບແທນທີ່ຈະປູກພືດເພື່ອການບໍລິໂພກ. ອັນນີ້ອາດຈະພາໃຫ້ເກີດມີບັນຫາດ້ານຄວາມໝັ້ນຄົງດ້ານອາ

ທານຜົນຜະລິດດ້ານສະບຽງອາຫານກໍ່ຫລຸດລົງແລະລາຄາເພີ້ມຂື້ນ. ຜະລິດຕະພັນຂອງນ້ຳມັນເຊື້ອໄຟຊີວະພາບຈາກວັດຖຸດິບຕ້ອງການພະລັງງານເຂົ້າເປັນສ່ວນປະກອບ (ການປູກຝັງ, ການຂົນສົ່ງ, ການປ່ຽນສະພາບໃຫ້ເປັນຜະລິດຕະພັນແລະຜະລິດຕະພັນປຸ່ຍ, ຢາຂ້າແມ້ງໄມແລະຢາຂ້າຫຍ້າ). ຄວາມສົມດຸນພະລັງງານສຸດທິລະຫວ່າງ ການນຳໃຊ້ພະລັງງານເຂົ້າໃນການຜະລິດນ້ຳມັນເຊື້ອໄຟຊີວະພາບ ແລະ ຜົນໄດ້ຮັບພະລັງງານຈາກນ້ຳມັນເຊື້ອໄຟຊີວະພາບສຳລັບປະເພດຂອງພືດທີ່ແຕກຕ່າງກັນ ແມ່ນມີຄວາມສຳຄັນຫລາຍ. ຜົນກະທົບສຸດທິກ່ຽວກັບການປ່ອຍອາຍແກັດສ໌ເຮືອນແກ້ວຈາກການປ່ຽນແທນນ້ຳມັນເຊື້ອໄຟທົ່ວໄປ ກັບນ້ຳມັນເຊື້ອໄຟຊີວະພາບ ແມ່ນຂື້ນກັບຫລາຍປັດໃຈ: (i) ປະເພດຂອງພືດ, (ii) ຈຳນວນ ແລະ ປະເພດຂອງພະລັງງານທີ່ຢູ່ໃນປຸ່ຍ ສິ່ງປະກອບສ່ວນອື່ນໆ ທີ່ໃຊ້ເຂົ້າໃນການປູກພືດ, (iii) ພະລັງງານທີ່ໃຊ້ເຂົ້າໃນການເກັບກ່ຽວແລະຂົນສົ່ງຜົນຜະລິດກະສິກຳ, (iv) ທາງເລືອກອື່ນຂອງການນຳໃຊ້ທີດິນ (ໂດຍສະເພາະການປ່ຽນປ່າໃຫ້ມາເປັນດິນປູກຝັງ ເພື່ອຜະລິດນ້ຳມັນເຊື້ອໄຟຊີວະພາບ) ແລະ (v) ປະລິມາດຂອງພະລັງງານມູນໃຊ້ເຂົ້າໃນຂະບວນການປ່ຽນພືດມາເປັນເຊື້ອໄຟ. ນອກຈາກນັ້ນ ການປ່ຽນແປງໃຫຍ່ໃນການນຳໃຊ້ດິນປູກຝັງສາມາດມີຜົນກະທົບຢ່າງຮ້າຍແຮງ ແກ່ລະບົບນິເວດວິທະຍາຢູ່ໃນທ້ອງຖິ່ນແລະພາກພື້ນທີ່ອາດຈະມີຜົນສະທ້ອນທັງທາງບວກແລະທາງລົບແກ່ພັນໄມ້ແລະສັດໃນເຂດນັ້ນໆ.

50. ການພັດທະນາພະລັງງານທົນແທນແມ່ນມີອຸປະສັກເນື່ອງຈາກວ່າຕົ້ນທຶນເບື້ອງຕົ້ນຂ້ອນຂ້າງສູງ. ແຕ່ວ່າຖ້າຫາກວ່າຕະຫລາດແລະຂະໜາດຂອງເສດຖະກິດທີ່ໃຫຍ່ກວ່າລາຄາຂອງອຸປະກອນສຳລັບພະລັງງານທົດແທນ ໄດ້ຫລຸດລົງໃນບໍ່ດົນມານີ້ແລະລາຄາກໍ່ຂ້ອນຂ້າງໃກ້ຄຽງກັບເຕັກໂນໂລຢີຂອງພະລັງງານແຮ່ທາດ ໂດຍສະເພາະເມື່ອວົງຈອນຂອງຊີວິດແລະຄວາມໄດ້ປຽບທາງດ້ານສິ່ງແວດລ້ອມ ແລະ ລາຍໄດ້ຈາກສິດຂອງການປ່ອຍອາຍກາກບອນແມ່ນໄດ້ຮັບການພິຈາລະນາ. ໃນຄວາມເປັນຈິງ ຫລາຍເຕັກໂນໂລຊີພະລັງງານທົດແທນແມ່ນ ຫລື ອາດຈະມີໃນອານາຄົດອັນໃກ້ນີ້, ປະຫຍັດກວ່າຖ້າສົມທຽບກັບບາງເຕັກໂນໂລຢີຂອງພະລັງງານເຊື້ອໄຟແຮ່ທາດ. ຖ້າວ່າໂລກມີຄວາມເປັນຫ່ວງກ່ຽກັບການປ່ອຍອາຍກາກບອນກໍ່ໃຫ້ເກີດມີການບັງຂັບເກັບພາສີອາຍກາກບອນຫລັງຈາກນັ້ນ ພະລັງງານທົດແທນຈະມີທ່າແຮງໃນການແຂ່ງຂັນຫລາຍຂື້ນກວ່າເກົ່າ.

51. ໃນຂະນະທີ່ແຫລ່ງພະລັງງານທົດແທນເຊັ່ນພະລັງງານລົມ, ນ້ຳແລະແສງຕາເວັນແມ່ນມີຫຼາກຫລາຍ ເຊິ່ງມີຂໍ້ຫຍຸ້ງຫຍາກທາງດ້ານເສດຖະກິດແລະວິຊາການໃນການພັດທະນາພະລັງງານທົດແທນ ລວມທັງຄວາມບໍ່ສະໝ່ຳສະເໝີຂອງພະລັງທຳມະຊາດຈາກແຫລ່ງພະລັງງານທົດແທນ. ເຂື່ອນໄຟຟ້ານ້ຳຕົກ ແມ່ນຂື້ນກັບການມີນ້ຳແລະພະລັງງານລົມແລະແສງຕາເວັນ ທີ່ຂື້ນກັບເງື່ອນໄຂຂອງສະພາບອາກາດ. ພະລັງງານທົດແທນຂາດຄວາມແນ່ນອນ ທີ່ຕ້ອງການສຳລັບການດຳເນີນຂອງຕະໜ່າງໄຟຟ້າໄດ້ກໍ່ຕໍ່ເມື່ອມີເຄື່ອງເກັບພະລັງງານໄວ້ທີ່ມີຂາຍກັນເຊັ່ນ ເຊວພະລັງງານ. ແຫລ່ງຂອງພະລັງງານທົດແທນຈາກດວງຕາເວັນ, ລົມ, ແລະຄື້ນທະເລໃນປະຈຸບັນແມ່ນຍັງບໍ່ເໝາະສົມໂດຍກົງທີ່ຈະສະໜອງການເດີນພະລັງງານໄຟຟ້າແບບສະໝ່ຳສະເໝີ ຫລື ການເດີນພະລັງງານເວລາມີຄວາມຕ້ອງການສູງ, ການເກັບຮັກສາພະລັງງານຍັງເປັນບັນຫາທີ່ບັນທອນການນຳໃຊ້ພະລັງງານທົດແທນໃຫ້ເປັນລະບົບພະລັງງານດຽວ. ຄວາມບໍ່ແນ່ນອນດ້ານສະພາບດິນຟ້າອາກາດຕ້ອງການໃຫ້ມີການສຳຮອງຫລາຍເກີນໄປ; ບາງຄົນຍັງເຊື່ອວ່າຈຳເປັນຕ້ອງການໃຫ້ມີການສຳຮອງໄວ້ 100% ແຕ່ຜູ້ສະໜັບສະໜູນດ້ານພະລັງງານທົດແທນບໍ່ເຫັນດີຕໍ່ຄຳຄິດເຫັນດັ່ງກ່າວ. ພະລັງງານແສງອາທິດແມ່ນເໝາະສົມແກ່ຈຸດປະສົງຂອງການສ້າງຄວາມຮ້ອນແຕ່ທ່າແຮງໃນການສ້າງກະແສໄຟຟ້າແມ່ນ "ຍັງມີຂໍ້ຈຳກັດຢູ່ເນື່ອງຈາກວ່າບໍ່ມີຄວາມສະໝ່ຳສະເໝີທີ່ກ່ຽວກັບສະພາບອາກາດ ແລະເວລາກາງຄືນສິ່ງໃຫ້ເປັນຜົນ

ເຊິ່ງເປັນປັດໃຈໃນດ້ານຂີດຄວາມອາດສາມາດຕໍ່າ. ເຊວພະລັງງານແສງອາທິດ ແມ່ນມີຄວາມເໝາະສົມກວ່າເນື່ອງຈາກມີການຕິດຕັ້ງສະຖານທີ່ເກັບພະລັງງານໄວ້ມານໍາ. ການດໍາເນີນການຂອງກັງຫັນລົມ ແມ່ນມີຈໍາກັດກັບຂອບເຂດຂອງຄວາມໄວຂອງລົມແລະຕ້ອງການໃຫ້ມີການສໍາຮອງ ເພື່ອຮັບປະກັນການສະໜອງກະແສໄຟຟ້າໃນເວລາສະພາບອາກາດບໍ່ເອື້ອອໍານວຍ.

52. ມີການດໍາເນີນການຄົ້ນຄ້ວາເພື່ອພັດທະນາລະບົບ ທີ່ສາມາດນໍາໃຊ້ເຂົ້າໃນຕາໜ່າງໄຟຟ້າທີ່ປັດສະຈາກການສູນເສຍໃດໆເພີ່ມເຕີມ, ເຊິ່ງຈະອະນຸຍາດໃຫ້ມີການປະກອບສ່ວນຈາກພະລັງງານແສງອາທິດແລະລົມເພີ່ມຢ່າງມະຫາສານ. ການເຂົ້າມາມີສ່ວນຮ່ວມຂອງພາກເອກະຊົນແມ່ນມີຄວາມຈໍາເປັນຕໍ່ກັບການພັດທະນາພະລັງງານທົດແທນ. ໃນບາງປະເທດສະມາຊິກທີ່ກໍາລັງພັດທະນາ ພາກເອກະຊົນໄດ້ເຂົ້າມາມີສ່ວນຮ່ວມໃນການສົ່ງເສີມພະລັງງານທົດແທນ. ຕ້ອງການໃຫ້ມີການສົ່ງເສີມກອບນະໂຍບາຍທີ່ເປັນໄປໄດ້ ເພື່ອຊຸກຍູ້ໃຫ້ພາກເອກະຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາພະລັງງານທົດແທນ.

## ກ. ນ້ຳມັນ

53. ທ່າອ່ຽງຂອງການນໍາໃຊ້ນ້ຳມັນເຊື້ອໄຟ ແມ່ນໄປຄຽງຄູ່ກັບການຂະຫຍາຍຕົວຂອງເສດຖະກິດ. ອີງການພະລັງງານສາກົນໄດ້ຄາດຄະເນວ່າ ຄວາມຕ້ອງການພະລັງງານພື້ນຖານຈະເພີ່ມຂຶ້ນຈາກ 85 ລ້ານບາເຣວຕໍ່ມື້ ໃນປີ 2007 ຫາ 106 ລ້ານບາເຣວຕໍ່ມື້ ໃນປີ 2030, ສະເລ່ຍການເພີ່ມຂຶ້ນຕໍ່ປີ ແມ່ນ 1.0%. ຄວາມຕ້ອງການນ້ຳມັນເຊື້ອໄຟ ຈະສືບຕໍ່ເພີ່ມຂຶ້ນຢ່າງໄວວາ ຢູ່ໃນປະເທດທີ່ບໍ່ແມ່ນສະມາຊິກຂອງອົງການຮ່ວມມືທາວດ້ານເສດຖະກິດແລະການພັດທະນາທີ່ມີການເພີ່ມຂຶ້ນສະເລ່ຍຕໍ່ປີ 2.2%. ການນໍາໃຊ້ນ້ຳມັນເຊື້ອໄຟ ຂອງສາທລະນາລັດປະຊາຊົນຈີນ ຄາດວ່າຈະເພີ່ມຂຶ້ນ 3.5% ຕໍ່ປີຈາກ 2007 ຫາ 2030. ພາກການຂົນສົ່ງຈະກວມເອົາຫລາຍກວ່າເຄິ່ງໜຶ່ງຂອງການຊົມໃຊ້ນ້ຳມັນເຊື້ອໄຟແລະສ່ວນໃຫຍ່ ແມ່ນມີຜົນເນື່ອງມາຈາກຄວາມຕ້ອງການນ້ຳມັນເຊື້ອໄຟຂອງການຂົນສົ່ງທາງບົກທີ່ຫລາຍກວ່າ. ຊ່ຽວຊານໄດ້ປະເມີນວ່າ ລາຄານ້ຳມັນເລີ້ມຈາກປີ 2006 ຈະບໍ່ມີຄວາມຍືນຍົງໃນໄລຍະຍາວແລະຫລັກການທາງຕະຫລາດອາດສາມາດດຶງລາຄານ້ຳມັນເຊື້ອໄຟລົງ. ແຕ່ວ່າລາຄານ້ຳມັນຂ້ອນຂ້າງຈະຜັນຜວນ ແລະບາງປັດໃຈສະເພາະ (ການລົງທຶນທີ່ຕໍ່າກວ່າທີ່ຕ້ອງການພື້ນຖານໂຄງລ່າງຂອງພາກສະໜອງ, ຄວາມກົດດັນພາກຄວາມຕ້ອງການ, ການຂາດແຄນຜະລິດຕະພັນແລະປັດໃຈດ້ານພູມສາດດ້ານການເມືອງ) ສາມາດສ້າງຄວາມກົດດັນໃນການຈະຮັກສາລາຄານ້ຳມັນເຊື້ອໄຟໃຫ້ຢູ່ສູງໄວ້.

54. ອີງຕາມອົງການພະລັງງານສາກົນ (ໝາຍເຫດ 14), ການທີ່ຮັກສາລາຄານ້ຳມັນໃຫ້ຢູ່ສູງ ຈະຊ່ວຍຊຸກຍູ້ໃຫ້ຜູ້ຊົມໃຊ້ຫລຸດການນໍາໃຊ້ລົງ, ປ່ຽນໄປໃຊ້ເຊື້ອໄຟປະເພດອື່ນ, ຫລຸດຜ່ອນການຟຸມເຟືອຍ, ໃຊ້ການບໍລິການດ້ານພະລັງງານໜ້ອຍລົງແລະນໍາໃຊ້ເຕັກໂນໂລຢີທີ່ມີປະສິດທິພາບດ້ານພະລັງງານຫລາຍຂຶ້ນ. ເນື່ອການນໍາເຂົ້ານ້ຳມັນເຊື້ອໄຟມີຜົນສະທ້ອນຫລາຍຕໍ່ກັບຄວາມດຸນດ່ຽງງົບປະມານຂອງລັດ ມັນມີຄວາມຈໍາເປັນທີ່ຈະຕ້ອງເວົ້າເຖິງບັນຫານີ້ ໃນກອບເວລາໄລຍະຍາວ. ມີບາງທາງເລືອກດັ່ງຕໍ່ໄປນ: (i) ປະຫຍັດຫລືຫລຸດຜ່ອນການຊົມໃຊ້ພະລັງງານ, (ii) ສໍາຫລວດແລະລົງທຶນເຂົ້າໃນແຫລ່ງພະລັງງານທາງເລືອກ ແລະພະລັງງານທົດແທນ(ລວມທັງນ້ຳມັນເຊື້ອໄຟຊີວະພາບ) ແລະເຕັກໂນໂລຢີທີ່ມີປະສິດທິພາບດ້ານພະລັງງານ, (iii) ສົ່ງເສີມການວາງແຜນການຂົນສົ່ງໃຫ້ມີປະສິດທິຜົນ,(iv) ນໍາສະ

ເໜີເຄື່ອງຈັກທີ່ມີປະສິດທິພາບດ້ານພະລັງງານແກ່ຍານພາຫະນະຂົນສົ່ງ ແລະ (v) ເປັນໄປໄດ້ທີ່ຈະມີການຈັດວາງລະບຽບອາກອນແກ່ຍານພາຫະນະປະເພດໃຫຍ່. ເຖິງແມ່ນວ່າ ນ້ຳມັນເຊື້ອໄຟຂອງໂລກແມ່ນຮ່ວມກັນຢູ່ຕະເວັນອອກກາງແຕ່ວ່າບາງປະເທດສະມາຊິກ ທີ່ກຳລັງພັດທະນາກໍ່ຄົ້ນພົບນ້ຳມັນຢູ່ພາຍໃນຂອບເຂດພູມີປະເທດຂອງຕົນເຊິ່ງຈະຊ່ວຍຫລຸດຜ່ອນການໄຫລອອກຂອງເງິນຕາຕ່າງປະເທດໄດ້ສ່ວນໃດສ່ວນໜຶ່ງ. ບາງປະເທດສະມາຊິກທີ່ກຳລັງພັດທະນາທີ່ມີຄວາມຕ້ອງການນ້ຳມັນເຊື້ອໄຟສູງ ກໍ່ໄດ້ມີການຊອກຫາການຮ່ວມທຶນອອກນອກພາກພື້ນຢ່າງແຂງຂັນໃນການສຳຫລວດນ້ຳມັນເຊື້ອໄຟ.

55. ປະຈຸບັນນີ້, ເອດີບີ ບໍ່ໄດ້ໃຫ້ການສະໜັບສະໜູນໃນການສຳຫລວດບໍ່ນ້ຳມັນໃດໆ ເນື່ອງຈາກວ່າບັນຫາຂອງການເກີດມີຄວາມສ່ຽງ. ນ້ຳມັນແມ່ນສິນຄ້າທີ່ມີການຊື້ຂາຍຢູ່ໃນຕະຫລາດສາກົນເຊິ່ງເປັນຂະແໜງທີ່ໄດ້ມີພາກເອກະຊົນມີສ່ວນຮ່ວມ ໂດຍທົ່ວໄປແລ້ວ ເອດີບີ ບໍ່ຄວນໃຫ້ການສະໜັບສະໜູນທຶນແກ່ໂຄງການພັດທະນາບໍ່ນ້ຳມັນ. ຖ້າມີຄວາມຈຳເປັນ ເອດີບີ ຈະພິຈາລະນາໃຫ້ການຊ່ວຍເຫລືອແບບຄັດເລືອກ ເພື່ອໃຫ້ການພັດທະນາເພີ່ມແລະຕ້ອງເປັນບໍ່ນ້ຳມັນທີ່ພິສູດແລ້ວໂດຍມີເງື່ອນໄຂທາງເສດຖະກິດດີ. ເມື່ອບໍ່ດົນມານີ້ ໄດ້ມີການເພີ່ມຂຶ້ນຂອງລາຄານ້ຳມັນ, ບາງປະເທດສະມາຊິກທີ່ກຳລັງພັດທະນາ ກຳລັງມີການສຳຫລວດແລະພັດທະນາບໍ່ນ້ຳມັນພາຍໃນປະເທດຂອງຕົນທີ່ປະສົບຜົນສຳເລັດບາງບ່ອນ. ເຖິງແມ່ນວ່າລັດຖະບານແລະພາກເອກະຊົນຈະມີສ່ວນຮ່ວມຢ່າງຕັ້ງໜ້າໃນການສຳຫລວດນ້ຳມັນເຊື້ອໄຟ ມີຄວາມຕ້ອງການໃຫ້ມີການສະໜັບສະໜູນໃນການຊວ່ຍເຫລືອດ້ານນະໂຍບາຍເຂົ້າໃນການບໍລິຫານຊັບພະຍາກອນນ້ຳມັນ, ພັດທະນາບໍ່ນ້ຳມັນ, ໂຮງກັ່ນ, ການຂົນສົ່ງ, ການແຈກຈາຍ ແລະການພັດທະນານະໂຍບາຍດ້ານອັດຕາຄາບໍລິການແລະຄາມຮັບຜິດຊອບ. ການສະໜັບສະໜູນຢ່າງຕັ້ງໜ້າ ໃຫ້ແກ່ການຄ້າໃນພາກພື້ນກໍ່ຍັງມີຄວາມຈຳເປັນ.

## ຂ. ອາຍແກັດສ໌ທຳມະຊາດ

56. ອາຍແກັດສ໌ທຳມະຊາດແມ່ນນ້ຳມັນເຊື້ອໄຟແຮ່ທາດທີ່ມີການປ່ອຍອາຍເສຍຕ່ຳ. ການຊົມໃຊ້ອາຍແກັດສ໌ທຳມະຊາດຄາດວ່າຈະເພີ້ມຂຶ້ນໃນທົ່ວໂລກ 1.8% ຕໍ່ປີ ຈາກປີ 2006 ຫາ 2030 ຈາກ 2.9 ໂກດແມັດກ້ອນ ຫາ 4.4 ໂກດແມັດກ້ອນ (ໝາຍເຫດ 4). ຄັງສຳຮອງອາຍແກັດສ໌ທຳມະຊາດທີ່ໄດ້ຮັບການພິເສດແລ້ວ ໃນປີ 2007 ແມ່ນ 179 ໂກດແມັດກ້ອນ, ຊຶ່ງພຽງພໍຕາມການຄາດຄະເນຄວາມຕ້ອງການພາຍໃນ 60 ປີຂ້າງໜ້າອີງຕາມລະດັບການຜະລິດໃນປະຈຸບັນ. ຮຽກຮ້ອງໃຫ້ມີການລົງທຶນປະມານ 5.5 ໂກດໂດລາ ໃນທົ່ວໂລກ. ໃນຂະນະທີ່ທະວີບອາເມລິກາແລະຢູໂຣບຈະເປັນຕະຫລາດໃຫຍ່ສຸດ ອັດຕາຄວາມຕ້ອງການໃນປະເທດກຳລັງພັດທະນາອາຊີແມ່ນຈະສູງກວ່າອັດຕາສະເລັ່ຍຂອງໂລກ. ຂະແໜງພະລັງງານ ຈະກວມເອົາຫລາຍກວ່າເຄິ່ງໜຶ່ງ ຂອງການເພີ້ມຂຶ້ນຂອງຄວາມຕ້ອງການອາຍແກັດສ໌ໃນໂລກ. ເຕັກໂນໂລຢີ ທີ່ເກີດຂຶ້ນໃໝ່ເຊັ່ນໂຮງງານທີ່ປ່ຽນອາຍແກັດສ໌ໃຫ້ເປັນທາດເຣວ ຄາດວ່າຈະເປັນຕະຫລາດສຳຄັນໃຫ້ແກ່ພະລັງງານທີ່ໃຊ້ອາຍແກັດສ໌. ການຄ້າອາຍແກັດສ໌ໃນພາກພື້ນ ຍັງສືບຕໍ່ນຳໃຊ້ການຂົນສົ່ງຜ່ານທໍ່ແກັດສ໌ທີ່ເປັນທາງເລືອກທີ່ນິຍົມກັນ. ສຳລັບການຄ້າອາຍແກັດທຳມະຊາດເຣວ ຄາດວ່າຈະເພີ້ມຂຶ້ນທີ່ຈະເຮັດໃຫ້ເສດຖະກິດຂອງອາຊີພາກັນເຊົ່າເຮືອກຳປັ່ນຂະໜາດໃຫຍ່, ສ້າງສາງເກັບມ້ຽນ ແລະພັດທະນາສິ່ງອຳນວຍຄວາມສະດວກຕ່າງໆ. ການຄາດຄະເນຕະຫລາດອາຍແກັດສ໌ ຄອນຂ້າງຈະໄປໃນທິດທາງດີ ຍ້ອນວ່າອາດຈະມີການໃຊ້ທົດແທນນ້ຳມັນແອດຊັງທີ່ໃຊ້ໃນຍານພາຫະນະແລະເຄື່ອງເຮັດຄວາມຮ້ອນ ເພື່ອຈະຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ.

ຕ້ອງການໃຫ້ມີການສະໜອງທຶນຫລາຍພໍສົມຄວນໃນການພັດທະນາບໍ່ອາຍແກັດສ໌, ການກັ່ນກອງ, ການດຳເນີນການ, ການເກັບມ້ຽນ, ການຂົນສົ່ງແລະເຄືອຂ່າຍການແຈກຈ່າຍແລະການຄ້າໃນພາກພື້ນ. ເອດີບີ ຈະໃຫ້ການສະໜັບສະໜູນດ້ານຄວາມປອດໄພແລະປັບປຸງປະສິດທິພາບໃນການຂົນສົ່ງນ້ຳມັນເຊື້ອໄຟແລະອາຍແກັດສ໌ແລະສາງເກັບອາຍແກັດສ໌ເຮືອແລະຍານພາຫະນະຂົນສົ່ງ.

## ຄ. ຖ່ານຫີນ

57. ຖ່ານຫີນຍັງ ຈະສືບຕໍ່ເປັນແຫລ່ງພະລັງງານພື້ນຖານ ທີ່ມີສ່ວນແບ່ງຂອງແຫລ່ງພະລັງງານທັງໝົດ 29% ໃນປີ 2030 (ໝາຍເຫດ 4). ຄວາມຕ້ອງການຖ່ານຫີນຈະເພີ່ມຂຶ້ນໂດຍພື້ນຖານ ເນື່ອງຈາກວ່າຄວາມຕ້ອງການດ້ານພະລັງງານຂອງອາຊີ ໂດຍສະເພາະ ແມ່ນສາທາລະນາລັດ ປະຊາຊົນຈີນ ແລະ ປະເທດອິນເດຍ ເຊິ່ງທັງສອງປະເທດມີຖ່ານຫີນສຳຮອງເປັນຈຳນວນຫລາຍ. ການສ້າງກະແສໄຟຟ້າ ແມ່ນຈະກວມເອົາປະມານ 80% ຂອງຄວາມຕ້ອງການຖ່ານຫີນໃນໂລກ. ຄວາມເປັນຫ່ວງຂອງຄວາມໝັ້ນຄົງດ້ານພະລັງງານ ໄດ້ເຮັດໃຫ້ຄວາມສົນໃຈໃນຖ່ານຫີນຫລາຍຂຶ້ນຍ້ອນມັນມີຢູ່ຫລາຍບ່ອນໃນໂລກ. ບໍ່ຄືກັນກັບນ້ຳມັນເຊື້ອໄຟ ແລະອາຍແກັດສ໌, ຖ່ານຫີນສຳຮອງທີ່ພິສູດແລ້ວແມ່ນມີຢູ່ຫລາຍ ແລະມີຢູ່ທົ່ວໄປຢ່າງກວ້າງຂວາງ. ຖ່ານຫີນ ກໍ່ງ່າຍຕໍ່ການຂົນສົ່ງ ແລະເກັບຮັກສາ ແລະບໍ່ໄດ້ຮັບຜົນກະທົບຈາກການປ່ຽນແປງສະພາບອາກາດ. ແຕ່ຢ່າງໃດກໍ່ຕາມ, ຖ່ານຫີນແລະການນຳໃຊ້ ມີຜົນສະທ້ອນຕໍ່ສະພາບແວດລ້ອມຢ່າງຮ້າຍແຮງຫລາຍດ້ານລວມທັງອັດຕາການປ່ອຍອາຍກາກບອນໃນການໃຊ້ເຊື້ອໄຟເຂົ້າໃນການສ້າງກະແສໄຟຟ້າ.

58. ຖ່ານຫີນແມ່ນສິນຄ້າທີ່ມີການຊື້ຂາຍຢູ່ໃນຕະຫລາດສາກົນ ແລະການພັດທະນາບໍ່ຖ່ານຫີນ ກໍ່ເກີດຂຶ້ນບົນພື້ນຖານທີ່ມີການສະໜອງເງິນໃຫ້ໃນທາງການຄ້າ. ຜົນຜະລິດຈາກບໍ່ຖ່ານຫີນ ໄດ້ມີການຊື້ຂາຍຢູ່ໃນຕະຫລາດເປີດ, ການໃຫ້ແກ່ພໍ່ຄ້າຂາຍຍົກຂະໜາດນ້ອຍ ຫລື ອຸດສາຫະກຳ ຫລື ຂ້າຍໃຫ້ໂຮງງານສະເພາະເຊັ່ນ ໂຮງງານພະລັງງານໄຟຟ້າຫລືໂຮງງານລອມໂລຫະທີ່ມີສັນຍາການຊື້ຂາຍທີ່ສາມາດປະຕິບັດໄດ້ໃນລະດັບສາກົນ. ສະຖາບັນເຊັ່ນທະນາຄານພັດທະນາອາຊີແມ່ນມີບົດບາດນ້ອຍເຂົ້າໃນການພັດທະນາຂະແໜງການດັ່ງກ່າວ. ໃນບາງກໍລະນີ, ອຸດສາຫະກຳຖ່ານຫີນຢູ່ໃນປະເທດສະມາຊິກທີ່ກຳລັງພັດທະນາ ແມ່ນອາດຈະຢູ່ໃນຈຸດທາກໍ່ເລີ້ມຂຶ້ນໃໝ່ ທີ່ບໍ່ມີການກຳນົດສະພາບແວດລ້ອມທາງທຸລະກິດຢ່າງຊັດເຈນລວມທັງການພັດທະນາໃນທາງການຄ້າຂອງບໍ່ຖ່ານຫີນໃໝ່ ແລະການນຳໃຊ້ຜົນຜະລິດນັ້ນ, ເຮັດໃຫ້ການສະໜອງທຶນໃນທາງການຄ້າ ມີຂໍ້ຫຍຸ້ງຫຍາກທີ່ຈະດຶງດູດການສະໜັບສະໜູນຈາກທະນາຄານພັດທະນາຫລາຍຝ່າຍ. ການພັດທະນາໃນຂະແໜງຖ່ານຫີນໃນປະເທດສະມາຊິກທີ່ກຳລັງພັດທະນາອາດມີຄວາມຈຳເປັນສຳລັບການພັດທະນາໄຟຟ້າແລະຄວາມໝັ້ນຄົງດ້ານພະລັງງານພາຍໃນປະເທດ. ການໃຫ້ການຊ່ວຍເຫລືອຈາກສະຖາບັນການເງິນເພື່ອການພັດທະນາເຊັ່ນວ່າ ເອດີບີ ອາດຈະຍັງມີຄວາມຈຳເປັນທີ່ຈະຕັ້ງມາດຕະຖານດ້ານຄວາມປອດໄພຂອງບໍ່ຖ່ານຫີນ ໄປພ້ອມກັນກັບການປ້ອງກັນດ້ານສິ່ງແວດລ້ອມ ແລະສັງຄົມ. ຊຸກຍູ້ໃຫ້ປະເທດສະມາຊິກທີ່ກຳລັງພັດທະນາ ຮັບຮອງເອົາຂັ້ນຕອນໃນການລາຍງານໃຫ້ໄປໃນທິດທາງດຽວກັນກັບການລິເລີ້ມຄວາມໂປ່ງໃສຂອງອຸດສະຫະກຳຂຸດຂົ້ນ (EITI) ຍັງຈະຄຸ້ມຄ່າຕາມຈຸດປະສົງ.

59. ໃນຂະນະທີ່ມີຄວາມຫຍຸ້ງຍາກ ທີ່ຈະເວົ້າໂດຍທົ່ວໆໄປກ່ຽວກັບເຫດການທີ່ອາດຈະເກີດຂຶ້ນໃນອານາຄົດກ່ຽວກັບການພັດທະນາຂະແໜງຖ່ານຫີນໃດໜຶ່ງ ເອດີບີ ຈະຮຽກຮ້ອງໃຫ້ປະຕິບັດຕາມເງື່ອນໄຂດັ່ງຕໍ່ໄປນີ້ກ່ອນເພື່ອຈະໄດ້ຮັບການສະໜັບສະໜູນຈາກເອດີບີໃນການພັດທະນາບໍ່ຖ່ານຫີນ:

(i) ສ່ວນໃຫຍ່ຂອງຜົນຜະລິດຈາກບໍ່ຖານຫີນ ຄວນໄດ້ຖືກລວບລວມເຂົ້າໃນໜຶ່ງໂຮງງານພະລັງງານ ຫລືຫລາຍກວ່ານັ້ນເຊັ່ນ ຜູກມັດກັບເງື່ອນໄຂທາງການຄ້າ, ສັນຍາການສະໜອງເຊື້ອໄຟໃຫ້ໃນໄລຍະຍາວ ຫລື ການຈັດສັນໃຫ້ແກ່ໂຮງງານພະລັງງານໄຟຟ້າ. ການປຶກສາຫາຫລືແລະຂະບວນການທົບທວນໃນຊ່ວງການກະກຽມແລະຮັບຮອງເອົາຂໍ້ສະເໜີສະເພາະຂອງໂຄງການຈະໄດ້ມີການຮັບປະກັນວ່າ ບໍ່ຖ່ານຫີນຈະໄດ້ຮັບການສະໜັບສະໜູນກໍ່ຕໍ່ເມື່ອມັນມີຂໍ້ຕົກລົງທົ່ວໄປ ໃນເອດີບີວ່າ ການນຳໃຊ້ຖ່ານຫີນສ່ວນໃຫຍ່ເຊັ່ນ: ຍົກເວັ້ນແຕ່ການເກີດສິງຕົກຂ້າງແລະພະລັງຄວາມຮ້ອນ ຈາກຖ່ານຫີນຫລາຍໂພດ (ວັກທີ່ 60) ແມ່ນເພື່ອການສ້າງກະແສໄຟຟ້າ. ເງື່ອນໄຂນີ້ຈະບໍ່ຕອບສະໜອງຕາມ ຖ້າຄວາມຮ້ອນຈາກຖ່ານຫີນສາມາດຖືກຂາຍໃນຕະຫລາດເປີດ ຫລື ສົ່ງອອກຜ່ານຊ່ອງທາງການຄ້າລະຫວ່າງປະເທດ; ແລະ

(ii) ປະເທດສະມາຊິກທີ່ກຳລັງພັດທະນາຄວນເຫັນດີໃນການຈັດຕັ້ງປະຕິບັດຂໍ້ກຳນົດຂອງການລິເລີ້ມຄວາມໂປ່ງໃສຂອງອຸດສະຫະກຳຂຸດຂຶ້ນສຳລັບທຸກບໍ່ຖ່ານຫີນໃນປະເທດຂອງຕົນ.

60. ຍ້ອນເຫດຜົນທົ່ວໄປທີ່ຮຽກຮ້ອງໃຫ້ ເອດີບີ ເຂົ້າມາມີສ່ວນຮ່ວໃນການເລີ່ມທັນໃຫ້ເປັນທຸລະກິດຂອງຂະແໜງຖ່ານຫີນໃນປະເທດສະມາຊິກທີ່ກຳລັງພັດທະນາ, ມັນມີຜົນທາງກົງກັນຂ້າມ ຕໍ່ກັບເງື່ອນໄຂເບື້ອງຕົ້ນ. ຕົວຢ່າງ, ບໍ່ຖ່ານຫີນແລະການເຊື່ອມໂຍ່ງກັບໂຮງງານພະລັງງານເປັນເຈົ້າຂອງກຸ່ມຄົນທີ່ແຕກຕ່າງກັນ ແລະບໍ່ຈຳເປັນທີ່ຈະຕ້ອງຢູ່ໃກ້ກັນ. ມັນອາດຈະມີຜະລິດຕະພັນທີ່ບໍ່ໄດ້ຕະໃຈທີ່ຈະຜະລິດຈາກບໍ່ຖ່ານຫີນທີ່ມີມູນຄາ.[31] ຜະລິດຕະພັນດັ່ງກ່າວສາມາດຂາຍໄດ້ຢູ່ໃນຕະຫລາດພາຍໃນ ຫລື ສົ່ງອອກຕ່າງປະເທດເພື່ອໃຫ້ໄດ້ຜົນຕອບແທນສູງສຸດຈາກການພັດທະນາບໍ່ຖານຫີນ. ຍິ່ງໄປກວ່ານັ້ນມັນອາດຈະມີຄວາມຮ້ອນຈາກຖ່ານຫີນທີ່ເກີນຍ້ອນວ່າຄວາມບໍ່ກົງກັນຂອງການຜະລິດກະແສໄຟຟ້າປະຈຳປີແລະຜະລິດຕະພັນຈາກຖ່ານຫີນທີ່ສາມາດຂາຍໄດ້ຢູ່ໃນຕະຫລາດພາຍໃນແຕ່ບໍ່ແມ່ນຕະຫລາດເປີດ. ເນື່ອງຈາກມີການຮ່ວມມືໃນອານຸພາກພື້ນໄດ້ສ້າງຜົນປະໂຫຍດຫລາຍແກ່ເຂດທີ່ຫ່າງໄກທີ່ບໍ່ເຂົ້າເຖິງຕະຫລາດສາກົນ, ໂຮງງານພະລັງງານສາມາດຕັ້ງຢູ່ໃກ້ກັບເຂດສາຍແດນທີ່ຫ່າງໄກ.

61. ການສະໜັບສະໜູນຂອງເອດີບີ ປະຈຸບັນຍັງມີຂໍ້ຈຳກັດໃນການສົ່ງເສີມວິທີການປະຕິບັດການຂຸດຂຶ້ນບໍ່ແຮ່ທີ່ເອົາໃຈໃສ່ດ້ານສິ່ງແວດລ້ອມແລະການຊ່ວຍເຫລືອທາງດ້ານນະໂຍບາຍ ເພື່ອຊ່ວຍໃນການປັບປຸງໂຄງສ້າງຂອງອຸດສະຫະກຳຂຸດຂຶ້ນຖ່ານຫີນ. ມາດຕະການໃນການຫລຸດມົນລະພິດ (ລວມທັງສິ່ງເສດເຫລືອຈາກການນຳໃຊ້ຖ່ານຫີນ ທີ່ມີສ່ວນປະກອບຂອງຄວາມຮ້ອນຕ່ຳ, ຄວາມປອດໄພຂອງບໍ່ຖ່ານຫີນ, ການສະກັດທາດເມຕານຈາກຖ່ານຫີນ ແລະນະໂຍບາຍປ້ອງກັນສິ່ງແວດລ້ອມໃນການຂຸດຂຶ້ນຖ່ານຫີນ ຕ້ອງໄດ້ຮັບການປະຕິບັດ. ໃນເມື່ອຖ່ານຫີນແມ່ນມີເປັນ

---

[31] ບາງຕົວຢ່າງ ຂອງຜະລິດຕະພັນທີ່ມາຈາກການຜະລິດພະລິດຕະພັນອື່ນ ແມ່ນຖ່ານຫີນປະເພດແຂງທີ່ມີລະດັບທີ່ສູງກວ່າ ເຊິ່ງມີການນຳໃຊ້ໃນວຽກວານໂລຫະ, ສິ່ງເສດເຫລືອຈາກຖ່ານຫີນສາມາດໄປນຳໃຊ້ເຂົ້າໃນການສ້າງທາງ ຫລື ອຸດສາຫະກຳຊີມັງແລະທາດເມຕານທີ່ເປັນເຊື້ອໄຟທີ່ສະອາດສຳລັບພາຍໃນປະເທດ ແລະອຸດສາຫະກຳ.

ຈຳນວນຫລາຍຢູ່ໃນອາຊີບໍ່ຖ່ານຫີນ ຈະເພີ່ມຂຶ້ນໃນບັນດາປະເທດສະມາຊິກທີ່ກຳລັງພັດທະນາຍ້ອນວ່າຄວາມໝັ້ນຄົງດ້ານພະລັງງານແລະຕົ້ນທຶນຂອງພະລັງງານ. ແຕ່ຢ່າງໃດກໍ່ຕາມສ່ວນໃຫຍ່ພົວພັນກັບບັນຫາທາງດ້ານສິ່ງແວດລ້ອມ ແລະສັງຄົມໃນການພັດທະນາບໍ່ຖານຫີນຕ້ອງໄດ້ຮັບການແກ້ໄຂຢ່າງລະມັດລະວັງ. ບໍ່ຖ່ານຫີນແມ່ນມີການພົວພັນກັບຫລາຍໆຜົນກະທົບໃນທາງລົບເຊັ່ນ: ຂີ້ຝຸ່ນ, ການທຳລາຍປ່າໄມ້ ແລະການເຊື່ອມໂຊມຂອງໜ້າດິນ.[32] ຜົນກະທົບທາງດ້ານສັງຄົມຕໍ່ກັບປະຊາຊົນໃນທ້ອງຖິ່ນລວມທັງການຕັ້ງຖິ່ນຖານຄືນໃໝ່ໂດຍບໍ່ສະໝັກໃຈ, ການຖົມດິນທີ່ຂຸດຂຶ້ນມາແບບບໍ່ເໝາະສົມ ແລະ ການຖົມຄືນສະຖານທີ່ຂຸດເຈາະບໍ່ຖືກຕ້ອງ ຫລັງຈາກສິ້ນຊຸດການຂຸດຂົ້ນ. ການສະໜັບສະໜູນຂອງເອດີບີສາມາດຊ່ວຍເພື່ອຊຸກຍູ້ແລະພັດທະນາວິທີການປະຕິບັດທີ່ດີ ໂດຍສະເພາະແມ່ນການບັງຂັບໃຫ້ມີມາດຕະຖານດ້ານສິ່ງແວດລ້ອມແລະສັງຄົມແລະຮັບຮອງເອົາເຕັກໂນໂລຊີທີ່ມີປະສິດທິພາບ.

## 4. ການສ້າງພະລັງງານໄຟຟ້າແລະ ການທຳຄວາມຮ້ອນພາຍໃນ

62. ສ່ວນໃຫຍ່ຂອງທະວີບອາຊີແລະປາຊີຟິກ ແມ່ນໄດ້ຮັບຜົນກະທົບຈາກການຂາດແຄນກະແສໄຟຟ້າ. ເພື່ອຕອບສະໜອງຕາມການຄາດຄະເນການເພີ່ມຂຶ້ນ ຂອງຄວາມຕ້ອງການພະລັງງານໄຟຟ້າປະເທດສະມາຊິກທີ່ກຳລັງພັດທະນາກຳລັງພິຈາລະນາທາງເລືອກໃນການຜະລິດກະແສໄຟຟ້າຈາກຖ່ານຫີນ, ອາຍແກັດສ໌ທຳມະຊາດ, ພະລັງງານເນຍເຄຼຍ, ພະລັງງານນ້ຳ (ໃຫຍ່, ນ້ອຍ ແລະນ້ອຍຫລາຍ) ແລະພະລັງງານຈາກແຫລ່ງພະລັງງານທົດແທນ.

### ກ. ໂຮງງານພະລັງງານໄຟຟ້າທີ່ໃຊ້ຖ່ານຫີນເປັນຫລັກ

63. ຫລາຍໂຮງງານພະລັງງານໄຟຟ້າທີ່ໃຊ້ຖ່ານຫີນເປັນຫລັກທີ່ມີຢູ່ ໄດ້ມີການດຳເນີນງານມາຫລາຍປີ. ໂຮງງານເຫຼົ່ານີ້ ຕ້ອງການໃຫ້ມີການຍົກຈັກໃໝ່ເພື່ອປັບປຸງປະສິດທິພາບ, ຄວາມເຊື່ອຖືໄດ້, ແລະໄລຍະເວລາການໃຊ້ງານ; ແລະປະຕິບັດຕາມມາດຕະຖານສິ່ງແວດລ້ອມທີ່ສູງກວ່າໃນປະຈຸບັນ. ໂຄງການຍົກຈັກໂຮງງານໄຟຟ້າຈະມີປະສິດທິຜົນຕໍ່ຕົ້ນທຶນແລະຈະຊ່ວຍຫລຸດຜ່ອນການປ່ອຍອາຍເສັຍຈາກໂຮງງານແລະປັບປຸງປະສິດທິພາບຂອງໂຮງງານ.

64. ເນື່ອງຈາກວ່າຄວາມເປັນຫ່ວງດ້ານຄວາມໝັ້ນຄົງດ້ານພະລັງງານ ແລະ ການມີຢູ່ຂອງຖ່ານຫີນບາງປະເທດສະມາຊິກທີ່ກຳລັງພັດທະນາ ແມ່ນນິຍົມໂຮງງານພະລັງງານໄຟຟ້າທີ່ນຳໃຊ້ຖ່ານຫີນເປັນຫລັກ. ໂຮງງານເຫລົ່ານີ້ແມ່ນເປັນຜູ້ປ່ອຍອາເສຍສູ່ສິ່ງແວດລ້ອມຫລັກ (ເຊັ່ນ: ໄນໂຕເຈນອັອກຊາຍ, ມາດ, ແລະ ກາກບອນ; ໂລຫະໜັກ; ແລະລະອອງຝຸ່ນ). ສະນັ້ນ ຂີດຄວາມສາມາດເພີ່ມເຕີມແມ່ນຄວາມຈຳເປັນທີ່ລວມເອົາເຕັກໂນໂລຢີ ທີ່ສະອາດກວ່າໃນການຫລຸດຜ່ອນການປ່ອຍອາຍເສຍ ເຊັ່ນ: ລະບົບການເຜົາໄໝ້ທີ່ເຊື້ອໄຟທີ່ມີປະສິດທິຜົນສູງ ແລະ ເຕັກໂນໂລຢີສຳລັບພະລັງງານຖ່ານຫີນສະອາດ, ແລະລະບົບດັກຈັບຊຸມເຟີໄດອອກຊາຍ.

---

[32] ຜົນກະທົບອື່ນໆລວມທັງການປ່ອຍອາຍເສຍ, ການທຳຫລາຍບໍນ້ຳໃຕ້ດິນ, ນ້ຳຈາກໂຮງງານອຸດສາຫະກຳແລະນ້ຳເສຍ, ການບໍລິຫານຂີ້ເຫຍື້ອ, ການເຜົາໄໝ້ຖ່ານຫີນ, ມົນລະພິດທາງສຽງ ແລະຜົນກະທົບທາງລົບອື່ນໆ ທີ່ກ່ຽວກັບການກໍ່ສ້າງ.

65. ຍ້ອນແລະເມື່ອເຕັກໂນໂລຢີໃໝ່ເຊັ່ນ: ການເຜົາເຊື້ອໄຟແບບໃຊ້ຄວາມດັນ, ການເຜົາເຊື້ອໄຟແບບໃຊ້ຄວາມດັນ, ເຊື່ອມໂຍ່ງເອົາລະບົບການເຜົາໄໝ້ຖ່ານ, ເກັບເອົາອາຍກາກບອນແລະເກັບມ້ຽນຮັກສາໄວ້ (ຫລືເກັບໄວ້) ທີ່ມີທ່າແຮງທາງການຄ້າ, ບໍລິສັດພະລັງງານຈະກຽມພ້ອມທີ່ຈະຮັບເອົາເຕັກໂນໂລຢີນັ້ນ. ໃນຂະນະດຽວກັນເອເດີບີ ຈຳເປັນຕ້ອງໃຫ້ການແຂງຂັນຢ່າງຕັ້ງໜ້າໃນການເຜີຍແຜ່ໂຄສະນາ ແລະການນຳໃຊ້ເຕັກໂນໂລຢີໃໝ່ໃນບັນດາປະເທດສະມາຊິກທີ່ກຳລັງພັດທະນາ. ເພື່ອຈະປະສົບຜົນສຳເລັດໄດ້ປະເທດທີ່ພັດທະນາແລະກຳລັງພັດທະນາ ຈຳເປັນຕ້ອງຮ່ວມມືກັນວ່າດ້ວຍຂໍ້ຕົກລົງໃນການຖ່າຍໂອນໃນໄລຍະຍາວ ຖ້າມີຄວາມຈຳເປັນກໍ່ງກັບການສະໜັບສະໜູນຢ່າງຫ້າວຫັນຂອງຄູ່ຮ່ວມພັດທະນາສອງຝ່າຍແລະຫລາຍຝ່າຍ.

## ຂ. ໂຮງງານໄຟຟ້າທີ່ໃຊ້ອາຍແກັດແລະນ້ຳມັນເປັນຫລັກ

66. ນ້ຳມັນເຊື້ອໄຟແມ່ນແຫລ່ງພະລັງງານຫລັກຂອງການຜະລິດກະແສໄຟຟ້າເກືອບວ່າທຸກປະເທດສະມາຊິກ ທີ່ກຳລັງພັດທະນາຢູ່ເຂດປາຊີຟິກ, ບາງປະເທດຢູ່ແຜ່ນດິນໃຫຍ່ເຊັ່ນ ກຳປູເຈຍແລະປະເທດສີລັງກາ ແລະການນຳໃຊ້ເຂົ້າໃນອຸດສາຫະກຳ. ໃນບັນດາປະເທດເຫລົ່ານີ້ ການນຳເຂົ້ານ້ຳມັນເຊື້ອໄຟເປັນສ່ວນປະກອບໃຫຍ່ຂອງລາຍຈ່າຍຂອງການນຳເຂົ້າ ເຮັດປະເທດເຫລົ່ານັ້ນ ຕົກຢູ່ໃນຄວາມສ່ຽງຕໍ່ກັບການຜັນຜວນຂອງລາຄານ້ຳມັນໃນຕະຫລາດນ້ຳມັນເຊື້ອໄຟ. ຕົວຢ່າງ ປະເທດສີລັງກາມີຕົ້ນທຶນໃນການຜະລິດກະແສໄຟຟ້າສູງກວ່າໝູ່ໃນບັນດາປະເທດອາຊີໃຕ້ ແລະອາຊີຕະເວັນອອກສຽງໃຕ້. ການຜະລິດພະລັງງານໄຟຟ້າຈາກນ້ຳມັນເຊື້ອໄຟ ຍັງສືບຕໍ່ເປັນທາງອອກທີ່ເປັນໄປໄດ້ໃນການສະໜອງກະແສໄຟຟ້າແກ່ເຂດຫ່າງໄກສອກຫລີກ, ຊຸ່ມຊົນຢູ່ໃນເກາະດອນ ແລະເຂດທີ່ມີປະຊາຊົນແບບກະແຈກກະຈາຍ. ປະເທດສະມາຊິກທີ່ກຳລັງພັດທະນາໃນປາຊີຟິກ ຈຳເປັນຕ້ອງຫລຸດຜ່ອນການເອື່ອຍອີງຈາກການນຳເຂົ້ານ້ຳມັນເຊື້ອໄຟ ໂດຍການພັດທະນາແຫລ່ງພະລັງງານທົດແທນແລະທາງເລືອກອື່ນໃນການດຳເນີນພະລັງງານແບບສະໝ່ຳສະເໝີໂດຍທົ່ວໄປ, ເຊິ່ງຈະຊ່ວຍບັນເທົາດ້ານລາຄາ ແລະການທຳລາຍສິ່ງແວດລ້ອມ. ການນຳໃຊ້ນ້ຳມັນກາຊວນໃນອຸດສາຫະກຳ ຈັດໄວ້ເພື່ອສ້າງກະແສໄຟຟ້າ ແມ່ນສ່ວນໃຫຍ່ແມ່ນເພື່ອຮັບປະກັນການສະໜອງພະລັງງານເຊິ່ງສາມາດແກ້ໄດ້ກໍ່ຕໍ່ເມື່ອມີຂີດຄວາມສາມາດໃນການຜະລິດກະແສໄຟຟ້າ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງອຸດສາຫະກຳ ຫລື ໂດຍຜ່ານນະໂຍບາຍການເພີ່ມພະລັງງານທີ່ເໝາະສົມ.

67. 67. ຂະແໜງພະລັງງານ ຈະກວມເອົາຫລາຍກວ່າເຄິ່ງໜຶ່ງຂອງການເພີ່ມຂຶ້ນຂອງຄວາມຕ້ອງການອາຍແກັດສ໌ຂອງໂລກ. ໂຮງງານພະລັງງານທີ່ນຳໃຊ້ອາຍແກັດສ໌ເປັນຫລັກ ຄາດວ່າຍັງຈະເປັນທາງເລືອກທີ່ນິຍົມກັນໃນໄລຍະຍາວ ຍ້ອນວ່າຜົນປະໂຫຍດຂອງມັນແບບລົມທຽບ ເຊັ່ນການມີອາຍແກັດຢູ່ພາຍໃນປະເທດ, ການຂົນສົ່ງກໍ່ງ່າຍໂດຍຜ່ານທໍ່ສົ່ງຈາກແຫລ່ງຜະລິດ (ຢູ່ພາຍໃນ ຫລື ນອກປະເທດ), ຕົ້ນທຶນການຕິດຕັ້ງກໍ່ໄດ້ປຽບ, ການຕິດຕັ້ງກໍ່ໄວກວ່າ, ສາມາດໃຊ້ໄດ້ກັບຫລາຍເຊື້ອໄຟ,ແລະມີປະຫວັດທີ່ດີກວ່າຕໍ່ກັບສິ່ງແວດລ້ອມເມື່ອທຽບໃສ່ພະລັງງານໄຟຟ້າທີ່ໃຊ້ຖ່ານຫີນເປັນຫລັກ. ຫລາຍໆປະເທດສະມາຊິກທີ່ກຳລັງພັດທະນາວາງແຜນທີ່ຈະຕິດຕັ້ງ ໂຮງງານພະລັງງານໄຟຟ້າລະບົບອາຍແກັດສ໌ສຳລັບການຜະລິດໄຟຟ້າທີ່ຕໍ່ເນື້ອງແລະສະໝ່ຳສະເໝີ ຫລືການພະລິດໄຟຟ້າໃນເວລາທີ່ມີຄວາມຕ້ອງການສູງສຸດ. ແຕ່ຢ່າງໃດກໍ່ຕາມ ຍ້ອນວ່າລາຄາອາຍແກັດສແມ່ນຍັງເພີ່ມຂຶ້ນ ໂຮງງານພະລັງງານໄຟຟ້າອາຍ ແກັດສ໌ກໍ່ກຳລັງປະເຊີນກັບການແຂ່ງຂັນຈາກໂຮງງານພະລັງງານໄຟຟ້າທີ່ໃຊ້ຖ່ານຫີນ. ການນຳໃຊ້ແກັດສ໌ແຫຼວກໍ່ແມ່ນທາງເລືອກໜຶ່ງສຳລັບປະເທດ ທີ່ບໍ່ມີຊັບພະຍາກອນອາຍແກັດສ໌ທຳມະຊາດຫລືໃນເຂດຕາມຊາຍຝັ່ງທະເລແຕ່ວ່າ ຄວາມ

ບໍ່ພຽງພໍດ້ານພື້ນຖານໂຄງລາງຈະສ້າງຂໍ້ຈຳກັດແລະຫຍຸ້ງຫຍາກ. ເອດີບີ ຈະສືບຕໍ່ໃຫ້ການສະໜັບສະໜູນທາງດ້ານການເງິນໃຫ້ແກ່ໂຮງງານພະລັງງານໄຟຟ້າທີ່ໃຊ້ແກັດສ໌ທຳມະຊາດເປັນຫລັກ ຍ້ອນວ່າໃຫ້ຜົນດີແກ່ສິ່ງແວດລ້ອມ.

### ຄ. ໂຮງງານພະລັງນ້ຳ

68. ເຖິງແມ່ນຄວາມຕ້ອງການພະລັງງານພື້ນຖານຂອງໂລກ ຄາດວ່າຈະເພີ່ມຂຶ້ນຫລາຍກວ່າ 45% ແຕ່ປີ 2006 ຫາ 2030 ສ່ວນແບ່ງຂອງພະລັງງານນ້ຳໃນການສ້າງກະແສໄຟຟ້າຂອງໂລກຄາດວ່າຈະຫລຸດລົງຈາກ 16% ຫາ 14%. ແຕ່ຢ່າງໃດກໍ່ຕາມຜົນຜະລິດຈາກພະລັງງານນ້ຳທະໝົດຈະຍັງຄົງຂະຫຍາຍຕົວ 1.9% ຕໍ່ປີ (ຈາກ 3,035 ເຕລາວັດໂມງຫາ 4,809 ເຕລາວັດໂມງ). ມີພຽງແຕ່ 31% ຂອງພະລັງງານນ້ຳໃນໂລກທີ່ມີທ່າແຮງທາງເສດຖະກິດໄດ້ຖືກນຳໃຊ້ມາຮອດປີ 2004. ເມື່ອໂຮງງານພະລັງງານນ້ຳທີ່ດີທີ່ສຸດ ຕັ້ງຢູ່ໃນບັນດາປະເທດຂອງອົງການຮ່ວມດ້ານເສດຖະກິດແລະການພັດທະນາ ແລະ ການເພີ່ມຂຶ້ນຍັງມີຂໍ້ຫຍຸ້ງຫຍາກຢູ່ ໂດຍຄວາມເປັນຫ່ວງດ້ານສະພາບແວດລ້ອມ, ເກືອບວ່າການເພີ່ມຂຶ້ນຂອງການພັດທະນາພະລັງນ້ຳ ແມ່ນຈະມາຈາກບັນດາປະເທດທີ່ກຳລັງພັດທະນາ ເຊິ່ງມີທ່າແຮງດ້ານໄຟຟ້າແຮງນ້ຳຫລາຍພໍສົມຄວນ ທີ່ຍັງບໍ່ໄດ້ຂຸດຄົ້ນ. ພາຍໃນທະວີບອາຊີ ມີການວາງແຜນທີ່ຈະພັດທະນາພະລັງງານໄຟຟ້າແຮງນ້ຳ ຢູ່ປະເທດອິນເດຍ, ສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ປະເທດເນປານ, ຈີນ, ຫວຽດນາມ ແລະຍັງມີຢູ່ບາງປະເທດໃນອາຊີກາງ ລວມທັງສາທາລະນາລັດ ເກີກິດສ໌ ແລະຖາຈິກິດສ໌ຖານ.

69. ການພັດທະນາພະລັງງານນ້ຳ ແມ່ນມີຜົນປະໂຫຍດໃນຫລາຍໆດ້ານ. ມັນແມ່ນພະລັງງານທົດແທນ[33] ( ເຖິງແມ່ນວ່າ ຈະມີທາງເລືອກພະລັງງານນ້ຳຂະໜາດໃຫຍ່ ກໍບໍ່ຄວນລວມເຂົ້າໃນຂໍ້ລິເລີ່ມຂອງພະລັງງານທົດແທນ),[34] ທີ່ມີປະສິດທິພາບສູງ, ສະອາດດແລະມີຄວາມເຊື່ອຖືໄດ້, ແລະປັບຕົວງ່າຍ. ມັນເປັນສ່ວນປະກອບທີ່ສຳຄັນສຳລັບການບໍລິຫານຕາ່ນາ່ງໄຟຟ້າແລະມີຜົນປະໂຫຍດທີ່ຈະຕອບສະໜອງໃຫ້ກະແສໄຟຟ້າປົກກະຕິໃນເວລາມີຄວາມຕ້ອງການສູງ. ພະລັງງານຈາກໂຮງງງານພະລັງນ້ຳ ສາມາດຮັກສາການຊົມໃຊ້ເຊື້ອໄຟແຮ່ທາດທີ່ຂາດແຄນ ແລະ ເຂືອນສາມາດປ້ອງກັນນ້ຳຖວມແລະສະໜອງນ້ຳໃຫ້ແກ່ລະບົບຊົນລະປະທານ. ເຂື່ອນໄຟຟ້າກໍ່ມີຫລາຍຂະໜາດທີ່ແຕກຕ່າງກັນ-ຈາກໃຫຍ່, ນ້ອຍ, ຂະໜາດນ້ອຍໆ ແລະນ້ອຍຫລາຍ - ແລະ ແຕ່ລະອັນ ແມ່ນມີຈຸດພິເສດຂອງມັນເອງ.[35]

70. ໂຄງການເຂື່ອນພະລັງງານໄຟຟ້າໂດຍສະເພາະເຂື່ອນທີ່ອີງໃສ່ອາງນ້ຳດັ່ງທີ່ມີການກັນແມ່ນ້ຳດ ແມ່ນມີຄວາມຊັບຊ້ອນ ແລະມີຄວາມອ່ອນໄຫວຕໍ່ສັງຄົມ ແລະສິ່ງແວດລ້ອມ. ໂຄງການເຂື່ອນເຫລົ່ານີ້ ມີຜົນກະທົບຕໍ່ລະບົບນິເວດທີ່ຢູ່ອ້ອມຂ້າງ,[36] ແລະ, ອີງຕາມການສຶກສາທາງວິທະຍາສາດ,[37] ບາງອ້າງນ້ຳໜ້າເຂື່ອນຜະລິດອາຍແກັດສ໌ເຮືອນແກ້ວ

---

[33] ອົງການພະລັງງານສາກົນ. ມັງກອນ 2007. *ການສະໜອງພະລັງງານໃຫ້ໂລກຈາກພະລັງງານທົດແທນ. ປາຣີ.*

[34] ເຄືອຄາຍແມ່ນ້ຳສາກົນ. 2003. 12 ເຫດຜົນຈະຕ້ອງທີ່ຈະບໍ່ລວມເອົາເຂືອນໄຟຟ້າເຂົາໃນຂໍ້ລິເລີ້ມງງານທົນແທນ. ເບີກລີ..

[35] ເຂື່ອນໄຟຟ້າຂະໜາດນ້ອຍ ໃນເອກະສານນີ້ ແມ່ນໝາຍຄວາມວ່າເຂື່ອນທີ່ກຳລັງພະລິດຕ່ຳກວ່າ 10 ເມກາວັດ, ເຂື່ອນໄຟຟ້າຂະໜາດທີ່ນ້ອຍໆ ໝາຍຄວາມວ່າເຂື່ອນທີ່ມີກຳລັງການຜະລິດກະແສໄຟຟ້າຕ່ຳກວ່າ 1 ເມກາວັດ ແລະ ເຂື່ອນຂະໜາດນ້ອຍຫລາຍ ໝາຍເຖິງເຂື່ອນທີ່ມີກຳລັງການຜະລິດຕ່ຳກວ່າ 100 ກິໂລວັດ.

[36] ຜົນກະທົບຕໍ່ລະບົບນິເວດ ລວມທັງການສະກັດກັ້ນເຄືອນຍ້າຍຂອງປາ, ການສູນເສຍເນື້ອທີ່ຂອງລະບົບນິເວດດ ການສູນເສຍຄວາມຫລາກຫລາຍຂອງຊີວະນາພັນ (ເຊັ່ນ: ປະເພດພືດສັດ ແລະພືດທີ່ໃກ້ສູນພັນ), ການປ່ຽນແປງລະບົບນິເວດໃນນ້ຳ ແລະຕາມແຄມຕາຝັງນ້ຳ, ເຮັດໃຫ້

ຫລາຍພໍສົມຄວນເຊັ່ນ ອາຍກາກບອນແລະທາດເມຕານ ເນື່ອງຈາກພືດແລະເນື້ອທີ່ປ່າໄມ້ໄດ້ຖືກນ້ຳຖ້ວມ. ນີ້ສ່ວນໃຫຍ່ແມ່ນຂຶ້ນກັບຂະໜາດຂອງປ່າໄມ້ທີ່ຖືກນ້ຳຖ້ວມຈາກອ່າງນ້ຳ ແລະ ຂະໜາດຂອງອ່າງນ້ຳໜ້າເຂື່ອນ. ຜົນກະທົບທາງດ້ານສິ່ງແວດລ້ອມຈາກໂຄງການ ແມ່ນມີການພົວພັນກັນກັບຜົນກະທົບທາງສັງຄົມ ແລະຜົນກະທົບສອງອັນນີ້ລວມເຂົ້າກັນສາມາດພາໃຫ້ເກີດການມີຄວາມອ່ອນແອ. [38] ເມື່ອການບໍ່ມີການບໍລິຫານຄຸ້ມຄອງທີ່ເໝາະສົມ ບັນຫາເຫລົ່ານີ້ອາດສາມາດຂະຫຍາຍຜົນກະທົບຫລາຍຂຶ້ນ ການຈັດຕັ້ງປະຕິບັດໂຄງການພະລັງງານນ້ຳຮຽກຮ້ອງ (i) ຍຸດທະສາດການບັນເທົາທີ່ເຂັ້ມແຂງ; (ii) ມີການເປີດເຜີຍ ແລະປຶກສາຫາລືກັບປະຊາຊົນທີ່ຖືກກະທົບທີ່ພຽງພໍ; (iii) ບັງຄັບໃຊ້ນະໂຍບາຍການປ້ອງກັນດ້ານສິ່ງແວດລ້ອມລວມທັງການສົນທະນາດ້ານນະໂຍບາຍ; ແລະ (iv) ໃຫ້ມີການຕັ້ງຖິ່ນຖານຄືນໃໝ່ ແລະການຟື້ນຟູດ້ານເສດຖະກິດໃຫ້ເໝາະສົມແກ່ປະຊາຊົນທີ່ຖືກກະທົບ. ການນຳໃຊ້ນະໂຍບາຍປ້ອງກັນສັງຄົມ ແລະສິ່ງແວດລ້ອມ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ແລະຕິດຕາມກວດໃນຮູບແບບທີ່ມີຄວາມຍືນຍົງ. ນະໂຍບາຍ ປ້ອງກັນຂອງເອດີບີ ທີ່ຄວບຄຸມທຸກໆໂຄງການຂອງຕົນ ລວມທັງໂຄງການພະລັງງານນ້ຳ. ນະໂຍບາຍ ແລະລະບຽບການຂອງເອດີບີໃນປະຈຸບັນ ຮັບຮອງເອົາລະບຽບການຂອງຄະນະກຳມະການໂລກວ່າດ້ວຍເຂື່ອນໄຟຟ້າ[39] ແລະສະມາຄົມພະລັງງານນ້ຳສາກົນ.

71. ໂຄງການພະລັງງານນ້ຳ ແມ່ນຕັ້ງຢູ່ຈຸດສູງກວ່າທີ່ນ້ຳຈະຂຶ້ນເຖິງເພື່ອເຮັດໃຫ້ໄດ້ປຽບຂອງຄວາມແຕກຕ່າງໃນໄລຍະສັ້ນ. ໃນກໍລະນີດັ່ງກ່າວ, ການໄຫລຂອງນ້ຳເພື່ອສ້າງກະແສໄຟຟ້າແມ່ນທາງເລືອກນິຍົມກັນ, ເນື່ອງຈາກວ່ານີ້ບໍ່ໄດ້ມີການສ້າງອ່າງເກັບນ້ຳທີ່ໃຫຍ່. ຈຳເປັນຕ້ອງໄດ້ມີການກ່າວເຖິງ ບັນຫາດ້ານລະບົບນິເວດວິທະຍາຢ່າງລະມັດລະວັງໃນບັນດາໂຄງການເຂື່ອນໄຟຟ້າເຫລົ່ານີ້. ການປັ້ມນ້ຳຂຶ້ນສູ່ອ່າງເກັບນ້ຳ ແມ່ນທາງອອກທີ່ຫລາກຫລາຍຂອງເຂື່ອນໄຟຟ້າ ທີ່ສາມາດຮັບໄດ້. ບັນດາໂຮງງານເຫລົ່ານີ້ ຊ່ວຍໃຫ້ສາມາດຕອບສະໜອງຄວາມຕ້ອງການໃນເວລາທີ່ມີຄວາມຕ້ອງການສູງ.

### ງ. ໂຮງງານພະລັງງານນິວເຄລຍ

72. ຍ້ອນຄວາມບໍ່ແນ່ນອນ ທີ່ພົວພັນກັບການພັດທະນາພະລັງງານນິວເຄລຍ, ການປະເມີນຄວາມຕ້ອງການໃນອານາຄົດ ແມ່ນຂຶ້ນໆລົງໆ. ອີງຕາມອົງການພະລັງງານສາກົນ, ສ່ວນແບ່ງຂອງພະລັງງານນິວເຄລຍໃນການສ້າງກະແສໄຟຟ້າ ຈະຫລຸດລົງຈາກ 15% ໃນປີ 2006 ຫາ 10% ໃນປີ 2030 ຍ້ອນວ່າ ຂີດຄວາມສາມາດຂອງພະລັງງານນິວເຄລຍ ບໍ່ເພີ່ມຂຶ້ນໄວຄືກັນກັບຄວາມຕ້ອງການໄຟຟ້າ. ແຕ່ຢ່າງໃດກໍ່ຕາມ, ແນວໂນ້ມບໍ່ດົນມານີ້ ໄດ້ບົ່ງບອກວ່າພະ

---

ປາການ້ຳກວ້າງອອກ, ການເຊາະເຈືອນຂອງຕາຝັ່ງ, ຫລຸດການໄຫລຂອງເສດດິນ, ການປາມົງທີ່ໃສການຖ້ວມຂອງນ້ຳຈະຫລຸດລົງ, ຫລຸດຜ່ອນ, ແລະການນາບຂູ່ຕໍ່ສຸຂະພາບຂອງສາທາລະນະ.

[37] ຄະກຳມະການວ່າດ້ວຍເຂື່ອນ 2000. ການພັດທະນາເຂື່ອນ: ໂຄງຮ່າງໃໝ່ສຳລັບການຕັດສິນບັນຫາ. ເຈນີວາກ.

[38] ຜົນກະທົບຕໍ່ສັງຄົມ ລວມທັງການຖືກເຄືອນຍ້າຍໂດຍບໍ່ສະໝັກໃຈ, ການສູນເສຍຊີວິດການຫາຢູ່ຫາກິນ ແລະ ລະບົບການສະໜັບສະໜູນ, ການສູນເສຍວິທີການດຳລົງຊີວິດ, ເພີ່ມຄວາມສ່ຽງດ້ານສຸຂະພາບ, ຜົນຕອບແທນທາງເສດຖະກິດຕ່ຳຕໍ່ກັບຊຸມຊົນທີ່ໄດ້ຮັບຜົນກະທົບ, ການຖືກເຄື່ອນຍ້າຍ ຫລື ການສູນເສຍຊັບສິນທາວດ້ານວັດຖຸ ແລະວັດທະນາທຳ, ຫລຸດຜ່ອນເນື້ອທີ່ປູກຝັງ ແລະປະລິມານນ້ຳທີ່ສະໜອງພາຍໃນ, ການເພີ່ມຂຶ້ນຂອງຄົນອົບພະຍົກ ແລະການຂະຫຍາຍຕົວຂອງປະຊາກອນ, ແລະໃຫ້ການຝຶກອົບຮົມແກ່ສະຖາບັນທ້ອງຖິ່ນ ແລະຜູ້ໃຫ້ການບໍລິການ.

[39] ເອດີບີ . 2002. *ແຜນການຕອບໂຕ້ຂອງເອດີບີ ຕໍ່ກັບຄະນະກຳມະການໂລກວ່າດ້ວຍເຂື່ອນ* . ມະນີລາ.

ລັງງານນິວເຄຼຍ ຈະເຂົ້າມາມີບົດບາດຫລາຍຂຶ້ນໃນຫລາຍໆແຫລກພະລັງງານໃນອາຊີ. ຫລາຍປະເທດໃຫຍ່ໃນພາກພື້ນລວມທັງປະເທດຈີນແລະອິນເດຍໄດ້ປະກາດນະໂຍບາຍຂອງຕົນ ທີ່ຈະເລັ່ງການພັດທະນາພະລັງງານນິວເຄຼຍສໍາລັບການຜະລິດກະແສໄຟຟ້າ. ພະລັງງານນິວເຄຼຍ ບໍ່ປ່ອຍອາຍແກັດສ໌ເຮືອນແກ້ວຫລາຍແລະສະນັ້ນ ມັນສາມາດປະກອບສ່ວນເຂົ້າໃນການຫລຸດການເພີ່ມຂຶ້ນຂອງອຸນະພູມໂລກ. ການຜະລິດກະແສໄຟຟ້າຈາກພະລັງງານນິວເຄຼຍ ແມ່ນເໝາະສົມກັບໂຮງງານພະລັງງານທີ່ໄຟຟ້າແບບສະໜໍາສະເໝີໃນຂະໜາດໃຫຍ່ ເຊິ່ງເປັນໃຈກາງຂອງລະບົບຕ່ານາງໄຟຟ້າ. ຕັ້ງແຕ່ 1990, ໄດ້ມີການພັດທະນາຢ່າງຫລວງຫລາຍກ່ຽວກັບພະລັງງານນິວເຄຼຍ. ການອອກແບບທີ່ກ້າວໜ້າໄດ້ໃຫມີການປັບປຸງໃນສາມຂົງເຂດຫລັກຄື: ການຫລຸດຕົ້ນທຶນ, ການເພີ່ມຄວາມປອດໄພ (ນໍາໃຊ້ຄຸນລັກສະນະໃນການປ້ອງກັນຄວາມປອດໄພ) ແລະການຕໍ່ຕານການຂະຫຍາຍຕົວ.[40] ຍ້ອນບໍ່ມີສະເຖຍລະພາບຂອງຕະຫລາດນໍ້າມັນເຊື້ອໄຟ ແລະອາດແກັດສ໌ ແລະຜົນກະທົບຂອງໂລກຮ້ອນຈາກການນໍາໃຊ້ ພະລັງງານເຊື້ອໄຟທີ່ເປັນແຮ່ທາດພະລັງງານນິວເຄຼຍ ເລີ້ມໄດ້ຮັບການສະໜັບສະໜູນໃນບັນດາປະເທດ ຂອງອົງການຮ່ວມມືດ້ານເສດຖະກິດ ແລະການພັດທະນາ ແລະບາງປະເທດສະມາຊິກ ທີ່ກໍາລັງພັດທະນາ.

73. ຄວາມກ້າວໜ້າທາງດ້ານເຕັກໂນໂລຢີຫລາຍ, ການຄຸ້ມຄອງລະດັບສາກົນ ແລະ ມີການປັບປຸງມາດຕະຖານຄວາມປອດໄພ ແລະການບໍລິຫານສິ່ງເສດເຫລືອ ໄດ້ເປັນຜົນໃຫ້ມີຄວາມສົນໃຈຫລາຍຂຶ້ນໃນການນໍາໃຊ້ພະລັງງານນິວເຄຼຍຜະລິດກະແສໄຟຟ້າ. ບາງປະເທດກໍ່ມີການສືບຕໍ່ພັດທະນາພະລັງງານນິວເຄຼຍຢ່າງຕັ້ງໜ້າ ເພື່ອເປັນມາດຕະການໃນການຮັບປະກັນຄວາມໝັ້ນຄົງດ້ານພະລັງງານ ໃນຂະນະທີ່ຫລາຍໆປະເທດກໍ່ເລີ້ມປັບໂຕໃນການຢຸດເຊົາໃຊ້ໂຮງງານໄຟຟ້າທີ່ມີຢູ່. ຄວາມເປັນຫ່ວງກ່ຽວກັບຄວາມຮ້ອນຂອງໂລກ ໄດ້ເລີ້ມສ້າງໃຫ້ມີຄວາມສົນໃຈກ່ຽວກັບພະລັງງານນິວເຄຼຍ ຍ້ອນວ່າມັນ ເປັນແຫລ່ງການປ່ອຍອາຍກາກບອນຕໍ່າໃນການຜະລິດກະແສໄຟຟ້າ. ບາງປະເທດທີ່ມີການລົບລ້າງນະໂຍບາຍ ປະຈຸບັນກໍ່ໄດ້ມີການທົບທວນຄືນບັນດາທາງເລືອກດ້ານພະລັງງານ. ບັນດາປັດໃຈທີ່ອາດມີອິດທິພົນຕໍ່ການປ່ຽນແປງດ້ານນະໂຍບາຍ ແມ່ນຍ້ອນຄວາມໝັ້ນຄົງດ້ານພະລັງງານ, ຄວາມໝັ້ນຄົງໃນການສະໜອງພະລັງງານເຊື້ອໄຟ, ຄວາມມີສະເຖັຍລະພາບດ້ານລາຄາຂອງນໍ້າມັນເຊື້ອໄຟ ແລະຜົນປະໂຫຍດຂອງການປ່ຽນແປງຂອງສະພາບອາກາດ. ບາງປະເທດສະມາຊິກ ທີ່ກໍາລັງພັດທະນາ ເຊັ່ນ ປະເທດອິນເດຍ, ປາກິດສ໌ຖານ, ສາທາລະນາລັດປະຊາຊົນຈີນ, ໄທ, ແລະ ຫວຽດນາມ ແມ່ນມີການສືບຕໍ່ດໍາເນີນການດ້ານພະລັງງານນິວເຄຼຍ.[41] ຫລາຍປະເທດສະມາຊິກໃນພາກພື້ນເຊັ່ນ ປະເທດຍີ່ປຸ່ນ, ສາທາລະນາລັດເກົາຫລີ ແລະ ໄຕ້ຫວັນ ມີນະໂຍບາຍວ່າດ້ວຍການພັດທະນາພະລັງງານນິວເຄຼຍແລ້ວ. ເຖິງແມ່ນວ່າ ສັດສ່ວນຂອງພະລັງງານນິວເຄຼຍໃນໂລກ ຄາດວ່າຈະມີການຫລຸດລົງ ແຕ່ວ່າການພັດທະນາພະລັງງານນິວເຄຼຍຢູ່ໃນອາຊີ ຄາດວ່າຈະມີການຈະຂະຫຍາຍຕົວ.

74. ເຖິງແມ່ນວ່າຄວາມຍືນຍົງ ແລະຜົນປະໂຫຍດໃນທາງປະຕິບັດຂອງມັນ ການພັດທະນາພະລັງງານນິວເຄຼຍ ກໍ່ຍັງປະເຊີນກັບຫລາຍໆອຸປະສັກ ເຊັ່ນ ຄວາມກັງວົນຂອງສາທາລະນະກ່ຽວກັບການແຜ່ຂະຫຍາຍ ຄວາມສໍານິສໍານານດ້ານອາວຸດນິວເຄຼຍ, ການຄຸ້ມຂອງສິ່ງເສດເຫລືອຂອງເຊື້ອໄຟນິວເຄຼຍ, ບັນຫາດ້ານຄວາມປອດໄພ, ມີການລົງທຶນສູງ,

---

[40] ອົງການພະລັງງານນິວເຄຼຍສາກົນ. 2006. *ພະລັງງານເນຍເຄຼຍ ແລະການພັດທະນາແບບຍືນຍົງ*. ເວຍນາ

[41] ປະເທດອາເມເນຍ ຍັງມີໂຮງງານພະລັງງານນິວເຄຼຍທີ່ດໍາເນີນການຢູ່ ທີ່ສະນອງກະແສໄຟຟ້າຫລາຍກວ່າ 35% ຂອງຄວາມຕ້ອງການພະລັງງານທັງໝົດ.

ໃຊ້ເວລາດົນ, ແລະການຍອມຮັບດ້ານເຕັກໂນໂລຢີໃໝ່ທາງການຄ້າ. ການທີ່ຈະເອົາຊະນະບັນດາອຸປະສັນເຫລົ່ານີ້ ແມ່ນມີຄວາມຫຍຸ້ງຫຍາກ ແລະມີຄວາມຕ້ອງການໃຫ້ມີການໂຕວາທີກັນຢ່າງເປີດເຜີຍ ເພື່ອຊອກຫາການສະໜັບສະໜູນຈາກສາທາລະນະກ່ຽວກັບຜົນປະໂຫຍດຂອງພະລັງງານນິວເຄຼຍ. ສະຖາບັນການເງິນຫລາຍຝ່າຍ ຕາມປະເພນີແລ້ວແມ່ນຫລີກລ່ຽງທີ່ຈະໃຫ້ການສະໜັບສະໜູນທາງການເງິນແກ່ການສ້າງໂຮງງານພະລັງງານໄຟຟ້ານິວເຄຼຍ. ໃນບາງລັດຂອງອະດີດສະຫະພາບໂຊວຽດ ນະໂຍບາຍພະລັງງານປະຈຸບັນຂອງທະນາຄານຢູໂຣບເພື່ອການຟື້ນຟູ ແລະພັດທະນາ (ໝາຍເຫດ 26) ລວມເອົາການສະໜອງເງິນໃຫ້ແກ່ມາດຕະການຮັກສາຄວາມປອດໄພຂອງໂຮງງານພະລັງງານນິວເຄຼຍ, ການປິດປະຈຳການແລະການຟື້ນຟູສິ່ງແວດ໌ລອມ, ແລະສິ່ງເສີມກອບຂອງລະບຽບການທີ່ມີປະສິດທິພາບ. ໃນທັດສະນະຂອງຄວາມເປັນຫ່ວງກ່ຽວກັບຂໍ້ຈຳກັດໃນການຈັດຊື້ຈັດຈ້າງ, ມີການສະໜອງທຶນຂອງສອງຝ່າຍ, ຄວາມສ່ຽງດ້ານອາວຸດນິວເຄຼຍ, ການມີໃຫ້ຂອງເຊື້ອໄຟນິວເຄຼຍ ແລະຄວາມເປັນຫ່ວງດ້ານຄວາມປອດໄພແລະສິ່ງແວດລ້ອມ ເອດີບີ ຈະຮັກສານະໂຍບາຍປະຈຸບັນຂອງຕົນ ໃນການບໍ່ເຂົ້າມີສ່ວນຮ່ວມໃນການສະໜອງທຶນໃຫ້ແກ່ການສ້າງໂຮງງານພະລັງງານໄຟຟ້ານິວເຄຼຍ.

### ຈ. ການໃຫ້ຄວາມອົບອຸ່ນພາຍໃນອາຄານ

75. ບັນດາປະເທດສະມາຊິກທີ່ກຳລັງພັດທະນາໃນອາຊີກາງ, ປະເທດມົງໂກນ, ແລະບັນດາແຂວງພາກເໜືອຂອງຈີນທີ່ມີຄວາມຕ້ອງການພະລັງງານສ້າງຄວາມອົບອຸ່ນໃນເຮືອນແລະນ້ຳຮ້ອນເພື່ອຊົມໃຊ້ໃນຄົວເຮືອນ. ຄວາມຕ້ອງການອາຍອຸ່ນໃນຄົວເຮືອນ ແລະຕຶກສຳນັກງານຕ່າງໆ ແລະນີ້ສາມາດສະໜອງ ໂດຍລະບົບທີ່ບໍ່ມີການເຊື່ອມໂຍງ ຫລື ລະບົບໃຫ້ຄວາມອົບອຸ່ນພາຍໃນຈາກສູນກາງ. ລະບົບໃຫ້ຄວາມອົບອຸ່ນ ແມ່ນມີທ່າແຮງໃນການນຳໃຊ້ພະລັງງານຢ່າງມີປະສິດທິພາບແລະສະນັ້ນ ມັນມີປະສິດທິຜົນດ້ານຕົ້ນທຶນທີ່ສາມາດຕອບສະໜອງຕາມຄວາມຕ້ອງການ. ໃນປະຈຸບັນລະບົບສ້າງຄວາມຮ້ອນໃຫຍ່ໃຫ້ແກ່ອາຄານແລະທີ່ພັກອາໃສ ແມ່ນຖືກຕິດຕັ້ງມາໄດ້ 30 - 40 ປີແລ້ວ ຍັງສືບຕໍ່ນຳໃຊ້ຢູ່ ເຊິ່ງເປັນເຕັກໂນໂລຊີທີ່ຫລ້າຫລັງແລະບໍ່ມີປະສິດທິພາບແລ້ວ. ໃນບາງກໍລະນີ, ຫລາຍກວ່າ 40% ຂອງການສ້າງຄວາມຮອ້ນໃນເຊື້ອໄຟ ແມ່ນສູນເສຍໄປໃນລະຫວ່າງການຜະລິດຄວາມຮ້ອນ, ການລຳລຽງ ແລະການນຳໃຊ້ຈຸດສຸດທ້າຍ.[42] ຍິ່ງໄປກວ່ານັ້ນ ຄວາມບໍ່ມີປະສິດທິພາບເຫລົ່ານີ້ ແມ່ນການຂາດນະໂຍບາຍ ແລະລະບຽບການທີ່ພຽງ ພໍ. ໃນເມື່ອການຄວາມຮ້ອນແກ່ອາຄານແລະຄົວເຮືອນ ແມ່ນມີຄວາມສຳຄັນຫລາຍສຳລັບການດຳລົງຊີວິດຂອງປະຊາຊົນໃນເຂດທີ່ມີລະດູໜາວດົນແລະເຂດທີ່ໜາວຫລາຍ ການສ້າງຂອບກົດໝາຍແມ່ນຄວາມຕ້ອງການອັນຈຳເປັນ ເພື່ອສ້າງກົນໄກການຄຸ້ມຄອງເອກະລາດທີ່ໃຫ້ການຊຸກຍູ້ (i) ການເຂົ້າມາມີສ່ວນຮ່ວມແລະການປະກອບທຶນຂອງພາກເອກະຊົນ (ii) ການກະຈ່າຍການຄຸ້ມຄອງ ແລະ (iii) ອັດຕາຄ່າບໍລິການ ແລະກົນໄກການໃຫ້ການອຸດໜູນທີ່ໂປ່ງໃສ.

76. ການໃຫ້ສ້າງຄວາມອົບອຸ່ນໃຫ້ແກ່ສະຖານທີ (ສ່ວນໃຫຍ່ແມ່ນອີງໃສເຊື້ອໄຟທີ່ເປັນແຮ່ທາດ) ແມ່ນແຫລ່ງໃຫຍ່ຂອງອາຍແກັດເຮືອນແກ້ວແລະຮຽກຮ້ອງໃຫ້ມີປະສິດທິຜົນດ້ານຕົ້ນທຶນແລະວິທີແກ້ໄຂແບບຍືນຍົງ. ສຳລັບລະ

[42] ສະພາພະລັງງານໂລກ. 2003. ໄປສູ່ລະບົບພະລັງງານຂອງທ້ອງຖິ່ນ: *ການສ້າງຄືນຄວາມຮ້ອນໃຫ້ແກ່ຄົວເຮືອນ ໃນຢູໂຣບຕາເວັນອອກ*. ລອນດອນ.

.

ບົບສູນກາງການໃຫ້ຄວາມຮ້ອນແກ່ສະຖານທີ່, ແຫລ່ງພະລັງງານ ລວມທັງຖ່ານຫີນ, ນ້ຳມັນເຊື້ອໄຟແລະຂີ້ເຫຍື້ອຈາກຕົວເມືອງ. ການລວມເຂົ້າກັນຂອງອານອຸ່ນ ແລະໂຮງງານພະລັງງານໄຟຟ້າ ໃຊ້ຄວາມຮ້ອນເສດເຫລືອຈາກກັງຫັນພະລັງງານອາຍນ້ຳ ຈະຊ່ວຍເຫັນໃຫ້ ການລວມເຂົ້າກັນຂອງອານອຸ່ນ ແລະໂຮງງານພະລັງງານໄຟຟ້າ ໃຊ້ຄວາມຮ້ອນຂີ້ເຫຍື້ອຈາກກັງຫັນພະລັງງານອາຍນ້ຳ, ຈະຊ່ວຍເຮັດໃຫ້ປະສິດທິພາບໂດຍລວມຂອງພະລັງງານທີ່ໄດ້ຈາກຄວາມຮ້ອນໃຕ້ດິນແລະຫລຸດການປ່ອຍອາຍແກັດເຮືອນແກ້ວຕໍ່ຫົວໜ່ວຍພະລັງງານທີ່ຜະລິດ. ທາງເລືອກຂອງພະລັງງານທົດແທນເຊັ່ນວ່າ ພະລັງງານຈາກແສງຕາເວັນສຳລັບການເຮັດໃຫ້ນ້ຳອຸ່ນ ແລະລະບົບປັ໊ບທີ່ໃຊ້ຄວາມຮ້ອນຈາກໃຕ້ດິນທີ່ໃຊ້ຄວາມຮ້ອນຈາກໃຕ້ດິນທີ່ຕື້ນຍັງສາມາດຊ່ວຍຫລຸດການນຳໃຊ້ເຊື້ອໄຟທີ່ເປັນແຮ່ທາດ. ຄຸນລັກສະນະຂອງຜູ້ຊົມໃຊ້ແມ່ນແຕກຕ່າງກັນລະຫວ່າງການນຳໃຊ້ ຂອງທີ່ພັກອາໃສ, ຫ້ອງການ, ໂຮງງານອຸດສາຫະກຳແລະເພື່ອການສຶກສາ, ແລະການຄວາມແຕກຕ່າງລະຫວ່າງການນຳໃຊ້ຢູ່ເຂດຕົວເມືອງແລະຊົນນະບົດ ສະນັ້ນລະບົບປະສິດທິຜົນດ້ານຕົ້ນທຶນທີ່ສົມບູນແມ່ນມີຄວາມຈຳເປັນເພື່ອຮັບປະກັນຄວາມພຽງພໍໃນການສະໜອງຄວາມຮ້ອນໃນຮູບແບບທີ່ຍືນຍົງ. ຍົກຕົວຢ່າງ, ໝໍ້ຕົມນ້ຳທີ່ໃຊ້ເຊື້ອໄຟຫລາຍປະເພດໄດ້ ສາມາດໄດ້ຮັບການອອກແບບເພື່ອບັນລຸປະສິດທິພາບທີ່ສູງກວ່າ. ໃນທຸກໆກໍລະນີ ຄວາມຕ້ອງການດ້ານຄວາມຮ້ອນ ອາດຈະຖືກຫລຸດຜ່ອນໂດຍການອອກແບບອາຄານທີ່ດີກວ່າ ແລະລະບົບການລະບົບຮັກສາຄວາມຮ້ອນ. ໃນຈຸດທີ່ເປັນໄປໄດ້, ແຫລ່ງພະລັງງານທົດແທນ ສາມາດຖືກນຳໃຊ້ເພີ່ມຄວາມສາມາດຂອງລະບົບແລະຫລຸດຜ່ອນການຊົມໃຊ້ເຊື້ອໄຟ.

## 5. ການຮ່ວມມືໃນພາກພື້ນ

77. ການຮ່ວມມືດ້ານພະລັງງານໃນພາກພື້ນ ສາມາດເຮັດໃຫ້ການເຊື່ອມໂຍ່ງຕະຫລາດພະລັງງານສຳລັບການພັດທະນາທາງເສດຖະກິດທີ່ສູງກວ່າ ແລະ ແມ່ນເປັນແນວທາງທີ່ມີປະສິດທິຜົນ ທີ່ຈະແກ້ໄຂຄວາມໝັ້ນຄົງດ້ານພະລັງງານ ແລະພ້ອມກັນນັ້ນກໍ່ສົ່ງເສີມການນຳໃຊ້ພະລັງງານຢ່າງມີປະສິດທິພາບກ ແຕ່ລະປະເທດ ມີຄວາມຕ້ອງການດ້ານພະລັງງານ ແລະຊັບພະຍາກອນສະເພາະໂຕ; ການເຊື່ອມໂຍ່ງການວາງແຜນຂອງພາກພື້ນ ຊ່ວຍໃຫ້ປະສິດທິຜົນດ້ານຕົ້ນທຶນ ແລະໂຄງການໃນພາກພື້ນ ທີ່ມີຄວາມຍືນຍົງດ້ານສິ່ງເວດລ້ອມໄດ້ຮັບການຈຳແນກຫລາຍໆປະເທດສະມາຊິກທີ່ກຳລັງພັດທະນາມີຊັບພະຍາກອນທຳມະຊາດຫລາຍ ທີ່ສາມາດໃຫ້ມີການຊື້ຂາຍໃນຕະຫລາດທີ່ໃຫຍ່ໃນປະເທດເພື່ອນບ້ານ, ທຸກຝ່າຍໄດ້ຮັບຜົນປະໂຫຍດ. ແຕ່ລະປະເທດມີຜົນປະໂຫຍດສ່ວນໂຕໃນການສົ່ງເສີມອາກາດທີ່ບໍລິສຸດແລະການປ້ອງກັນດ້ານສິ່ງແວດລ້ອມ; ໂດຍການຮ່ວມມືກັນໃນພາກພື້ນບັນດາປະເທດອາດຈະຂະຫຍາຍສິ່ງອຳນວຍດ້ານສາທາລະນະຂອງພາກພື້ນໃຫ້ໄດ້ສູງສຸດ. [43] ອຸປະສັກຕໍ່ການຮ່ວມມືໃນຂະແໜງພະລັງງານຂອງພາກພື້ນລວມທັງເຕັກນິກທີ່ສາມາດເຂົ້າກັນໄດ້ (ເຊັ່ນ: ລາຍລະອຽດສະເພາະ ທາງເຕັກນິກທີ່ເຂົ້າກັນໄດ້ຂອງສາຍສົ່ງ) ແລະກອບນະໂຍບາຍກ່ຽວກັບເຕັກນິກທີ່ເຂົ້າກັນໄດ້. ຕ້ອງການໃຫ້ມີການສ້າງຂອບນະໂຍບາຍສຳລັບການຊື້ຂາຍພະລັງງານໃນພາກພື້ນໄປພ້ອມໆກັນກັບພື້ນຖານໂຄງລາງຂອງພາກພື້ນ ເພື່ອຊຸກຍູ້ໃຫ້ໃຫ້ແກ່ການຮ່ວມມືໃນພາກພື້ນ ແລະການຄ້າດ້ານພະລັງງານ.

---

43 ເອດີບີ. 2006. *ຍຸດທະສາດການຮ່ວມມື ແລະການເຊື່ອມໂຍ່ງເຂົ້າກັບພາກພື້ນ*. ມະນີລາ.

78. ໃນຫລາຍໆປີທີ່ຜ່ານມາ, ເອດີບີ ຊ່ວຍເຫລືອ ແລະໄດ້ສົ່ງເສີມຄວາມພະຍາຍາມຂອງການຮ່ວມມືໃນພາກພື້ນ ລວມທັງການສົ່ງອອກອາຍແກັດສ໌ທຳມະຊາດຈາກປະເທດອິນໂດເນເຊຍຫາປະເທດສິງກະໂປ ແລະໂຄງການພະລັງງານໄຟຟ້າໃນ ສປປ ລາວ ທີ່ຜະລິດກະແສໄຟຟ້າເພື່ອຂາຍໃຫ້ແກ່ປະເທດໄທ. ເອດີບີ ໄດ້ກາຍເປັນເຄື່ອງມື ໃນການສ້າງຄວາມຮ່ວມມືໃນອະນຸພາກພື້ນແລະສ້າງເຄືອຄ່າຍໃຫ້ກ້າວໄປຂ້າງໜ້າຢ່າງມີປະສິດທິຜົນ. ຂໍ້ສະເໜີໄດ້ຮັບການປຶກສາຫາລືກ່ຽວກັບໃນການຂາຍໄຟຟ້າຈາກປະເທດສາທາລະນາລັດເກີກິດສ໌ ແລະ ທາຈິກິດສ໌ຖານໃຫ້ແກ່ປະເທດອັບການິດສ໌ຖານແລະປາກິດສ໌ຖານ, ຈາກລາວແລະກຳປູເຈຍ ໄປຫາປະເທດໄທ, ລະຫວ່າງ ປະເທດອິນເດຍ ແລະສີລັງກາ ແລະລະຫວ່າງກຸ່ມປະເທດໃນອະນຸພາກພື້ນແມ່ນ້ຳຂອງ (ລວມທັງພາກໃຕ້ຂອງຈີນ). ມັນຍັງມີທ່າແຮງຫລາຍໃນການທີ່ຈະເພີ່ມການຮ່ວມມືແລະການເຊື່ອມໂຢງຂອງພາກພື້ນໃນຂະແໜງພະລັງງານ. ຕົວຢ່າງໃນອາຊີໃຕ້ ຂະໜາດແລະການແຈກຢາຍຕາມທຳມະຊາດຂອງພະລັງງານໄຟຟ້າແຮງນ້ຳ ແລະ ຊັບພະຍາກອນອາຍແກັດສ໌ທຳມະຊາດ ແລະ ຄວາມແຕກຕ່າງຂອງຂະໜາດຂອງເສດຖະກິດ ລວມທັງການພົວພັນເຖິງລະດັບຄວາມຕ້ອງການພະລັງງານແລະອັດຕາການຂະຫຍາຍໂຕທາງເສດຖະກິດ ຊີ້ໃຫ້ເຫັນວ່າມີທ່າແຮງທີ່ຈະໄດ້ຮັບຜົນປະໂຫຍດຮ່ວມກັນຂອງການເຊື່ອມໂຢງແລະການຄ້າພະລັງງານແລະແຫລ່ງພະລັງງານເພື່ອໃຫ້ເກີດຂໍ້ຕົກລົງຮ່ວມກັນ.

## 6. ການປະຕິຮູບແລະປັບປຸງໂຄງສ້າງຂອງຂະແໜງພະລັງງານ

79. ໃນຊຸມປີ 1980, ແນວໂນ້ມໄດ້ເລີ້ມຂື້ນທົ່ວໂລກຕໍ່ກັບການປັບປຸງໂຄງສ້າງຂອງຂະແໜງພະລັງງານແລະສ້າງຕັ້ງອົງການຄຸ້ມຄອງອິດສະຫລະ. ປະເທດທີ່ພັດທະນາແລ້ວ ໄດ້ປັບປຸງໂຄງສ້າງເພື່ອປັບປຸງປະສິດທິພາບໂດຍຜ່ານການແຂ່ງຂັນ; ປະເທດກຳລັງພັດທະນາ ປັບປຸງໂຄງສ້າງເພື່ອເພີ່ມຊັບພະຍາກອນຂອງສາທາລະນະທີ່ຂາດແຄນໂດຍໃຫ້ພາກເອກະຊົນເຂົ້າມາລົງທຶນຫລາຍຂື້ນ. ທະນາຄານພັດທະນາຫລາຍຝ່າຍລວມທັງເອດີບີ ໄດ້ໃຫ້ການສະໜັບສະໜູນຢ່າງຕັ້ງໜ້າໃນການປັບປຸງໂຄງສ້າງ ແລະຄວາມພະຍາຍາມໃນການປະຕິຮູບລະບຽບການໃນປະເທດສະມາຊິກທີ່ກຳລັງພັດທະນາ ຊອກຫາການເຂົ້າມາມີສ່ວນຮ່ວມຂອງພາກເອກະຊົນ. ນີ້ລວມທັງການແຍກຂະແໜງພະລັງງານ, ສ້າງຕັ້ງກົນໄກການຄຸ້ມຄອງເອກະລາດ, ນຳສະເໜີໃຫ້ມີການແຂ່ງຂັນໃນການຜະລິດກະແສໄຟຟ້າແລະໃນບາງກໍລະນີກໍ່ມີການຫັນເປັນເອກະຊົນຜ່ານການຂາຍຊັບສິນ. ການປະຕິຮູບຊຸກຍູ້ໃຫ້ພາກເອກະຊົນເຂົ້າມາມີສ່ວນຮ່ວມ ແລະເຂົ້າຫາແຫລ່ງການເງິນທີ່ເປັນຮູບແບບທາງການຄ້າ. ການຄຸ້ມຄອງທີ່ເປັນເອກະລາດ ໄດ້ແຍກຈຸດປະສົງທາງດ້ານການເມືອງໄລຍະສັ້ນຈາກການຕັ້ງອັດຕາຄ່າບໍລິການແລະເຮັດໃຫ້ຂະແໜງພະລັງງານສາມາດດຳເນີນການບົນພື້ນຖານການແຂ່ງຂັນ.

80. ແຕ່ຢ່າງໃດກໍ່ຕາມຄວາມຄືບໜ້າຍັງຊັກຊ້າຢູ່ຍ້ອນໃນດ້ານກົດໝາຍ, ບໍ່ມີການປຶກສາຫາລືທີ່ພຽງພໍກັບພາກສ່ວນທີ່ກ່ຽວຂ້ອງ, ມີຄວາມກັງວົນຕໍ່ກັບການຂຶ້ນຄ່າບໍລິການ, ແລະຂາດແຜນທີ່ມີການລະບຸຢ່າງຈະແຈ້ງ. ການປະຕິຮູບຂະແໜງພະລັງງານລວມເອົາການແຍກຄວາມຮັບຜິດຊອບຂອງລັດກ່ຽວກັບນະໂຍບາຍຂອງຂະແໜງພະລັງງານ ຈາກການຄຸ້ມຄອງອຸດສາຫະກຳເພື່ອຮັບປະກັນຄວາມສົມດຸນທີ່ເປັນທຳລະຫວ່າງຜົນປະໂຫຍດຂອງນັກລົງທຶນ ແລະຜູ້ຊົມໃຊ້. ມັນຍັງຈະມີການແຍກຕາມສາຍຕັ້ງຂອງບໍລິສັດພະລັງງານທີ່ລວມກັນໃຫ້ການເປັນບໍລິສັດຜະລິດກະແສໄຟ ຟ້າ, ບໍລິສັດສາຍສົ່ງແລະບໍລິສັດສຳລັບແຈກຈ່າຍກະແສໄຟຟ້າ. ຫລາຍໆປະເທດສະມາຊິກທີ່ກຳລັງພັດທະນາໄດ້ສືບຕໍ່ດຳເນີນນະໂຍບາຍປະຕິຮູບທີ່ມີສຳເລັດໃນຫລາຍໆລະດັບທີ່ແຕກຕ່າງກັນ. ປະເທດຈີນໄດ້ແຍກບໍລິສັດໄຟຟ້າຂອງຕົນ

ເກືອບທັງໝົດອອກເປັນຫ້າບໍລິສັດໃຫຍ່ລະດັບຊາດ ແລະສ້າງຕັ້ງຄະນະກຳມະການ ຄຸ້ມຄອງ. ບາງປະເທດຢູ່ໃນອາຊີກາງ (ກາຊັກສ໌ຖານ ແລະສາ ທາລະນາລັດ ເກີກິດສ໌) ແລະປະເທດມົງໂກນ ກໍ່ໄດ້ສ້າງຕັ້ງອົງການຄຸ້ມຄອງ. ຫລາຍໆແຂວງໃນປະເທດອິນເດຍໄດ້ມີການແຍກຂະແໜງການອອກຈາກກັນ ແຕ່ມີຄວາມຈຳເປັນຫລາຍກວ່ານັ້ນທີ່ຈະຕ້ອງໄດ້ປະຕິບັດເພື່ອຫັນໃຫ້ເປັນການຢ່າງສົມບູນ. ໃນປະເທດປາກິດສ໌ຖານ ຜູ້ຄຸ້ມຄອງມີການດຳເນີນງານຢ່າງເປັນເອກະລາດແລະໂປ່ງໃສ ແລະກຳລັງຊ່ວຍກັນສ້າງ ໂຄງສ້າງທາງການຄ້າທີ່ດີກວ່າ ເພື່ອການລົງທຶນຂອງພາກເອກະຊົນ. ຄວາມກ້າວໜ້າໃນປະເທດຟີລິບປິນກ່ຽວກັບ ການປະຕິຮູບຂະແໜງການນີ້ແມ່ນຍັງບໍ່ຊັດເຈນ. ໂຄງຮ່າງດ້ານກົດໝາຍ, ລະບຽບການແລະສະຖາບັນແມ່ນໄດ້ຮັບການສ້າງຕັ້ງຂຶ້ນແລ້ວ; ຕະຫລາດຂາຍຍົກກະແສໄຟຟ້າໄລຍະສັ້ນໄດ້ເລີ່ມດຳເນີນການໃນກາງປີ 2006; ແລະຄ່າບໍລິການສາຍສົ່ງແລະການແຈກຈ່າຍກະແສໄຟຟ້າກໍ່ໄດ້ຮັບການຄຸ້ມຄອງ. ແຕ່ຢ່າງໃດກໍ່ຕາມ ຈຸດປະສົງທີ່ຈະເຮັດໃຫ້ຂະແໜງການມີທ່າແຮງດ້ານການເງິນແລະການຫັນຊັບສິນຂອງບໍລິສັດພະລັງງານແຫ່ງຊາດໄປສູ່ເອກະຊົນຍັງບໍ່ໄດ້ຮັບການຕອບສະໜອງ.

81. ການປັບປຸງໂຄງສ້າງແລະການແຂ່ງຂັນ ໄດ້ສະແດງໃຫ້ເຫັນຜົນບໍ່ຊັດເຈນຢູ່ໃນລະດັບສາກົນ. ການແຍກຂະແໜງການ ແລະ ການຫັນເປັນລັດວິສາຫະກິດ ແມ່ນວິທີການໜຶ່ງ. ການຫັນຈາກການເປັນອົງການ ຂອງລັດໄປສູ່ການດຳເນີນການແບບເອກະຊົນຢ່າງເຕັມໂຕແມ່ນການຂ້າມຜ່ານທີ່ມີຄວາມຫຍຸ້ງຫຍາກ ແລະກໍ່ບໍ່ແມ່ນຈະເປັນທິດທາງທີ່ມີປະສິດທິພາບຢູ່ສະເໝີໄປ. ການລິເລີ້ມການປະຕິຮູບຕ້ອງການປະເມີນຢ່າງລະມັດລະວັງຕາມອຸດົມການທາງການເມືອງອັດຕາຄ່າບໍລິການໄປຕາມກັບຕົ້ນທຶນ, ອອກກົດໝາຍ, ປັບປຸງການບໍລິຫານບໍລິສັດແລະການເງິນ ແລະກົນໄກການຄຸ້ມຄອງທີ່ເປັນເອກະລາດແມ່ນຕາມປົກກະຕິແລ້ວເປັນຂໍ້ຫຍຸ້ງຫຍາກທີ່ຈະໃຫ້ການຮັບປະກັນ. ຍິ່ງໄປກວ່ານັ້ນຄວາມເປັນຫ່ວງຕໍ່ການລົງທຶນໃໝ່ເຂົ້າໃນການເພີ່ມກຳລັງການຜະລິດ ໄດ້ເຮັດໃຫ້ການແກ້ໄຂອ່ອນແອລົງສຳລັບການຂາຍຍົກທີ່ມີທ່າແຮງໃນການແຂ່ງຂັນຢ່າງເຕັມຮູບແບບແລະຕະຫລາດໄຟຟ້າຂາຍຍ່ອຍ. ມີສອງສາມປະເທດ ໄດ້ເລີກການຄຸ້ມຄອງທຸລະກິດໄຟຟ້າຢ່າງສົມບູນ. ການຫັນໄປສູ່ເອກະຊົນບໍ່ແມ່ນຈຸດປະສົງສຸດທ້າຍຂອງການປະຕິຮູບແຕ່ມັນແມ່ນໜຶ່ງໃນຫລາຍທທາງເລືອກທີ່ມີຢູ່ເພື່ອປັບປຸງປະສິດທິພາບ ແລະເພີ່ມການມີທຶນໃຫ້ແກ່ການລົງທຶນ. ການປະຕິບັດຂະແໜງການລວມທັງການຫັນເປັນເອກະຊົນ ຄວນໄດ້ຮັບການອອກແບບແລະລະດັບຢ່າງລະມັດລະວັງຂອງແຕ່ລະປະເທດບົນພື້ນຖານຂອງຄວາມໂປ່ງໃສ່.

82. ໃນໄລຍະສັ້ນອັດຕາຄ່າບໍລິການ ຈຳເປັນຕ້ອງໄດ້ຖືກກຳນົດໂດຍຜ່ານລະບຽບການທີ່ເປັນເອກະລາດແລະໂປ່ງໃສ. ໃນຂະແໜງໄຮໂດກາກບອນຍ່ອຍ ມີການເຄືອນຍ້າຍໄປສູ່ກອບມາດຕະຖານຂອງຕະຫລາດແລະການຕັ້ງລາຄາທີ່ອີງໃສຕະຫລາດເປັນຫລັກ. ໃນໄລຍະກາງລັດຖະບານຄວນຊຸກຍູ້ໃຫ້ມີການຍົກເລີກການມີສ່ວນຮ່ວມຂອງຕົນໃນທຸກໜ້າທີກ່ຽວກັບການຄ້າແລະຮັກສາພຽງແຕ່ ບັນດາກິດຈະກຳທີ່ຖືວ່າເປັນຂອງລັດແລະຖືວ່າເປັນການບໍລິການໃຫ້ແກ່ສາທາລະນະ. ເອດີບີ ຈະຊຸກຍູ້ໃຫ້ພາກເອກະຊົນເຂົ້າມາມີສ່ວນຮ່ວມ ໂດຍຜ່ານການພັດທະນານະໂຍບາຍແລະແວດລ້ອມຂອງລະບຽບການພາຍໃນຂອງປະເທດສະມາຊິກ ທີ່ກຳລັງພັດທະນາ.

83. ການສ້າງຂີດຄວາມອາດສາມາດແມ່ນຍັງມີຄວາມສຳຄັນສຳລັບການປະຕິຮູບຂະແໜງພະລັງງານ ແລະການປັບປຸງໂຄງສ້າງ. ບັນດາຂະແໜງການທີ່ນຳພາ ແລະບໍລິຫານສະຖານບັນໃນຂະແໜງພະລັງງານຕ້ອງການຄວາມຊຳນິຊຳນານດ້ານການບໍລິຫານຄຸ້ມຄອງ, ຄວາມດ້ານວິຊາການຂອງເຕັກໂນໂລຢີໃໝ່ແລະມີຂີດຄວາມສາມາດດ້ານ

ການຄຸ້ມຄອງ (ລວມທັງການບໍລິຫານການເງິນ). ການພັດທະນາຊັບພະຍາກອນມະນຸດກໍ່ມີຄວາມສຳຄັນຂອງການລົງທຶນໃນໄລຍະຍາວເພື່ອປະສິດທິຜົນໃນອານາຄົດຂອງຂະແໜງພະລັງງານ.

## 7. ປະເທດສະມາຊິກທີ່ກຳລັງພັດທະນາຢູ່ໃນປາຊີຟິກ

84. ຫລາຍປະເທດສະມາຊິກທີ່ກຳລັງພັດທະນາໄດ້ນຳໃຊ້ນຳມັນກະຊວນເຂົ້າໃນການຜະລິດກະແສໄຟຟ້າ; ນ້ຳມັນເຊື້ອໄຟ ກວມເອົາສ່ວນໃຫຍ່ຂອງການຊຳລະການນຳເຂົ້າສິນຄ້າ ແລະປະເທດເຫລົ່ານີ້ມີຄວາມຫວັ່ນໄຫວງ່າຍຕໍ່ການຜັນຜວນຂອງລາຄານ້ຳມັນ ຫລາຍກ່ວາປະເທດອື່ນ. ບາງປະເທດສະມາຊິກທີ່ກຳລັງພັດທະນາໃນປາຊີຟິກມີທາງອອກກ່ຽວກັບແຫລ່ງພະລັງງານທີ່ໃຊ້ເຕັກໂນໂລຢີພະລັງງານທົດແທນເຊັ່ນ ພະລັງງານນ້ຳຂະໜາດນ້ອຍ ແລະ ນ້ອຍຫລາຍ, ພະລັງງານແຮງລົມ, ແລະ ພະລັງງານແສງຕາເວັນ ແຕ່ວ່າອັນນີ້ບໍ່ແມ່ນສ່ວນໃຫຍ່. ເພື່ອແກ້ໄຂດ້ານຄວາມໝັ້ນຄົງດ້ານພະລັງງານ, ຫລຸດຜ່ອນການນຳເຂົ້ານ້ຳມັນເຊື້ອໄຟ ແລະ (ມີຂະໜາດນ້ອຍຫລາຍ) ຊ່ວຍຫລຸດຜ່ອນການປ່ອຍອາຍແກັດສ໌ເຮືອນແກ້ວ, ປະເທດສະມາຊິກທີ່ກຳລັງພັດທະນາ ສາມາດຮັບເອົາແຫລ່ງພະລັງງານໃໝ່ ແລະພະລັງງານທົດແທນສຳລັບການຜະລິດກະແສໄຟຟ້າຄວນມີລະດັບໃຫຍ່ໂດຍ (i) ແກ້ໄຂອຸປະສັກອັນສຳຄັນກ່ຽວກັບບັນຫາດ້ານຊຸມຊົນແລະທີ່ດິນ ແລະ (ii) ນຳສະເໜີນະໂຍບາຍແລະສະພາບແວດລ້ອມທາງດ້ານລະບຽບການເພື່ອດຶງດູດການສະໜອງທຶນທີ່ຈຳເປັນແລະຮັບປະກັນຄວາມຍືນຍົງ. ໂຮງງານໄຟຟ້າໃນປະຈຸບັນທີ່ໃຊ້ນ້ຳມັນເຊື້ອໄຟອາດຈະຮັບປະກັນຄວາມເຊື່ອຖືໄດ້ ໃນຂະນະທີ່ແຫລ່ງພະລັງງານທົດແທນ ສາມາດສະໜອງພະລັງງານເມື່ອມີ ແລະຫລຸດຜ່ອນການນຳໃຊ້ນຳມັນເຊື້ອໄຟ. ການນຳໃຊ້ຊີວະມວນເຂົ້າໃນການຜະລິດກະແສໄຟຟ້າ ກໍ່ຍັງແມ່ນທາງເລືອກໜຶ່ງ ໂດຍສະເພາະບັນດາເກາະດອນທີ່ມີອຸດສາຫະກຳຕົ້ນປາມ.

85. ນອກເໜືອຈາກກາເພີ່ມກຳລັງການຜະລິດ, ນະໂຍບາຍປະສິດທິພາບດ້ານພະລັງງານ (ລວມທັງອາຄານທີ່ມີຄວາມຕ້ອງການພະລັງງານທີ່ຕໍ່າ) ຈຳເປັນຕ້ອງການໃຫ້ແທດເໝາະກັບຄວາມຕ້ອງການ. ຕາມຄວາມເໝາະສົມໂຄງສ້າງການບໍລິຫານແລະລະບຽບດ້ານຄ່າບໍລິການ ຄວນໄດ້ຮັບການພັດທະນາ. ການສ້າງຂີດຄວາມສາມາດ ແມ່ນຄວາມຈຳເປັນທີ່ຕ້ອງການ ຖ້າເປັນໄປໄດ້ແມ່ນຜ່ານການຮ່ວມມືໃນພາກພື້ນ. ໃນເມື່ອບາງປະເທດສະມາຊິກທີ່ກຳລັງພັດທະນາໃນປາຊີຟິກ ຂາດຂໍ້ມູນຂ່າວສານແລະສະຖິຕິ ເອດີບີ ຈະໃຫ້ການຊ່ວຍເຫລືອເພື່ອປັບປຸງການເກັບສະຖິຕິດ້ານພະລັງງານ ແລະວິເຄາະຂໍ້ມູນເພື່ອການພັດທະນານະໂຍບາຍດ້ານພະລັງງານ ແລະຍຸດທະສາດຂອງຂະແໜງການໃຫ້ມີປະສິດທິຜົນ. ແຕ່ລະປະເທດສະມາຊິກທີ່ກຳລັງພັດທະນາໃນປາຊີຟິກ ຕ້ອງການການສະໜັບສະໜູນໃນຂະແໜງພະລັງງານໃຫ້ເຕັມຮູບແບບ. ການສົ່ງເສີມການການນຳໄຟຟ້າສູ່ຊົນນະບົດ ແລະການຈັດສັນດ້ານອົງການ ແລະການຈັດຕັ້ງປະຕິບັດໃຫ້ເໝາະສົມ ແມ່ນເປັນບັນຫາທີ່ສຳຄັນ ຍ້ອນວ່າປະຊາຊົນໃນທ້ອງຖິ່ນແມ່ນອາໄສຢູ່ເທິງເກາະທີ່ກະແຈກກະຈາຍ.

86. ປະເທດສະມາຊິກທີ່ກຳລັງພັດທະນາຢູ່ໃນປາຊີຟິກ ກໍ່ຄ້າຍຄືກັນກັບບັນດາເສດຖະກິດທີ່ເປັນເກາະເຊັ່ນ ມາດິບ, ແຫລມມາລາກາແລະປະເທດສະມາຊິກທີ່ມີທີ່ຕັ້ງຕໍ່າກວ່າລະດັບນ້ຳທະເລຈະໄດ້ຮັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດແລະໂລກຮ້ອນ. ການເພີ່ມຂຶ້ນຂອງລະດັບນ້ຳທະເລດັ່ງທີ່ໄດ້ມີການຄາດຄະເນໃນບົດສຶກສາທາງວິທະຍາສາດ, ຈະເຮັດໃຫ້ເນື້ອທີ່ດິນບາງສ່ວນຂອງເກາະເຫລົ່ານີ້ຈົມຢູ່ໃຕ້ນ້ຳ. ສະນັ້ນ ມາດຕະການບັນເທົາເພີ່ມ

ເຕີມກ່ຽວກັບໂລກຮ້ອນ ປະເທດສະມາຊິກທີ່ກຳລັງພັດທະນາຢູ່ໃນປາຊີຟິກ ຈຳເປັນຕ້ອງມີການປັບຕົວໃຫ້ເຂົ້າກັບການປ່ຽນແປງໃນອານາຄົດ. ເພື່ອຮັບປະກັນວ່າໄດ້ມີຄວາມເອົາໃຈໃສ່ຕໍ່ກັບບັນຫານີ້ ຊຸດການຊ່ວຍເຫລືອໃຫ້ແກ່ຂະແໜງການພະລັງງານຕໍ່ໄດ້ກ່າວເຖິງການປັບຕົວຕໍ່ກັບການປ່ຽນແປງສະພາບອາກາດໂດຍສະເພາະແມ່ນປະເທດສະມາຊິກທີ່ກຳລັງພັດທະນາຢູ່ໃນປາຊີຟິກ.

# ຂອບຜົນໄດ້ຮັບວ່າດ້ວຍການຈັດຕັ້ງປະຕິບັດນະໂຍບາຍພະລັງງານ ຂອງເອດີບີ

**ຜົນກະທົບ:** ຫລາຍຄົນ ແລະທຸກລະກິດໃນປະເທດສະມາຊິກທີ່ກຳລັງພັດທະນາ ໄດ້ເຂົ້າເຖິງພະລັງງານ ທີ່ສາມາດຊື້ໄດ້, ເຊື່ອຖືໄດ້ ແລະພຽງພໍ
**ຄວາມຮັບຜິດຊອບພື້ນຖານ:** ກົມພາກພື້ນ, ກົມບໍລິການດ້ານເອກະຊົນແລະກົມພັດທະນາພາກພື້ນແບບຍືນຍົງ

| ຜົນ | ຕົວຊີ້ບອກຜົນ | ຜົນໄດ້ຮັບ [a] | ຕົວຊີ້ບອກຜົນໄດ້ຮັບ [b] | ກິດຈະກຳຫລັກ ແລະ ການລິເລີ່ມ ທີ່ປະກອບໃຫ້ຜົນ | ສົມມຸດທິຖານ ແລະ ຄວາມສ່ຽງ |
|---|---|---|---|---|---|
| ປັບປຸງປະສິດທິພາບດ້ານພະລັງງານ ແລະໃຫ້ມີການນຳໃຊ້ພະລັງງານທົດແທນຫລາຍຂຶ້ນໃນບັນດາປະເທດສະມາຊິກທີ່ກຳລັງພັດທະນາ. | ສ່ວນແບ່ງຂອງພະລັງງານທົດແທນໃນຂີດຄວາມສາມາດຂອງຜະລິດ ພະລັງງານທັງໝົດ (ເພີ່ມຂຶ້ນຈາກ 2006)<br><br>ການຊົມໃຊ້ພະລັງງານຕໍ່ຫົວໜ່ວຍຂອງ GDP, ທຽບເທົ່າກັບໂຕນຂອງນ້ຳມັນເຊື້ອໄຟ (ຫລຸດລົງຈາກ 2006) | ການລົງທຶນຂອງເອດີບີເຂົ້າໃນປະສິດທິພາບດ້ານພະລັງງານ ແລະ ພະລັງງານທົດແທນເພີ່ມຂຶ້ນ | ຈຳນວນ, \$ (ເປົ້າໝາຍ = ຫລາຍກວ່າ \$2 ຕື້ຕໍ່ປີ ເລີ້ມແຕ່ປີ 2013)<br><br>ການຕິດຕັ້ງກຳລັງການຜະລິດເພີ່ມເຕີມໂດຍການນຳໃຊ້ພະລັງງານທົດ ແທນ, ເມກາວັດໂມງ (ເພີ່ມຈາກຖານ)[b]<br><br>ການປະຢັດການໃຊ້ໄຟຟ້າ, ກິໂລວັດໂມງ(ເພີ່ມຈາກຖານ)<br><br>ການຫລຸດການປ່ອຍ | ພະລັງງານສະອາດແລະແຜນງານ ດ້ານສິ່ງແວດລ້ອມ (2006 ເປັນຕົ້ນໄປ)<br><br>ຂໍ້ລິເລີ່ມດ້ານຕະຫລາດອາຍກາກບອນ (2007 ເປັນຕົ້ນໄປ)<br><br>ຂໍ້ລິເລີ່ມດ້ານຂົນສົ່ງທີ່ຍືນຍົງ (2007 ເປັນຕົ້ນໄປ )<br><br>ອຳນວຍຄວາມສະດວກໃຫ້ແກ່ພາກເອກະຊົນລົງທຶນໃນຂະແໜງພະລັງງານທີ່ມີປະສິດ | ຈະມີຊັບພະຍາກອນໃຫ້ຢ່າງພຽງພໍ<br><br>ສະເຖຍລະພາບດ້ານການຂະຫຍາຍຕົວຂອງເສດຖະກິດໃນພາກພື້ນ<br><br>ມີການປະສານງານກັນຢ່າງໃກ້ສິດກັບຄູ່ຮ່ວມພັດທະນາອື່ນໆ<br><br>ມີຄຳໝັ້ນສັນຍາທີ່ແຮງກ້າ ແລະຄວາມເຕັມໃຈຂອງລັດຖະບານຂອງປະເທດສະມາຊິກ ທີ່ກຳລັງພັດທະນາ |

| ຜົນ | ຕົວຊີ້ບອກຜົນ | ຜົນໄດ້ຮັບ [a] | ຕົວຊີ້ບອກຜົນໄດ້ຮັບ [b] | ກິດຈະກຳຫລັກ ແລະ ການລິເລີ້ມ ທີ່ປະກອບໃຫ້ຜົນ | ສົມມຸດທິຖານ ແລະ ຄວາມສ່ຽງ |
|---|---|---|---|---|---|
| | | | ອາຍກາກບອນ, ຫລີກລ້ຽງ ການປ່ອຍອາຍກາກບອນເປັນໂຕນ (ເພີ່ມຈາກຖານ)<br><br>ຈຳນວນ(ເພີ່ມຂຶ້ນຈາກຖານ)<br><br>ຈຳນວນ, $ (ເພີ່ມຂຶ້ນຈາກຖານ)<br><br>ກຳລັງການຜະລິດເພີ່ມເຕີ່ມທັງໝົດ ເມກາວັດໂມງ ( ເພີ່ມຂຶ້ນຈາກຖານ)<br><br>ຈຳນວນຄົວເຮືອນໃໝ່ທີ່ຕໍ່ກະແສໄຟຟ້າ (ເພີ່ມຂຶ້ນຈາກຖານ) | ທີພາບແລະໂຄງການພະລັງງານທົດແທນ<br><br>ການຮ່ວມກັບສະຖາບັນການເງິນຫລາຍຝ່າຍ ວ່າດ້ວຍ ກອບການລົງທຶນເຂົ້າໃນພະລັງງານສະອາດ<br><br>ກອງປະຊຸມພະລັງງານສະອາດ(2006 ເປັນຕົ້ນໄປ) | |
| ປະສິດທິພາບ ແລະຂະແໜງພະລັງງານ | ອັດຕາການເຂົ້າເຖິງກະໄຟຟ້າ ໃນ ທະວີບອາຊີ ແລະປາຊີຟິກ | ການລົງທຶນຂອງເອດີບີເຂົ້າໃນການຂະຫຍາຍ | ລະດັບຂອງການຮັບຮອງເອົາການລົງທຶນ | ໂຄງການໄຟຟ້າເພື່ອທຸກຄົນ: (i) ສະໜັບສະໜູນໂຄງການ | ຈະມີຊັບພະຍາກອນສະໜອງໃຫ້ຢ່າງພຽງພໍ |

| ຜົນ | ຕົວຊີ້ບອກຜົນ | ຜົນໄດ້ຮັບ [a] | ຕົວຊີ້ບອກຜົນໄດ້ຮັບ [b] | ກິດຈະກຳຫລັກ ແລະ ການລິເລີ່ມທີ່ປະກອບໃຫ້ຜົນ | ສົມມຸດຕິຖານ ແລະ ຄວາມສ່ຽງ |
|---|---|---|---|---|---|
| ເປັນໄປໄດ້ໃນ ປະເທດສະມາຊິກ ທີ່ກຳລັງພັດທະນາ | (80% ໃນປີ 2013 ຈາກ 73% ໃນປີ 2005) | ການບໍລິການໄຟຟ້າ | ຈຳນວນເງິນກູ້ ແລະ ການຊ່ວຍເຫລືອຫລ້າ (ເພີ່ມຈາກຖານ)<br><br>ຈຳນວນຂອງການຊ່ວຍເຫລືອດ້ານວິຊາການ (ເພີ່ມຈາກຖານ)<br><br>ຈຳນວນເງິນກູ້ ແລະການຊ່ວຍເຫລືອຫລ້າ, $ (ເພີ່ມຈາກຖານ)<br><br>ຈຳນວນເງິນຂອງການຊ່ວຍເຫລືອດ້ານວິຊາການ,$ (ເພີ່ມຈາກຖານ)<br><br>ປະສິດທິຜົນຂອງການລົງທຶນ<br><br>ເປີເຊັນຂອງບົດລາຍງານຜົນສຳເລັດ | ໄຟຟ້າເພື່ອຊົນນະບົດ<br>(ii) ການລົງທຶນເຂົ້າໃນໂຄງການຕ່າໜາງໄຟຟ້າຂະໜາດນ້ອຍ ສົ່ງເສີມເຕັກໂນໂລຢີທີ່ສະອາດກວ່າໃນການຜະລິດກະແສໄຟຟ້າ<br><br>ສະໜັບສະໜູນພໂຄງການ ແລະແຜນງານກ່ຽວກັບພະລັງງານ ແລະ ອາຍແກັດສ໌ໃນພາກພື້ນ ແລະອານຸພາກພື້ນ | ມີຄຳໝັ້ນສັນຍາທີ່ເຂັ້ມແຂງ ແລະ ຄວາມເຕັມໃຈຂອງລັດຖະບານ ປະເທດສະມາຊິກທີ່ກຳລັງພັດທະນາ |

| ຜົນ | ຕົວຊີ້ບອກຜົນ | ຜົນໄດ້ຮັບ [a] | ຕົວຊີ້ບອກຜົນໄດ້ຮັບ [b] | ກິດຈະກຳຫລັກ ແລະ ການລິເລີ່ມ ທີ່ປະກອບໃຫ້ຜົນ | ສົມມຸດທິຖານ ແລະ ຄວາມສ່ຽງ |
|---|---|---|---|---|---|
| | | | ຂອງໂຄງການໃຫ້ຢູ່ໃນ ລະດັບພໍໃຈ (ຮັກສາໃນລະດັບ ຫລື ປັບປຸງແມ່ນຂຶ້ນກັບຖານ)<br><br>ເປີເຊັນຂອງບົດລາຍງານ ຜົນສຳເລັດການຊ່ວຍ ເຫລືອທາງວິຊາການ ຈັດໃຫ້ຢູ່ລະດັບພໍໃຈ | | |
| ປະສິດທິພາບ ແລະຂະແໜງ ພະລັງງານ ເປັນໄປໄດ້ໃນ ປະເທດສະມາຊິກ ທີ່ກຳລັງພັດທະນາ | ມີສະພາບການເງິນ ຂອງວິສາຫະກິດ ທີ່ເຂັ້ມແຂງ (ມີການດຳເນີນງານ ຂອງແຕ່ລະວິສາຫະກິດ ທີ່ດີກວ່າດັ່ງທີ່ໄດປະເມີນ ໃນບົດລາຍງານ ແລະ ຄຳແນະນຳແກ່ປະທານ ແລະສົມທຽບໃສ ການດຳເນີນງານໃນປີ 2006 | ເອດີບີ ໃຫ້ການ ສະໜັບສະໜູນ ໃນການປະຕິຮູບ ແລະມີການຂະຫຍາຍ ການພັດທະນາ ຂີດຄວາມອາດສາ ມາດແລະປະສິດທິຜົນ | | ໃຫ້ການຊ່ວຍເຫລືອ ແລະການສົນທະນາດ້ານ ນະໂຍບາຍ ເພື່ອປະຕິຮູບ ແລະປັບປຸງໂຄງສ້າງ ຂະແໜງພະລັງງານ ເພື່ອປັບປຸງລະບົບ ໃຫ້ມີປະສິດທິພາບ ໃຫ້ການສະໜັບສະໜູນ ໃນການສ້າງຄວາມ ເຂັ້ມແຂງແກ່ຜູ້ຄຸ້ມຄອງ<br><br>ການສົ່ງເສີມສະພາບ | ມີຄວາມສຳນິສຳນານ ເພື່ອສ້າງຕັ້ງການຄຸ້ມຄອງ ທີ່ມີປະສິດທິພຜົນ<br><br>ມີການປະສານງານຢ່າງ ໃກ້ສິດກັບ ຄູ່ຮ່ວມພັດທະນາ |

| ຜົນ | ຕົວຊີ້ບອກຜົນ | ຜົນໄດ້ຮັບ [a] | ຕົວຊີ້ບອກຜົນໄດ້ຮັບ [b] | ກິດຈະກຳຫລັກ ແລະ ການລິເລີ່ມ ທີ່ປະກອບໃຫ້ຜົນ | ສົມມຸດທິຖານ ແລະ ຄວາມສ່ຽງ |
|---|---|---|---|---|---|
| | | | | ແວດລ້ອມ<br>ການລົງທຶນເພື່ອຊຸກຍູ້ ໃຫ້ພາກເອກະຊົນເຂົ້າຮ່ວມ ໃນການລົງທຶນ<br><br>ສະໜັບສະໜູນການ ສ້າງຂີດຄວາມອາດສາມາດ ແລະຄວາມເຂັ້ມແຂງ ຂອງອົງການ<br><br>ໃຫ້ການສະໜັບສະໜູນ ການສຶກສາ ແລະການ ແລກປ່ຽນ ຄວາມຮູ້ ແລະການເຜີຍແຜ່ວິທີ ການປະຕິບັດທີ່ດີ | |

ເອດີບີ= ທະນາຄານພັດທະນາອາຊີ, DMC = ປະເທດສະມາຊິກ ທີ່ກຳລັງພັດທະນາ, GDP = ຜະລິດຕະພັນພາຍໃນປະເທດທັງໝົດ, GWh = ກິກກາວັດໂມງ, MW = ເມກາວັດໂມງ, PCR = ບົດລາຍງານຜົນສຳເລັດ ຂອງໂຄງການ, RRP = ລາຍງານ ແລະຄຳແນະນຳແກ່ປະທານ, TA = ການຊ່ວຍເຫລືອທາງວິຊາການ, TCR = ບົດລາຍງານຜົນສຳເລັດການຊ່ວຍເຫລືອທາງວິຊາການ.

[a] ເປົ້າໝາຍຂອງຕົວຊີ້ຜົນທີ່ໄດ້ຮັບໃນຈຸດທີ່ບໍ່ໄດ້ລວມຢູ່ໃນ ຈະໄດ້ຮັບການພັດທະນາໃນການປຶກສາຫາລືກັບປະເທດສະມາຊິກ ທີ່ກຳລັງພັດທະນາແລະສະທ້ອນໃນຍຸດທະສາດການຮ່ວມມືຂອງປະເທດ, ຕາມຄວາມເໝາະສົມ.

[b] ຖານແມ່ນສະເລ່ຍຂອງ 3 ປີ, 2005–2007.